ກາບເມືອງພວນ

ຄະນະຄົ້ນຄວ້າ
ພາກວິຊາພາສາລາວ-ວັນນະຄະດີ

206 / ພີເລກ

ຄະນະອັກສອນສາດ
ມະຫາວິທະຍາໄລແຫ່ງຊາດ

2001

10

ລາຍງານການຄົ້ນຄວ້າ

ເລື່ອງ

ການເມືອງພວນ

ໂດຍ

ຄະນະຄົ້ນຄວ້າ
ພາກວິຊາພາສາລາວ-ວັນນະຄະດີ
ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ

ອຸປະຖຳໂດຍ ມູນນິທິໂຕໂຍຕາ
SUPPORTED by THE TOYOTA FOUNDATION

ພິມເຜີຍແຜ່ ຄ.ສ 2001

ໂຄງການຄົ້ນຄວ້າ
ວັນນະຄະດີສະໄໝອານາຈັກລາວລ້ານຊ້າງເສື່ອມໂຊມ

ຄະນະຮັບຜິດຊອບໂຄງການ

ອາຈານ ບູ ໄຊຍະສິດທິວົງ	ຫົວໜ້າຄະນະ
ອາຈານ ຄຳຮຸ່ງ ແສນມະນີ	ຄະນະ
ດຣ. ບົວລີ ປະພາພັນ	ຄະນະ
ສ.ດຣ. ໂຟນເກີ ກຣາບອສກີ (ເຢຍລະມັນ)	ຊ່ຽວຊານປະຈຳໂຄງການ

ນັກວິຊາການປະຈຳໂຄງການ

ອາຈານ ຄຳສອນ ທອງມີໄຊ	ວິຊາທິດສະດີວັນນະຄະດີ
ອາຈານ ບຸນເລີດ ແສງສຸລິນ	ວິຊາພາສາລາວ
ອາຈານ ສົມໄພ ວິໄລສັກ	ວິຊາວັນນະຄະດີລ້ານຊ້າງ
ອາຈານ ອຳພອນລັກ ອິນທະວົງ	ວິຊາວັນນະຄະດີລ້ານຊ້າງ
ອາຈານ ອະນຸສິດ ວິລະໄຊ	ວິຊາອັກສອນທຳ
ດຣ. ນາງ ນົວອນ ໄຊຍະວົງ	ວິຊາປະຫວັດສາດ

ທີ່ປຶກສາໂຄງການ

ທ່ານ ອາຈານ ມະຫາ ບຸນຍົກ ແສນສູນທອນ

ເລຂານຸການປະຈຳໂຄງການ

ອາຈານ ໄຂ່ຄຳ ສີຊົມພູ

ອາຈານ ສີສະໝຸດ ສີສົມບູນ

ຄະນະຄົ້ນຄວ້າພາບເມືອງພວນ

Research Team

ອາຈານ ຄຳຮຸ່ງ ແສນມະນີ
ສ. ດຣ. ໂຟນເກີ ກຣາບອສກີ (ເຢຍລະມັນ)
ດຣ. ບົວລີ ປະພາພັນ
ອາຈານ ນູ ໄຊຍະສິດທິວົງ

Mr. Khamhung Senmany
Dr. Volker Grabowsky
Dr. Boualy Paphaphanh
Mr. Nou Xayasithivong

ຈັດພິມ ແລະຄອມພິວເຕີ

Design

ອາຈານ ໄຂ່ຄຳ ສີຊົມພູ

Mr. Khaikham Sixomphou

ພາກວິຊາພາສາລາວ-ວັນນະຄະດີ
ຄະນະອັກສອນສາດ
ມະຫາວິທະຍາໄລແຫ່ງຊາດ

Dept. of Lao Language and Literature
Faculty of Philology
National University of Laos

ພິມຄັ້ງທຳອິດ ພຶດສະພາ 2001
ພິມທີ່ວິສາຫະກິດໂຮງພິມສຶກສາ

First edition May 2001
Printed Education Printing Enterprise

ສາລະບານ (Table of contents)

		ໜ້າ
	ຄຳນຳຂອງທ່ານອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ	ກ-ຂ
	ບົດຄັດຫຍໍ້ໃນການຄົ້ນຄວ້າ (ພາສາລາວ)	ຄ
	ບົດຄັດຫຍໍ້ໃນການຄົ້ນຄວ້າ (ພາສາອັງກິດ)	ງ
ກ.	**ບົດນຳ**	**1**
	1. ທີ່ມາ ແລະຄວາມສຳຄັນຂອງບັນຫາ	1
	2. ຈຸດປະສົງຂອງການຄົ້ນຄວ້າ	3
	3. ຜົນງານການຄົ້ນຄວ້າໄລຍະຜ່ານມາ	3
	4. ຂອບເຂດ ແລະວິທີການຄົ້ນຄວ້າ	3
	5. ສະຖານທີ່ ແລະໄລຍະການຄົ້ນຄວ້າ	5
	6. ຜົນປະໂຫຍດຄາດວ່າຈະໄດ້ຮັບ	5
ຂ.	**ການຄົ້ນຄວ້າວິໃຈ**	**5**
I.	ບົດຄັດຫຍໍ້ຂອງກາບ	5
II.	ຄວາມເປັນມາຂອງກາບ	7
III.	ຄວາມສຳພັນຂອງກາບກັບປະຫວັດສາດ	8
	1. ປະຫວັດຂອງເມືອງພວນ ແລະຊາວພວນໂດຍສັງເຂບ	8
	2. ເນື້ອໃນຂອງກາບທີ່ສ່ອງແສງເຖິງປະຫວັດສາດ	22
IV.	ວິເຄາະເນື້ອໃນກາບເມືອງພວນ	29
V.	ລັກສະນະຂອງກາບຕົ້ນສະບັບ	41
IV.	ກາບເມືອງພວນສະບັບປັບປຸງ	45
ຄ.	**ສະຫລຸບ ແລະສະເໜີແນະ**	**62**
	ພາກພາສາອັງກິດ	
I.	General Background	66
	1. Authorship and period of composition	66
	2. Historical background	67
II.	Analysis	72
	1. The events described by Kap Müang Phuan	72
	2. Literary structure of Kap Müang Phuan	74
	3. Editorial remarks	77
	4. Contents of Kap Müang Phuan	78
	5. Analysis of the content of Kap Müang Phuan	78
III.	Translation of Kap Müang Phuan	89

ພາກຜະໜວກ (Appendix)

1. ຕົ້ນສະບັບກາບເມືອງພວນ 102
2. ຕາຕະລາງອະທິບາຍສັບ 117
3. ການໄຈ້ແຍກປະຊາຊົນຕາມກຸ່ມຊົນເຜົ່າ (ປະມານປີ 1889) 122
   Ethnic comsition of Kap Müang Phuan 123

ບັນນານຸກົມ (Bibliography) 124

ຄຳນຳ

" ກາບເມືອງພວນ " ແມ່ນວັນນະຄະດີທີ່ດີເດັ່ນ ແລະລືຊື່ບົດໜຶ່ງໃນສາງວັນນະຄະດີເວົ້າລວມ ໂດຍສະເພາະ ແມ່ນວັນນະຄະດີໃນສະໄໝອານາຈັກລ້ານຊ້າງເສື່ອມໂຊມ (ທ້າຍສະຕະວັດທີ XVIII) ຫາທ້າຍສະຕະວັດທີ XIX). ໃນໄລຍະນີ້ ປະຫວັດສາດລ້ານຊ້າງໄດ້ເຂົ້າສູ່ສະພາບວິກິດການອັນມືດມົນອັນຕະການ ຍ້ອນພວກສັກດີນາຕ່າງດ້າວໄດ້ເຂົ້າມາຢໍ່າຍີປຸ້ນສະດົມຢ່າງໂຫດຮ້າຍປ່າເຖື່ອນ. ສະນັ້ນ ວັນນະຄະດີສະໄໝນີ້ ຈຶ່ງມີເນື້ອໃນ ແລະນໍ້າສຽງອັນຄຽດແຄ້ນ, ບັນທຶກ ແລະກ່າວປະນາມໂຫດກຳອັນຫີຣມໂຫດຂອງ ພວກສັກດີນາຕ່າງດ້າວຜູ້ຮຸກຮານ ດັ່ງຈະເຫັນໄດ້ໃນວັນນະຄະດີທີ່ດີເດັ່ນ ແລະລອດເຫລືອຕົກທອດເຖິງມື ພວກເຮົາໃນທຸກມື້ນີ້ ຄື ສານລຶບພະສູນ, ກາບເມືອງພວນ, ພື້ນວຽງ ແລະອື່ນໆ.

ສະເພາະ " ກາບເມືອງພວນ " ນີ້, ກໍມີເນື້ອໃນບັນທຶກ ແລະກ່າວປະນາມໂຫດກຳຂອງພວກສັກດີນາສະຫຍາມ ໂດຍເຈາະຈົງສະເພາະໂຫດກຳທີ່ພວກເຂົາມີຕໍ່ຊາວພວນ ໃນການນຳພາທະຫານບຸກໂຈມຕີປຸ້ນສະດົມເຂດແຄ້ນເມືອງພວນ (ຊຽງຂວາງ) ແລ້ວສວຍໂອກາດບັງຄັບກວາດຕ້ອນເອົາຊາວພວນຈຳນວນຫລວງຫລາຍລົງໄປສະຫຍາມ ໃນຊຸມປີ 1830. ເມື່ອຂ້າມໄປເຖິງຝັ່ງຂວາຂອງແມ່ນໍ້າຂອງແລ້ວ ພວກເຈົ້ານາຍໄທສະຫຍາມກໍປະພຶດຕໍ່ຊາວພວນຢ່າງໂຫດຮ້າຍສາມານ, ພວກເຂົາໄດ້ປຸ້ນເອົາຊາວຄົວພວນໄປເປັນຂ້ອຍຂ້າມ້າໃຊ້ ຕາມລຳພັງໃຈ, ໄດ້ບັງຄັບໃຫ້ເຮັດຮັບໃຊ້ພວກເຂົາຢ່າງໜັກໜ່ວງທໍລະມານຈົນຊາວພວນບໍ່ສາມາດຈະທົນທານໄດ້. ສະນັ້ນ, ຈຶ່ງມີຊາວພວນຈຳນວນຫລວງຫລາຍທີ່ຖືກກວາດຕ້ອນໄປເຖິງໜອງຄາຍນັ້ນ ໄດ້ພາກັນຕັດສິນໃຈໂຕນໜີກັບຄືນບ້ານເກີດເມືອງນອນ. " ກາບເມືອງພວນ " ໄດ້ພັນລະນາການໂຕນໜີກັບຄືນບ້ານຂອງຊາວພວນດັ່ງກ່າວ ດ້ວຍນໍ້າສຽງອັນຄຽດແຄ້ນ ແລະໂສກເສົ້າຢ່າງໜ້າເວທະນາ. ນັບເສັ້ນທາງໂຕນກັບບ້ານນັ້ນ ຊາວພວນຕ້ອງປະເຊີນກັບຄວາມລຳບາກກາກກຳ ຈົນມີຫລາຍຄົນຕ້ອງໄດ້ພັດພາກຈາກກັນ, ທັງອຶດຫິວ ແລະຕ້ອງກິນໝາກໄມ້ຕາມປ່າຕາມດົງຈົນເບື່ອໝາກໜ້ອງ ແລ້ວລົ້ມຕາຍໄປເປັນຈຳນວນຫລວງຫລາຍ. ສ່ວນທີ່ເຫລືອຕາຍ ກັບຄືນໄປເຖິງບ້ານເກີດເມືອງນອນທີ່ເມືອງພວນຊຽງຂວາງ ກໍມີພຽງຈຳນວນໜ້ອຍດຽວ (ບໍ່ເຖິງເຄິ່ງໜຶ່ງຊໍ້າ).

ນອກຈາກ ການພັນລະນາເຖິງໂຫດກຳອັນໂຫດຮ້າຍປ່າເຖື່ອນຂອງສັກດີນາໄທສະຫຍາມ ທີ່ໄດ້ສ້າງຄວາມທຸກທໍລະມານອັນແສນສາຫັດແກ່ຊາວພວນດັ່ງກ່າວມາອ້າງເທິງແລ້ວ " ກາບເມືອງພວນ " ຍັງໄດ້ສະແດງໃຫ້ເຫັນເຖິງຄວາມພິລະອາດຫານ, ນໍ້າໃຈຮັກຊາດ, ຮັກບ້ານເກີດເມືອງນອນຂອງຊາວພວນທີ່ເດັດຂາດ ບໍ່ຍອມຈຳນົນຕໍ່ສັດຕູ, ຕັດສິນໃຈຜ່ານຜ່າຄວາມຫຍຸ້ງຍາກທຸລະກັນດານຕ່າງໆນານາພາກັນໂຕນກັບຄືນຫາບ້ານເກີດເມືອງນອນໃຫ້ໄດ້. " ກາບເມືອງພວນ " ຈຶ່ງນັບວ່າເປັນບົດວັນນະກຳທີ່ດີເດັ່ນບົດໜຶ່ງ ເຊິ່ງມີຄຸນຄ່າສູງທາງດ້ານວັນນະຄະດີ, ດ້ານພາສາສາດ, ດ້ານປະຫວັດສາດ ຈົນຕະຫລອດເຖິງດ້ານພູມສາດ ແລະດ້ານສັງຄົມສາດອີກດ້ວຍ. ເພາະສະນັ້ນ " ກາບເມືອງພວນ " ຈຶ່ງໄດ້ຮັບຄວາມນິຍົມຊົມຊອບສືບຕໍ່ກັນມາໃນມວນຊົນຊາວພວນ ກໍຄືຊາວລາວໃນທົ່ວປະເທດ ແລະຖືກບັນຈຸເຂົ້າໃນຫລັກສູດຂອງພາກວິຊາພາສາລາວ-ວັນນະຄະດີ, ມະຫາວິທະຍາໄລແຫ່ງຊາດ ແລະສະຖາບັນການສຶກສາອື່ນໆອີກດ້ວຍ.

ໃນວິວັດການສອນ " ກາບເມືອງພວນ " ໃນໄລຍະຜ່ານມາ ຍັງເຫັນວ່າ ວັນນະກຳທີ່ລືຊື່ບົດນີ້ ສົມຄວນທີ່ຈະໄດ້ຮັບການຄົ້ນຄວ້າວິໄຈ ໃຫ້ເລິກເຊິ່ງໃນຫລາຍແງ່ມູມ ເພື່ອໃຫ້ຄົນຮຸ່ນໃໝ່ໄດ້ສຶກສາຮໍ່າຮຽນ ແລະເຂົ້າໃຈຢ່າງຖືກຕ້ອງ. ສະນັ້ນ, ພາກວິຊາພາສາລາວ-ວັນນະຄະດີ, ຄະນະອັກສາດ, ມະຫາວິທະຍາໄລແຫ່ງຊາດ ຈຶ່ງໄດ້ແຕ່ງຕັ້ງຄະນະໜຶ່ງຂຶ້ນ ອັນປະກອບດ້ວຍບັນດາອາຈານທີ່ມີບົດຮຽນດີສົມຄວນ

ໃນດ້ານນີ້ ເພື່ອດຳເນີນການຄົ້ນຄວ້າວິໄຈ " ການເມືອງພວນ ". ໃນໂຄງການຄົ້ນຄວ້າວັນນະຄະດີສະໄໝອານາຈັກລາວລ້ານຊ້າງເສື່ອມໂຊມ ໂດຍໄດ້ຮັບການຮ່ວມມືເປັນຢ່າງດີຈາກຜູ້ຊ່ຽວຊານເຢຍລະມັນ ໂດຍຜ່ານອົງ ການ **DAAD** ແລະໄດ້ຮັບທຶນອຸປະກໍາຈາກມູນນິທິໂຕໂຍຕາ (ຍີ່ປຸ່ນ) ແລະອົງການ **DAAD** (ເຢບລະມັນ).

ການຄົ້ນຄວ້າ " ການເມືອງພວນ " ນີ້, ໄດ້ດຳເນີນເປັນເວລາເກືອບ 2 ປີ, ແລ້ວຈຶ່ງພໍສະຫລຸບເປັນຜົນງານການຄົ້ນຄວ້າ ນຳມາພິມເຜີຍແຜ່ສູ່ສາຍຕາທ່ານຜູ້ອ່ານ. ໃນປຶ້ມເຫລັ້ມນີ້ ແນ່ນອນວ່າ ການຄົ້ນຄວ້າວິໄຈກໍຍັງມີຂໍ້ຂາດຕົກບົກພ່ອງຢູ່ບາງປະການ. ແຕ່ກໍເຊື່ອແນ່ວ່າ ປຶ້ມທີ່ເປັນຜົນງານຄົ້ນຄວ້ານີ້ ຄົງຈະເປັນຜົນປະໂຫຍດຫລາຍສົມຄວນ ຕໍ່ທ່ານຜູ້ອ່ານທີ່ມີຄວາມສົນໃຈກ່ຽວກັບວັນນະຄະດີ, ພາສາລາວ, ປະຫວັດສາດ ແລະອື່ນໆ. ໃນປຶ້ມເຫລັ້ມນີ້ ຍັງມີພາກແປເປັນພາສາອັງກິດນຳອີກ ເພື່ອຊ່ວຍໃຫ້ເພື່ອນຊາວປະເທດທີ່ມີຄວາມສົນໃຈ ໄດ້ມີໂອກາດຊອກຮຽນຮູ້ອີກດ້ວຍ.

ໃນນາມອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ ຈຶ່ງຂໍຊົມເຊີຍບັນດາອາຈານ ນັກຄົ້ນຄວ້າທັງລາວ ແລະຕ່າງປະເທດ ທີ່ໄດ້ພ້ອມກັນບາກບັ່ນພະຍາຍາມ ສ້າງຜົນງານການຄົ້ນຄວ້ານີ້ຂຶ້ນມາໄດ້, ພ້ອມນີ້ ກໍຂໍສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ອົງການ **DAAD** (ເຢຍລະມັນ) ແລະມູນນິທິໂຕໂຍຕາ (ຍີ່ປຸ່ນ) ທີ່ໄດ້ໃຫ້ການຊ່ວຍເຫລືອ ອູ້ມຊູໂຄງການຄົ້ນຄວ້າດັ່ງກ່າວນີ້ດ້ວຍ.

ມະຫາວິທະຍາໄລແຫ່ງຊາດ, ວັນທີ 10 ພຶດສະພາ 2001

ດຣ. ບໍແສງຄຳ ວົງດາລາ
ອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ

ບົດສັດຫຍໍ້ການຄົ້ນຄວ້າ

" ກາບເມືອງພວນ "ເປັນບົດວັນນະຄະດີທີ່ສະທ້ອນໃຫ້ເຫັນສ່ວນໜຶ່ງຂອງປະຫວັສາດລາວ ສະໄໝອານາຈັກລ້ານຊ້າງເສື່ອມໂຊມ ໂດຍສະເພາະແມ່ນຫລັງການພັງທະລາຍຂອງອານາຈັກວຽງຈັນ, ເຊິ່ງເປັນໜຶ່ງໃນສາມອານາຈັກແມ່. ການຄົ້ນຄວ້າເທື່ອນີ້ ໄດ້ສຶກສາທັງແງ່ປະຫວັດສາດ ແລະວັນນະຄະດີໄປພ້ອມກັນ. ໃນດ້ານປະຫວັດສາດ ໄດ້ປຽບທຽບກັບເຫດການທາງປະຫວັດສາດຈາກຫລາຍແຫລ່ງ. ຜ່ານເນື້ອໃນກາບ, ການຄົ້ນຄວ້າໄດ້ເລັ່ງໃສ່ການສຶກສາ: ສະພາບປະຫວັດສາດ ກ່ອນໜ້າເມືອງພວນຖືກຕ່າງຊາດຍຶດຄອງ; ສະພາບເມືອງພວນ ໃນຂະນະທີ່ຖືກຍຶດຄອງໂດຍດ້າຍຫວຽດ; ການດີ້ນຣົນຊອກທາງອອກເພື່ອປົດປ່ອຍຕົນເອງຂອງພວກສັກດີນາພວນອອກຈາກແອກຄອບຄອງຂອງດ້າຍຫວຽດ ໂດຍໄດ້ສົ່ງສານຂໍຄວາມຊ່ວຍເຫລືອຈາກສະຫຍາມ; ເມື່ອໄດ້ທ່າ ສະຫຍາມກໍສວຍໂອກາດປະຕິບັດນະໂຍບາຍລັດທິຊາດໃຫຍ່, ດຳເນີນການກວາດຕ້ອນປະຊາຊົນເຂົ້າສູ່ສ່ວນກາງ ໂດຍໃຊ້ມາຕະການບັງຄັບ ແລະຫລອກລວງ; ຕໍ່ມາຊາວພວນຖືກກວາດຕ້ອນໄປຈຳນວນຫລວງຫລາຍ ສຳນຶກໄດ້ວ່າ ພວກຕົນຕົກເລ່ກັບສະຫຍາມ ຈຶ່ງພາກັນໂຕນກັບຄືນບ້ານເກີດເມືອງນອນ ບົນເສັ້ນທາງທີ່ເຕັມໄປດ້ວຍອຸປະສັກນານາປະກາບ. ຊາຕາກຳຂອງເມືອງພວນໄລຍະນີ້ ແມ່ນບໍ່ຕ່າງຫຍັງກັບ " ລັດກາງຫີບ " ຖືກໜີບໜັກ ທັງຈາກສັກດີນາສະຫຍາມ ແລະດ້າຍຫວຽດ ເຊິ່ງຝ່າຍໜຶ່ງຫວັງເຮັດໃຫ້ເປັນເມືອງຮ້າງ ແລະອີກຝ່າຍໜຶ່ງຫວັງຍຶດຄອງ. ໃນແງ່ວັນນະສິນ, ໄດ້ສຶກສາເຫັນວ່າ ກາບໄດ້ນຳໃຊ້ສັບ ແລະສຳນວນພາສາປຽບທຽບຢ່າງແຍບຍົນຄົມຄາຍທັງໃນລັກສະນະລວມ ແລະລັກສະນະທ້ອງຖິ່ນ. ດ້ານໂຄງສ້າງ, ບົດໄດ້ຍຶດກາບເປັນຫລັກໃນການປະພັນ. ແຕ່ເນື່ອງຈາກວ່າ ກາບກີລັກສະນະສານ, ສະນັ້ນ ມັນຈຶ່ງນຳໃຊ້ຫລາຍຮູບແບບສັນທະລັກເພື່ອປະພັນກາບ.

ໃນດ້ານການວິເຄາະ ເພື່ອປະໂຫຍດແກ່ການສຶກສາ, ການວິເຄາະບົດ ໄດ້ດຳເນີນໄປຕາມແຕ່ລະບົດ ຄື ເລີ່ມຈາກບົດທີໜຶ່ງເຖິງບົດທີເກົ້າ. ຜົນການວິໄຈໄດ້ຊີ້ໃຫ້ເຫັນວ່າ ໂສກນາຕະກຳທີ່ຊາວລາວໄດ້ຮັບອັນຕົ້ນຕໍ ແມ່ນເກີດມາຈາກການແຕກແຍກຄວາມສາມັກຄີພາຍໃນ, ຍາດຊີງອຳນາດກັນຂອງສັກດີນາລາວເປັນຕົ້ນເຫດ ອັນເຮັດໃຫ້ປະເທດຊາດເສື່ອມໂຊມ ແລະສຸດທ້າຍກໍຫລົ້ມຈົມດ້ວຍນ້ຳມືຂອງຕ່າງຊາດ, ປະຊາຊົນໄດ້ຮັບຄວາມເດືອດຮ້ອນ, ເສຍຄວາມເປັນເອກະລາດ. ເຫດການທີ່ເກີດຂຶ້ນໃນກາບເມືອງພວນໄດ້ສະແດງໃຫ້ເຫັນເຖິງຄວາມເສືອກສົນໃນການແກ້ໄຂສະພາບ ໃນເວລາທີ່ຕົນອ່ອນແອ ແລະຈົນໃຈ ໃນຂະນະທີ່ຜູ້ອື່ນແຂງແຮງກວ່າຕົນ ແລະຄອຍຈັບຕາກືນກິນຢູ່. ໃນທີ່ສຸດ ຊາຕາກຳຂອງຊາວຊວນກໍລົງເອີ່ຍດ້ວຍເຈັບຊ້ຳ.

Abstract

Kap Müang Phuan, the “Poem of the Phuan Country”, is a literary work related to a period of Laơ history when the Lan Xang kingdom was already in a state of decline. It is particularly linked to the destruction of the kingdom of Vientiane (1828/29), one of the three Lao states which had taken over the traditions of Lan Xang. Research has been done both in the fields of philology and history. We analysed the contents of the poem by studying the historical situation in Müang Phuan before, during and after the upheavals caused by Siamese and, to a lesser extent, Vietnamese invasions during the years 1834-36. As a result of these invasions numerous Phuan villagers were forcibly relocated to areas on the west bank of the Mekong river. However, after their arrival at Nòng Khai large numbers of Phuan deportees succeeded in escaping from Siamese control and returned — under enormous sufferings and hardships — to their native country. The fate of the Phuan polity during the nineteenth century was that of a “buffer state” exposed to continuous pressures from both Siam and Vietnam. The Vietnamese tried to gain territorial control of Müang Phuan which they regarded as vital for the long-term security of the Vietnamese heartland in the Red River delta. The Siamese, on the other hand, were more interested in assembling manpower which they used to deport and resettle in territories under their undisputed sovereignty.

Although Kap Müang Phuan seems to give a rather accurate account of historical events, it is not just an historical document but also a most beautiful literary work versified in *kòn kap* poetry. Its many metaphors have to be understood and analysed in the specific cultural and historical context of the time. Moreover, there are a lot of ideoms from the local Phuan dialect which give the poem a particular “regional” flavour. We hope that the publication of Kap Müang Phuan — both in a revised Lao edition and as an annotated English translation — will encourage future studies in the field of traditional Lao literature.

ໂຄງການຄົ້ນຄວ້າ: ກາບເມືອງພວນ

ກ. ບົດນຳ

1. ທີ່ມາ ແລະຄວາມສຳຄັນຂອງບັນຫາ

ເມືອງພວນ (ຊຽງຂວາງ) ເປັນເມືອງບູຮານທີ່ເກົ່າແກ່ຂອງລາວເມືອງໜຶ່ງເຊິ່ງມີປະຫວັດຄວາມເປັນມາບໍ່ຕ່ຳກວ່າ 1300 ປີ ຄືນັບຕັ້ງແຕ່ຂຸນບູລົມລາຊາທິລາດບັນພະຊົນຂອງເຊື້ອຊາດລາວ ໄດ້ແບ່ງເມືອງພວນໃຫ້ຂຸນເຈືອງ ຫລື ທ້າວ ເຈັດເຈືອງ (ເພາະເປັນບຸດຜູ້ທີເຈັດຂອງຂຸນບູລົມ) ໄປປົກຄອງໃນປີ ຄ.ສ 757. ຕາມຕຳນານເລົ່າວ່າ: " ທ້າວ ເຈັດເຈືອງໄດ້ຂີ່ຊ້າງລົງມາທາງພາກໃຕ້ຂອງເມືອງແຖນ (ເຂດດຽນບຽນຟູຫວຽດນາມໃນປັດຈຸບັນ) ຕາມການແນະນຳຂອງພວກອ້າຍທັງຫົກ, ພໍເຖິງເຂດປ່າໃຫຍ່ແຫ່ງໜຶ່ງຢູ່ແຖວບ້ານໂພນແຍງ ທາງໄປທ່າວຽງຊຽງຄົງ, ຊ້າງທີ່ທ້າວ ເຈັດເຈືອງຂີ່ມານັ້ນ ບໍ່ຍອມຍ່າງຕໍ່ໄປ; ມີແຕ່ຍ່າງວົນວຽນຂວາງໄປຂວາງມາຢູ່. ທ້າວ ເຈັດເຈືອງຄິດວ່າ ຊ້າງເມື່ອຍກໍເລີຍພັກໃຫ້ຊ້າງໄດ້ກິນນ້ຳກິນຫຍ້າຢູ່ບໍລິເວນນັ້ນ ຕາງພັກຜ່ອນແດ່ ແລ້ວຈຶ່ງເດີນທາງຕໍ່ໄປ, ປາກົດວ່າຫລັງພັກຜ່ອນ ຊ້າງກໍຍັງບໍ່ຍອມເດີນທາງຕໍ່ໄປ ຍັງຂວາງທາງໄປຢູ່ຄືເກົ່າ. ທ້າວ ເຈັດເຈືອງ ຈຶ່ງມາຄິດໄດ້ວ່າ ອາດຈະເປັນນິມິດໝາຍອັນເປັນມົງຄຸນໃນບໍລິເວນນີ້, ຈຶ່ງສັ່ງໃຫ້ໄພ່ພົນທີ່ຕິດຕາມໄປນຳພັກຢູ່ທີ່ນັ້ນ ແລ້ວປຶກສາຫາລືກັບໝໍໂຫນທີ່ຕິດຕາມໄປນຳ ແລະໝໍໂຫນ ໄພ່ພົນທຸກຄົນລ້ວນແຕ່ເຫັນພ້ອມເປັນເອກະພາບກັນວ່າ " ບໍລິເວນນີ້ເປັນດິນແດນທີ່ມີອາກັນໃຫຍ່, ເປັນບ່ອນທີ່ມີຕົ້ນໄມ້ສູງໃຫຍ່ຈຳນວນຫລວງຫລາຍຢູ່ອ້ອມຮອບ, ຫາກຈະສ້າງບ້ານແປງເມືອງຢູ່ທີ່ນີ້ ຄົງຈະເກີດຄວາມອຸດົມສົມບູນພູນສຸກແລ". ໂດຍອາໄສກິລິຍາທີ່ຊ້າງວຽນຮີວຽນຂວາງບໍ່ຍອມເດີນໜ້າຕໍ່ໄປນັ້ນ ຈຶ່ງເອີ້ນຊື່ບໍລິເວນນີ້ວ່າ" ຊ້າງຂວາງ " ຕໍ່ມາ ຈຶ່ງຜັຽນເປັນ" ຊຽງຂວາງ "ກໍແລ. ຢູ່ທີ່ບໍລິເວນເມືອງໄດ້ພາກັນສ້າງເຈດີອັນສັກສິດຂຶ້ນ ເຊິ່ງເອີ້ນວ່າ " ພະທາດທ່າພັງພາຍ "ອັນເປັນທີ່ສັກກາລະບູຊາຂອງສາທຸຊົນສືບມາຂອງຊາວພວນທັງຫລາຍແລ ".[1]

ແຕ່ໜ້າເສຍດາຍ" ພະທາດທ່າພັງພາຍ "ທີ່ຖືວ່າເປັນຊັບສົມບັດອັນລ້ຳຄ່າທາງວັດທະນະທຳ ອັນທຳອິດຂອງຂຸນເຈືອງບໍ່ຍັງຫລົງເຫລືອມາຮອດສະໄໝປັດຈຸບັນ; ຊັບສົມບັດຂອງຂຸນເຈືອງຍັງຄົງເຫລືອໄວ້ແຕ່ໄຫຫີນ (ໄຫເຫລົ້າເຈືອງ) ທີ່ສາມາດສູ້ແດດທົນຝົນ ແລະຜ່ານເສິກສົງຄາມມານັບຫລາຍສິບພັນຄັ້ງຢືນຢູ່ຄຽງຄູ່ກັບຄົນລາວຊາວພວນມາກວ່າພັນປີ. ຕະຫລອດໄລຍະພັນກວ່າປີຜ່ານມາ ເມືອງພວນໄດ້ສ້າງແລະສະສົມເຫດການປະຫວັດສາດ, ມໍລະດົກທາງດ້ານສິລະປະວັດທະນະທຳຢ່າງມາກມາຍກ່າຍກອງອັນເປັນທີ່ຂື້ນຊື່ລືຊາໄປທົ່ວທັງພາຍໃນ ກໍຄືຕ່າງປະເທດ.

ນອກຈາກ ໄຫຫີນທີ່ເປັນພະຍານແຫ່ງຄວາມໂດດເດັ່ນທາງດ້ານວັດຖຸບູຮານແລ້ວ, ເມືອງພວນ[2] ຍັງມີເອກະລັກທາງດ້ານສິລະປະວັດທະນະທຳ, ປະເພນີອັນດີງາມ ເຊິ່ງມີອັນແຕກຕ່າງຈາກເມືອງອື່ນໆ ເຊັ່ນ ສຳນຽງສຽງເວົ້າ, ການຂັບລຳ, ຮີດຄອງປະເພນີ, ຄວາມເຊື່ອຖື, ຢ້າວເຮືອນ ເຫລົ່ານີ້ເປັນຕົ້ນ. ອັນພິເສດໄປກວ່ານັ້ນ ທາງດ້ານວັນນະກຳ, ຊາວພວນຍັງນິຍົມແຕ່ງກາບ. ເມື່ອມີເຫດການສຳຄັນໆເກີດຂຶ້ນຜູ້ມີພອນສະຫວັນທາງດ້ານສິລະປະ ມັກຈະເວົ້າອອກເປັນກາບສູ່ຊາວບ້ານຊາວເມືອງຟັງ; ສະນັ້ນ ຈຶ່ງບໍ່

---

[1] " ແລຫລັງໄຫພວນ " ປາກະໜາແຊ່ອ້ົງ. (ອາດອ້າງຕາມນິທານຂຸນບູລົມ).

[2] ຄຳວ່າ " ພວນ ຫລືເມືອງພວນ " ອາດຈະໄດ້ຊື່ມາຈາກແມ່ນ້ຳສາຍໜຶ່ງເຊິ່ງມີຊື່ວ່າ " ນ້ຳພວນ " ແມ່ນ້ຳສາຍນີ້ໄຫລມາຈາກທາງທິດຕາເວັນອອກສຽງເໜືອຂອງຕົວເມືອງຊຽງຂວາງ ມາປ່ອງໃສ່ແມ່ນ້ຳງື້ວລະຫວ່າງບ້ານໂພນແຍງກັບບ້ານເພຍວັດ, ເປັນບ່ອນດຽວກັນກັບທີ່ຕຳນານເລົ່າວ່າຮອດບ່ອນນີ້ " ຊ້າງບໍ່ຍອມຍ່າງຕໍ່ໄປ ..." ຫລືພວນ: ອາດເປັນຊື່ຂອງເຜົ່າໄຕລາວທີ່ນິຍົມຢູ່ໃນທີ່ຮາບສູງ ຫລືພູພຽງ, ໂນນສູງ ເພາະຄຳວ່າ: ພວນ, ພູນ, ໂພນ ມີຄວາມໝາຍໃນແງ່ວ່າ " ສູງ ".

ເປັນການແປກປະຫລາດເມື່ອໄດ້ອ່ານ " ພົງສາວະດານເມືອງພວນ" ທີ່ທ່ານ ຄຳພັນ ວົງກົດລັດຕະນະ ຮຽບຮຽງໄວ້ໃນປີ ຄ.ສ 1952, ເນື່ອງໃນໂອກາດທີ່ທ່ານໄດ້ມີໂອກາດໄປທັດສະນະຢ້ຽມຢາມເມືອງພວນ ໃນປີ ຄ.ສ 1950. ໃນປຶ້ມເຫລັ້ມນີ້ ນອກຈາກຈະກ່າວເຖິງພົງສາວະດານເມືອງພວນ, ລຳດັບກະສັດປົກຄອງເມືອງພວນ ແລະພົງສາວະດານແມ້ວ (ມົ້ງ) ເມືອງພວນແລ້ວ, ຍັງມີກາບເມືອງພວນ 9 ບົດປະກອບຢູ່ດ້ວຍ, ອັນເປັນກາບປະຫວັດສາດທີ່ພວກເຮົາສົນໃຈ ແລະຈະໄດ້ຄົ້ນຄວ້າວິໄຈໃນຂັ້ນຕໍ່ໄປ. ເປັນອັນວ່າ ເມື່ອມີເຫດການສຳຄັນໆເປັນໜ້າຈົດຈຳ ຊາວພວນມັກຈະລຳພົງລຳພັນອອກເປັນກາບ ເພື່ອໃຫ້ລູກຫລານໄດ້ທ່ອງຈື່ໄວ້ສືບໄປ.

" ກາບເມືອງພວນ " ເປັນກາບທີ່ກ່າວເຖິງເຫດການປະຫວັດສາດອັນໜ້າເສົ້າໂສກສະຫລົດໃຈໃນຄັ້ງໜຶ່ງຂອງຄົນລາວຊາວພວນ ເຊິ່ງກຶກສັກດີນາສະຫຍາມກວາດຕ້ອນໄປສະຫຍາມ, ເມື່ອໄປຮອດດິນໜອງຄາຍ ຊາວພວນຕົກທຸກໄດ້ຍາກຢ່າງແສນສາຫັດ, ອຶດຫິວເປັນໄຂ້ໄດ້ປ່ວຍ, ລົ້ມຕາຍໄປຈຳນວນຫລວງຫລາຍ ຜູ້ໃດແຂງແຮງແດ່ ກໍ່ຖືກນາຍໄທປັນກັນໄປເຮັດຂ້ອຍໃຊ້. ຍ້ອນອົດບໍ່ລົນທົນບໍ່ໄດ້ຕໍ່ສະພາບດັ່ງກ່າວຊາວພວນຈຳນວນໜຶ່ງໄດ້ພາກັນລັກໂຕນໜີກັບຄືນບ້ານເກີດເມືອງນອນ, ບົນເສັ້ນທາງກັບຄືນ ຊ້ຳພັດໄດ້ປະເຊີນກັບຄວາມທາຍະນະ, ດັ່ງສະແດງອອກໃນກາບວ່າ:

" ພ່າຍສ້ອນແລ້ວ ໜີມາຈອບໄຊ
ພ່າຍໜາໄນ ມາຈອບໜາບ້ານ
ພ່າຍແບ້ບລ້ານ ມາຈອບໂລ້ຍຫລວງ
ຝູງຕານາຍ ບູຮານກ່າວໄວ້... "

ເຫດຮ້າຍທີ່ຄົວລາວຊາວພວນປະສົບໃນເວລາໂຕນໜີກັບຄືນບ້ານເກີດເມືອງນອນ ກໍ່ຄືຄວາມອຶດຫິວ, ເບື່ອໝາກໜ້ອງລົ້ມຫາຍຕາຍໄປ ເກືອບເຄິ່ງໜຶ່ງ ດັ່ງສະແດງອອກໃນກາບວ່າ:

" ຜູ້ກິນໜ້ອຍ ຍັງອ່າວນານຕາຍ
ຜູ້ກິນຫລາຍ ຕາຍມໍລະນາດ
ເພຍຊາມາດ ທັງໝູ່ຕາຍກອງ "

ເນື້ອໃນຂອງກາບ ບໍ່ສະເພາະແຕ່ຈະສ່ອງແສງເຖິງຄວາມທຸກຍາກລຳບາກ, ລົ້ມຫາຍຕາຍໄປຂອງຊາວຄົວພວນເທົ່ານັ້ນ, ໃນແງ່ປະຫວັດສາດຍັງສ່ອງແສງໃຫ້ພວກເຮົາເຫັນເຖິງສົງຄາມລ່າພົນລະເມືອງເພື່ອເອົາໄປເປັນກຳລັງ ແລະອ້າຫາດໃຫ້ແກ່ຕົນເອງ ເຊິ່ງເກີດຂຶ້ນຕັ້ງແຕ່ສະໄໝອ້າຫາດ ຍັງຫລົງເຫລືອມາຮອດຕົ້ນສະຕະວັດທີ IX, ດັ່ງສະແດງອອກ ໃນຫົວບົດຂອງກາບບົດທີ 7 ວ່າ " ຊາວຄົວທັງຫລາຍໄປຮອດໜອງຄາຍເຫັນໄທປັນກັນເຮັດຂ້ອຍ, ພວກເຈົ້ານາຍເອົາຜູ້ລະສອງສາມຄົວ... " ສິ່ງນີ້ ມັນໄດ້ກາຍເປັນອຸທາຫອນສອນໃຈໃຫ້ແກ່ຄົນລາວໃນຍຸກປັດຈຸບັນ ຈົ່ງມີສະຕິລະວັງຕົວຕໍ່ເລ່ກົນຂອງພວກຄົນພານ, ຢ່າທະເຍີທະຍານຕໍ່ " ນ້ຳອ້ອຍ ລົ້ມົດແດງ ", ຈົ່ງຍົກສູງສະຕິຊາດເປັນເຈົ້າຕົນເອງ " ສະໜຸກຢູ່ບ້ານເພິ່ນ ບໍ່ທໍ່ທຸກບ້ານໂຕ ".

ກາບເມືອງພວນ ນອກຈາກຈະມີຄວາມໝາຍຄວາມສຳຄັນໃນທາງປະຫວັດສາດແລ້ວ, ມັນຍັງມີຄວາມໝາຍທາງດ້ານພູມສາດ, ສັງຄົມສາດ, ອັກສອນສາດ ແລະສັບທະສາດອີກດ້ວຍ.

ເນື່ອງຈາກວ່າ ກາບເມືອງພວນມີຄວາມໝາຍ ຄວາມສຳຄັນດີແນວນັ້ນ ພາກວິຊາພາສາລາວ-ວັນນະຄະດີ, ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ ຈຶ່ງໄດ້ແຕ່ງຕັ້ງຄະນະກຳມະການໜຶ່ງຂຶ້ນ

ເພື່ອຄົ້ນຄວ້າວິໄຈ " ກາບເມືອງພວນ " ໂດຍໄດ້ຮັບທຶນສະໜັບສະໜູນຈາກມູນນິທິໂຕໂຍຕາ (TOYOTA Foundation) ປະເທດຍີ່ປຸ່ນ ແລະການຮ່ວມມືຈາກທ່ານ ສ. ໂຟນເກີ ກຣາບັອສກີ (Volker Grabowsky) ຜູ້ຊ່ວຍຊານອົງການ ເດ-ອາ-ອາ-ເດ (DAAD) ປະເທດເຢຍລະມັນ.

2. ຈຸດປະສົງຂອງການຄົ້ນຄວ້າ

- ເພື່ອເກັບກຳກາບເມືອງພວນມາຊຳລະໃຫ້ເປັນກອນກາບທີ່ສົມບູນ ແລະເປັນທີ່ເຂົ້າໃຈງ່າຍສຳລັບຄົນຮຸ່ນປັດຈຸບັນ ກໍຄືອະນາຄົດໄດ້ສຶກສາວິໄຈສືບໄປ.
- ເພື່ອສຶກສາເຫດການທາງດ້ານປະຫວັດສາດໃນສະໄໝລາວແຕກແຍກເວົ້າລວມ ເວົ້າສະເພາະແມ່ນປະຫວັດສາດຂອງຊາວພວນ ໂດຍນຳເອົາເອກະສານຈາກວັນນະຄະດີໄປທຽບປຽບກັບເອກະສານທາງປະຫວັດສາດ.
- ເພື່ອຮັບໃຊ້ການຮຽນ-ການສອນ ຢູ່ໃນພາກວິຊາພາສາລາວ-ວັນນະຄະດີ, ມະຫາວິທະຍາໄລແຫ່ງຊາດ , ວິທະຍາໄລຄູ ກໍຄືໂຮງຮຽນສາມັນຕ່າງໆໃນທົ່ວປະເທດ.
- ເພື່ອສຶກສາແນວຄິດຮັກຊາດ, ຮັກບ້ານເກີດເມືອງນອນຂອງຄົນລາວໃນສະໄໝກ່ອນ ເພື່ອກູ້ອຸດກອນບົດຮຽນ ແລະພ້ອມທັງເປັນການປູກສ້າງສະຕິຊາດເອກະພາບໃຫ້ແກ່ຄົນລາວຍຸກໃໝ່.

3. ຜົນງານການຄົ້ນຄວ້າໄລຍະຜ່ານມາ

ການສຶກສາວິໄຈ " ກາບເມືອງພວນ " ໃນໄລຍະຜ່ານມາໃນລັກສະນະຊຳລະຮອບດ້ານ ຄື ທີ່ຈະດຳເນີນຕໍ່ໄປນີ້ ແມ່ນຍັງບໍ່ທັນມີ; ຈະມີກໍເປັນພຽງແຕ່ລັກສະນະຄັດຕອນອອກມາວິເຄາະ ເພື່ອຮັບໃຊ້ໃນວຽກງານສິດສອນຮ່ຳຮຽນເທົ່ານັ້ນ ເຊັ່ນ ໃນຕຳລາສອນວັນນະຄະດີສະໄໝສັກດີນາຂອງ ມ.ສ.ຄ ວຽງໄຊ, ສີນມາຈັນຮອດ ມ.ສ.ຄ ວຽງຈັນ ແລະມະຫາວິທະຍາໄລແຫ່ງຊາດໃນປັດຈຸບັນ. ຢູ່ໃນປຶ້ມ " ວັນນະຄະດີລາວ " (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987, ໜ້າ 274-277) ກໍໄດ້ນຳເອົາກາບເມືອງພວນເຂົ້າມາວິເຄາະແບບສັງລວມ. ແລະອີກບົດໜຶ່ງ " ພາບພົດແຫ່ງການຕໍ່ສູ້ກູ້ຊາດຂອງເຈົ້າ ອະນຸວົງ ສະແດງອອກທາງຮູບການວັນນະຄະດີລາວ " ໃນກອງປະຊຸມສຳມະນາປະຫວັດສາດລາວ " ຕາມຮອຍເຈົ້າອະນຸວົງ " (21-23 / 01/1997, ຄະນະພາສາ-ວັນນະຄະດີ ແລະມະນຸດສາດ, ມະຫາວິທະຍາໄລແຫ່ງຊາດ) ກໍໄດ້ຍົບຍົກເອົາບາງສ່ວນໃນກາບເມືອງພວນມາເວົ້າ, ແຕ່ຍ້ອນວ່າ ການຄັດຕອນບໍ່ຕໍ່ເນື່ອງກັນ ສະນັ້ນ ຈຶ່ງເຮັດໃຫ້ການເຂົ້າໃຈຄວາມໝາຍຂອງກາບເມືອງພວນມີອັນຄາດເຄື່ອນໄປບໍ່ໜ້ອຍ.

4. ຂອບເຂດ ແລະວິທີການຄົ້ນຄວ້າ

4.1. ຂອບເຂດຂອງການຄົ້ນຄວ້າ

ໃນເບື້ອງຕົ້ນ ພວກເຮົາຈະດຳເນີນການຊຳລະຕາມທິດສະດີການວິໄຈຕົ້ນສະບັບ (Textual Criticism) ທີ່ໂພນມາດ (Paul Maas) ໄດ້ຮວບຮວມໄວ້ວ່າ: " ໂດຍຮິບໂຮມຫລາຍສະບັບທີ່ມາຈາກຫລາຍແຫລ່ງເພື່ອທຳການວິໄຈ ". ແຕ່ຜ່ານລົງເກັບກຳເອກະສານຕ່າງໆແລ້ວ, ພວກເຮົາສາມາດເກັບກຳກາບເມືອງພວນໄດ້ພຽງສອງສະບັບ; ສະບັບໜຶ່ງໄດ້ຈາກພາກເພີ່ມຕື່ມໃນປຶ້ມ " ພົງສາວະດານເມືອງພວນ, ລຳດັບກະສັດເມືອງພວນ ແລະຜູ້ສືບສາຍຕະກຸນ "ຂອງເຈົ້າຄຳພັນ ວົງກົດລັດຕະນະ ແລະອີກສະບັບໜຶ່ງຈາກພາກເພີ່ມຕື່ມໃນປຶ້ມ " ປະຫວັດສາດເມືອງພວນ "ຂອງທ່ານ ພູມີ ວົງວິຈິດ. ເມື່ອສຶກສາເບິ່ງເອກະສານສອງສະບັບ ທີ່ເກັບກຳມາໄດ້ເຫັນວ່າ:

- ເອກະສານທັງສອງສະບັບຕ່າງກໍບໍ່ບອກແຫລ່ງທີ່ມາ.
- ສະບັບເຈົ້າຄຳພັນ ເປັນສະບັບເກົ່າແກ່ກວ່າ ເພາະພິມແຕ່ປີ 1952, ໃນຂະນະທີ່ສະບັບຂອງທ່ານ ພູມີ ຫາກໍພິມໃນປີ 1984.

- ເນື້ອໃນກາບສະບັບຂອງທ່ານ ພູມີ ວົງວິຈິດ ອາດກ່າຍມາຈາກສະບັບຂອງເຈົ້າຄຳພັນ ໂດຍກົງ ພຽງແຕ່ໄດ້ດັດແປງ ແລະແຕ່ງເພີ່ມຕື່ມໃນບາງຈຸດເທົ່ານັ້ນ ຫລືອາດຈະໄດ້ມາຈາກຕົ້ນສະບັບອື່ນ ກໍອາດເປັນໄປໄດ້. ຈາກສາເຫດດັ່ງກ່າວ ພວກເຮົາຈຶ່ງຍຶດເອົາສະບັບຂອງເຈົ້າ ຄຳພັນ ເປັນຕົ້ນສະບັບ ແລະສະບັບຂອງທ່ານ ພູມີ ເປັນຕົວທຽບ. ດັ່ງນັ້ນ, ການດຳເນີນການຊຳຣະຕາມທິດສະດີຂອງໂຟນມາດ ຈຶ່ງບໍ່ສາມາດດຳເນີນໄດ້ຢ່າງເຕັມທີ່. ກາບເມືອງພວນສະບັບຂອງເຈົ້າຄຳພັນ ລວມມີ 9 ບົດເຊິ່ງມີຫົວຂໍ້ບົດດັ່ງນີ້:

- ສານເຈົ້າສາລີ ເຮັດໄປເກືອຍໄທ (ເຈົ້າໜອງຄາຍ).
- ເຈົ້າໜອງຄາຍເກນກຳລັງທັບ ແລ້ວຍົກຍ້າຍຂຶ້ນໄປຊຽງຂວາງ ຕາມເສັ້ນທາງບ້ານສ້ອນ ເມືອງເລີກ.
- ຮອດເຈົ້າວຽັນແສນ ຄັນໄດ້ເຂົ້າເຝົ້າເຈົ້າວ້ຽນແສນແລ້ວ ກໍກາຍເຂົ້າໄປຊຽງຂວາງຄືນນັ້ນ.
- ຊື່ບ້ານໃນວ້ຽນກວາງ ວ້ຽນແສນ ວ້ຽນສຸ້ຍ ແລະວ້ຽນຄຳທີ່ໄທກວາດຄົວໄປ.
- ເຈົ້າສາລີ ແມ່ນພີ່ອ້າຍເຈົ້າສະ ນ້ອງຊາຍກໍໄດ້ລົງໄປພ້ອມກັບນາຍໄທ.
- ນາຍໄທຍົວະເຍົ້າເອົາຄົວລົງໄປ ວ່າຈະເອົາໄປສ້າງນາແທ່ນ ຄັນມາຮອດແລ້ວ ເລີຍຕີຄົວອ້າມຂອງ.
- ຊາວຄົວທັງຫລາຍໄປຮອດໜອງຄາຍ ໄດ້ເຫັນໄທປັນກັນໄປເຮັດຂ້ອຍ ພວກເຈົ້ານາຍເອົາຜູ້ສອງສາມຄົວ ຄັນເຫັນເປັນດັ່ງນັ້ນ ກໍພາກັນຄິດກະບົດໂຕນໜີລັດປ່າລັດດົງ ຄືນມາຫາບ້ານຫາເມືອງ.
- ເສຍຄົນພົດຫລາຍ ໃນເວລາເຂົາເຈົ້າເບື່ອໜາກໜ້ອງ ຕາຍໄປເປັນສອງສ່ວນສາມ.
- ເຈົ້າສະ ໜີມານີ້ເປັນເທື່ອທີສອງ ແຕ່ກໍຕາມຫລັງກັນມາ.

4.2. ວິທີການຄົ້ນຄວ້າ

- ສຳຫລວດ ແລະຮວບຮວມບັນດາຕອນລັດຈາກກາບເມືອງພວນ ທີ່ໃຊ້ວິເຄາະຢູ່ໃນຕຳລາສອນຕ່າງໆ ແລະຢູ່ໃນປຶ້ມ " ວັນນະຄະດີລາວ "ຂອງສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ເພື່ອທຽບກັບຕົ້ນສະບັບທີ່ເຈົ້າຄຳພັນ ວົງກົດລັດຕະນະ ເກັບກຳ ແລະຮຽບຮຽງໄວ້ເພື່ອເປັນຕົວຊີ້ນຳ.

- ສຶກສາຕົ້ນສະບັບປຽບທຽບກັບສະບັບຂອງທ່ານ ພູມີ ວົງວິຈິດ ແລະເອກະສານທາງປະຫວັດສາດ ແລະບູຮານຄະດີ.
- ວິເຄາະເນື້ອໃນຂອງກາບຕົ້ນສະບັບ ແຕ່ລະບົດຕາມລຳດັບ (1-9).
- ດັດແກ້ການສະກົດຄຳບາງຄຳສັບໃນຕົ້ນສະບັບດ້ວຍການສະກົດຄຳ ຕາມຫລັກໄວຍາກອນລາວ (ພູມີ ວົງວິຈິດ) ປັດຈຸບັນ.
- ດັດແກ້ໂຄງປະກອບສ້າງຂອງກາບຕົ້ນສະບັບໃຫ້ຖືກຕ້ອງຕາມຫລັກການແຕ່ງກາບ. ເພື່ອໃຫ້ອ່ານເຂົ້າໃຈງ່າຍ ແລະໃຫ້ເຫັນໄດ້ລັກສະນະສຳຜັດຈະແຈ້ງຂຶ້ນ.

5. ສະຖານທີ່ ແລະໄລຍະການຄົ້ນຄວ້າ

5.1. ສະຖານທີ່ການຄົ້ນຄວ້າ

ພາກວິຊາພາສາລາວ-ວັນນະຄະດີ, ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ.

5.2. ໄລຍະເວລາການຄົ້ນຄວ້າ

- ສົກຮຽນ 1998-1999 ເກັບກຳຮວບຮວມຂໍ້ມູນ.
- ສົກຮຽນ 1999-2000 ທຳການວິໄຈ, ສຳມະນາ ແລະພິມຕົ້ນສະບັບ.
- ສົກຮຽນ 2000-2001 ພິມອອກເຜີຍແຜ່.

6. ຜົນປະໂຫຍດຄາດວ່າຈະໄດ້ຮັບ

- ຈະໄດ້ກາບເມືອງພວນທີ່ຄົບຊຸດ ແລະສົມບູນ.
- ຈະໄດ້ຂໍ້ວິເຄາະ, ວິຈານກາບທີ່ຊັດເຈນສົມຄວນ ແລະເປັນບ່ອນອີງທີ່ໜ້າເຊື່ອຖືໄດ້ໃນຂັ້ນຕໍ່ໄປ.
- ຈະເປັນປະໂຫຍດແກ່ຜູ້ສຶກສາຮໍ່າຮຽນ ແລະສົນໃຈພາສາ, ວັນນະກຳ, ປະຫວັດສາດຂອງຊາວ ພວນ.

ຂ. ການຄົ້ນຄວ້າວິໄຈ

I. ບົດສັດຫຍໍ້ຂອງກາບ

ດັ່ງທີ່ໄດ້ສະເໜີມາແລ້ວວ່າ " ກາບເມືອງພວນ " ລວມທັງໝົດມີ 9 ບົດ, ເຊິ່ງແຕ່ລະບົດມີເນື້ອໃນຫຍໍ້ດັ່ງນີ້:

ບົດທີໜຶ່ງ ໄດ້ອາລຳພະບົດເຖິງຄວາມສະຫງົບສຸກ, ຈະເລີນຮຸ່ງເຮືອງຂອງເມືອງພວນ ເລີຍມີສັດຕູເຂົ້າມາກໍ່ຄວາມວຸ່ນວາຍ, ມ້າງເພບ້ານເມືອງ. ເຈົ້າສາລີເຊິ່ງເປັນເສນາຜູ້ໃຫຍ່ໃນເມືອງພວນເວລານັ້ນ ໄດ້ເຮັດສານໄປຂໍກຳລັງທັບໄທນຳພະລາຊະສຸລິນທີ່ໜອງຄາຍ; ເມື່ອໄດ້ຮັບສານຈາກເຈົ້າສາລີ, ພະລາຊະສຸລິນໄດ້ອອກຄຳສັ່ງ ເກນເອົາກຳລັງໄພ່ພົນໄດ້ເຖິງພັນກວ່າຄົນ, ພ້ອມກະກຽມສາດຕາອາວຸດ ແລະເຂົ້າປາອາຫານຢ່າງພຽບພ້ອມ ແລ້ວຕຽມຍົກພົນຂຶ້ນໄປເມືອງພວນຊຽງຂວາງ.

ບົດທີສອງ ໄດ້ກ່າວເຖິງບັນຍາກາດ ແລະທັດສະນີຍະພາບບົນເສັ້ນທາງທີ່ພະລາຊະສຸລິນໄດ້ນຳເອົາກຳລັງທັບເຄື່ອນຍ້າຍ ຈາກໜອງຄາຍຂຶ້ນເມືອຜ່ານທາງບ້ານສ້ອນ ເມືອງເລີກເຂົ້າສູ່ຊຽງຂວາງ.

ບົດທີສາມ ໄດ້ກ່າວເຖິງວັນເວລາທີ່ພະລາຊະສຸລິນ ນຳກຳລັງທັບໄປເຖິງຊຽງຂວາງ ເຊິ່ງເວລານັ້ນເປັນເດືອນຍີ່ແຮມ, ຈຸນລະສັກກະລາດ 1196 (ລະຫວ່າງຕົ້ນເດືອນ ກຸມພາ ຄ.ສ 1834). ພໍແຕ່ໄປຮອດກໍໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກເຈົ້າສານ ເຊິ່ງເປັນເຈົ້າເມືອງພວນເວລານັ້ນ ແລະເຊົ້າມືດຂອງມື້ຕໍ່ມາພະລາຊະສຸລິນກໍນຳກຳລັງທັບອອກຮົບກັບພວກສັດຕູ, ການຕໍ່ສູ້ໄດ້ດຳເນີນໄປຢ່າງດຸເດືອດເຮັດໃຫ້ສັດຕູພ່າຍແພ້, ແຕກສະຫລຸພຸພ່າຍໄປໝົດ. ຫລັງຈາກນັ້ນ, ພະລາຊະສຸລິນ ກໍໄດ້ປຶກສາກັບເຈົ້າເມືອງພວນເພື່ອຈະກວາດຄົວລົງໄປ, ເວລານັ້ນ ເຈົ້າເມືອງພວນກໍອຸກອັ່ງ ບໍ່ຮູ້ຈະຕັດສິນໃຈແນວໃດ.

ບົດທີສີ່ ໄດ້ກ່າວເຖິງບັນດາຊື່ບ້ານຕ່າງໆໃນວ້ຽນ [3] ກວາງ, ວ້ຽນແສນ, ວ້ຽນສູຍ ແລະວ້ຽນຄຳທີ່ໄທກວາດຄົວພວນລົງໄປໄທ.

ບົດທີຫ້າ ໄດ້ກ່າວເຖິງເຈົ້າສາລີ ແລະເຈົ້າສະ ສອງອ້າຍນ້ອງໄດ້ຄວບຄຸມຄົວລົງໄປໄທພ້ອມກັບນາຍໄທ. ໃນບົດນີ້ ໄດ້ພັນລະນາເຖິງຄວາມກັນລະຫົນວຸ່ນວາຍ, ຄວາມອິດອ່ອນໂຮຍແຮງຂອງຊາວຄົວພວນ ບົນເສັ້ນທາງອົບພະຍົບຈາກຊຽງຂວາງລົງໄປນາແຫ່ນ (ເຂດເມືອງບໍລິຄຳໄຊປັດຈຸບັນ), ຕາມນາຍໄທຕົວະຍົວະວ່າຈະນຳຄົວພວນລົງໄປສ້າງເຂດນາແຫ່ນ.

ບົດທີຫົກ ໄດ້ເຜີຍໂສມໜ້າຂອງພວກໄທທີ່ຍົວະເຍົ້າຄົວພວນ ວ່າຈະເອົາລົງໄປສ້າງເຂດນາແຫ່ນ ແຕ່ພໍຮອດນາແຫ່ນແລ້ວ ກໍເລີຍຕີຄົວຂ້າມຂອງ. ເວລານີ້ ຄວາມກັນລະຫົນ, ເດືອດຮ້ອນ, ຄວາມເຈັບແຄ້ນແໜ້ນໃຈ ຍິ່ງໜັກກວ່າເວລາເດີນທາງອົບພະຍົບລົງມາ. ຊາວຄົວພວນ ຍິ່ງມີຄວາມກິນແໜງແຄງໃຈ ເມື່ອຮູ້ວ່າພວກຕົນຖືກຫລອກລວງ.

ນອກຈາກນັ້ນ, ໃນບົດນີ້ ຜູ້ປະພັນກາບໄດ້ນຳເອົາສະພາບຄວາມປ່ຽນແປງຢູ່ບ້ານເກົ່າເມືອງຫລັງ (ເມືອງພວນ) ມາພັນລະນາສອດແຊກກັບຄວາມວຸ່ນວາຍ, ຄວາມທຸກທໍລະມານຂອງຊາວຄົວທີ່ພວມປະເຊີນຢູ່ທີ່ໜອງຄາຍໃນເວລານັ້ນຕື່ມອີກ ເພື່ອຢາກຢືນຢັນວ່າ ສະຖານະການຂອງຊາວຄົວພວນເວລານັ້ນໄດ້ຜັນແປຈາກໜ້າມືເປັນຫລັງມືໄປໝົດ.

ບົດທີເຈັດ ໄດ້ກ່າວເຖິງຊາວຄົວພວນ ເມື່ອໄປເຖິງໜອງຄາຍແລ້ວ, ໄດ້ເຫັນພວກໄທປັນກັນໄປເຮັດຂ້ອຍ, ຜູ້ເປັນເຈົ້ານາຍເອົາຜູ້ລະສອງສາມຄົວ, ສ່ວນສະພາບຢູ່ບ້ານອົບພະຍົບ ກໍມີແຕ່ຄວາມເດືອດຮ້ອນ, ທຸກຍາກລຳບາກແສນສາຫັດ. ເມື່ອເຫັນເປັນດັ່ງນັ້ນ, ຊາວພວນກໍຊັກຊວນກັນໂຕນໜີກັບຄືນບ້ານເກີດເມືອງນອນ; ພາຍຫລັງກະກຽມແລ້ວ ກໍພາກັນໂຕນໜີຂ້າມຂອງກັບຄືນຢ່າງບໍ່ເປັນລະບຽບ, ພວກນາຍໄທກໍພາກັນໄລ່ຕິດຕາມເພື່ອຫວັງຈະຈັບກັບຄືນ. ພວກທີ່ໂຕນໜີພາກັນສ່ຽງຕາຍ ຜ່ານປ່າຜ່າດົງ, ອຶດຫິວ, ຫາກິນໝາກໄມ້ໃບຜັກ, ຄອບຄົວແຕກແຍກພັດພາກຈາກກັນ ແລະຈຳນວນໜຶ່ງ ກໍລົ້ມຫາຍຕາຍໄປ.

ບົດທີແປດ ໄດ້ພັນລະນາເຖິງວິບາດສະກຳ ບົນເສັ້ນທາງທີ່ຊາວຄົວພວນໂຕນໜີກັບຄືນບ້ານເກີດເມືອງນອນໄດ້ປະເຊີນກັບສະພາບຄວາມອຶດຫິວ, ອາໄສຮົ່ມໄມ້ເປັນທີ່ຫລັບນອນ, ອາໄສຫົວມັນ, ຫົວກອຍ, ໝາກໄມ້ເປັນອາຫານ. ແຕ່ພາບທີ່ໜ້າເສົ້າສະຫລົດໃຈຍິ່ງໄປກວ່ານັ້ນ ແມ່ນຊາວຄົວພາກັນຫລົງກິນໝາກໜ້ອງ ແລ້ວເບື່ອຕາຍໄປເປັນຈຳນວນສອງສ່ວນສາມ.

ບົດທີເກົ້າ ໄດ້ພັນລະນາເຖິງເຈົ້າສະ ຜູ້ເປັນນ້ອງໄດ້ນຳຄົວພວນໂຕນໜີ ກັບຄືນບ້ານເກີດເມືອງນອນເປັນຂະບວນທີສອງ. ພາຍຫລັງເຈົ້າສາລີທີ່ໂຕນກັບຄືນມາໃນລະຫວ່າງກາງເດືອນແປດ ແລະໄລຍະຕໍ່ມາ ເຈົ້າສະກໍພາຂະບວນຄົວໂຕນໜີຕາມມາ ບົນເສັ້ນທາງເກົ່າທີ່ເຈົ້າສາລີຜ່ານໄປ. ສະນັ້ນ, ຂະບວນຂອງເຈົ້າສະ ຈຶ່ງພົບພໍ້ຊາກສົບຂອງຄົວພວນ ທີ່ໂຕນໜີມາກ່ອນຢາຍເດຍລະດາດຕາມເສັ້ນທາງ, ຊາຕາກຳຂອງຂະບວນນີ້ ກໍບໍ່ຕ່າງຫຍັງກັບຊາຕາກຳຂອງພວກໂຕນໜີມາກ່ອນ; ພວກນີ້ກໍປະສົບກັບຄວາມຫາ-ຍະນະ ຍ້ອນເບື່ອຫົວມັນ, ຫົວກອຍ, ບາງຄອບຄົວ, ເດັກນ້ອຍ, ຜູ້ເຖົ້າທີ່ບໍ່ສາມາດຍ່າງໄປໄດ້ກໍປະຖິ້ມໃຫ້

[3] ວ້ຽນ (Huyen-ຮ້ວຽນ) ມີຄວາມໝາຍວ່າ " ເມືອງ " ໃນເວລາທີ່ຫວຽດນາມມາປົກຄອງເມືອງພວນໄດ້ໃສ່ຊື່ເຂດຕ່າງໆວ່າ " ວ້ຽນ ".

ຕາຍຢູ່ຕາມປ່າດົງພົງກົດ. ພາຍຸໄດ້ຜ່ານໄປ ສຸດທ້າຍເຈົ້າສະກໍພາຂະບວນສ່ວນໃຫຍ່ກັບຄືນເຖິງບ້ານເກີດເມືອງນອນ.

+ ຜ່ານເນື້ອໃນຫຍໍ້ແຕ່ລະບົດຂອງກາບ ພວກເຮົາສາມາດສະຫລຸບໄດ້ເນື້ອໃນສ່ອງແສງຂອງກາບດັ່ງນີ້:

- ຕົ້ນເຫດທີ່ພາໃຫ້ຊາວຄົວພວນຖືກກວາດຕ້ອນລົງໄປໄທ. ເປົ້າໝາຍໃນການກວາດຕ້ອນຂອງໄທເທື່ອນີ້ ບໍ່ສະເພາະແຕ່ກວາດຕ້ອນເອົາແຕ່ບ້ານໃດບ້ານໜຶ່ງ ຫລືເມືອງໃດເມືອງໜຶ່ງເທົ່ານັ້ນ, ແຕ່ຫາກຫວັງກວາດຕ້ອນໄປທຸກໆບ້ານທີ່ຂຶ້ນກັບເມືອງພວນເວລານັ້ນ.
- ຄວາມທຸກຍາກລຳບາກຂອງຊາວຄົວພວນ ບົນເສັ້ນທາງທີ່ຖືກກວາດຕ້ອນລົງໄປໄທ ແລະກ່າວປະນາມໂທດກຳອັນໂຫດຮ້າຍປ່າເຖື່ອນຂອງໄທທີ່ຕົວະຍົວະຫລອກລວງ, ສ້າງທາລຸນກຳຕໍ່ຄອບຄົວລາວຊາວພວນເວລານັ້ນ.
- ແນວຄິດຮັກຊາດ, ຮັກບ້ານເກີດເມືອງນອນ, ບໍ່ຍອມຈຳນົນ, ຕາຍເປັນຜີ ດີກວ່າເປັນທາດຂອງຊາວຄົວພວນຈຳນວນຫລວງຫລາຍທີ່ໂຕນກັບຄືນ, ເຖິງວ່າ ຈະລົ້ມຕາຍເປັນຈຳນວນຫລວງຫລາຍ ແຕ່ກໍບໍ່ມີໃຜໂຕນກັບຄືນໄປຫາຝ່າຍໄທ, ຍັງເທົ່າໃດກໍບຸກບືນຢືນສູ້ເພື່ອກັບຄືນຫາບ້ານເມືອງນອນ.

II. ຄວາມເປັນມາຂອງກາບ

1. ຊື່ຂອງກາບ

ເທົ່າທີ່ຄົ້ນພົບມາ ກາບມີພຽງຊື່ດຽວຄື " ກາບເມືອງພວນ " ແຕ່ເປັນຫຍັງຈຶ່ງຕັ້ງຊື່ແນວນີ້, ນັ້ນກໍເພາະເຫດວ່າ ຮູບແບບການຂຽນບົດແມ່ນຂຽນດ້ວຍກອນກາບເປັນສ່ວນໃຫຍ່ ແລະເນື້ອໃນຂອງກາບກໍໄດ້ບັນລະຍາຍເຖິງສະພາບ ແລະເຫດການປະຫວັດສາດອັນໜ້າເສົ້າສະຫລົດໃຈຂອງຄົນລາວຊາວພວນໂດຍສະເພາະເຈາະຈົງ ຊຶ່ງບໍ່ມີວັກໃດ, ຕອນໃດທີ່ກ່າວເຖິງເຫດການອື່ນໆ, ດັ່ງນັ້ນ, ຈຶ່ງເໝາະສົມທີ່ຈະໃສ່ຊື່ກາບວ່າ " ກາບເມືອງພວນ ".

2. ຊື່ຜູ້ແຕ່ງ

ດັ່ງທີ່ເຄີຍຮູ້ນຳກັນແລ້ວວ່າ ວັນນະກຳລາວສະໄໝກ່ອນ ແມ່ນບໍ່ມັກລົງຊື່ຜູ້ແຕ່ງ. ເມື່ອປະພັນຂຶ້ນແລ້ວ ກໍເລົ່າປາກຕໍ່ປາກສືບກັນມາ, ພາຍຫລັງມາ ຈຶ່ງຄ່ອຍມີຜູ້ຈົດກ່າຍຄືນໃສ່ໃບລານຫລືເຈ້ຍສາ. ກໍລະນີຂອງ " ກາບເມືອງພວນ " ກໍຕົກຢູ່ໃນກໍລະນີນີ້, ບໍ່ປາກົດເຫັນນາມຜູ້ແຕ່ງ, ແຕ່ກໍເຊື່ອວ່າ ຕ້ອງແມ່ນໃຜຜູ້ໜຶ່ງ ທີ່ເປັນນັກປາດອາຈານຢູ່ໃນເມືອງພວນເວລານັ້ນ ແລະມີພອນສະຫວັນທາງດ້ານການປະພັນກາບກອນ ຢູ່ໃນຂະບວນທີ່ຖືກໄທກວາດຕ້ອນໄປນັ້ນ ຈຶ່ງສາມາດວາດພາບ, ເກັບກຳຂໍ້ມູນ, ເຫດການຕ່າງໆທີ່ຊາວພວນປະເຊີນໃນຄາວນັ້ນໄດ້ຢ່າງລະອຽດຊັດເຈນ.

3. ວັນເດືອນປີແຕ່ງ

ອີງຕາມປະຫວັດສາດ ແລະເນື້ອໃນຂອງກາບ, ພວກເຮົາອາດເວົ້າໄດ້ວ່າ " ກາບເມືອງພວນ " ແມ່ນແຕ່ງຂຶ້ນພາຍຫລັງຂະບວນການຕໍ່ສູ້ຫວັງກອບກູ້ເອກະລາດຈາກສະຫຍາມ ເຊິ່ງນຳໂດຍເຈົ້າອະນຸວົງ ສິ້ນສຸດລົງ (1827-1829), ຄືໃນລະຫວ່າງປີ 1835, ດັ່ງສະແດງອອກໃນກາບບົດທີສາມ ເຊິ່ງກ່າວເຖິງຂະບວນທັບໄທນຳໂດຍພະລາຊະສຸລິນໄປເຖິງຊຽງຂວາງໃນເດືອນຍີ່ແຮມ ຈຸນລະສັງກາດ 1196 (ລະຫວ່າງຕົ້ນ

ເດືອນ ກຸມພາ ປີ 1834), ນີ້ສະແດງວ່າ ເຫດການກວາດຕ້ອນຊາວລາວພວນຂອງທະຫານໄທແມ່ນເກີດຂຶ້ນ ໃນປີ 1834, ແຕ່ການແຕ່ງກາບອາດແຕ່ງຂຶ້ນ ພາຍຫລັງທີ່ໂຕນກັບຄືນໄປເຖິງບ້ານເກີດເມືອງນອນແລ້ວ ເພື່ອເປັນການທວນຄືນເຖິງໂສກນາດຕະກຳທີ່ລາວລາວຊາວພວນໄດ້ປະເຊີນໃນໄລຍະຜ່ານມາ.

4. ລັກສະນະຂອງຄຳປະພັນກາບ

" ກາບເມືອງພວນ " ທີ່ພວກເຮົາໃຊ້ຄົ້ນຄວ້າວິໄຈນີ້ ສ່ວນຫລວງຫລາຍແມ່ນມີລັກສະນະກອນກາບ, ແຕ່ກໍມີບາງບ່ອນສອດແຊກກັບປະເພດກອນອື່ນ. ການປະພັນແມ່ນຍຶດຖືຫລັກການສຳຜັດເປັນຫລັກ ແລະສຳຜັດຊ້ອນຕໍ່ກັນໄປຈົນໝົດບົດ. ການສຳຜັດແມ່ນມີເກືອບຄົບທຸກລັກສະນະການສຳຜັດ ເຊັ່ນ ສຳຜັດນອກ, ສຳຜັດໃນ, ສຳຜັດລຽນອັກສອນ, ຂັ້ນອັກສອນ ແລະອື່ນໆ ຕາມຫລັກການແຕ່ງກາບ, ແຕ່ກໍມີບາງວັກການສຳຜັດບໍ່ໄດ້ດີ ເຊິ່ງເລັງໃສ່ແຕ່ເນື້ອໃນເປັນສິ່ງສຳຄັນ. ປະລິມານຄຳໃນແຕ່ລະວັກ ສ່ວນຫລາຍແມ່ນມີ 7 ຄຳ ແຕ່ກໍມີບາງວັກ ມີຮອດ 8, 9, 10 ຄຳກໍມີ. ເພາະວ່າ ສະໄໝກ່ອນ ການແຕ່ງກາບບໍ່ເຄັ່ງຄັດປານໃດ.

ແຜນວາດຫລັກການສຳຜັດກອນກາບໂດຍທົ່ວໄປ

0 0 0	0 0 0 0້
0 0 0້	0 0 0 0
0 0 0	0 0 0 0່
0 0 0່	0 0 0 0
0 0 0	0 0 0 0່
0 0 0່	0 0 0 0

ພິເສດກາບເມືອງພວນ ຍັງປາກົດເຫັນຄຳບຸບພະບົດ ແລະຄຳສ້ອຍຈຳນວນໜຶ່ງເຊິ່ງອີງຕາມຫລັກການແຕ່ງກາບແລ້ວ ແມ່ນບໍ່ມີຄຳບຸບພະບົດ ແລະຄຳສ້ອຍ.

ຄຳສັບທີ່ໃຊ້ປະພັນກາບ ນອກຈາກເປັນຄຳລາວມາດຕະຖານແລ້ວ, ຍັງມີຄຳສັບທ້ອງຖິ່ນໄທພວນປົນເປຢູ່ບາງບ່ອນ (ຈະອະທິບາຍໄວ້ໃນພາກອະທິບາຍຄຳສັບ). ສ່ວນອັກສອນທີ່ໃຊ້ບັນທຶກບົດປະພັນແມ່ນໃຊ້ອັກສອນລາວປັດຈຸບັນ, ແຕ່ສະກົດຕາມເຄົ້າແດ່, ສະກົດຕາມສຽງແດ່ປົນເປກັນໄປ.

III. ຄວາມສຳພັນຂອງກາບກັບປະຫວັດສາດ

1. ປະຫວັດຂອງເມືອງພວນ ແລະຊາວພວນໂດຍສັງເຂບ

ເມືອງພວນ ແມ່ນເມືອງໜຶ່ງທີ່ມີຄວາມສຳຄັນ ແລະຈະເລີນຮຸ່ງເຮືອງ ໃນສະໄໝບູຮານຂອງລາວ, ລຽງຕົວຄຽງຄູ່ກັບໄຫຫີນໃນບໍລິເວນພູພຽງຊຽງຂວາງ. ແຕ່ເມືອງພວນ ແລະໄຫຫີນທີ່ກ່າວມານັ້ນໄດ້ສ້າງຂຶ້ນແຕ່ເວລາໃດ ? ແມ່ນໃຜເປັນຜູ້ສ້າງມາກ່ອນ ? ຄຳຖາມເຫລົ່ານີ້ ນັກວິຊາການທັງຫລາຍກໍຍັງສືບທະນາ ແລະຖົກຖຽງກັນຢູ່. ພວກເຮົາຮູ້ເມືອງພວນ ແລະໄຫຫີນນັ້ນ ກໍຮູ້ຜ່ານພົງສາວະດານ, ຕຳນານ ຫລືການເລົ່າດ້ວຍປາກສືບຕໍ່ກັນມາ ເຊິ່ງບໍ່ໄດ້ຈົດຈຳວັນເວລາ, ເດືອນ, ປີ ຢ່າງຈະແຈ້ງຊັດເຈນ. ແຕ່ອີງໃສ່ຫລັກ

ກຸານ, ຕຳນານເດີມທີ່ນັກປະຫວັດສາດຣຸ່ນກ່ອນຂຽນໄວ້ນັ້ນ, ພວກເຮົາກໍຮູ້ໄດ້ວ່າ ເມືອງພວນແມ່ນເມືອງໜຶ່ງທີ່ມີຊື່ສຽງຄູ່ກັບບັນດາເມືອງຕ່າງໆຂອງລາວໃນສະໄໝບູຮານ ເຊັ່ນ ເມືອງຊວາ, ເມືອງໂຄຕະບູນ (ໂຄຕະບອງ), ເມືອງວຽງຈັນ, ເມືອງຈຳປານະຄອນ ແລະເມືອງອື່ນໆ. ພ້ອມນັ້ນ ກໍຮູ້ໄດ້ວ່າຊາວເມືອງພວນມາຕັ້ງກຸ່ນກຸານບ້ານຊ່ອງໃນບໍລິເວນພູພຽງຊຽງຂວາງນີ້ ກໍພ້ອມໆກັບຊົນເຜົ່າລາວ (ຫລືໄຕ-ລາວ) ທີ່ມາຕັ້ງກຸ່ນກຸານບ້ານເຮືອນ ຢູ່ນີ້ນດິນແດນແຫລມທອງໃນສະໄໝບູຮານ ເຊິ່ງມີປະຫວັດຄວາມເປັນມາຄືດັ່ງນີ້:

ຕາມພົງສາວະດານລາວ[4] ໄດ້ກ່າວໄວ້ວ່າ ໃນສະໄໝກ່ອນ ຄ.ສ ປະມານ 3000 ປີມາແລ້ວ, ສູນກາງຂອງຊົນເຜົ່າລາວທຳອິດແມ່ນຢູ່ລ່ອງແມ່ນ້ຳຮວງໂຫ ແລະຍັງຊີກຽງ (ພາກໃຕ້ຂອງຈີນ). ພາຍຫລັງຖືກເຜົ່າຈີນເຂົ້າມາແຊກແຊງ, ຊົນເຜົ່າລາວຢູ່ໃນອົງເຂດດັ່ງກ່າວ ຈຶ່ງໄດ້ເຄື່ອນຍ້າຍລົງມາທາງໃຕ້ສ້າງເມືອງໃໝ່ຂຶ້ນເລື້ອຍໆ ຕໍ່ມາໄດ້ແຍກກັນອອກເປັນຫລາຍພວກ. ຫລາຍຮ້ອຍປີຕໍ່ມາ ການເຄື່ອນຍ້າຍລົງມາທາງໃຕ້ຂອງເຜົ່າລາວກໍຍິ່ງຫລາຍຂຶ້ນ. ພາກສ່ວນດັ່ງກ່າວນັ້ນ, ສ່ວນຫລາຍໄດ້ມາຕັ້ງກຸ່ນກຸານຢູ່ລຽບຕາມແຄມໜອງແສ ແລະສ້າງເປັນອານາຈັກຂຶ້ນ ຊື່ວ່າ: ອານາຈັກໜອງແສ (ຢູ່ເຂດບ່ານເຈົ້າຂອງຈີນທຸກວັນນີ້). ອານາຈັກໜອງແສຄົງຕົວເປັນເວລາຍາວນານ ແລະຜ່ານຫລາຍລັດຊະສະໄໝ; ບາງຄັ້ງກໍຖືກຈີນເຂົ້າມາຍຶດຄອງ ແລະບາງຄັ້ງກໍແຍກຕົວອອກເປັນເອກະລາດ. ຈົນມາເຖິງລັດຊະການຂອງຂຸນບູລົມລາຊາ ທິລາດທີ່ໄດ້ຂຶ້ນຄອງລາຊະສົມບັດທີ່ໜອງແສ ເມື່ອປີ ຄ.ສ 729, ພະອົງເປັນກະສັດຜູ້ທີ່ມີຊື່ສຽງຂອງຊົນເຜົ່າອ້າຍລາວທີ່ອານາຈັກໜອງແສ. ມາຮອດປີ ຄ.ສ 731, ພະອົງໄດ້ພາໄພ່ພົນໄປສ້າງເມືອງໃໝ່ທີ່ທົ່ງນານ້ອຍອ້ອຍໜູ ແລະເອີ້ນຊື່ເມືອງວ່າ: ເມືອງແຖນ ຫລືອານາຈັກແຖນ (ແຄວ້ນດຽນບຽນຟູຂອງຫວຽດນາມໃນປັດຈຸບັນ); ແລ້ວພະອົງກໍໄດ້ຍ້າຍຈາກໜອງແສໄປປະທັບຢູ່ເມືອງແຖນ.

ຕາມນິທານຂຸນບູລົມໄດ້ກ່າວວ່າ[5] : ຂຸນບູລົມມີໂອລົດເຖິງ 7 ອົງ ຄື ຂຸນລໍ, ທ້າວ ຜາລ້ານ, ທ້າວ ຈູສິງ, ທ້າວ ຄຳຜົງ, ທ້າວ ອິນ, ທ້າວ ກົມ ແລະທ້າວ ເຈືອງ. ເມື່ອພະໂອລົດເຕີບໃຫຍ່ຂຶ້ນມາ ພໍຄອງລັດຊະການບ້ານເມືອງ, ພະບິດາຂຸນບູລົມກໍໄດ້ຈັດແຈງແບ່ງປັນສົມບັດ ແລະມອບໝາຍໜ້າທີ່ໄປຄອບຄອງຫົວເມືອງຕ່າງໆຄື:

1. *ຂຸນລໍ ໄປຄອງເມືອງລ້ານຊ້າງ (ຫລືເມືອງຊວາ)*
2. *ທ້າວ ຜາລ້ານ ໄປຄອງເມືອງຕ້າຫໍ (ຫລືທໍ່ແຕ)*
3. *ທ້າວ ຈູສິງ ໄປຄອງເມືອງຈຸລະນີ ຄືເມືອງແກວ*
4. *ທ້າວ ຄຳຜົງ ໄປຄອງເມືອງ ໂຍນົກ ຄືລ້ານນາ (ຊຽງໃໝ່)*
5. *ທ້າວ ອິນ ໄປຄອງເມືອງ ລ້ານເພຍ ຄືອະຍຸທະຍາ*
6. *ທ້າວ ກົມ ໄປຄອງເມືອງ ຫລ້າຄຳມ່ວນ*
7. *ທ້າວ ເຈືອງ ໄປຄອງເມືອງ ປະກັນ ຊຽງຂວາງ (ເມືອງພວນ)*

ພາຍຫລັງໄດ້ຮັບມອບໝາຍຈາກພະບິດາແລ້ວ, ລູກທັງ 7 ຂອງຂຸນບູລົມໄດ້ສັ່ງລາກັນ ແລະກາບທູນລາພະບິດາ ໄປຄອງລາຊະການບ້ານເມືອງຂອງໃຜລາວ. ທ້າວ ເຈືອງ ລູກຊາຍຜູ້ທີ 7 ຂອງຂຸນບູລົມໄດ້ຍົກຍ້າຍຈາກເມືອງນານ້ອຍ ອ້ອຍໜູລົງມາຍັງເມືອງພວນເມື່ອຈຸນລະສັກກະລາດ 119 (ຄ.ສ 757)[6]

---

[4] ສີລາ ວິລະວົງ, " ພົງສາວະດານລາວ " ກົມມັດທະຍົມສຶກສາ, ກະຊວງສຶກສາທິການ, 1973.

[5] ໜັງສື " ພື້ນຂຸນບູຣົມ ຣາຊາທິຣາດ " ກົມວັນນະຄະດີ, 1967, ໜ້າ 50, 51.

[6] ອາດແມ່ນສະໄໝດຽວກັນກັບເວລາທີ່ຂຸນລໍ ອ້າຍຂອງຂຸນເຈືອງມາຕີເອົາເມືອງຊວາ.

ພາຍຫລັງຂຶ້ນຄອງລາຊະສົມບັດທີ່ເມືອງພວນແລ້ວ, ຫລາຍປີຕໍ່ມາຂຸນເຈືອງ ແລະຂຸນລໍໄດ້ຈັດການແບ່ງປັນເຂດແດນລະຫວ່າງເມືອງພວນ ແລະເມືອງຊວາ, ໂດຍເອົາສາຍນ້ຳຄານເລັ່ງຂຶ້ນເຖິງສັນພູເຂົາຫລູບ, ຕັ້ງເຂດນັ້ນເປັນຫລັກໝາຍ. ເລີ່ມແຕ່ສັນພູເຂົາຫລູບແລ້ວຂີດເສັ້ນໄປທາງເໜືອ ແລະທາງໃຕ້ເປັນເສັ້ນເຂດແດນລະຫວ່າງເມືອງພວນ, ເມືອງຊວາຈົນເທົ່າທຸກວັນນີ້.

ຕໍ່ຈາກເຈັດເຈືອງມາ ເມືອງພວນກໍມີຫລາຍກະສັດຂຶ້ນປົກຄອງສືບທອດກັນມາຈົນເຖິງສະໄໝເຈົ້າຟ້າງຸ່ມ ລວມທັງໝົດມີເຖິງ 23 ອົງ. ກະສັດຜູ້ທີ 22 ຊື່ວ່າທ້າວ ຄຳຜົງ (ຄອງລາຊະສົມບັດທີ່ເມືອງພວນໃນປີ ຄ.ສ 1289-1350). ທ້າຍລັດຊະການທ້າວ ຄຳຜົງ, ເມືອງພວນໄດ້ຕົກເປັນເມືອງສ່ວຍຂອງອານາຈັກດ້າຍຫວຽດ (ຫວຽດນາມ) ແກ່ຍາວຈົນເຖິງສະໄໝເຈົ້າຟ້າງຸ່ມທ້ອນໂຮມຫົວເມືອງລາວເຂົ້າເປັນເອກະພາບ, ເຈົ້າຟ້າງຸ່ມ ໄດ້ດຳເນີນການແບ່ງປັນເຂດແດນກັບດ້າຍຫວຽດ. ແຕ່ນັ້ນມາ ເມືອງພວນກໍຫລຸດພົ້ນອອກຈາກການເປັນເມືອງສ່ວຍຂອງດ້າຍຫວຽດ ແລະກາຍເປັນເມືອງໜຶ່ງຢູ່ໃນອານາຈັກລາວລ້ານຊ້າງເອກະພາບ. ໃນເວລານັ້ນ, ເມືອງພວນຢູ່ໃຕ້ລາຊະການຂອງເຈົ້າ ຄຳຍໍຍົກ (ໂອລົດຂອງເຈົ້າ ຄຳຜົງ).

ພາຍຫລັງເຈົ້າຄຳຍໍຍົກ ສິ້ນພະຊົນ, ລູກຊາຍຊື່ ເຈົ້າລ້ານຄຳກອງຂຶ້ນສະເຫວີຍລາດແທນໃນປີ ຄ.ສ 1372. ສະໄໝເຈົ້າລ້ານຄຳກອງ ເມືອງພວນມີຄວາມຈະເລີນຮຸ່ງເຮືອງ, ສາສະໜາພຸດໄດ້ຮັບການ ເຜີຍແຜ່ຢ່າງກວ້າງຂວາງ, ວັດວາອາຮາມໄດ້ຮັບການກໍ່ສ້າງ, ການບໍລິຫານບ້ານເມືອງຢູ່ພາຍໃຕ້ " ກົດໝາຍລ້ານຄຳກອງ ", ບ້ານເມືອງໄດ້ຢູ່ສະຫງົບສຸກ, ເປັນລະບຽບຮຽບຮ້ອຍດີ. ເມື່ອເຫັນເຈົ້າລ້ານຄຳກອງມີຄວາມເກັ່ງກ້າ, ປີຊາສາມາດ, ເສນາອາມາດຈຶ່ງພ້ອມກັນລາຊາພິເສກພະອົງ ແລະກວາຍພະນາມວ່າ: ພະເຈົ້າອິດສະຫລະເສດຖາ ແລະຍົກນາມເມືອງວ່າ: ມະຫາຣັດຕະນະບູລີລົມພົມມະຈັກກະພັດ ສີມະຫານັກຄະລະ ຕັກກະເສລາ ນະຄອນຊຽງຂວາງຣາຊະທານີ[7] ໃນເວລານີ້ເມືອງພວນມີຊື່ສຽງຮຽງນາມ, ລືຊາຜາກົດໄປເຖິງເມືອງອື່ນໆ.

ພາຍຫລັງລັດຊະການເຈົ້າລ້ານຄຳກອງ ເມືອງພວນກໍມີຜູ້ປົກຄອງຜ່ານມາຫລາຍອົງ. ມາເຖິງສະໄໝເຈົ້າຄຳສັ້ນ ຄອງລາຊະສົມບັດໃນປີ ຄ.ສ 1650, ພະເຈົ້າສຸລິຍະວົງສາ, ພະເຈົ້າລ້ານຊ້າງຮົ່ມຂາວມີປະສົງຢາກໄດ້ເຈົ້ານາງ ແກ່ນຈັນ ພະລາຊະທິດາຂອງພະອົງໄປເປັນມະເຫສີ ແຕ່ພະອົງບໍ່ຍອມໃຫ້. ພະເຈົ້າສຸລິຍະວົງສາ ຈຶ່ງໄດ້ຍົກທັບໄປຕີເມືອງພວນ, ຝ່າຍເຈົ້າຄຳສັ້ນ ກໍເກນທະຫານອອກສູ້ຮົບປ້ອງກັນເຂດແດນຢ່າງເຕັມຄວາມສາມາດ ແຕ່ບໍ່ຊະນະທັບວຽງຈັນ. ພະເຈົ້າສຸລິຍະວົງສາ ໄດ້ຈັບເອົາເຈົ້ານາງ ແກ່ນຈັນ ແລະກວາດຕ້ອນຊາວພວນລົງໄປເມືອງວຽງຈັນຫລາຍພັນຄົນ; ສະນັ້ນ, ຈຶ່ງມີຊາວພວນຢູ່ເຂດວຽງຈັນຕັ້ງແຕ່ນັ້ນມາ ແລະເອີ້ນວ່າ: " ພວນເດີມ ". ແຕ່ເຖິງຢ່າງໃດກໍຕາມ ເຈົ້າຄຳສັ້ນກໍບໍ່ໄດ້ເກີດເສຍພະໄທ; ພະອົງຍັງໄດ້ພາໄພ່ພົນສ້າງບ້ານເມືອງໃຫ້ຮຸ່ງເຮືອງ ຄື ດັ່ງສະໄໝເຈົ້າລ້ານຄຳກອງ.

ຕໍ່ມາຮອດສະໄໝເຈົ້າອົງຫລໍ່ (ເຈົ້າອົງທົງ) ຂຶ້ນຄອງລາຊະສົມບັດທີ່ເມືອງພວນໃນປີ ຄ.ສ 1751 ໃນເວລານີ້ ອານາຈັກລ້ານຊ້າງຮົ່ມຂາວໄດ້ກ້າວເຂົ້າສູ່ໄລຍະເສື່ອມໂຊມ ແລະຖືກແຕກແຍກອອກເປັນສາມອານາຈັກ ຄື ວຽງຈັນ, ຫລວງພະບາງ ແລະຈຳປາສັກ. ເຈົ້າອົງຫລໍ່ໄດ້ສົ່ງທັບໄປຕີເຈົ້າໄຊອົງເວ້, ເຈົ້າຄອງອານາຈັກວຽງຈັນ ແຕ່ບໍ່ຊະນະພະອົງ, ເຈົ້າອົງຫລໍ່, ໄດ້ມອບລາຊະສົມບັດໃຫ້ມະຫາອຸປະຣາດ (ອົງບູນ) ຄອບຄອງເມືອງພວນໃຫ້ຂຶ້ນກັບວຽງຈັນ. ສ່ວນພະອົງ ໄດ້ໄປຢູ່ຫົວພັນທັງຫ້າທັງຫົກ. ພາຍຫລັງທ້ອນໂຮມກຳລັງໄດ້ແລ້ວ ກໍຍົກທັບລົງມາ ຫວັງຈະຕີວຽງຈັນ. ແຕ່ເມື່ອມາຮອດເມືອງພວນ ໄດ້ຕໍ່ສູ້ກັບເຈົ້າອົງບູນແຕ່ບໍ່ຊະນະ, ຫລັງຈາກນັ້ນ ເຈົ້າອົງບູນໄດ້ມອບລາຊະສົມບັດໃຫ້ເຈົ້າອົງຫລໍ່ ຄອບຄອງບ້ານເມືອງ ແລະກໍຂຶ້ນກັບວຽງຈັນຕໍ່ໄປ. ໃນເວລານັ້ນ, ເມືອງຫົວພັນທັງຫ້າທັງຫົກ ກໍໄດ້ຂຶ້ນກັບເມືອງພວນ.

---

7 ພົງສາວະດານເມືອງພວນ (ເອກະສານໄດ້ສະເໜີແລ້ວ).

ມາໃນປີ ຄ.ສ 1779, ກອງທັບສະຫຍາມຍຶດວຽງຈັນ ແລະໄດ້ຈັບເຈົ້ານັນທະເສນ, ເຈົ້າອິນທະວົງ ແລະເຈົ້າອະນຸວົງ (ໂອລົດເຈົ້າສິລິບຸນຍະສານ ເຈົ້າຄອງວຽງຈັນ) ລົງໄປທີ່ກຸງເທບ. ກອງທັບສະຫຍາມ ໄດ້ບຸກຕີຂຶ້ນຮອດເມືອງພວນ (ຊຽງຂວາງ) ຈູດບ້ານເຜົາເຮືອນ ແລະກວາດຕ້ອນຊາວເມືອງພວນໄປຢູ່ສະຫຍາມຢ່າງຫລວງຫລາຍ. ຈາກນັ້ນ ກອງທັບສະຫຍາມກໍໄດ້ສືບຕໍ່ຍຶດເອົາຫລວງພະບາງ, ເປັນອັນວ່າລາວລ້ານຊ້າງທັງສາມອານາຈັກ ໄດ້ຕົກຢູ່ໃຕ້ອິດທິພົນຂອງສະຫຍາມ. ສ່ວນດິນແດນເມືອງພວນ, ຍ້ອນຢູ່ຫ່າງໄກຈາກວຽງຈັນ ແລະເຄີຍຢູ່ພາຍໃຕ້ເຂດຄອບຄອງຂອງຫວຽດນາມຢູ່ເລື້ອຍໆມາ. ສະນັ້ນ, ກອງທັບສະຫຍາມກໍບໍ່ສາມາດຄວບຄຸມ ຫລືຍຶດຄອງເມືອງພວນໂດຍເດັດຂາດ; ພຽງແຕ່ໄດ້ມອບສິດໃຫ້ວຽງຈັນຄວບຄຸມເມືອງພວນໄວ້ເທົ່ານັ້ນ. ຍ້ອນແນວນັ້ນ, ຝ່າຍດ້າຍຫວຽດ ກໍພະຍາຍາມຮັກສາອິດທິພົນຂອງຕົນໄວ້ຢູ່ໃນດິນແດນເມືອງພວນ. ຜູ້ປົກຄອງເມືອງພວນກໍໄດ້ຂໍຄວາມຊ່ວຍເຫລືອຈາກເຈົ້າສັກດີນາດ້າຍຫວຽດມາຊ່ວຍຕີສັດຕູ ແລະປັບປຸງສະພາບໃຫ້ສະຫງົບທີ່ເມືອງພວນ ເຊັ່ນ ໃນປີ ຄ.ສ 1781, ເຈົ້າຊຽງ (ນ້ອງເຈົ້າສົມພູ ເຈົ້າຄອງເມືອງພວນທີ່ ຖືກກອງທັບວຽງຈັນຈັບໄດ້ ແລະໄປຂັງໄວ້ທີ່ວຽງຈັນ) ໄດ້ມີໜັງສືໄປຫາເຈົ້າດ້າຍຫວຽດ (ສົມເດັດຈັກກະພັດຢາລອງ Gia-Long) ຂໍກອງທັບໄປຕີວຽງຈັນ ເພື່ອກູ້ເອົາເຈົ້າສົມພູ ແລະຄົວຊາວພວນ ທີ່ຖືກກວາດຕ້ອນໄປນັ້ນຄືນມາເມືອງພວນ. ແຜນການຂອງເຈົ້າຊຽງຂວາງໄດ້ຮັບການປະຕິບັດຈົນໄປເຖິງຜົນສຳເລັດ ແລະເຈົ້າສົມພູ ກໍໄດ້ຂຶ້ນປົກຄອງເມືອງພວນໄປໄດ້ໄລຍະໜຶ່ງ. ເມື່ອເຫັນເປັນແນວນັ້ນ ຝ່າຍສະຫຍາມໄດ້ສັ່ງໃຫ້ເຈົ້າອິນທະວົງ, ເຈົ້າຄອງນະຄອນວຽງຈັນຈັດກອງທັບໄປຈັບເຈົ້າສົມພູ ແລະຍຶດເອົາເມືອງພວນໃຫ້ຂຶ້ນກັບວຽງຈັນອີກ.

ມາຮອດປີ ຄ.ສ 1802, ເຈົ້າສຸດທະກະ ສຸວັນນະກຸມມານ (ໂອລົດຂອງເຈົ້າຊຽງ ຫລືຫລານຂອງເຈົ້າສົມພູ) ຂຶ້ນຄອງລາຊະສົມບັດທີ່ເມືອງພວນໃນພະຊົນອາຍຸ 14 ພັນສາ (ສະນັ້ນ, ຈຶ່ງຂະໜານນາມວ່າເຈົ້ານ້ອຍ). ຢູ່ທີ່ວຽງຈັນ, ເຈົ້າອະນຸວົງກໍໄດ້ຂຶ້ນຄອງລາຊະສົມບັດໃນປີ 1804 ແທນເຈົ້າອິນທະວົງທີ່ສິ້ນພະຊົນໄປ. ເຈົ້າອະນຸວົງກໍໄດ້ສຳພັນໄມຕີອັນດີຕໍ່ກັນກັບເຈົ້ານ້ອຍເມືອງພວນ.

ຢູ່ພາຍໃຕ້ລາຊະການຂອງເຈົ້ານ້ອຍ, ເມືອງພວນໄດ້ຮັບອຸປະກາລະຫລາຍປະການ. ແຕ່ຍ້ອນຖືກການຍຸແຫຍ່ຈາກສັດຕູພາຍນອກ ທີ່ຫວັງໃຫ້ເມືອງພວນເກີດຄວາມວຸ່ນວາຍແຕກແຍກ ແລະດັບມອດ. ໃນລັດຊະການຂອງເຈົ້ານ້ອຍ ຄືໃນປີ ຄ.ສ 1814-1815, ໄດ້ມີພວກຂ້າ[8] ໃນດິນແດນພວນຄິດກະບົດຫວັງຈະຕັ້ງຕົວເປັນເອກະລາດ ແລະປະກາດວ່າ ພະເຈົ້າເຈືອງໄດ້ເກີດຂຶ້ນທີ່ບອມທານ (ທົ່ງໄຫຫີນໄກຈາກຊຽງຂວາງ 25 ກິໂລແມັດ ທິດຕາເວັນຕົກສ່ຽງເໜືອ) ໃຫ້ພວກຂ້າທັງຫລາຍໄປໂຮມກັນຢູ່ທີ່ນັ້ນ ເພື່ອລໍຮັບຄຳສັ່ງ. ຂ່າວນີ້ ໄດ້ໄປເຖິງເຈົ້ານ້ອຍ. ເຈົ້ານ້ອຍໄດ້ເອົາທະຫານໄປປາບ ແລະຫົວໜ້າກະບົດ (ນາຍຂ້າ) ກໍຖືກທະຫານເຈົ້ານ້ອຍຈັບມາລົງໂທດ ອັນເຮັດໃຫ້ພວກກະບົດຂອງພວກຂ້າດັ່ງກ່າວນັ້ນກໍຈົບລົງ; ໃນປີ ຄ.ສ 1822 ທ້າວ ຂຸນວັຽນຄຳ (ເມືອງຄຳ) ຄິດກະບົດຕໍ່ເຈົ້ານ້ອຍ ແລະລົງໄປວຽງຈັນ ຟ້ອງຕໍ່ເຈົ້າອະນຸວົງ ວ່າ: ເຈົ້ານ້ອຍ ຈະສ້າງຄ້າຍຄູລົບ ແລະຈັດກອງທັບສຳລັບໄວ້ສູ້ຮົບກັບວຽງຈັນ. ພະເຈົ້າອະນຸວົງ ຈຶ່ງແຕ່ງທະຫານໄປຈັບຕົວເຈົ້ານ້ອຍມາຂັງໄວ້ທີ່ວຽງຈັນເປັນເວລາຫລາຍປີ; ໃນທີ່ສຸດ ເຈົ້າອະນຸວົງ ກໍປ່ອຍໃຫ້ເຈົ້ານ້ອຍກັບຄືນຊຽງຂວາງພ້ອມກັບໂອລົດ ຄື ເຈົ້າອຶ່ງ, ເຈົ້າອາງ ແລະເຈົ້າພົມມາ, ພ້ອມກັບສ້າງສຳພັນໄມຕີຈິດຕໍ່ກັນຄືນມາອີກດັ່ງເດີມ.

ມາໃນປີ ຄ.ສ 1826, ເຈົ້າອະນຸວົງ ໄດ້ກະກຽມການຕໍ່ສູ້ກູ້ຊາດ ແລະປີຕໍ່ມາຈຶ່ງແຕ່ງທະຫານໄປຂໍກຳລັງຈາກເຈົ້ານ້ອຍ. ແຕ່ບັງເອີນຝ່າຍເຈົ້ານ້ອຍ ໄດ້ຮັບຂ່າວວ່າ: ທັບເມືອງຫລວງພະບາງ, ຊຽງໃໝ່, ເມືອງແພ່, ເມືອງນ່ານ, ລຳປາງ, ລຳພູນ ຈະຍົກມາຕີຊຽງຂວາງ. ເຈົ້ານ້ອຍ ຈຶ່ງບໍ່ສົ່ງທະຫານມາຊ່ວຍ

---

[8] ວົງການສັກດີນາໃນເມື່ອກ່ອນ ໄດ້ເອີ້ນຊົນເຜົ່າລາວເທິງວ່າ " ຂ້າ "

ເຈົ້າອະນຸວົງ. ປີຕໍ່ມາ, ເຈົ້າອະນຸວົງ ເຊີນເຈົ້ານ້ອຍລົງໄປວຽງຈັນອີກ ແລະໄດ້ມອບພະບໍລົມວົງສານຸວົງໃຫ້ເຈົ້ານ້ອຍໄປຮັກສາໄວ້ທີ່ຊຽງຂວາງ. ເຈົ້ານ້ອຍ ກໍໄດ້ພາຄອບຄົວເຈົ້າອະນຸວົງກັບໄປທີ່ຊຽງຂວາງ. ສ່ວນເຈົ້າອະນຸວົງ ໄດ້ສະເດັດໄປລີ້ໄພຢູ່ອານາມ (ຫວຽດນາມ). ກອງທັບໄທຫລັງເຂົ້າຈູດເຜົາວຽງຈັນ, ກວາດຕ້ອນຊາວວຽງຈັນພ້ອມຊັບສົມບັດ ທີ່ມີຄ່າລົງໄປບາງກອກ. ສິ່ງທີ່ເອົາບໍ່ໄດ້ ພວກເຂົາກໍທຳລາຍ, ຈູດເຜົາຈົນໝົດກ້ຽງ.

ໃນເວລາທີ່ສະຫຍາມກຳລັງວຸ້ນວ່າຍຢູ່ກັບການຍຶດ ແລະທຳລາຍເມືອງວຽງຈັນ. ກອງທັບຫວຽດນາມ ໄດ້ມາຕີ ແລະຍຶດເອົາຊຽງຂວາງ; ເຈົ້ານ້ອຍກໍເກນທະຫານອອກໄປສູ້ຮົບ ແຕ່ບໍ່ຊະນະກອງທັບຫວຽດນາມ. ເມືອງພວນໄດ້ຕົກຢູ່ໃຕ້ອິດທິພົນຂອງຫວຽດນາມອີກ. ແຕ່ນັ້ນມາ ເມືອງພວນໄດ້ກາຍເປັນຊະນວນສົງຄາມລະຫວ່າງສະຫຍາມກັບອານາມ.

ມາຮອດປີ ຄ.ສ 1829, ທັບໄທນຳໂດຍ ນາຍກອງພານ ອັດຕິຍະ ກໍຈັບເຈົ້າອະນຸວົງໄດ້ຢູ່ທີ່ບ້ານໄຮເມືອງຈີມ ກ້ຳຜາກັບ (ດິນເມືອງພວນ) ແລ້ວສົ່ງລົງວຽງຈັນ ແລະສົ່ງຕໍ່ກຸງເທບ. ໃນທີ່ສຸດ, ພະອົງກໍສິ້ນພະຊົນດ້ວຍການທໍລະມານ. ໃນປີຕໍ່ມາ ເຈົ້າແຜ່ນດິນອານນາມກໍສົ່ງທະຫານມາຈັບເຈົ້ານ້ອຍ ໄປລົງໂທດໃນຂໍ້ຫາວ່າ ຈັບເຈົ້າອະນຸວົງ ສົ່ງໃຫ້ທະຫານໄທ. ໃນທີ່ສຸດ, ເຈົ້ານ້ອຍ ກໍສິ້ນພະຊົນໄປດ້ວຍນ້ຳມືຂອງພວກສັດຕູພາຍນອກ ເຊິ່ງພວກເຂົາທັງສອງລ້ວນແຕ່ມີຈຸດປະສົງ ທີ່ຢາກຍຶດຄອງແຜ່ນດິນລາວໃຫ້ໄດ້ໂດຍເດັດຂາດ.

ພາຍຫລັງເຈົ້ານ້ອຍ ສິ້ນພະຊົນແລ້ວ, ເມືອງພວນບໍ່ມີກະສັດສືບແທນເກືອບ 2 ປີ, (ໂອລົດເຈົ້າອຶ່ງ, ເຈົ້າອາງ ກໍຍັງເຍົາໄວ ແລະຍັງລ້ຽງໄວ້ທີ່ດິນອານນາມ). ຂະນະນັ້ນ ອານນາມໄດ້ແຕ່ງຕັ້ງເຈົ້າສານ ຂຶ້ນຄອງລາຊະສົມບັດເມືອງພວນ ໂດຍພາຍໃຕ້ການຄວບຄຸມຂອງອານນາມ. ແຕ່ເຈົ້າແຜ່ນດິນສະຫຍາມກໍບໍ່ໄດ້ລົດລະເຈດຈຳນົງຍຶດຄອງຫົວເມືອງລາວທັງໝົດ. ສະນັ້ນ, ສະຫຍາມຈຶ່ງຫາວິທີດູດດຶງຈອບອອຍເຈົ້າແຜ່ນດິນເມືອງພວນ. ໃນທີ່ສຸດ, ມາເຖິງປີ ຄ.ສ 1834, ເຈົ້າສານ ກະກຽມຕໍ່ຕ້ານອານນາມ ແລະແຕ່ງຄົນໄປຂໍກອງທັບສະຫຍາມ ເພື່ອຊ່ວຍຕີອານນາມອອກຈາກດິນແດນເມືອງພວນ. ສົມເດັດພະນັ່ງເກົ້າເຈົ້າແຜ່ນດິນສະຫຍາມ ໄດ້ແຕ່ງກອງທັບໄທນຳໂດຍພະລາຊະສຸລິນເປັນແມ່ທັບ ສົມທົບກັບທັບລາວຈາກຫລວງພະບາງໄປຕີອານນາມອອກຈາກເມືອງພວນ. ແຕ່ເມື່ອໄປຮອດຊຽງຂວາງໄດ້ຮູ້ວ່າ ທະຫານຂອງເຈົ້າສານໄດ້ຕີທະຫານອານນາມແຕກອອກຈາກເມືອງພວນກ່ອນແລ້ວ. ທັບສະຫຍາມໄດ້ກວາດຕ້ອນເອົາຊາວພວນຈຳນວນ 6.000 ຄົນ ເພື່ອຈະເອົາໄປກຸງເທບ. ແຕ່ພໍຮອດກາງທາງ, ຊາວພວນຈຳນວນຫລາຍໂຕນໜີກັບຄືນ, ສ່ວນໜຶ່ງກໍຖືກເຈັບເປັນ, ລົ້ມຕາຍ. ແມ່ທັບສະຫຍາມບໍ່ໄດ້ແຕ່ງທະຫານໄທປະຈຳຮັກສາເມືອງພວນ, ເພາະເຂົາເຈົ້າກໍຢ້ານອານນາມຈະກັບຄືນມາຕີເມືອງພວນອີກ. ເຂົາພຽງແຕ່ແຕ່ງຕັ້ງເຈົ້າສານຮັກສາແຜ່ນດິນເມືອງພວນຕໍ່ໄປ. ແຕ່ໄດ້ພຽງ 4 ປີ, ສະຫຍາມກໍໄດ້ເອົາເຈົ້າສານລົງໄປບາງກອກ ປະໃຫ້ເມືອງພວນບໍ່ມີເຈົ້າແຜ່ນດິນ. ທັງນີ້ ກໍເພື່ອປະຕິບັດກົນອຸບາຍຂອງເຈົ້າແຜ່ນດິນສະຫຍາມ ຄື ເຮັດໃຫ້ເມືອງພວນບໍ່ມີກຳລັງຄົນຫລວງຫລາຍ, ມີຄວາມອ່ອນແອ ແລະບໍ່ມີກຳລັງຮ່ວມມືກັບອານນາມ. ສະພາບຢູ່ເມືອງພວນໃນເວລານັ້ນ ກໍເກີດຂຶ້ນຕາມຄວາມຄິດຂອງສະຫຍາມທີ່ຄາດເອົາໄວ້, ເມືອງພວນບໍ່ມີຜູ້ປົກຄອງ, ປະຊາຊົນກໍມີຄວາມຢ້ານກົວໂຕນໜີຈາກບ້ານໄປລີ້ຊ່ອນຢູ່ຕາມປ່າດົງ, ປະບ້ານເມືອງເປັນຮ້າງ. ໃນເວລານັ້ນ, ອານນາມກໍຍົກກຳລັງເຂົ້າມາຕີເມືອງພວນອີກ. ແຕ່, ເມື່ອເຫັນສະພາບເມືອງພວນເປັນຄືດັ່ງກ່າວ ແລະບໍ່ເຫັນທັບສະຫຍາມຢູ່, ອານນາມກໍຖອຍທະຫານກັບຄືນໝົດ ປະໄວ້ແຕ່ກວານຟູ ແລະທະຫານ 100 ຄົນເທົ່ານັ້ນເພື່ອຮັກສາເມືອງພວນ. ກວານຟູອານນາມໄດ້ຕັ້ງຢູ່ວ້ຽນຄຳ (ເມືອງຄຳ), ຈັດລາຊະການຕາມລະບຽບການປົກຄອງຂອງເຈົ້າແຜ່ນດິນເມືອງພວນ ທີ່ເຄີຍໄດ້ດຳເນີນມາແລ້ວ ຄື ໄດ້ຈັດເມືອງພວນເປັນ 8 ວ້ຽນ

ໂດຍຄັດເລືອກເອົາທ້າວ ເພຍ 8 ຄົນເປັນອົງວັຽນ. ທັງໝົດ 8 ວັຽນນັ້ນ ແມ່ນຂຶ້ນກັບການຟູອານນາມ ທີ່ຕັ້ງຢູ່ວັຽນຄຳ. ໃນເວລານັ້ນ ຢູ່ພາຍໃນເມືອງພວນເກີດຂໍ້ຂັດແຍ່ງ ຍາດຊີງອຳ ນາດປົກຄອງແຜ່ນດິນ.

ຈົນມາຮອດປີ ຄ.ສ 1848, ອານນາມໄດ້ແຕ່ງເຈົ້າໂປ້ (ໂອລົດຂອງເຈົ້ານ້ອຍທີ່ອານນາມລ້ຽງໄວ້ ເປັນເວລາປະມານ 20 ປີ ພ້ອມດ້ວຍເຈົ້າອຶ່ງ, ເຈົ້າອາງ, ເຈົ້າທັບ ແລະເຈົ້າພົບ ຜູ້ເປັນນ້ອງ) ຂຶ້ນເປັນເຈົ້າ ເມືອງພວນ. ພາຍຫລັງເຈົ້າໂປ້ ສິ້ນພະຊົນ, ເຈົ້າອຶ່ງຂຶ້ນຄອງລາຊະສົມບັດແທນໃນປີ ຄ.ສ 1866. ຢູ່ໃນລັດຊະ ການຂອງເຈົ້າອຶ່ງ, ເມືອງພວນໄດ້ຖືກຫໍ້ທຸງດຳຈາກເຂດ 12 ຈຸໄທ ບຸກຕີເຂົ້າມາດິນລາວ. ເອົາຕີໄດ້ຫົວພັນ ທັງຫ້າທັງຫົກ ແລ້ວແຜ່ກຳລັງລົງຮອດຊຽງຂວາງ ແລະຕັ້ງຈຸດໄວ້ທີ່ທົ່ງຊຽງຄຳ (ໃນປີ ຄ.ສ 1874). ເຈົ້າ ອຶ່ງກໍໄດ້ຍົກກຳລັງໄພ່ພົນໄປຕີຫໍ້ທີ່ທົ່ງຊຽງຄຳ. ແຕ່ເຈົ້າອຶ່ງເຫັນວ່າບໍ່ສາມາດຈະສູ້ຫໍ້ໄດ້; ສະນັ້ນ, ເຈົ້າອຶ່ງ ຈຶ່ງ ຂໍກຳລັງຈາກອານນາມ (ສະໄໝຕືດຶກ TUDUC). ໃນເວລາຕີຫໍ້ຢູ່ນັ້ນ ເຈົ້າອຶ່ງຖືກບາດເຈັບ ແລ້ວສະຫວັນ ນະຄົດຢູ່ສະໜາມຮົບ. ເມື່ອເຫັນສະພາບຈະບໍ່ຊະນະ, ທະຫານອານນາມກໍແຕກໜີກັບຄືນ; ປະໃຫ້ພວກຫໍ້ ເຂົ້າມາທຳລາຍ, ຈູດເຜົາບ້ານເມືອງຂອງຊາວພວນ, ເກັບກວາດຊັບສົມບັດໄດ້ຢ່າງມະຫາສານ. ປະຊາຊົນ ຊາວພວນມີຄວາມຢ້ານກົວ ແລະໂຕນໜີອອກເມືອງພວນ-ຊຽງຂວາງ. ສ່ວນໜຶ່ງ ກໍລີ້ຊ່ອນຢູ່ຕາມປ່າ, ສ່ວນ ໜຶ່ງ ກໍໄປຫລົບໄພຢູ່ປະເທດອື່ນໆ.

ຂ່າວນີ້ ໄດ້ນຳໄປເຖິງສົມເດັດພະຈຸລະຈອມເກົ້າ (ລັດຊະການທີ 5 ແຫ່ງກຸງລັດຕະນະໂກສິນ). ໃນປີ ຄ.ສ 1875, ເຈົ້າແຜ່ນດິນສະຫຍາມໄດ້ໃຫ້ເຈົ້າພະຍາພຸດທະຍາໄພ ເປັນແມ່ທັບໃຫຍ່, ໃຫ້ພະຍາພິໄຊ (ກິສ) ເປັນແມ່ທັບຝ່າຍໄທສົມທົບກັບທັບລາວຈາກຫລວງພະບາງ ແລະເມືອງນ່ານເພື່ອມາຕີຂັບໄລ່ພວກ ຫໍ້ທີ່ເມືອງພວນ. ການສູ້ຮົບລະຫວ່າງຫໍ້ ແລະທັບປະສົມຝ່າຍໄທ ແລະລາວໄດ້ແກ່ຍາວໄດ້ຫລາຍວັນ. ຝ່າຍ ໄທໄດ້ເພີ່ມກຳລັງຂຶ້ນຕື່ມເປັນ 4 ກອງທັບໃຫຍ່ບຸກຕີພວກຫໍ້. ໃນທີ່ສຸດ ທັບຫໍ້ກໍແຕກໜີອອກຈາກເມືອງພວນ. ເມື່ອຕີຫໍ້ແຕກໜີອອກຈາກດິນພວນແລ້ວ, ພວກສະຫຍາມກໍໄດ້ສວຍໂອກາດກວາດຕ້ອນຄົວລາວພວນຢ່າງ ຫລວງຫລາຍໄປຫລວງພະບາງ ເພື່ອຈະເອົາໄປບາງກອກ. ແຕ່ເວລານັ້ນ, ຊາວພວນຖືກພະຍາດໂລກອະ ຫິວາ ລົ້ມຕາຍເປັນຈຳນວນມາກມາຍ. ຢູ່ເມືອງພວນຍັງເຫລືອຄ້າງປະມານ 1.000 ຄົວເທົ່ານັ້ນ.

ພາຍຫລັງກອງທັບໄທ ແລະລາວອອກໜີຈາກເມືອງພວນແລ້ວ, ພວກຫໍ້ກໍກັບເຂົ້າມາເມືອງພວນ ອີກເປັນຄັ້ງທີ II (ຄ.ສ 1876). ເວລານີ້ ຢູ່ເມືອງພວນມີເຈົ້າຂັນຕີ ແລະເຈົ້າສຸວັນ (ໂອລົດເຈົ້າອຶ່ງ) ຄອງ ລາຊະການຕໍ່ ແລະໄດ້ຕໍ່ສູ້ຕ້ານພວກຫໍ້ ແຕ່ບໍ່ຊະນະ ແລ້ວໄດ້ຂໍກຳລັງຈາກເຈົ້າແຜ່ນດິນໄທອີກ. ກອງທັບໄທ ໄດ້ຍົກກຳລັງມາຕີຫໍ້ເປັນຄັ້ງທີ II ໃນ ຄ.ສ 1883, ຄັ້ງນີ້ ຝ່າຍໄທບໍ່ຊະນະພວກຫໍ້ ຈຳຕ້ອງຖອຍທັບກັບຄືນສູ່ ໜອງຄາຍ ແລະທັບລາວກໍກັບຄືນໄປຢູ່ຫລວງພະບາງ. ພວກຫໍ້ໄດ້ແຜ່ອຳນາດຕີລົງຮອດວຽງຈັນ, ຂຸດກົ່ນ ທາດຫລວງ, ວັດວາອາຮາມ ແລະມ້າງເພບ້ານເມືອງວຽງຈັນ.

ມາຮອດປີ ຄ.ສ 1885, ກອງທັບສະຫຍາມ ແລະລາວໄດ້ສົມທົບກັນຕີພວກຫໍ້ເປັນຄັ້ງທີ III. ຄັ້ງນີ້ ທັບຫໍ້ຖືກໄລ່ຕີອອກຈາກວຽງຈັນຈົນຮອດທົ່ງຊຽງຄຳ. ພວກຫໍ້ຢ້ານກົວກໍຮີບປົບໜີອອກຈາກທົ່ງຊຽງຄຳ ແລະເມືອງພວນ. ທະຫານສະຫຍາມໄດ້ໄລ່ຕີພວກຫໍ້ຈົນຮອດເຂດ 12 ຈຸໄທ. ໃນເວລານີ້, ທັບສະຫຍາມໄດ້ ກວາດຕ້ອນຄົນລາວຕາມຫົວເມືອງຝ່າຍເໜືອ ແລະຊາວພວນເປັນຈຳນວນຫລວງຫລາຍ. ຈາກນັ້ນ, ສະ ຫຍາມໄດ້ດຳເນີນການປົກຄອງລາວ. ເຈົ້າແຜ່ນດິນສະຫຍາມໄດ້ແຕ່ງຕັ້ງພະຍາຫລິ່ມສັກເປັນຂ້າຫລວງ ໃຫຍ່ ພ້ອມດ້ວຍທະຫານຈຳນວນໜຶ່ງຮັກສາການຢູ່ຊຽງຂວາງ. ແຕ່ເວລານັ້ນມາ ເມືອງພວນກໍຄືຫົວ ເມືອງລາວຕ່າງໆເກືອບທັງໝົດ ແມ່ນຕົກຢູ່ໃຕ້ການຄອບຄອງຂອງສັກດີນາສະຫຍາມ ແກ່ຍາວຈົນເຖິງ ຄ.ສ 1893, ເຊິ່ງເປັນປີທີ່ສະຫຍາມ ແລະຝຣັ່ງເຮັດສັນຍານຳກັນ, ຕັດແບ່ງດິນລາວອອກເປັນສອງສ່ວນ ແລະແບ່ງປັນສິດຜົນປະໂຫຍດລະຫວ່າງຝຣັ່ງ ແລະສະຫຍາມຢູ່ເທິນດິນແດນລາວ. ຕະຫລອດໄລຍະເວລາ

ດັ່ງກ່າວນັ້ນ ຍັງມີຫົວເມືອງລາວຈຳນວນໜ້ອຍໜຶ່ງ ເຊັ່ນ ເມືອງຫົວພັນທັງຫ້າທັງຫົກ, ເມືອງຄຳເກີດ, ຄຳມ່ວນ ແລະເຂດທີ່ຕິດຈອດກັບຊາຍແດນອານນາມ ກໍໄດ້ໄປຂຶ້ນກັບອານນາມ. ເຈົ້ານາຍຈຳນວນໜຶ່ງຂອງຊາວພວນ ເຊັ່ນ ເຈົ້າຄຳໂງ່ນ, ເຈົ້າອຸ່ນແກ້ວ, ພາຍຫລັງລັກລອບໜີຈາກສະຫຍາມໄດ້ແລ້ວ ກໍໄປເພິ່ງອານນາມ ແລະເຈົ້າອຸ່ນແກ້ວກໍເສຍຊີວິດຢູ່ເມືອງຮ່າຕິ້ງ (ພາກກາງຫວຽດນາມປັດຈຸບັນ). ສ່ວນເຈົ້າຄຳໂງ່ນກໍດຳເນີນລາຊະການນຳຝຣັ່ງທີ່ອານນາມ, ເປັນອັນວ່າ ພາຍຫລັງປາບຫໍ້ຄັ້ງທີ III ສຳເລັດລົງ, ເມືອງພວນ ກໍຄືຫົວເມືອງລາວສ່ວນຫລາຍ ໄດ້ຕົກຢູ່ໃນການຄວບຄຸມຂອງເຈົ້າແຜ່ນດິນສະຫຍາມໂດຍເດັດຂາດ; ເປັນການສຳເລັດຈຸດໝາຍທີ່ເຈົ້າແຜ່ນດິນສະຫຍາມຄາດເອົາໄວ້ ແລະກໍເປັນສາເຫດຕົ້ນຕໍ ທີ່ສະຫຍາມຕ້ອງສົ່ງກຳລັງທະຫານໄປຕີອານນາມ ກໍຄືໄປຕີຫໍ້ອອກຈາກດິນແດນພວນໃນເວລານັ້ນ.

+ ການອົບພະຍົບຂອງຊາວພວນເຂົ້າໄປຢູ່ດິນແດນສະຫຍາມ

ເປັນທີ່ຮູ້ກັນແລ້ວວ່າ ຊາວພວນບໍ່ພຽງແຕ່ຢູ່ໃນອົງເຂດບໍລິເວນຊຽງຂວາງເທົ່ານັ້ນ ແຕ່ຊາວພວນຍັງມີຢູ່ອີກຫລາຍບ່ອນ ທັງພາຍໃນກໍຄືຕ່າງປະເທດ. ຢູ່ພາຍໃນປະເທດຫລາຍກວ່າໝູ່ ແມ່ນຢູ່ຊຽງຂວາງເຊິ່ງເປັນກິ່ນເດີມຂອງຊາວພວນ. ນອກນັ້ນ ຍັງມີຢູ່ບໍລິຄຳໄຊ, ຄຳເກີດ, ຄຳມ່ວນ, ທົ່ງພຽງວຽງຈັນ ແລະຫົວພັນ. ມາຮອດປັດຈຸບັນນີ້, ຊາວພວນມີຢູ່ເກືອບທຸກໆແຂວງໃນປະເທດລາວ. ສ່ວນຢູ່ຕ່າງປະເທດ ມີຫລາຍກວ່າໝູ່ ແມ່ນຢູ່ປະເທດໄທ. ສາເຫດແຫ່ງການເຄື່ອນຍ້າຍຂອງຊາວພວນໄປຢູ່ແຫ່ງອື່ນໆນັ້ນ ກໍມີຫລາຍສາເຫດ ເຊັ່ນ ຍ້ອນຄວາມສະໝັກໃຈ, ຍ້ອນໜ້າທີ່ການງານ, ຍ້ອນການບັງຄັບ, ຍ້ອນຖືກຈັບເປັນສະເລີຍໃນສະໄໝສົງຄາມເຫລົ່ານີ້ເປັນຕົ້ນ. ສຳລັບສາເຫດຊາວເມືອງພວນໄດ້ໄປຕັ້ງກິ່ນຖານຢູ່ປະເທດໄທເປັນຈຳນວນຫລວງຫລາຍນັ້ນ, ສາເຫດຕົ້ນຕໍ ແມ່ນຍ້ອນຖືກກອງທັບສະຫຍາມກວາດຕ້ອນໄປໃນສະໄໝສົງຄາມລ່າພົນລະເມືອງໃນຕົ້ນສະຕະວັດທີ IX.

ການອົບພະຍົບ ຫລືກວາດຕ້ອນຊາວພວນໄປສະຫຍາມນັ້ນ ກໍເກີດຂຶ້ນເປັນຂະບວນຫລາຍຄັ້ງຫລາຍຄາວພ້ອມກັບຊາວລາວເຜົ່າອື່ນໆທີ່ຖືກກວາດຕ້ອນໄປໃນສະໄໝນັ້ນ ຄື ນັບແຕ່ສະໄໝກຸງທົນບູລີຈົນເຖິງກຸງລັດຕະນະໂກສິນ, ໄລຍະຕົ້ນ ແລະກາງ ຄື ແຕ່ລັດຊະການທີ 1 ເຖິງລັດຊະການທີ 5 (ໂພ ແຊມລຳຈຽກ, ປີ ພ.ສ 2537, ໜ້າ 20). ແຕ່ເມື່ອສັງລວມເບິ່ງແລ້ວມີ 5 ຄັ້ງໃຫຍ່ຄື:

+ ຄັ້ງທີ 1 ເກີດຂຶ້ນໃນສະໄໝກຸງທົນບູລີ ແຫ່ງພະເຈົ້າຕາກສິນ, ພ.ສ 2321 (ຄ.ສ 1778), ສະຫຍາມໄດ້ມີບົດບາດເໜືອກວ່າພະມ້າ ແລະອານນາມ ແລະມີນະໂຍບາຍແຜ່ອານາເຂດກວມເອົາທັງໝົດໂຫລ້ງແມ່ນ້ຳຂອງແຍ່ງຊີງອິດທິພົນກັບພະມ້າ ແລະອານນາມ (ດ້າຍຫວຽດ) ໃນການຄອງຄອບອານາຈັກລ້ານຊ້າງ. ພາຍໃນອານາຈັກລ້ານຊ້າງພັດຢູ່ໃນໄລຍະສັກດິນາອ່ອນເພຍ ແລະແຕກແຍກອອກເປັນສາມອານາຈັກ ຄື ວຽງຈັນ, ຫລວງພະບາງ ແລະຈຳປາສັກ. ໃນເວລານີ້ ເມືອງພວນກໍຂຶ້ນກັບວຽງຈັນ. ທັງສາມອານາຈັກນີ້ ເຖິງວ່າມີການປົກຄອງດ້ວຍຕົນເອງເປັນເອກະລາດ ແຕ່ພາຍໃນອານາຈັກເກີດມີຄວາມຂັດແຍ່ງຍາດຊີງກັນຄອງລາຊະບັນລັງ. ຈາກສະພາບດັ່ງກ່າວ ໄດ້ເປັນສາເຫດໃຫ້ສັດຕູພາຍນອກເຂົ້າມາຍຸແຫຍ່, ແຊກແຊງ ແລະຍຶດຄອງ. ທັງສາມອານາຈັກລາວ ເຖິງວ່າໄດ້ສ້າງສາຍສຳພັນໄມຕີກັບສະຫຍາມແຕ່ຝ່າຍເຈົ້າແຜ່ນດິນສະຫຍາມບໍ່ລົດລະໃນການຍຶດຄອງລາວໂດຍເດັດຂາດ. ສະນັ້ນ, ເຂົາຈຶ່ງມີກົນອຸບາຍຍຶດຄອງລາວເປັນລຳດັບ. ກ່ອນອື່ນແມ່ນຍຶດເອົານະຄອນຈຳປາສັກ ໃນປີ ພ.ສ 2321 (ຄ.ສ 1778), ຫລັງຈາກນັ້ນ ໄດ້ບຸກຕີຝ່າຍວຽງຈັນ. ການຕໍ່ສູ້ລະຫວ່າງລາວ-ສະຫຍາມຄັ້ງນີ້, ຝ່າຍສະຫຍາມເປັນຜູ້ຊະນະ. ສະຫຍາມຍຶດວຽງຈັນໄດ້ໃນວັນແຮມ 3 ຄ່ຳ, ເດືອນ 10 ພ.ສ 2322 (ຄ.ສ 1779). ຈາກນັ້ນ, ທັງສາມອານາຈັກຂອງລາວ ກໍຕົກຢູ່ໃນການຄອບຄອງຂອງສະຫຍາມ. ພາຍຫລັງຍຶດວຽງຈັນແລ້ວ, ແມ່ທັບໄທກໍກວາດ

ເອົາຄອບຄົວລາວວຽງຈັນກັບພະລາຊະວົງສານຸວົງຕະຫລອດຊັບສົມບັດ, ເຂົ້າຂອງ, ຊ້າງ, ມ້າ, ພະແກ້ວ, ພະບາງ ລົງໄປບາງກອກ ແລະໃຫ້ຄອບຄົວລາວຫລາຍພື້ນຄົນໄປຕັ້ງບ້ານເຮືອນຢູ່ທີ່ເມືອງສະລະບູລີ (ມະຫາສີລາ ວິລະວົງ; ຄ.ສ 1973; ໜ້າ 134). ໃນຈຳນວນຄອບຄົວລາວວຽງຈັນທີ່ຖືກກວາດຕ້ອນໄປຄັ້ງນີ້ ມີທັງລາວວຽງ, ລາວພວນ ແລະຜູ້ໄທ... ນັບວ່າເປັນຄັ້ງທຳອິດ ທີ່ຊາວພວນຖືກກວາດຕ້ອນໄປຢູ່ດິນສະຫຍາມ.

\+ ຄັ້ງທີ 2 ໃນສະໄໝຕົ້ນກຸງລັດຕະນະໂກສິນ, ໃນລັດຊະການຂອງພະພຸດທະຍອດຟ້າຈຸລາໂລກ. ທາງຝ່າຍວຽງຈັນ ເຈົ້າແຜ່ນດິນສະຫຍາມໄດ້ແຕ່ງຕັ້ງເຈົ້ານັນທະເສນ (ພະໂອລົດຂອງເຈົ້າສິລິບຸນຍະສານທີ່ຖືກກວາດຕ້ອນໄປສະຫຍາມພ້ອມກັບເຈົ້າອິນທະວົງ ແລະເຈົ້າອະນຸວົງ ຜູ້ເປັນນ້ອງລົງໄປສະຫຍາມໃນສະໄໝກຸງທົນບູລີ) ຂຶ້ນເປັນເຈົ້າແຜ່ນດິນທີ່ວຽງຈັນໃນປີ ພ.ສ 2324 (ຄ.ສ 1781). ແລະໃນປີດຽວກັນນີ້ ພະເຈົ້າແຜ່ນດິນໄທກໍໄດ້ສົ່ງເຈົ້າໄຊຍະກຸມມານຄືນ ເປັນເຈົ້ານະຄອນຈຳປາສັກ; ໃຫ້ເຈົ້າສຸລິຍະວົງສາຄືນມາເປັນເຈົ້ານະຄອນຫລວງພະບາງ. ໃນເວລາກັບຄືນວຽງຈັນຄັ້ງນີ້, ພະເຈົ້ານັນທະເສນໄດ້ຂໍເອົາພະບາງຄືນມານຳ. ແນວຄິດຮັກຊາດ ແລະຢາກກອບກູ້ເອົາປະເທດຊາດຫລຸດພົ້ນອອກຈາກແອກຄອບຄອງຂອງສະຫຍາມໄດ້ບົ່ມເພາະໄວ້ແຕ່ລາວເຢົາໄວ. ແຕ່ໃນການະເປັນປະເທດສະລາດ ເຈົ້າແຜ່ນດິນວຽງຈັນໄດ້ພະຍາຍາມເອົາໃຈໃສ່ປະຕິບັດນະໂຍບາຍປົກຄອງຂອງເຈົ້າຊີວິດສະຫຍາມ ຄື ໃຫ້ວຽງຈັນເປັນສູນກາງການປົກຄອງຄວບຄຸມຫົວເມືອງຕ່າງໆຢູ່ທາງຝັ່ງຊ້າຍແມ່ນ້ຳຂອງ, ຮິບໂຮມກຳລັງຄົນ ແລະບັນນາການໄປຖວາຍເຈົ້າຊີວິດສະຫຍາມໃນແຕ່ລະປີ. ສ່ວນເມືອງພວນໃນເວລານີ້ ແມ່ນຢູ່ໃຕ້ການຄວບຄຸມຂອງດ້າຍຫວຽດ (ຫວຽດນາມ) ເຊິ່ງເປັນຈຸດສຸມຂັດແຍ່ງລະຫວ່າງສະຫຍາມ ແລະຫວຽດນາມ. ເຈົ້ານັນທະເສນໄດ້ພະຍາຍາມເກ້ຍກ່ອມຊາວເມືອງພວນ ແລະຫົວເມືອງຕ່າງໆຕາມຊາຍແດນຕິດຕໍ່ດິນອານນາມ ແລະໄດ້ກວາດຕ້ອນເອົາຄົນລາວໃນບັນດາຫົວເມືອງເຫລົ່ານີ້ ພ້ອມດ້ວຍເຄື່ອງບັນນາການໄປຖວາຍເຈົ້າຊີວິດສະຫຍາມ.

ມາເຖິງ ພ.ສ 2335 (ຄ.ສ 1792), ໂດຍປະຕິບັດຄຳສັ່ງຂອງເຈົ້າແຜ່ນດິນສະຫຍາມ, ເຈົ້ານັນທະເສນໄດ້ຍົກທັບຂຶ້ນໄປຕີເມືອງພວນ ແລ້ວຈັບເຈົ້າສົມພູ, ເຈົ້າຄອງເມືອງພວນລົງມາວຽງຈັນ ແລະເລີຍຂຶ້ນເມືອຕີເມືອງແຖງ, ໄດ້ກວາດຕ້ອນລາວພວນ ແລະລາວທຸງດຳລົງໄປກຸງເທບປະມານ 4.000 ກວ່າຄົນ (ບັງອອນ ປີຍະພັນ; ໜ້າ 41). ການຕີເມືອງພວນຄັ້ງນີ້ ຝ່າຍເຈົ້ານັນທະເສນເປັນຜູ້ຊະນະ ແຕ່ບໍ່ຍຶດເອົາເມືອງພວນຂຶ້ນກັບວຽງຈັນໄດ້ ເພາະພວກອານນາມ (ຕົງແກງ) ໄດ້ສົ່ງທະຫານເຂົ້າມາຊຸຽງຂວາງເປັນຈຳນວນຫລາຍພັນຄົນ. ເຈົ້ານັນທະເສນ ຢ້ານເກີດເສິກໃຫຍ່ຂຶ້ນ; ສະນັ້ນ, ຈຶ່ງຕົກລົງໃຫ້ເຈົ້າສົມພູ ສົ່ງສ່ວຍເຄິ່ງໜຶ່ງໃຫ້ວຽງຈັນ (ຄືກັບສົ່ງໃຫ້ຕົງແກງ). ປີໜຶ່ງຕໍ່ມາ, ເຈົ້ານັນທະເສນຍົກທັບຂຶ້ນໄປຕີຫລວງພະບາງ ແລະຈັບເອົາເຈົ້າອະນຸລຸດທະ ແລະເຈົ້າຊຽງຮຸ່ງ ສົ່ງໄປກຸງເທບໂດຍອ້າງວ່າ ເຈົ້າຄອງນະຄອນດັ່ງກ່າວສົມຮູ້ຮ່ວມຄິດກັບພະມ້າ, ກະບົດຕໍ່ໄທ. ແຕ່ນັ້ນມາ, ຂໍ້ຂັດແຍ່ງລະຫວ່າງວຽງຈັນ ແລະຫລວງພະບາງກໍນັບມື້ເຄັ່ງຕຶງ, ອັນໄດ້ນຳຜົນດີໃຫ້ແກ່ນະໂຍບາຍປົກຄອງຂອງສະຫຍາມ. ໃນປີດຽວກັນນັ້ນ, ເຈົ້າແຜ່ນດິນສະຫຍາມໄດ້ເກນເອົາລາສະດອນຫົວມືອງລາວຫລາຍພື້ນຄົນລົງໄປຂຸດຄອງໃນບາງກອກ. ພວກລາສະດອນທີ່ຖືກເກນເອົາໄປນັ້ນ ກໍ່ກບອບນິບປີ້ອັ່ມເຫັງ ແລະລົ້ມຕາຍດ້ວຍໂລກອະຫິວາເກືອບໝົດ (ມະຫາສີລາ ວິລະວົງ, ຄ.ສ 1973 ໜ້າ 142).

ມາໃນປີ ພ.ສ 2337 (ຄ.ສ 1794) ພາຍຫລັງກັບຄືນມາຄອງນະຄອນຫລວງພະບາງ, ເຈົ້າອະນຸລຸດທະ ໄດ້ຫາເລື່ອງຟ້ອງເຈົ້ານັນທະເສນວ່າ ໄດ້ສົມທົບກັບເຈົ້ານະຄອນພະນົມຕິດຕໍ່ກັບແກວ (ດ້າຍ

ຫວຽດ) ເຊິ່ງເປັນການກະບົດຕໍ່ເຈົ້າແຜ່ນດິນໄທ. ດັ່ງນັ້ນ, ໃນປີນີ້ເອງ ໄທໄດ້ຍົກກອງທັບມາວຽງຈັນ ແລະ ກວາດລາວພວນລົງໄປກຸງເທບເປັນຈຳນວນຫລວງຫລາຍ.

ມາຮອດສະໄໝພະບາດສົມເດັດພະຍຸດທະເລີດຫລ້ານະພາໄລ ລັດຊະການທີ 2 ແຫ່ງກຸງລັດຕະນະໂກສິນ, ກໍມີການອົບພະຍົບຄົນລາວໄປຢູ່ແຜ່ນດິນສະຫຍາມ ໂດຍສະເພາະຊາວລາວໃນເມືອງນະຄອນພະນົມ ແລະເມືອງພູຄັງເຂົ້າໄປກຸງເທບ. ແຕ່ບໍ່ປາກົດເຫັນຫລັກຖານການອົບພະຍົບຂອງຊາວພວນ.

+ ການອົບພະຍົບຄັ້ງທີ 3 ເກີດຂຶ້ນໃນສະໄໝພະບາດສົມເດັດພະນັ່ງເກົ້າເຈົ້າຢູ່ຫົວ; ລັດຊະການທີ 3 ເຈົ້າແຜ່ນດິນສະຫຍາມ; ການອົບພະຍົບ ຫລືກວາດຕ້ອນຄັ້ງນີ້ ມີຄົນຈຳນວນຫລາຍກວ່າທັງສອງຄັ້ງກ່ອນບວກເຂົ້າກັນ. ເກີດຂຶ້ນໃນລັດຊະການເຈົ້າອະນຸວົງຄອງລາຊະສົມບັດທີ່ນະຄອນວຽງຈັນ ແລະແບ່ງເປັນສອງໄລຍະດັ່ງນີ້ :

- ໃນປີ ພ.ສ 2368 (ຄ.ສ 1825) ພະພຸດທະເລີດຫລ້ານະພາໄລສິ້ນພະຊົນ, ເຈົ້າຊີວິດຄົນໃໝ່ແຫ່ງສະຫຍາມໄດ້ສັ່ງໃຫ້ເຈົ້າອະນຸວົງ ນຳກຳລັງຄົນລາວຈຳນວນຫລາຍພັນຄົນ ລົງໄປກຸງເທບເພື່ອທຳພິທີປົງສົບພະພຸດທະເລີດຫລ້າ. ພະເຈົ້າອະນຸວົງ ໄດ້ນຳກຳລັງລາວຈຳນວນຫລວງຫລາຍລົງໄປກຸງເທບຕາມຄຳສັ່ງ. ແຕ່ພໍໄປຮອດກຸງເທບ, ເຈົ້າຊີວິດສະຫຍາມໄດ້ບັງຄັບເອົາຄົນລາວຄົນຈຳນວນດັ່ງກ່າວນັ້ນ ໄປຕັດຕົ້ນຕານທີ່ເມືອງສຸພັນບູລີ ລ່ອງແພລົງເຖິງເມືອງສະໝຸດປາການທີ່ປາກແມ່ນ້ຳເຈົ້າພະຍາ ເພື່ອສ້າງແນວຮົບຕ້ານອັງກິດ. ຈົນຮອດລະດູຝົນ (ເດືອນ 4 ລາວ) ເຈົ້າແຜ່ນດິນໄທ ຈຶ່ງອະນຸຍາດໃຫ້ເຈົ້າອະນຸວົງກັບຄືນວຽງຈັນ. ກ່ອນຈະກັບຄືນເຈົ້າອະນຸວົງໄດ້ເຂົ້າເຝົ້າເຈົ້າຊີວິດສະຫຍາມ ແລະຂໍອະນຸຍາດເອົາຄົນລາວ ທີ່ຖືກກວາດຕ້ອນມາຢູ່ສະຫຍາມ ແຕ່ສະໄໝກຸງທົນບູລີ ແລະຄົນລາວທີ່ໄດ້ລົງມາກຸງເທບໃນຄັ້ງນີ້ ພ້ອມດ້ວຍເຈົ້າຍິງດວງຄຳ (ຜູ້ເປັນຫລານສາວ) ແລະກອງລະຄອນລາວປະຈຳລາຊະວັງກັບຄືນວຽງຈັນ. ແຕ່ທຸກຢ່າງຖືກເຈົ້າຊີວິດສະຫຍາມປະຕິເສດ. ພະເຈົ້າອະນຸວົງກັບຄືນວຽງຈັນດ້ວຍຄວາມຄຽດແຄ້ນ ແລະເສຍໃຈ. ດັ່ງນັ້ນ, ມາຮອດທ້າຍປີ ຄ.ສ 1826, ພະເຈົ້າອະນຸວົງຈຶ່ງໄດ້ດຳເນີນການຕໍ່ສູ້ ຫວັງກອບກູ້ເອົາເອກະລາດ ແລະນຳເອົາຄົນລາວກັບຄືນປະເທດ. ເຈົ້າອະນຸວົງ ແລະເຈົ້າລາດຊະວົງ ໄດ້ຍົກພົນໄປເຖິງເມືອງນະຄອນລາຊະສີມາ. ຈາກນັ້ນ, ກໍໄປນຳເອົາຄົນລາວທີ່ສະລະບູລີກັບຄືນມາຕາມຄວາມປະສົງຂອງເຂົາເຈົ້າ. ແຕ່ບໍ່ທັນເຖິງວຽງຈັນ, ກອງທັບເຈົ້າອະນຸວົງຖືກທັບໄທໄລ່ໂຈມຕີ ແລະພາຍໃນກໍເກີດມີຜູ້ກະບົດ. ໃນທີ່ສຸດ ຝ່າຍເຈົ້າອະນຸວົງ ຈຶ່ງໄດ້ຖອຍທັບກັບຄືນວຽງຈັນ. ການຕໍ່ສູ້ກັນໄດ້ແກ່ຍາວມາໄດ້ 2 ປີ ຄື ມາເຖິງ ພ.ສ 2372 (ຄ.ສ 1829), ເຈົ້າອະນຸວົງຖືກກອງທັບສະຫຍາມນຳໂດຍພານ ຂັດຕິຍະ ເມືອງນ່ານຮ່ວມກັບຜູ້ປົກຄອງກະບົດ ຝ່າຍຫົວເມືອງລາວຈຳນວນໜຶ່ງຈັບເຈົ້າອະນຸວົງ ແລະສົ່ງລົງໄປກຸງເທບ. ພະເຈົ້າອະນຸວົງ ຖືກກັກຂັງໄວ້ໃນຄອກເຫລັກ ແລະຖືກທາລຸນຢ່າງແສນສາຫັດ; ໃນທີ່ສຸດ ກໍສິ້ນພະຊົນໄປ ໃນທ້າຍເດືອນ 1 ປີ 1829, ທີ່ກຸງເທບ, ລວມພະຊົນມາຍຸໄດ້ 62 ພັນສາ. ແຕ່ນັ້ນ, ຂະບວນການຕໍ່ສູ້ກູ້ເອກະລາດຂອງປະຊາຊົນລາວວຽງຈັນກໍຄ່ອຍໆມຸດມອດລົງ. ພວກສະຫຍາມໄດ້ລຸຫລັ່ງເຂົ້າທຳລາຍຈູດເຜົາ ແລະຢຶດຄອງນະຄອນວຽງຈັນ ກວາດຕ້ອນເອົາຄົນລາວວຽງຈັນຫລາຍແສນຄົນລົງໄປກຸງເທບ. ການກວາດຕ້ອນຄົນລາວຄັ້ງນີ້ ມີທັງລາວວຽງຈັນ, ລາວພວນ ແລະຊາວລາວຈາກຫົວເມືອງຕ່າງໆທັງສອງຝັ່ງແມ່ນ້ຳຂອງ. ທຳລາຍ, ຈູດເຜົາເມືອງວຽງຈັນ ຈົນບໍ່ມີອັນເຫລືອຄ້າງ, ຍັງພຽງແຕ່ອາຮາມສິສະເກດເທົ່ານັ້ນ ທີ່ບໍ່ຖືກຈູດເຜົາ. ທັງນີ້ ກໍເນື່ອງຈາກວ່າ ຈຸດປະສົງຂອງສົມເດັດພະນັ່ງເກົ້າເຈົ້າຢູ່ຫົວແມ່ນບໍ່ໃຫ້ເມືອງວຽງຈັນຕັ້ງເປັນບ້ານເມືອງອີກຕໍ່ໄປ.

- ພາຍຫລັງຂະບວນການກູ້ເອກະລາດຂອງພະເຈົ້າອະນຸວົງສິ້ນສຸດລົງ ຄື ໃນລະຫວ່າງປີ ພ.ສ 2376-2378 (ຄ.ສ 1833-1835) ເຊິ່ງເປັນເວລາທີ່ເມືອງພວນຕົກຢູ່ໃຕ້ການປົກຄອງຂອງດ້າຍຫວຽດ ແລະ

ກໍເປັນເວລາທີ່ສະຫຍາມພວມຊຸ້ນຂ້ອງ ໃນການປາບປາມຂະບວນກູ້ເອກະລາດຂອງພະເຈົ້າອະນຸວົງທີ່ວຽງຈັນ, ດ້າຍຫວຽດໄດ້ສົ່ງທະຫານມາປົກປ້ອງເມືອງພວນ ແລະບັນດາເມືອງຕ່າງໆທີ່ຕິດຈອດກັບດິນແດນດ້າຍຫວຽດ ເຊັ່ນ ຫົວພັນທັງຫ້າທັງຫົກ ແລະເມືອງຕ່າງໆ, ດ້ວຍສາເຫດດັ່ງກ່າວ, ບັນດາເມືອງເຫລົ່ານີ້ໄດ້ກາຍເປັນບັນຫາ ແລະຊະນວນສົງຄາມລະຫວ່າງສະຫຍາມ ແລະດ້າຍຫວຽດໃນຍຸກຕໍ່ມາ.

ໃນປີ ຄ.ສ 1829, ເຈົ້າແຜ່ນດິນດ້າຍຫວຽດໄດ້ແຕ່ງຕັ້ງໃຫ້ທະຫານມາຈັບເອົາເຈົ້ານ້ອຍພ້ອມຄອບຄົວລົງໄປດ້າຍຫວຽດ (ແຂວງເງະອານ) ໂດຍຕູ່ຫາວ່າ ເຈົ້ານ້ອຍໄດ້ຈັບເຈົ້າອະນຸໃຫ້ສະຫຍາມ ແລ້ວປະຫານຊີວິດເຈົ້ານ້ອຍ ໂດຍບໍ່ໃຫ້ໂອກາດແກ້ຕົວໃດໆ. ຫລັງຈາກເຈົ້ານ້ອຍສິ້ນພະຊົນແລ້ວ, ເມືອງພວນ ບໍ່ມີກະສັດປົກຄອງເຖິງ 2 ປີ; ມາຮອດປີ 1831 ກວານຟູດ້າຍຫວຽດ ໄດ້ແຕ່ງຕັ້ງໃຫ້ເຈົ້າສານເປັນກະສັດຄອບຄອງເມືອງພວນ ແຕ່ຢູ່ພາຍໃຕ້ການຄວບຄຸມຂອງດ້າຍຫວຽດ. ຢູ່ພາຍໃຕ້ການປົກຄອງຂອງດ້າຍຫວຽດ, ຊາວພວນແສນລຳບາກກາກກຳ ຍ້ອນຖືກດ້າຍຫວຽດຂົ່ມເຫັງເຕັງເຕັກ ແລະກໍຄິດເຫັນວ່າ ເຈົ້ານ້ອຍກໍຖືກດ້າຍຫວຽດຈັບໄປຂ້າ. ດັ່ງນັ້ນ, ເຈົ້າສານຈຶ່ງຄິດເອົາໃຈອອກຈາກດ້າຍຫວຽດ, ມາໃນປີ ຈ.ສ 1196 (ຄ.ສ 1834) ເຈົ້າສານໄດ້ໄປຂໍກຳລັງຈາກສະຫຍາມ ເພື່ອຊ່ວຍຕີຂັບໄລ່ດ້າຍຫວຽດອອກຈາກເມືອງພວນ. ສົມເດັດພະນັ່ງເກົ້າ ໄດ້ມອບໃຫ້ພະລາຊະສຸລິນນຳທະຫານໄທໄປສົມທົບກັບທັບລາວທີ່ຫລວງພະບາງ ເພື່ອຊ່ວຍເມືອງພວນ. ພໍແຕ່ໄປຮອດກໍຮູ້ວ່າ ທັບເຈົ້າສານໄດ້ສະກັດຕີທະຫານດ້າຍຫວຽດ (ຫວຽດນາມ) ແຕກອອກຈາກເມືອງພວນແລ້ວ. ແຕ່ຄັ້ງນີ້ ແມ່ທັບໄທໄດ້ກວາດຕ້ອນຊາວພວນປະມານ 6.000 ຄົນລົງໄປກຸງເທບ. ແຕ່ພໍຮອດກາງທາງຄົວຊາວພວນລັກໜີກັບຄືນ ຍັງເຫລືອພຽງແຕ່ 3.000 ຄົນທີ່ນຳໄປເຖິງກຸງເທບ.

ສີ່ປີຕໍ່ມາ, ເຈົ້າສານກໍຖືກສະຫຍາມເອົາໄປກຸງເທບອີກ ຢູ່ເມືອງພວນບໍ່ມີຜູ້ປົກຄອງລາຊະການ; ອານນາມກໍໄດ້ຍົກກອງທັບເຂົ້າເມືອງພວນ ແລ້ວແຕ່ງຕັ້ງກວານຟູ ແລະທະຫານປະມານ 100 ຄົນຮັກສາການຢູ່ເມືອງຄຳ (ຫລືເອີ້ນວ່າ ວ້ຽນຄຳ), ດຳເນີນການປົກຄອງຄືນໃໝ່ພາຍໃຕ້ການຄວບຄຸມຂອງດ້າຍຫວຽດ.

ມາຮອດສະໄໝສົມເດັດພະຈອມຈຸນລະເກົ້າເຈົ້າຢູ່ຫົວ ກໍມີຫລັກຖານວ່າ ມີການກວາດຕ້ອນຊາວລາວໄປກຸງເທບອີກ. ແຕ່ບໍ່ປາກົດເຫັນວ່າມີຊາວພວນນຳອີກ, ຫລັກຖານພຽງໃຫ້ຮູ້ວ່າ ມີການຄວບຄຸມຊາວລາວມາຈາກເມືອງວຽງຈັນ ໄປໄວ້ທີ່ເມືອງພະນົມ, ສາລະຄາມ (ບົງອອນ ປີຍະພັນ, ໜ້າ 67).

\+ ການອົບພະຍົບຊາວພວນໃນເສິກຫໍ້, ເປັນການອົບພະຍົບຄັ້ງທີ 4; ໃນສະໄໝສົມເດັດພະຈຸນລະຈອມເກົ້າ (ລັດຊະການທີ 5). ມາເຖິງປີ ຈ.ສ 1236 (ຄ.ສ 1874) ຫໍ້ທຸງດຳຕີໄດ້ຫົວພັນທັງຫ້າທັງຫົກແລ້ວຍົກກຳລັງມາຍຶດເອົາຊຽງຂວາງ ແລະຕັ້ງຄ້າຍຢູ່ບ້ານດອນ (ບ້ານໂດນ) ທົ່ງຊຽງຄຳ (ເມືອງຄຳ). ໃນເວລານັ້ນ, (ເຈົ້າອຶ່ງ ໂອລົດເຈົ້ານ້ອຍທີ່ຖືກດ້າຍຫວຽດເອົາໄປລ້ຽງໄວ້, ເມື່ອເມືອງພວນບໍ່ມີຜູ້ຄອງລາຊະສົມບັດ, ດ້າຍຫວຽດໄດ້ແຕ່ງຕັ້ງເຈົ້າອຶ່ງຂຶ້ນຄອງເມືອງພວນໃນປີ ຈ.ສ 1228 (ຄ.ສ 1866) (ເຈົ້າຄຳພັນ ວົງກົດລັດຕະນະ, ໜ້າ 17) ໄດ້ນຳພາທະຫານຕີຫໍ້. ແຕ່ເຫັນວ່າທະຫານພວນ ຈະສູ້ບໍ່ໄຫວກໍເລີຍຂໍທະຫານຈາກດ້າຍຫວຽດເພື່ອຊ່ວຍຕີຫໍ້. ແຕ່ບໍ່ຊະນະຫໍ້, ເຈົ້າອຶ່ງກໍເສຍຊີວິດຢູ່ກັບສະໜາມຮົບ ແລະທະຫານດ້າຍຫວຽດກໍແຕກໜີກັບຄືນ. ປະຊາຊົນຊາວພວນມີຄວາມຢ້ານກົວຫໍ້ ແລະພາກັນແຕກໜີເຂົ້າປ່າ; ຂ່າວນີ້ໄດ້ໄປເຖິງສົມເດັດພະຈຸນລະຈອມເກົ້າ; ພະອົງ ຈຶ່ງໄດ້ມອບໜ້າທີ່ໃຫ້ພະຍາພຸດທະລາໄພເປັນແມ່ທັບໃຫຍ່ພ້ອມດ້ວຍພະຍາພິໄຊ (ດິສ) ເປັນແມ່ທັບຝ່າຍໄທສົມທົບກັບທັບຝ່າຍຫລວງພະບາງ ແລະຝ່າຍເມືອງນ່ານເພື່ອຊ່ວຍກັນຕີຫໍ້ໃນປີ ພ.ສ 2418 (ຄ.ສ 1875). ໃນການຕີຫໍ້ຄັ້ງນີ້ ຝ່າຍທັບໄທ ແລະທັບລາວໄດ້ຊະນະ. ພວກຫໍ້ໄດ້ປົບໜີອອກຈາກທົ່ງຊຽງຄຳ ເປັນອັນວ່າສຳເລັດການປາບຫໍ້ຄັ້ງທີ 1. ແມ່ທັບໄທໄດ້ກວາດຕ້ອນເອົາຄົວພວນໄປທີ່ຫລວງພະບາງ ວ່າຈະເອົາລົງໄປບາງກອກ. ແຕ່ເວລານັ້ນ ເກີດໂລກອະຫິວາໂດຍບັງ

ເອີນໃນເມືອງພວນ ແລະລຸກລາມຕິດແປດໄປຮອດເມືອງຫລວງພະບາງ ເຮັດໃຫ້ຄອບຄົວຊາວພວນທີ່ຖືກກວາດຕ້ອນໄປນັ້ນ ໄດ້ຕາຍໄປຢ່າງຫລວງຫລາຍ.

ມາເຖິງປີ ຄ.ສ 1885, ຫໍ້ໄດ້ຍົກທັບມາຕີເມືອງພວນອີກ. ເຈົ້າຂັນຕີ ເຈົ້າຄອງເມືອງພວນໄດ້ໄປຂໍການຊ່ວຍເຫລືອຈາກສະຫຍາມ. ເຈົ້າແຜ່ນດິນສະຫຍາມບໍ່ໄດ້ຂັດຂ້ອງຕໍ່ການຮ້ອງຂໍຂອງເຈົ້າເມືອງພວນ ພ້ອມທັງຈັດແຈງກອງທັບຝ່າຍໄທນໍາໂດຍພະຍາລາຊະວໍລະກຸນເປັນແມ່ທັບ ແລະພະຍາພິໄຊ, ພະຍາສຸໂຂໄທເປັນນາຍທັບຍົກກໍາລັງສົມທົບກັບທັບລາວທີ່ຫລວງພະບາງໄປຕີຫໍ້ທີ່ເມືອງພວນ. ຄັ້ງນີ້ ຄ້າຍຫໍ້ຢູ່ທີ່ທົ່ງຊຽງຄໍາໄດ້ຮັບການປັບປຸງຢ່າງແໜ້ນໜາ ເຮັດໃຫ້ກໍາລັງທັບໄທ ແລະລາວບໍ່ສາມາດຕີແຕກຢ່າງງ່າຍດາຍ. ທັບລາວ ແລະໄທໄດ້ປິດລ້ອມຄ້າຍຊຽງຄໍາເປັນເວລາ 2 ເດືອນ; ພ້ອມທັງມີການບຸກໂຈມຕີຫໍ້ ແຕ່ບໍ່ຊະນະ. ສະບຽງອາຫານກໍໝົດ, ທະຫານກໍຖືກເຈັບເປັນ, ລົ້ມຕາຍເປັນຈໍານວນຫລວງຫລາຍ. ສະນັ້ນ, ທັບໄທ ແລະລາວຈໍາຕ້ອງຖອຍອອກຈາກທົ່ງຊຽງຄໍາ; ພວກຫໍ້ຂະຫຍາຍກໍາລັງບຽດຍຶດເອົາຮອດວຽງຈັນ. ກອງທັບຝ່າຍໄທ ແລະລາວໄດ້ປັບປຸງກໍາລັງຄັ້ງໃໝ່ ແລະຕ່າວໂຈມຕີຫໍ້ອີກເປັນຄັ້ງທີ 3 ໃນປີ ຄ.ສ 1886. ຄັ້ງນີ້ ຫໍ້ຖືກໄລ່ຕີອອກຈາກວຽງຈັນຈົນຮອດທົ່ງຊຽງຄໍາ ແລະກໍປົບໜີອອກຈາກເມືອງພວນ. ທັບໄທໄດ້ໄລ່ຕີຫໍ້ຮອດຫົວພັນທັງຫ້າທັງຫົກ ແລະເຂດ 12 ຈຸໄທ. ຄັ້ງນີ້ ສະຫຍາມໄດ້ກວາດຕ້ອນຊາວພວນ ແລະຊາວຜູ້ໄທຢູ່ເຂດຫົວເມືອງຝ່າຍເໜືອລົງໄປສະຫຍາມຢ່າງຫລວງຫລາຍ. ແຕ່ນັ້ນ, ເມືອງພວນກໍຕົກຢູ່ໃຕ້ການປົກຄອງຂອງສະຫຍາມຄືກັບຫົວເມືອງລາວຕ່າງໆຢູ່ທາງຝັ່ງຊ້າຍແມ່ນໍ້າຂອງ. ຍັງແຕ່ຫົວພັນ ແລະເມືອງນ້ອຍຕ່າງໆຢູ່ລຽບຕາມຊາຍແດນພາກຕາເວັນອອກ ແມ່ນຂຶ້ນກັບຄ້າຍຫວຽດ. ສະພາບນີ້, ແກ່ຍາວຮອດປີ ຄ.ສ 1893, ຈຶ່ງມີການປ່ຽນແປງຄັ້ງຍິ່ງໃຫຍ່ທາງດ້ານປະຫວັດສາດຂອງລາວ ຄືດັ່ງໄດ້ສະເໜີມາແລ້ວນັ້ນ. ໃນໄລຍະເວລາທີ່ເກີດເສິກຫໍ້, ຊາວພວນກໍຖືກກວາດຕ້ອນໄປສະຫຍາມຢ່າງຫລວງຫລາຍ. ເຖິງວ່າ ບໍ່ຮູ້ຈໍານວນຢ່າງລະອຽດ ແຕ່ກໍສະແດງໃຫ້ຮູ້ວ່າ ໄລຍະນີ້ກໍແມ່ນຄັ້ງໜຶ່ງ ທີ່ຊາວພວນຖືກກວາດຕ້ອນໄປຢູ່ດິນແດນສະຫຍາມ. ດ້ວຍເຫດວ່າ ເຈົ້າແຜ່ນດິນສະຫຍາມມີຈຸດມຸ່ງໝາຍຢາກຍຶດຄອງລາວ ໂດຍຕະຫລອດການ ແລະເດັດຂາດ; ຢ່າງນ້ອຍກໍແມ່ນເຮັດໃຫ້ເມືອງພວນ ພ້ອມດ້ວຍຫົວເມືອງລາວຕ່າງໆມີກໍາລັງຄົນຫລຸດນ້ອຍຖອຍລົງ ແລະຂາດກໍາລັງແຮງງານໃນການປົກປັກຮັກສາ, ສ້າງສາບ້ານເມືອງ ແລະການຮ່ວມແຮງຮ່ວມໃຈກັບຄ້າຍຫວຽດ, ຊາວພວນທີ່ຖືກກວາດຕ້ອນໄປຢູ່ສະຫຍາມໃນເວລານັ້ນ ໄດ້ຕັ້ງກຸ່ມການບ້ານຊ່ອງຢູ່ຫລາຍບ່ອນໃນປະເທດໄທ ເກືອບທົ່ວທຸກພາກ, ຢູ່ທາງພາກເໜືອ ມີຢູ່ຈັງຫວັດແພ່, ນ່ານ, ພິດສະນຸໂລກ, ອຸດຕະຣະດິດ, ພິຈິດ, ສຸໂຂໄທ ແລະນະຄອນສະຫວັນ. ທາງພາກກາງ ມີຢູ່ຈັງຫວັດລົບບູລີ (ອໍາເພີບ້ານໝີ່), ສິງບູລີ, ສຸພັນບູລີ, ສາລະບູລີ, ອຸໄທທານີ, ການຈະນະບູລີ. ທາງພາກຕາເວັນອອກ ມີຢູ່ຈັງຫວັດນະຄອນນາຍົກ, ປາຈິນບູລີ, ສະເຊີງເຊົາ, ອຸດອນທານີ, ໜອງຄາຍ ແລະຢູ່ທາງພາກໃຕ້ ມີຢູ່ຈັນທະບູລີ.

ແຜ່ນທີ່ທີ 1:

ແຜ່ນທີ່ເກົ່າຂອງຝຣັ່ງສະແດງເຖິງທີ່ຕັ້ງຂອງເມືອງພວນ (ປະມານປີ 1884)

ຄັດຈາກ: Père P. Blanck 1884



ແຜ່ນທີ່ທີ 2:
ແຜ່ນທີ່ສັງເຂບສະແດງເສັ້ນທາງອົບພະຍົບຂອງຊາວພວນ

(ໂພ ແຊມລຳຈຽກ ໜ້າ 18 , ມີການປັບປຸງ)



ແຜ່ນທີ່ທີ 3:
ແຜ່ນທີ່ແຂວງຊຽງຂວາງໃນປັດຈຸບັນ (ຄັດຈາກອານາຈັກຂຸນເຈືອງ)

(ອຸດົມ ຂັດຕິຍະ , ດວງໄຊ ຫລວງພະສີ)



2. ເນື້ອໃນຂອງກາບທີ່ສ່ອງແສງເຖິງປະຫວັດສາດ

ກາບເມືອງພວນ ໄດ້ສ່ອງແສງໃຫ້ພວກເຮົາເຫັນສະພາບຄວາມສັບສົນອົນລະມານຂອງຊາວພວນ ພາຍຫລັງຂະບວນການຕໍ່ສູ້ ຫວັງກອບກູ້ເອກະລາດຂອງພະເຈົ້າອະນຸວົງ (1827-1829) ສິ້ນສຸດລົງ. ໃນໄລຍະນີ້ (1828-1835) ເມືອງພວນ ໄດ້ກາຍເປັນເຂດຍາດແຍ່ງອັນດຸເດືອດລະຫວ່າງດ້າຍຫວຽດ ແລະສະຫຍາມ ເຊິ່ງຝ່າຍໜຶ່ງພະຍາຍາມຍຶດຄອງ ແລະອີກຝ່າຍໜຶ່ງ ພັດພະຍາຍາມກວາດຕ້ອນປະຊາຊົນພົນລະເມືອງອອກໄປ ເພື່ອຫວັງໃຫ້ເມືອງພວນກັບກາຍເປັນເມືອງຮ້າງວ່າງເປົ່າ. ຕໍ່ໜ້າສະພາບການດັ່ງກ່າວ ຊາວພວນພະຍາຍາມດີ້ນຮົນຫາທາງອອກ ເພື່ອຄວາມຄົງຕົວ ແລະຢູ່ລອດ. ແຕ່ສຸດທ້າຍ ກໍຖືກເລ່ກົນຂອງໄທທີ່ຫລອກລວງໃຫ້ໄປຕັ້ງກຸ້ມກຸານໃໝ່ຢູ່ລຽບຣີມຂອງ ແລ້ວກືກບັງຄັບໃຫ້ຂ້າມຂອງ ໄປຢູ່ໜອງຄາຍ ແລະມີຫລາຍຄົວກືກຄັດເລືອກເອົາໄປເປັນຂ້ອຍຂ້າຮັບໃຊ້. ເມື່ອອົດບໍ່ລົນທົນບໍ່ໄຫວຕໍ່ການກົດຂີ່ຂົ່ມເຫັງຂອງພວກໄທບໍ່ໄດ້, ພວກເຈົ້ານາຍພວນ ພ້ອມຄອບຄົວພວນຈຳນວນຫລວງຫລາຍໄດ້ພາກັນໂຕນໜີກັບຄືນບ້ານເກີດເມືອງນອນ ບົນເສັ້ນທາງທີ່ເຕັມໄປດ້ວຍຄວາມລຳບາກກາກກຳ ແລະສູນເສຍຊີວິດເລືອດເນື້ອ, ຊັບສິນເປັນຈຳນວນຫລວງຫລາຍ.

2.1. ສະພາບເມືອງພວນ ກ່ອນການກວາດຕ້ອນຂອງໄທ ແລະການຄວບຄຸມຂອງດ້າຍຫວຽດ

ໃນຕອນຕົ້ນຂອງກາບເມືອງພວນ ໄດ້ບົ່ງບອກແຈ້ງກ່ຽວກັບສະພາບກ່ອນການກວາດຕ້ອນຂອງໄທ ແລະການຄຸ້ມຄອງຂອງດ້າຍຫວຽດວ່າ:

" ຍາມນັ້ນ ເມືອງພວນກວ້າງ ສີແສງເຮືອງຮຸ່ງ
ວັດວາອາຮາມເຈດີພຽບກໍ່ສ້າງ ເຮືອງເດດລັງສີ "

ສະແດງໃຫ້ເຫັນວ່າ ເມືອງພວນກ່ອນນີ້ ແມ່ນມີຄວາມຈະເລີນຮຸ່ງເຮືອງ ຫາກພວກເຮົາຢ້ອນຄືນເຖິງປະຫວັດສາດຕັ້ງແຕ່ສະໄໝຂຸນເຈືອງ (ທ້າວເຈັດເຈືອງ) ລົງມາຕັ້ງຫລັກປັກຖານ ແລະສ້າງເມືອງພວນເປັນຄັ້ງທຳອິດໃນລະຫວ່າງ ພ.ສ. 1300 (ຄ.ສ. 757)[9] ເປັນຕົ້ນມາ, ເມືອງພວນຄ່ອຍໆໄດ້ຮັບການປັບປຸງໃຫ້ເຂັ້ມແຂງ, ເປັນລັດເອກະລາດ ແລະມີຊື່ລືນາມໄປທົ່ວ ບໍ່ວ່າທາງພາຍໃນກໍຄືຕ່າງປະເທດ. ຕົກມາຮອດສະໄໝເຈົ້າຟ້າງຸ່ມທ້ອນໂຮມທົ່ວເມືອງຕ່າງໆຂອງລາວ, ໃນນັ້ນ ມີທັງເມືອງພວນເຂົ້າເປັນອານາຈັກລ້ານຊ້າງເອກະພາບໃນປີ ຄ.ສ. 1357, ທົ່ວເມືອງຕ່າງໆຂອງລາວໄດ້ເລີ່ມມີການປັບປຸງ ແລະພັດທະນາໃນທ່ວງທ່າອັນໃໝ່ໄວກວ່າເກົ່າ ໂດຍສະເພາະແມ່ນດ້ານພຸດທະສາສະໜາ. ປະຫວັດສາດລາວໄດ້ຢືນຢັນວ່າ ນັບຕັ້ງແຕ່ປີ ຄ.ສ 1600-1695 ເປັນໄລຍະທີ່ອານາຈັກລ້ານຊ້າງຮຸ່ງເຮືອງກວ່າໝູ່.

ຫລັງຈາກນັ້ນມາ, ສັກດີນາພາຍໃນເກີດການຂັດແຍ່ງກັນເອງ, ສັກດີນາພາຍນອກຍຸແຫຍ່, ສັກດີນາພາຍໃນກືກປັ່ນປ່ວນຈົນເຖິງຂັ້ນໄດ້ແຍກອອກເປັນ 3 ອານາຈັກ (ວຽງຈັນ, ຫລວງພະບາງ ແລະຈຳປາສັກ) ໃນປີ ຄ.ສ 1713. ຫລັງຈາກນັ້ນມາ, ແຕ່ລະອານາຈັກຄ່ອຍໆອ່ອນແອ ແລະເສື່ອມໂຊມລົງ ອັນເປັນທີ່ປາຖະໜາຂອງພວກສັກດີນາພາຍນອກຢ່າງເຊັ່ນ ມຽນມາ, ສະຫຍາມ ແລະດ້າຍຫວຽດ. ສັກດີນາສະຫຍາມໄດ້ກືນກິນອານາຈັກທັງສາມຂອງລາວໄດ້ຢ່າງງ່າຍດາຍໃນປີ ຄ.ສ. 1779. ສ່ວນທົ່ວເມືອງຕ່າງໆທາງທິດຕາເວັນອອກຕັ້ງແຕ່ເໜືອຮອດໃຕ້, ໃນນັ້ນ ມີທັງເມືອງພວນເຊິ່ງເປັນເມືອງອາລັກຂາຂອງວຽງ

---

9 " ຕຳນານໄທພວນ " ໂພແຊມລຳຈຽດ, ໜ້າ 81-82.

ຈັ່ງກໍຕົກຢູ່ໃຕ້ອິດທິພົນຂອງດ້າຍຫວຽດທັນທີ, ຫລືບໍ່ກໍຕົກຢູ່ໃນລັກສະນະບາສອງເໝືອງເມືອງສອງທ້າວ. ຕົກມາຮອດສະໄໝພະເຈົ້າອະນຸວົງ, ພະອົງ ໄດ້ນຳພາປະຊາຊົນລາວລຸກຂຶ້ນຕໍ່ສູ້ ຫວັງກອບກູ້ເອກະລາດຈາກສະຫຍາມໃນຊຸມປີ 1827-1829, ແຕ່ບໍ່ປະສົບຜົນສຳເລັດໄດ້ສິ້ນສຸດລົງ. ຜົນໄດ້ຮັບກໍຄືເມືອງວຽງຈັນໄດ້ກາຍເປັນເກົ່າກ່າງ, ແຜ່ນດິນເມືອງພວນອັນເປັນເຂດຍາດແຍ່ງລະຫວ່າງສະຫຍາມ ແລະດ້າຍຫວຽດກໍລຸກຂຶ້ນເປັນໄຟ. ໃນໄລຍະນັ້ນ ເມືອງພວນຢູ່ໃນລັດຊະການຂອງເຈົ້ານ້ອຍ. ໃນຕົ້ນປີ 1829 ເຈົ້າແຜ່ນດິນດ້າຍຫວຽດໄດ້ສັ່ງໃຫ້ທະຫານຂຶ້ນມາຈັບເອົາເຈົ້ານ້ອຍໄປປະຫານຊີວິດ, ໂດຍກ່າວຫາວ່າ ເຈົ້ານ້ອຍເປັນຜູ້ຈັບເຈົ້າອະນຸວົງສົ່ງໃຫ້ແກ່ໄທ[10] ຄຽງຄູ່ກັບນັ້ນ ດ້າຍຫວຽດກໍໄດ້ຈັດສົ່ງທະຫານເຂົ້າມາຄວບຄຸມເມືອງພວນໄວ້ ແລະໄດ້ແຕ່ງຕັ້ງເຈົ້າສານ ເສນາບໍດີກະຊວງທຳມະການຂຶ້ນເປັນເຈົ້າຄອງເມືອງພວນ ໂດຍຢູ່ໃຕ້ການຄວບຄຸມຂອງດ້າຍຫວຽດ. ໃນໄລຍະນີ້ (1829-1834) ທະຫານດ້າຍຫວຽດໄດ້ເພີ່ມທະວີການບີບບັ້ງສີໄຟ, ກົດຂີ່ອົ່ມເຫັງ, ທຳລາຍມ້າງເພວັດວາອາຣາມ, ຂຸດກົ່ນພະທາດເຈດີ, ປຸ້ນສະດົມວັດຖຸບູຮານອັນມີຄ່າຂອງຊາວພວນ. ການກະທຳຂອງທະຫານດ້າຍຫວຽດນີ້ ໄດ້ກະທົບເຖິງແນວຄິດຈິດໃຈຂອງຊາວພວນຢ່າງຮ້າຍແຮງ " ຢູ່ໃນການຄວບຄຸມຂອງແກວຈະເຮັດພິເລີ, ຈັດການອັນເດີກໍຍາກເຈີ, ເຈົ້ານາຍບ່າວໄພ່ລາ-ສະດອນເດືອດຮ້ອນຫລາຍເຫລືອກຳນົດ ດ້ວຍຄວາມກົດຂີ່ອົ່ມເຫັງເຕັງເຕັກຂອງພວກແກວຫາອັນເດີຈະເປັນຜົນໃຫ້ແກ່ບ້ານເມືອງບໍ່ມີ ມີແຕ່ທຳຄວາມວຸ່ນວາຍເທົ່ານັ້ນ "[11] ເຫດການດັ່ງກ່າວນີ້ ໄດ້ສະແດງອອກໃນກາບວ່າ:

" ເລີຍເລົ່າມີສັດຕູທອນເຖິງ ເປ່ເພຄອງແກ້ວ
ຂຸດກົ່ນມ້າງ ພະທາດແກ່ນໃຈເມືອງ
ທັງອາຮາມຫລວງ ຄອງເມືອງຍຸບທະລາຍສູນເສົ້າ "

2.2. ຮູບການຕໍ່ສູ້ຂອງຜູ້ປົກຄອງເມືອງພວນ ເພື່ອຂັບໄລ່ທະຫານດ້າຍຫວຽດອອກຈາກເມືອງພວນ

ສະຖານະການໃນເມືອງພວນໃນຂະນະນີ້ ຕົກຢູ່ໃນສະພາບອັດຕະຄັດອັດສົນທີ່ສຸດ, ເຮືອນຊານບ້ານຊ່ອງ, ວັດວາອາຮາມຖືກທຳລາຍມ້າງເພ ໂດຍທະຫານຂອງດ້າຍຫວຽດຜູ້ເຊິ່ງກ່ອນນີ້ ເຄີຍເປັນທີ່ເພິ່ງຂອງເມືອງພວນ ຄື ເມື່ອມີສັດຕູພາຍນອກເຂົ້າໄປບຸກບຸນ, ເມືອງພວນມັກຈະຫາຄວາມຊ່ວຍເຫລືອຈາກດ້າຍຫວຽດ ເພື່ອຕອບໂຕ້ກັບສັດຕູພາຍນອກ. ແຕ່ມາບັດນີ້ ຜູ້ເຊິ່ງເຄີຍໃຫ້ຄວາມຊ່ວຍເຫລືອໃນເມື່ອກ່ອນໄດ້ກັບກາຍມາເປັນສັດຕູປຸ້ນສະດົມ, ຢຽບຢ່ຳຢີເມືອງພວນຢ່າງບໍ່ອິນດູກູນາ.

ຍ້ອນອົດບໍ່ຣົນທົນບໍ່ໄຫວ ຕໍ່ການກົດຂີ່ອົ່ມເຫັງຂອງທະຫານດ້າຍຫວຽດບໍ່ໄດ້ ແລະອີກອັນໜຶ່ງ ກໍຍັງມີຄວາມຄຽດແຄ້ນທີ່ວ່າ ທະຫານດ້າຍຫວຽດໄດ້ຈັບເອົາເຈົ້ານ້ອຍ ຜູ້ເຊິ່ງຊາວພວນເຄົາລົບນັບຖືໄປປະຫານຊີວິດ. ດັ່ງນັ້ນ, ຄະນະຜູ້ປົກຄອງເມືອງພວນຈຶ່ງໄດ້ປຶກສາຫາລືກັນຢ່າງລັບໆ ເພື່ອຫາວິທີທາງຂັບໄລ່ທະຫານດ້າຍຫວຽດອອກຈາກເມືອງພວນ. ໃນຂະນະນີ້, ຜູ້ປົກຄອງເມືອງພວນຄິດວ່າ ຈະໃຊ້ກຳລັງຕົນເອງເພື່ອຕີຂັບໄລ່ທະຫານດ້າຍຫວຽດອອກໄປກໍອາດຈະໄດ້, ແຕ່ ເມື່ອມັນບໍ່ເປັນໄປດັ່ງທີ່ຄາດໄວ້ຈະເຮັດແນວໃດ. ສະນັ້ນ, ທາງອອກທີ່ດີຄວນຂໍກຳລັງພາຍນອກມາສະໜັບສະໜູນຕື່ມ ຄົງຈະເປັນການແນ່ນອນກວ່າ. ກຳລັງພາຍນອກໃນເວລານີ້ບໍ່ມີໃຜອື່ນ ນອກຈາກສະຫຍາມ, ເພາະວ່າ ຈະອາໄສທາງວຽງຈັນ ຫລືຫລວງພະ

10 ເຈົ້າຄຳໝັ້ນ ວົງກົດລັດຕະນະ, ໜ້າ 14.

11 ເອກະສານສະເໜີແລ້ວ, ໜ້າ 14.

ບາງ ກໍລ້ອນແລ້ວແຕ່ຂຶ້ນກັບສະຫຍາມໝົດແລ້ວ, ດັ່ງນັ້ນ, ຜູ້ປົກຄອງເມືອງພວນຈຶ່ງຕັດສິນໃຈສົ່ງສານ ເພື່ອໄປຂໍກຳລັງທະຫານຈາກສະຫຍາມ, ດັ່ງສະແດງອອກໃນກາບວ່າ:

" ຄວນທີ່ເຮົາຮັບໃຊ້ ສານສົ່ງເອົາເສິກ
ຄວາມລະຫັດຢ່າເອົາມາເວົ້າ ດີຕໍ່ເຈົ້າແລະອ້ອຍຈາຕ້ານຕໍ່ກັນ "

ຄຳວ່າ " **ເສິກ** " ຢູ່ນີ້ໝາຍເຖິງກອງທັບສະຫຍາມ ແລະການສົ່ງສານໄປຂໍທັບສະຫຍາມຄັ້ງນີ້ກໍດຳເນີນໄປຢ່າງປິດລັບທີ່ສຸດ " ຄຳລະຫັດຢ່າເອົາມາເວົ້າ ດີຕໍ່ເຈົ້າ ແລະອ້ອຍຈາຕ້ານຕໍ່ກັນ ". ໝາຍວ່າມີພຽງແຕ່ຮູ້ກັນພາຍໃນວົງແຄບເທົ່ານັ້ນ, ຫາກທະຫານດ້າຍຫວຽດຜູ້ເຊິ່ງປົກຄອງເມືອງພວນຢູ່ໃນຂະນະນີ້ຮູ້, ຊາຕາກຳຂອງຜູ້ປົກຄອງເມືອງກໍຄົງບໍ່ຕ່າງຫຍັງຊາຕາກຳຂອງເຈົ້ານ້ອຍຢ່າງແນ່ນອນ.

ເພື່ອເປັນການຢືນຢັນເຖິງເຫດການປະຫວັດສາດທີ່ສະແດງອອກໃນກາບຕອນນີ້, ຂໍນຳເອົາເນື້ອໃນພົງສາວະດານເມືອງພວນ (ເຈົ້າຄຳໝັ້ນ ວົງກົດລັດຕະນະ, ໜ້າ 14) ມາອ້າງໃຫ້ເຫັນດັ່ງນີ້: " ປີກາບສະງ້າ ຈ.ສ. 1196 (ຄ.ສ. 1834) ເຈົ້າສານຈຶ່ງແຕ່ງຄົນໃຊ້ໄປຂໍກອງທັບນຳເຈົ້າແຜ່ນດິນໄທ ເພື່ອມາຕີແກວໜີ ສົມເດັດພະນັ່ງເກົ້າ ໂປດໃຫ້ພະລາຊະສຸລິນ ເປັນແມ່ທັບຄຸມທະຫານປະມານພັນປາຍ, ສົມເດັດພະເຈົ້າ ມັງທາຕຸລາດ ພະເຈົ້າລ້ານຊ້າງຮົ່ມຂາວຫລວງພະບາງຊົງແຕ່ງໃຫ້ເຈົ້າອຸປະຮາດອະໄພ ເປັນແມ່ທັບຄຸມທະຫານປະມານພັນປາຍມາຊ່ວຍເມືອງພວນ ຍັງບໍ່ທັນຮອດຊຽງຂວາງເຈົ້າສານກໍເອົາທະຫານພວນມາໂຈມຕີ ຂ້າແກວໃນກາງຄືນ, ແກວເຫລືອແຕ່ຜູ້ໜຶ່ງສອງຄົນໂຕນໜີໄປເມືອງແກວ. ຢູ່ໄດ້ສອງວັນ ກອງທັບໄທ ແລະລາວຈຶ່ງມາເຖິງຊຽງຂວາງ ".

ຫາກພວກເຮົາສົມທຽບເນື້ອໃນຂອງກາບ ທີ່ພັນລະນາເຖິງການຕໍ່ສູ້ລະຫວ່າງທະຫານໄທກັບທະຫານດ້າຍຫວຽດແລ້ວພົບບໍ່ກົງ ກັບເນື້ອໃນຂອງປະຫວັດສາດຕອນນີ້, ດັ່ງຕອນທີ່ວ່າ:

" .... ໄກ່ຂັນສາມທີ
ແຕ່ງດີທຸກຄ້າຍ ປີກຊ້າຍປີກຂວາ
ໂຍທາໄຫລອອກ ຫອກງ້າວທັງປືນ
ລູກແມ້ງຕຳໂດນ ເອົາໂຕນອອກຕ້າຍ
ຄົນຮ້າຍໄລ່ຟັນ ໄທຂັບໄລ່ຕ້ອນ
ເລືອດອ້ອນໄຫລນອງ ຕາຍກອງໄມ້ຕົ້ນ "

ຈາກເນື້ອໃນຂອງກາບກອນຕອນນີ້ ສະແດງໃຫ້ພວກເຮົາເຫັນວ່າ ທະຫານໄທພໍແຕ່ຂຶ້ນໄປເຖິງຊຽງຂວາງແລ້ວ, ກໍຕຽມອອກຮົບທັນທີ ແລະການສູ້ຮົບກໍດຳເນີນໄປຢ່າງດຸເດືອດ ເຊິ່ງກົງກັນຂ້າມກັບເນື້ອໃນທີ່ສະແດງອອກໃນພົງສາວະດານດັ່ງກ່າວມານັ້ນ. ສິ່ງນີ້, ເປັນສິ່ງທີ່ນັກປະຫວັດສາດຈະຕ້ອງໄດ້ໃຫ້ຄວາມກະຈ່າງແຈ້ງໃນຂັ້ນຕໍ່ໄປ.

2.3. ນະໂຍບາຍລັດທິໄທໃຫຍ່[12] ໄດ້ນຳມາໃຊ້ກັບຊາວພວນອີກຄັ້ງໃໝ່

" ລັດທິໄທໃຫຍ່ " ໃນປຶ້ມຂອງອາຈານຄົນໄທໃນມະຫາວິທະຍາໄລທຳມະສາດໄດ້ຂຽນ " ປະຫວັດສາດການເມືອງໄທ " ໃນເຊີງວິເຄາະວ່າ: ລັດທິໄທໃຫຍ່ໄດ້ເລີ່ມປະຕິບັດມາຕັ້ງແຕ່ສະໄໝກຸງທົນບູລີ (ລັດ

12 ໝາຍເຖິງນະໂຍບາຍຂະຫຍາຍອານາເຂດຂອງສະຫຍາມ, ໄທໃຫຍ່ໃນທີ່ນີ້ ບໍ່ໄດ້ໝາຍເຖິງຊົນຊາດໄທໃຫຍ່ ໃນເຂດລັດຊານປະ ເທດມຽນມາ.

ຊະການທີ 1 ຄ.ສ. 1767-1782 [13] . ລັດທິໄທໃຫຍ່ ເຖິງວ່າບໍ່ໄດ້ປະກາດອອກຢ່າງເປັນທາງການ, ແຕ່ວ່າການກະທຳຂອງສະຫຍາມໃນໄລຍະນີ້ ລ້ວນແຕ່ເປັນການກະທຳທີ່ເປັນການແຜ່ອຳນາດຊາດໃຫຍ່. ຢາກເປັນເຈົ້າເຂດອາຊີຕາເວັນອອກສ່ຽງໃຕ້ທັງໝົດພຽງຜູ້ດຽວ. ພາຍຫລັງ ຕີບຽດຢຶດເອົາອານາຈັກລ້ານນາຈາກພະມ້າໄດ້ສຳເລັດໃນປີ ພ.ສ. 2317 (ຄ.ສ. 1774) ແລ້ວ, ກໍເລີ່ມຂະຫຍາຍອຳນາດເຂົ້າມາໃນແຫລມອິດູຈີນ ເຊິ່ງສາມາດບັງຄັບໃຫ້ຂະເໝນຍອມຂຶ້ນແກ່ສະຫຍາມໄດ້ໃນປີ ພ.ສ. 2318 (ຄ.ສ. 1774) ແລະອານາຈັກລ້ານຊ້າງທັງສາມຂອງລາວໄດ້ໃນປີ ພ.ສ. 2321 (ຄ.ສ. 1778)[14].

ສຳລັບເມືອງພວນເຖິງວ່າ ເປັນເມືອງອາລັກຂາຂອງອານາຈັກວຽງຈັນກໍຕາມ, ແຕ່ໃນຕົວຈິງຍັງຕົກຢູ່ໃຕ້ອິດທິພົນຂອງດ້າຍຫວຽດເລື້ອຍມາ, ຍ້ອນແນວນັ້ນ, ເມືອງພວນຈຶ່ງກາຍເປັນເຂດຂັດແຍ່ງທີ່ສຳຄັນເຂດໜຶ່ງລະຫວ່າງສະຫຍາມ ແລະດ້າຍຫວຽດ ". ຄວາມພະຍາຍາມຂອງໄທທີ່ຈະຄອບຄອງຝັ່ງຊ້າຍຂອງແມ່ນ້ຳຂອງທັງໝົດນັ້ນ ແມ່ນມີຜົນສຳເລັດໜ້ອຍ ອັນເນື່ອງມາຈາກດ້ານໜຶ່ງຍ້ອນຝ່າຍອານາມໃຫ້ຄວາມຊ່ວຍເຫລືອແກ່ເຈົ້ານາຍທ້ອງຖິ່ນຂອງລາວ ແລະດ້ານໜຶ່ງແມ່ນອີງຕາມນະໂຍບາຍພື້ນຖານຂອງໄທທີ່ວ່າ ຕຽມບັງຄັບເອົາປະຊາຊົນໄປຕັ້ງຖິ່ນຖານໃໝ່ "[15] ຈາກນະໂຍບາຍພື້ນຖານນີ້, ສະຫຍາມຢຶດວຽງຈັນໄດ້ ແລ້ວກໍໄດ້ທຳການກວາດເອົາຄອບຄົວລາວວຽງຈັນກັບພະລາຊາວົງສານຸວົງ ຕະຫລອດຮອດຊັບສົມບັດ, ເຂົ້າຂອງ, ຊ້າງມ້າ, ພະແກ້ວ, ພະບາງລົງໄປບາງກອກ. ໃນຈຳນວນຄອບຄົວລາວທີ່ກວາດຕ້ອນໄປຄັ້ງນີ້ ມີທັງລາວວຽງ, ພວນ, ຜູ້ໄທ. ນີ້ເປັນຄັ້ງທຳອິດທີ່ຊາວພວນຖືກກວາດຕ້ອນລົງໄປສະຫຍາມ (ມະຫາສີລາ ວິລະວົງ, 1973 ໜ້າ 134). ຈາກນັ້ນມາໃນປີ ຄ.ສ. 1772, ໂດຍປະຕິບັດຕາມຄຳສັ່ງຂອງສະຫຍາມ, ເຈົ້ານັນທະເສນ ເຈົ້າຄອງເມືອງວຽງຈັນ ໄດ້ຍົກທັບຂຶ້ນໄປຕີເມືອງພວນແລ້ວເລີຍຂຶ້ນໄປຕີຮອດເຂດເມືອງແກວ ແລະກໍໄດ້ທຳການກວາດຕ້ອນລາວພວນ ແລະລາວພຸງດຳລົງໄປກຸງເທບປະມານ 400 ຄົນ (ບັງອອນ ປິຍະພັນ, ພ.ສ 2541 ໜ້າ 41).

ເຖິງວ່າ ດຳເນີນການກວາດຕ້ອນຊາວພວນເຖິງສອງຄັ້ງແລ້ວກໍຕາມ ແຕ່ເມືອງພວນກໍຍັງຕັ້ງເປັນເມືອງຢູ່ເໝືອນເດີມ, ຊ້ຳບໍ່ໜຳດ້າຍຫວຽດຍິ່ງມີບົດບາດຫລາຍຂຶ້ນບົນດິນແດນເມືອງພວນ ແລະກໍເປັນການຍາກທີ່ຈະຄອບຄອງເມືອງພວນໄດ້ເດັດຂາ. ເພາະເມືອງພວນຢູ່ຫ່າງໄກຈາກກຸງເທບ ແລະຢູ່ຕິດກັບຊາຍແດນດ້າຍຫວຽດ. ສະນັ້ນ, ສະຫຍາມຈຶ່ງມີແຜນນຳໃຊ້ລັດທິໄທໃຫຍ່ກັບເມືອງພວນອີກຄັ້ງໃໝ່ ຄື ເຮັດແນວໃດໃຫ້ເມືອງພວນກັບກາຍເປັນເມືອງຮ້າງວ່າງເປົ່າ, ບໍ່ມີກຳລັງເປັນຕີນເປັນມືໃຫ້ແກ່ດ້າຍຫວຽດອີກຕໍ່ໄປ.

ເມື່ອມີໜັງສື ຂໍຄວາມຊ່ວຍເຫລືອຈາກຜູ້ປົກຄອງເມືອງພວນ ໃຫ້ໄປຕີຂັບໄລ່ທະຫານດ້າຍຫວຽດອອກຈາກເມືອງພວນ ຍິ່ງເປັນໂອກາດ ແລະເງື່ອນໄຂອັນດີໃຫ້ແກ່ໄທໃນການດຳເນີນນະໂຍບາຍຕໍ່ຊາວພວນໃນທັນທີທັນໃດ. ພໍແຕ່ໄດ້ຮັບສານຈາກເຈົ້າສາລີ (ຄະນະຜູ້ປົກຄອງເມືອງພວນ), ພະລາຊະສຸລິນ (ແມ່ທັບສະຫຍາມປະຈຳວຽງຈັນ-ໜອງຄາຍ) ໄດ້ຂຸ້ນຂໍຽວບັງຄັບເກັບເກນສະບຽງອາຫານ, ກຳລັງທັບຢ່າງເຄັ່ງຮ້ອນ ເພື່ອຈະຍົກທັບຂຶ້ນໄປເມືອງພວນ, ດັ່ງສະແດງອອກໃນກາບວ່າ:

"	ມື້ປອດຍາມດີ
ໄຊຍາດີກີ	ດາດີທຸກໝູ່
ຢ່າລ້າງຢ່າຄາ	ທ້າງດາການທັບ

---

13 " ຕາມຮອຍເຈົ້າອະນຸວົງ " ຄະນະພາສາວັນນະຄະດີ ແລະມະນຸດສາດ, 1997, ໜ້າ 64.

14 " ປະຫວັດສາດໄທສະໄໝໃໝ່ " ຣ.ສ ພານດີ ມະຫາອັນ, ມະຫາວິທະຍາໄລສີນະຄະຣິນວິໂຣດ ບາງແສນ, ໜ້າ 26.

15 " Snit ແລະ Breazeale, 1988, ໜ້າ 26.

ນັບໄດ້ພັນປາຍ	. . . .
ເຂາະຂອດຄົນຊາຍ	ກຳນົດກົດໝາຍ
ໜອງທັນໜອງລາຍ	ພັນປາຍບໍ່ໜ້ອຍ
ພໍຮ້ອຍນາຍຄົນ	ລ້ວນຂະຫຍັນອັນແຂງ
ແຕ່ງທັບດັບເສິກ	ຍັບຍ້າຍລີລາ ປາບໝູ່ປັດຈາມິດ "

ສະຫຍາມສັ່ງກຳລັງທັບຂຶ້ນໄປຊຽງຂວາງເທື່ອນີ້ແມ່ນມີ " ຈຸດປະສົງຂັບໄລ່ທະຫານດ້າຍຫວຽດ ອອກຈາກຄ້າຍຄູຕ່າງໆທາງຝັ່ງຊ້າຍຂອງແມ່ນ້ຳຂອງ ແລະກວາດຕ້ອນເອົາປະຊາຊົນທັງໝົດໃນວຽງ ຈັນ ແລະຫົວເມືອງຕ່າງໆທີ່ຂຶ້ນກັບວຽງຈັນໃນເມື່ອກ່ອນ ໄປຂຶ້ນກັບໄທ " (Snit ແລະBreazeale 1988. ໜ້າ 16). ຄຽງຄູ່ກັບນະໂຍບາຍແຜ່ອຳນາດຊາດໃຫຍ່, ຕັດຮອນອິດທິພົນຂອງດ້າຍຫວຽດ ແລະກວາດຕ້ອນປະ ຊາຊົນຕາມຫົວເມືອງຕ່າງໆທາງຝັ່ງຊ້າຍຂອງແມ່ນ້ຳຂອງແລ້ວ, ຍັງເປັນໂອກາດໃນການກອບໂກຍເອົາ ຊັບສິນເງິນຄຳ, ຂ້ອຍຂ້າມ້າໃຊ້ຕ່າງໆ ເພື່ອສ້າງຮັ່ງຄູນມີໃຫ້ແກ່ສະຫຍາມອີກດ້ວຍ. ດັ່ງສະແດງອອກໃນ ກາບວ່າ:

"	ຈາກັບທຸກເມື່ອ
ເຊື່ອໄດ້ສິ່ງຂອງ	ແມ່ງົວຕົວຄວາຍ
ຝູງຂ້ອຍຍິງຊາຍ	ເຂົ້າຂອງສົມບັດ
ຫັດກີອັດສາ	ວັດກາຟືນແຜ່ນ ".

ເນື້ອໃນຂອງກາບຕອນນີ້ ແມ່ນສະແດງອອກເຊິ່ງນະໂຍບາຍຂອງລັດທິໄທໃຫຍ່ ທີ່ກະທຳຕໍ່ຊາວ ພວນອີກຄັ້ງໃໝ່ ຄື ກວາດລ້າງເອົາທັງຄົນ ແລະຊັບສົມບັດທັງໝົດຂອງເມືອງພວນບໍ່ໃຫ້ຫລົງເຫລືອຫຍັງ ອີກຄືຄັ້ງທີ່ຜ່ານມາ. ພຶດຕິກຳຕົວຈິງຂອງທະຫານໄທກໍເປັນແນວນັ້ນແທ້; ທະຫານໄທໄປເຖິງຊຽງຂວາງ ໃນລະຫວ່າງຕົ້ນເດືອນກຸມພາ ຄ.ສ. 1834, ດັ່ງສະແດງອອກໃນກາບວ່າ:

" ເສິກລາຊາ	ລ່ວງມາບໍ່ໜ້ອຍ
ຈຸນລະສັງກາດ	໑໑໙໖
ຕົກເດືອນຍີ່	ເຖິງທີ່ພາຍແຮມ ".

ເມື່ອຮອດຊຽງຂວາງແລ້ວ ກໍໄດ້ທຳການຕໍ່ສູ້ກັບທະຫານດ້າຍຫວຽດທັນທີ, ຫລັງຈາກຕີຂັບໄລ່ທະ ຫານດ້າຍຫວຽດອອກໄປແລ້ວ, ນະໂຍບາຍການບັງຄັບກວາດຕ້ອນຊາວພວນກໍໄດ້ຮັບການປະຕິບັດທັນທີ ທັນໃດເຊັ່ນກັນ, ໂດຍບໍ່ໃຫ້ໂອກາດຄົ້ນຄິດແກ່ຝ່າຍຜູ້ປົກຄອງເມືອງພວນພຽງແຕ່ສ້ຽວວິນາທີ, ດັ່ງສະແດງ ອອກໃນກາບວ່າ:

"	ແຕ່ນັ້ນເສນາເຈົ້າທັງປວງ
ຂຸນຫລວງຜູ້ໃຫຍ່	ຝ່າຍກໍ້າໜອງລາຍ
ປຶກສາພົນໄພ່	ຈັກໄລ່ຄົວລົງ
ຈຶ່ງປົງຄວາມຍາກ ... "	

ນີ້ແມ່ນການປະຕິບັດຄຳສັ່ງຂອງທາງການບາງກອກທີ່ສົ່ງໄປຍັງແມ່ທັບໄທທີ່ໜອງຄາຍ, ແນະນຳ ໃຫ້ເອົາສືບຕໍ່ກວາດຕ້ອນຊາວພວນ ແລະເຮັດໃຫ້ພູພຽງແຫ່ງນີ້ເປັນເຂດປອດປະຊາຊົນ (ອີງຕາມ Snit

ແລະBreazeale. 1988. ໜ້າ 23). ຈາກກາບກອນທີ່ວ່າ " ປຶກສາພິນໄພ່ ຈັກໄລ່ຄົວລົງ " ໝາຍເຖິງສອງວິທີການ ທີ່ທະຫານໄທປະຕິບັດຕໍ່ຊາວພວນໃນຂະນະນັ້ນ ຄື ເກັ້ຍກ່ອມ ແລະບັງຄັບ. " ໄທໄດ້ເຈລະຈາກັບພັກຝ່າຍເຈົ້ານາຍພວນ ໂດຍໃຫ້ຄຳໝັ້ນສັນຍາວ່າ ຈະໃຫ້ຕຳແໜ່ງເໝາະສົມ ແລະຮັກສາອຳນາດທີ່ມີຕໍ່ຊາວພວນ, ໃຫ້ຄວາມສະດວກໃນການເດີນທາງ" (ອີງຕາມ Snit ແລະBreazeale 1988. ໜ້າ 24), ເມື່ອກຶກເກັ້ຍກ່ອມ, ເຈົ້ານາຍພວນຈະເຊື່ອຫລືບໍ່ເຊື່ອກໍຕ້ອງໄດ້ປະຕິບັດຕາມຄຳສັ່ງ " ຈັກໄລ່ຄົວລົງ " ເພາະວ່າ ໃນຂະນະນີ້ ເຈົ້ານາຍພວນຢູ່ໃນສະພາວະດາບຢູ່ເໜືອ ຄໍຢູ່ໃຕ້.

ດັ່ງໄດ້ເວົ້າແລ້ວວ່າ ນະໂຍບາຍຂອງສະຫຍາມໃນການກວາດຕ້ອນຄັ້ງນີ້ ແມ່ນເຮັດແນວໃດໃຫ້ເມືອງພວນກາຍເປັນເມືອງຮ້າງວ່າງເປົ່າ. ສະນັ້ນ, ການກວາດຕ້ອນຈຶ່ງໄດ້ດຳເນີນໄປທຸກຫຍ່ອມຫຍ້າປ່າເຂົາບົນດິນແດນພວນ, ດັ່ງສະແດງອອກໃນບົດ " ຊື່ບ້ານໃນວ້ຽນກວາງ, ວ້ຽນແສນ, ວ້ຽນສູຍ ແລະວ້ຽນຄຳທີ່ໄທກວາດຄົວໄປ " ແລະການກວາດຕ້ອນນີ້ ກໍບໍ່ແມ່ນຍ້ອນຄວາມສະໝັກໃຈ ດັ່ງນັກປະຫວັດສາດບາງຄົນຂຽນໄວ້, ແຕ່ຫາກແມ່ນບັງຄັບບີບບັ້ງສີໄຟແບບປ່າເຖື່ອນ ດັ່ງສະແດງອອກໃນກາບວ່າ:

" ເຂດຊ້າງສູ້ຍເມືອງ	ຮຸ່ງເຮືອງເລີຍເສົ້າ
ເຂົ້ານ້ຳອາຫານ	ເປັນຂອງສະຫານ
ເຂົາຕີເຂົາຟາດ	ໂອກາດເມືອງມາງ
ຮ້ອງຄາງທິວໄຫ້	ເສິກໄດ້ຄົວລົງ
ເຂົາປົ່ງຄຳຄາ	ເຂົາຜ່າເຂົາຄົວ
ເອົາຕົວເປັນຂ້າ	. . . . "

ການຕົວະຍົວະຫລອກຫລວງຂອງໄທ ໃຫ້ຊາວພວນອົບພະຍົບລົງໄປຕັ້ງກິ່ນຖານໃໝ່ຢູ່ທົ່ງນາແຫ່ນ (ແຂວງບໍລິຄຳໄຊໃນປັດຈຸບັນ) ວ່າເປັນບ່ອນອຸດົມສົມບູນກວ່ານັ້ນ, ທີ່ແທ້ມັນແມ່ນການປະຕິບັດນະໂຍບາຍທ້ອນໂຮມພົນລະເມືອງໃຫ້ເຂົ້າໄປຢູ່ໃກ້ສູນກາງ ເພື່ອສະດວກແກ່ການຄວບຄຸມ ແລະອີກດ້ານໜຶ່ງກໍເພື່ອເປັນການຕັດຮອນກຳລັງຂອງຝ່າຍກົງກັນຂ້າມ (ດ້າຍຫວຽດ). ຢູ່ໃນກາບມີຕອນຂຽນວ່າ " ດິນອົງຢ່າຢູ່ ເຂົ້າສູ່ສົມພານ " ນີ້ເປັນຄຳໂຄສະນາຊວນເຊື່ອຂອງທະຫານໄທ, ພວກເຂົາກືວ່າ ເມືອງພວນເປັນດິນແດນຂອງດ້າຍຫວຽດ (ດິນອົງ) ບໍ່ຕ້ອງຢູ່, ຕ້ອງອົບພະຍົບຫລົບໄພໄປເພິ່ງສົມພານປາລະມີຂອງພະເຈົ້າສະຫຍາມ. ຢູ່ໃນຄຳສັ່ງຂອງບາງກອກ ທີ່ສັ່ງໃຫ້ແມ່ທັບໄທຝ່າຍໜອງຄາຍໃນເດືອນ 4/1834 ໄດ້ມີຕອນຂຽນວ່າ: " ກ້າເຫັນວ່າໃນປີນີ້ ບໍ່ສາມາດກວາດຕ້ອນເອົາປະຊາຊົນຊາວພວນທີ່ເຫລືອຢູ່ນັ້ນໄດ້ໝົດກໍໃຫ້ປະໄວ້ກ່ອນ ... ເມື່ອຮອດລະດູແລ້ງໜ້າ ໃຫ້ທ່ານເຂົ້າໄປດຳເນີນນະໂຍບາຍເກັ້ຍກ່ອມ, ດຶງດູດເອົາຊາວພວນທີ່ເຫລືອນັ້ນລົງມາ, ກ້າພວກເຂົາຂັດຂືນໃຫ້ປະໄວ້ກ່ອນ ແລ້ວພວກເຮົາຈະສົ່ງທະຫານຂຶ້ນໄປຕີກວາດຕ້ອນເອົາໝົດທຸກໆຄົນທີ່ຍັງຫລົງເຫລືອຢູ່ນັ້ນ, ທັງນີ້ ກໍເພື່ອບໍ່ໃຫ້ພວກເຂົາເປັນແຫລ່ງສະສົມ ແລະອຳນວຍຄວາມສະດວກໃຫ້ແກ່ສັດຕູໃນອະນາຄົດຂອງພວກເຮົາ " (ອີງຕາມ Snit ແລະBreazeale, 1988. ໜ້າ 23-24).

2.4. ຮູບການຕໍ່ສູ້ຂອງຊາວພວນ ຕໍ່ກັບນະໂຍບາຍກວາດຕ້ອນຂອງໄທ

ດັ່ງໄດ້ເວົ້າມາແລ້ວວ່າ ການຕົວະຍົວະຫລອກລວງຜູ້ປົກຄອງເມືອງພວນ ກໍຄືຊາວຄົວພວນວ່າຈະຍົກຍ້າຍຊາວພວນໄປຕັ້ງກິ່ນຖານໃໝ່ ບ່ອນເຊິ່ງມີຄວາມອຸດົມສົມບູນກວ່າເມືອງພວນນັ້ນ, ບໍ່ໄດ້ເປັນໄປຕາມທີ່ໄທໄດ້ໃຫ້ຄຳໝັ້ນສັນຍາໄວ້, ພໍແຕ່ໄປເຖິງນາແຫ່ນ ພັກຢູ່ນັ້ນໄດ້ໄລຍະໜຶ່ງ ແລ້ວກໍອອກຄຳສັ່ງບັງຄັບໃຫ້ຊາວພວນຍົກຍ້າຍຂ້າມຂອງ, ດັ່ງສະແດງອອກໃນຫົວຂໍ້ບົດທີ 6 ຂອງກາບເມືອງພວນວ່າ " ນາຍໄທຍົວະ

ເຢົ້າເອົາຄົວລົງໄປວ່າ ຈະເອົາໄປສ້າງບາແທ່ນ ຄັນມາຮອດແລ້ວ ເລີຍຕີຄົວອ້າມຂອງ " ແລະເນື້ອໃນທັງໝົດຂອງກາບບົດນີ້ກໍໄດ້ເຜີຍແບໂສມໜ້າ " ໜ້າພະໃຈມານ " ຂອງທະຫານໄທທີ່ກະທຳຕໍ່ຊາວພວນຢ່າງເອົາການເອົາງານ. ການກະທຳທີ່ໂຫດຫ້ຽມຂອງທະຫານໄທນີ້ ໄດ້ເຮັດໃຫ້ຊາວພວນມີຄວາມໂກດແຄ້ນ ແລະກິນແໜງແຄງໃຈເຫລືອທີ່ຈະພັນລະນາ (ລາຍລະອຽດເບິ່ງພາກວິເຄາະເນື້ອໃນກາບ). ສິ່ງທີ່ຊາວພວນເຈັບແສບທີ່ສຸດກໍຄື " ຊາວຄົວທັງຫລາຍໄປຮອດໜອງຄາຍໄດ້ເຫັນໄທປັບກັນເຮັດຂ້ອຍ, ພວກເຈົ້ານາຍເອົາຜູ້ສອງສາມຄົວ... " ຢູ່ໃນບ້ານອົບພະຍົບກໍປະສົບຄວາມເດືອດຮ້ອນຢ່າງແສນສາຫັດ ດັ່ງສະແດງອອກໃນກາບວ່າ:

"	ແຜ່ນດິນໜອງຄາຍ
ກາຍເກີດເປັນທຸກ	ເກີດລິຍຸກມາກຫລາຍ
ຄົນຕາຍທຸກມື້	. . . .
ນາຍໄທຫຽວທ່ອງ	ເວົ້າປ່ອງຄວາມມາ
ທຸລະທຸໄລ	ຈັດກວາດເອົ້າໄປ
ບໍ່ໄລຄາດແລ້ວ	ກວາດແລ້ວຄົວລາວ "

ຈາກກາບຕອນນີ້, ເຮົາຈະເຫັນວ່າ ຊາວຄົວພວນໃນຂະນະນັ້ນ ຖືກບີບຄັ້ນທັງກາຍ ແລະໃຈ. ສັດຈະທຳເຄີຍບອກໄວ້ວ່າ " ບ່ອນໃດມີການກົດຂີ່ຂູດຮີດ ບ່ອນນັ້ນຍ່ອມມີການຕໍ່ສູ້ ". ເມື່ອສະຖານະການເປັນເຊັ່ນນີ້ ຜູ້ປົກຄອງເມືອງພວນຜູ້ມີນ້ຳໃຈຮັກຊາດຈຳນວນໜຶ່ງໄດ້ຕັດສິນໃຈຫາທາງອອກ ຄື ໂຕນໜີກັບຄືນບ້ານເກີດເມືອງນອນ, ດັ່ງສະແດງອອກໃນກາບວ່າ:

" ຄິດປຸນດູກີ່	ໜ້າທີ່ແວນດີ
ໂຕນໜີແວນເປືອງ	ເກີງເມືອງຈີງເຊົາ
ຮີບເດົາດາກ້າ	ດູໜ້າຍິງຊາຍ
ຊັບສິນອານັດ	ລະຫັດອຳດີ ".

ການປຶກສາຫາລື ເພື່ອໂຕນໜີກັບຄືນບ້ານເກີດເມືອງນອນຂອງຊາວພວນໄດ້ດຳເນີນໄປຢ່າງລັບໆ ໂດຍຈັດອອກເປັນສອງຂະບວນ, ຂະບວນໜຶ່ງໂຕນອອກກ່ອນ, ສ່ວນຂະບວນທີສອງເມື່ອໄດ້ໂອກາດໃຫ້ໂຕນອອກຕາມຫລັງ. ເມື່ອຂະບວນທີໜຶ່ງເຊິ່ງນຳໂດຍເຈົ້າສາລີໂຕນອອກໄປແລ້ວ, ຝ່າຍໄທຍິ່ງມີການເຂັ້ມງວດກວດຂັນ, ໄດ້ເນັ້ນໜັກເຈົ້າເມືອງ ແລະຂ້າລາຊະການຜູ້ໃຫຍ່ຂອງເມືອງໜອງຄາຍ, ໜອງຫານ ແລະໄຊບູລີວ່າ " ຕ້ອງແຕ່ງຕັ້ງຄົນຮັກສາປ້ອມຊາຍແດນຕ່າງໆເພື່ອດູແລ ແລະກວດກາລາຊະການຢ່າງເຂັ້ມງວດເພື່ອເວນຍາມປ້ອງກັນຊາວພວນ ທີ່ໄດ້ກວາດຕ້ອນແລ້ວນັ້ນ ບໍ່ໃຫ້ເຂົາມີໂອກາດໂຕນໜີກັບຄືນບ້ານເກີດເມືອງນອນອີກ " (Snit ແລະBreazeale 1988, ໜ້າ 24)

ນອກຈາກບັນຫາທີ່ກ່າວມາແລ້ວນັ້ນ, ກາບເມືອງພວນຍັງໄດ້ສ່ອງແສງໃຫ້ພວກເຮົາເຫັນເຖິງຄວາມລຳບາກກາກກຳຂອງຊາວພວນບົນເສັ້ນທາງໂຕນໜີກັບຄືນບ້ານເກີດເມືອງນອນ ເຊິ່ງໄດ້ເອົາຊີວິດເປັນເດີມພັນ ດັ່ງສະແດງອອກໃນຫົວຂໍ້ກາບໜ້າທີ 8 ວ່າ " ເສຍຄົນຫລາຍໃນເວລາເຂົາເຈົ້າເບື່ອໝາກໜ້ອງຕາຍໄປສອງສ່ວນສາມ " ສະພາບດັ່ງກ່າວນີ້ ຍາກຈະຫາເຫັນໄດ້ຈາກແຫລ່ງເອກະສານອື່ນ. ລາຍລະອຽດກ່ຽວກັບເລື່ອງນີ້ ຈະຖືກນຳມາກ່າວໃນພາກວິເຄາະເນື້ອໃນ.

ສະຫລຸບລວມແລ້ວ " ກາບເມືອງພວນ " ແມ່ນບົດວັນນະກຳປະຫວັດສາດທີ່ສ່ອງແສງເຖິງໂຫດກຳຂອງສັກດີນາສະຫຍາມ ແລະສັກດີນາລາວຂາຍຊາດທີ່ກໍ່ຂຶ້ນແກ່ປະຊາຊົນຊາວພວນ, ຄວາມລຳບາກ

ກາກກຳຂອງຊາວພວນ ຍ້ອນນ້ຳມືຂອງພວກສັກດີນາສະຫຍາມ ແລະສ່ອງແສງເຖິງນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຕໍ່ສູ້ຕ້ານຄືນກັບການທາລຸນນະກຳຂອງພວກສັກດີນາສະຫຍາມ ດ້ວຍການໂຕນໜີກັບຄືນບ້ານເກີດເມືອງນອນ ອັນເປັນບ່ອນຝັງສາຍແຫ່ແຜ່ສາຍບືຂອງພວກເຂົາເຈົ້າ.

IV. ວິເຄາະເນື້ອໃນກາບເມືອງພວນ

ດັ່ງໄດ້ສະເໜີມາແລ້ວວ່າ, ກາບເມືອງພວນບໍ່ໄດ້ແບ່ງເປັນຕອນ, ແຕ່ຫາກໄດ້ຂຽນເປັນບົດ ເຊິ່ງແຕ່ລະບົດມີຫົວຂໍ້ແຕກຕ່າງກັນອອກໄປ ໂດຍອີງຕາມລຳດັບເຫດການ ຕັ້ງແຕ່ບົດທີ 1 ເຖິງບົດທີ 9 ເຊິ່ງແຕ່ລະບົດມີເນື້ອໃນດັ່ງຕໍ່ໄປນີ້:

1. ບົດທີໜຶ່ງ: " ສານເຈົ້າສາລີເຮັດໄປເກື້ອຍໄທ " (ເຈົ້າໜອງລາຍ).

ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ, ເມືອງພວນເປັນເມືອງໜຶ່ງທີ່ເກົ່າແກ່ ແລະມີມາແຕ່ບູຮານນະການ. ປະຫວັດສາດຫລືພົງສາວະດານເມືອງພວນເລີ່ມເລົ່າຂານ ແລະບັນທຶກເປັນພົງສາວະດານມາຕັ້ງແຕ່ສະໄໝຂຸນເຈືອງຫລືຂຸນເຈັດເຈືອງ (ລູກຄົນກ້ອນເຈັດຂອງຂຸນບູລົມລາຊາທິລາດ) ລົງມາປົກຄອງເມືອງພວນ ເມື່ອຈຸນລະສັງກາດ 119, ຄ.ສ 575 ເປັນຕົ້ນມາ, ນີ້ສະແດງໃຫ້ພວກເຮົາຮູ້ວ່າ " ເມືອງພວນ " ຄົງມີມາກ່ອນສະໄໝຂຸນບູລົມອີກ, ຂຸນບູລົມຈຶ່ງຮູ້ຈັດສົ່ງລູກຂອງຕົນມາປົກຄອງຫົວເມືອງນີ້. ນັບຕັ້ງແຕ່ຂຸນເຈືອງມາປົກຄອງເມືອງພວນເປັນຕົ້ນມາ, ເມືອງພວນຄ່ອຍໆເຕີບໃຫຍ່ຂະຫຍາຍຕົວ ແລະຈະເລີນຮຸ່ງເຮືອງຂຶ້ນເປັນລຳດັບຈົນເຖິງ ຄ.ສ 1372, ເຊິ່ງແມ່ນສະໄໝປົກຄອງຂອງເຈົ້າລ້ານຄຳກອງ ເປັນສະໄໝທີ່ເມືອງພວນຈະເລີນຮຸ່ງເຮືອງກວ່າໝູ່ຈົນເຖິງຂັ້ນໄດ້ຍົກນາມມະຍົດຂອງເມືອງວ່າ "ມະຫາລັດຕະນະບູລີລົມພົມມະຈັກກະພັດສີມະຫານະຄະລາ ຕັກກະເສລາ ນະຄອນຊຽງຂວາງລາຊະທານີ ", ດັ່ງໄດ້ສະແດງອອກໃນສອງວັກຕົ້ນຂອງກາບວ່າ :

" ຍາມນັ້ນເມືອງພວນກວ້າງ ສີແສງເຮືອງຮຸ່ງ
ວັດວາອາຮາມເຈດີຍ໌ພຽນກໍ່ສ້າງ ເຮືອງເດຊລັງສີ ..."

ຈາກສະໄໝເຈົ້າລ້ານຄຳກອງເປັນຕົ້ນມາ, ເມືອງພວນກໍຍັງສືບຕໍ່ຈະເລີນຮຸ່ງເຮືອງຄືເກົ່າ, ເຖິງວ່າຈະມີສັດຕູພາຍນອກເຂົ້າມາແຊກແຊງເປັນໄລຍະໆ ຈົນຕົກມາສະໄໝອານາຈັກລ້ານຊ້າງຊຸດໂຊມ ແລະແຕກແຍກເປັນສາມອານາຈັກ, ຊ່ອງວ່າງນີ້ ໄດ້ເຮັດໃຫ້ສັດຕູພາຍນອກໂດຍສະເພາະພວກສັກດີນາສະຫຍາມ ແລະດ້າຍຫວຽດເຂົ້າມາແຊກແຊງ ແລະໃນປີ ຄ.ສ 1779 ອານາຈັກທັງສາມຂອງລາວ (ວຽງຈັນ, ຫລວງພະບາງ, ຈຳປາສັກ) ໄດ້ຕົກເປັນເມືອງສ່ວຍໃຫ້ແກ່ສະຫຍາມ. ສ່ວນດິນແດນເບື້ອງຕາເວັນອອກຂອງປະເທດລາວ ເຊິ່ງໃນນັ້ນມີທັງເຂດດິນແດນເມືອງພວນນຳ ໄດ້ກາຍເປັນເຂດຍາດແຍ່ງລະຫວ່າງສັກດີນາສະຫຍາມ ແລະດ້າຍຫວຽດ ຫລືເວົ້າອີກຢ່າງໜຶ່ງວ່າ ເມືອງພວນໄດ້ກາຍເປັນເຂດກັນຊົນລະຫວ່າງສັກດີນາສະຫຍາມ ແລະດ້າຍຫວຽດ; ສະພາບດັ່ງກ່າວນີ້, ໄດ້ເຮັດໃຫ້ເມືອງພວນຕົກເປັນສະໜໍລະພູມ ທີ່ບໍ່ມີຍາມຈະຈົບສິ້ນ; ປະຊາຊົນຕົກທຸກໄດ້ຍາກ, ບ້ານເມືອງ ແລະວັດວາອາຮາມທີ່ເຄີຍຮຸ່ງເຮືອງໃນເມື່ອກ່ອນກໍກຸດກິ່ນເພພັງ, ດັ່ງສະແດງອອກໃນກາບວ່າ:

" ... ເລີຍເລົ່າມີສັດຕູຫວານເຖິງ ເປ່ເພລອງແກ້ວ
ຂຸດກົ່ນມ້າງພະທາດແກ່ນໃຈເມືອງ ທັງອາຮາມຫຼວງ
ຄອງເມືອງຍຸບທະລາຍສູນເສົ້າ ... "

ຍ້ອນກຶກຍ່ຳຍີປີ້ປົ່ນ ຈາກທະຫານສັກດີນາດ້າຍຫວຽດຈົນອົດບໍ່ລົນທົນບໍ່ໄດ້, ເຈົ້າສາລີເຊິ່ງເປັນອ້າລາຊະການຜູ້ໃຫຍ່ຂອງເມືອງພວນໃນເວລານັ້ນ ໄດ້ປຶກສາກັບເສນາອາມາດ ເພື່ອຈະຂໍກຳລັງຈາກພາຍນອກເຂົ້າມາຂັບໄລ່ພວກທະຫານຂອງດ້າຍຫວຽດອອກຈາກດິນແດນເມືອງພວນ ແລະຄິດວ່າ ຫາກທະຫານດ້າຍຫວຽດອອກໄປແລ້ວ, ເມືອງພວນຄົງຈະມີຄວາມສະຫງົບສຸກ. ກຳລັງຂອງພາຍນອກເວລານັ້ນບໍ່ມີໃຜອື່ນອີກ, ນອກຈາກສະຫຍາມ, ເພາະອານາເຂດທາງວຽງຈັນ, ຫລວງພະບາງ ຫລືຈຳປາສັກ ກໍລ້ວນແຕ່ເປັນປະເທດສະລາດຂອງສະຫຍາມໝົດແລ້ວ. ສະນັ້ນ, ເຈົ້າສາລີ ຈຶ່ງໄດ້ເຮັດສານໄປຂໍກອງທັບຈາກສະຫຍາມ, ເຈົ້າຊີວິດສະຫຍາມ (ພະຈຸນລະຈອມເກົ້າ) ໄດ້ສັ່ງໃຫ້ພະລາຊະສຸລິນ ເຈົ້າຄອງເມືອງໜອງຄາຍອຸ້ນຂ້ຽວຫ້າງ ຫາເກັບເກນກອງທັບ, ສາດຕາອາວຸດ, ເຂົ້າປາອາຫານເພື່ອຍົກທັບໄປ " ຊ່ວຍ " ເມືອງພວນ, ດັ່ງສະແດງ ອອກໃນກາບວ່າ:

" ... ດາດີທຸກໝູ່ ຢ່າລ້າງຢ່າຄາ
ຫ້າງດາການທັບ ນັບໄດ້ພັນປາຍ
ຂຸນນາຍທັງປວງ ປາກຊວຍຫ້ອຍຫູວງ ຊະງັ້ໜອງເກີນ
ບ້ານພອກເມືອງເພັງ ອາລຶມພານດ່ານ
ເຂົ້າສານໜອງເຂັງ ປາກເປັ່ງປາກເປ່
ບ້ານຕ້າຍທັນທອງ ແຄມຂອງປັດຂອດ ..."

ການຫ້າງຫາເກັບເກນກອງທັບຂອງຝ່າຍໜອງຄາຍຄັ້ງນີ້ ແມ່ນດຳເນີນໄປຢ່າງວ່ອງໄວ, ເຄັ່ງຄັດແລະເດັດຂາດ, ເກັບກວາດເອົາຊາຍໜຸ່ມ, ຊາຍແກ່ບໍ່ລະບໍ່ເວັ້ນ ນອກຈາກຜູ້ເຖົ້າ ແລະຜູ້ເສຍອົງຄະ, ຄອບຄົວໃດບໍ່ມີຜູ້ໄປໄດ້ ກໍເກັບເກນເອົາເຂົ້າປາອາຫານ ເພື່ອເປັນສະບຽງລ້ຽງກອງທັບ, ດັ່ງໄດ້ສະແດງອອກໃນກາບວ່າ :

" ... ໄປໂກດກ້າ ເກນເອົາມາໂຮມພ່ຳພ້ອມ
ບ້ານຫ້ອມບໍໂອ ພັກໂຄເມືອງໝີ່
ອົງຂີ່ຊັງຊຽນ ສະລູມມາຮອດ
ເຂາະຂອດຄົນຊາຍ ກໍາໝົດກົດໝາຍ
ໜອງທັນໜອງຄາຍ ພົນປາຍບໍ່ນ້ອຍ..."

2 ບົດທີສອງ: " ເຈົ້າໜອງຄາຍເກນກຳລັງທັບ ແລ້ວກໍຍົກຂຶ້ນໄປຊຽງຂວາງຕາມເສັ້ນທາງບ້ານສ້ອນ ເມືອງເລີກ ".

ເນື້ອໃນຂອງບົດນີ້ ໄດ້ເວົ້າເຖິງບັນຍາກາດແຫ່ງການເຄື່ອນທັບຈາກໜອງຄາຍຂຶ້ນເມືອຊຽງຂວາງ. ຂະບວນທັບນີ້ ເປັນຂະບວນໃຫຍ່, ມີຈຳນວນພົນຫລາຍ, ປະກອບດ້ວຍສາດຕາອາວຸດຄົບມື, ໃຊ້ມ້າ, ໃຊ້ລວາເປັນພາຫະນະຈຳນວນໜຶ່ງ, ດັ່ງສະແດງໃນກາບວ່າ:

" ... ໄພ່ຟ້າເນືອງນອງ ຂ້າມຂອງຍີຍ້າບ ຫອກດາບທັງປືນ
ລູກຊືນມີມາກ ຍ້າຍຈາກແຄມຊີນ ແຫ່ເຈົ້ານຳຕີນ
ຂັ້າງຊ້າຍຂ້າງຂວາ ຂີ່ມ້າຂີ່ລວາ ກາຍເຂດກາຍນາ
ມັກຄາໄຕ່ເຕົ້າ ເດີນເຊົ້າທຸກວັນ ... "

ຄວາມຫວັງ ຄວາມຕັ້ງໃຈ ແລະກຳລັງໃຈຂອງທະຫານທີ່ພວນເຄື່ອນທັບຂຶ້ນໄປຕີຂັບໄລ່ພວກດ້າຍຫວຽດອອກຈາກເມືອງພວນ, ໃນຂະນະນີ້ ບໍ່ແມ່ນເພື່ອໄປຊ່ວຍຊາວພວນໃຫ້ຫລຸດພົ້ນອອກຈາກແອກຄອບຄອງຂອງດ້າຍຫວຽດດອກ. ແຕ່ຫາກແມ່ນການໄປເພື່ອຫວັງກອບໂກຍ " ໄປຂຸດເງິນ ຂຸດຄຳ " ຢູ່ເມືອງພວນຕ່າງຫາກ ດັ່ງສະແດງໃນກາບວ່າ:

" ... ຈາກັບທຸກເມື່ອ	ເຊື່ອໄດ້ສິ່ງຂອງ
ແມ່ງົວຕົວຄວາຍ	ຝູງຂ້ອຍຍິງຊາຍ
ເຂົ້າຂອງສົມບັດ	... "

ໃນບົດນີ້ ນອກຈາກຈາກ່າວເຖິງບັນຍາກາດແຫ່ງການເຄື່ອນທັບແລ້ວ, ໃນບົດຍັງໄດ້ບັນຍາຍເຖິງທັດສະນີຍະພາບບົນເສັ້ນທາງທີ່ຂະບວນທັບຜ່ານໄປ, ດັ່ງສະແດງອອກໃນກາບວ່າ:

" ...	ເຂົ້າປ່າຄີຣີ	ດອກຈີ່ຈູມຈໍ່
ຊ້ອງຊໍ່ບານເຮືອງ	ແດງເຫຼືອງຫຼາຍຊໍ່າ	ແຫຼ້ພ່ຳຫຼາຍຜືວ
ລິວລີດັ້ນປ່າ	ຂ້າມທີ່ກາຍແດນ	... "

3. ບົດທີສາມ: " ຮອດເຈົ້າວຽນແສນ ຄັນເຂົ້າເຝົ້າເຈົ້າວຽນແສນ ແລ້ວກໍກາຍເຂົ້າໄປຊຽງຂວາງ ໃນຄືນນັ້ນ ".

ເນື້ອໃນບົດນີ້ ໄດ້ຢືນຢັນເຖິງເນື້ອໃນປະຫວັດສາດທີ່ສຳຄັນອັນໜຶ່ງເຊິ່ງບໍ່ມີໃຜຈະກົກກຽງໄດ້ວ່າ ກາບນີ້ໄດ້ແຕ່ງຂຶ້ນໃນສະໄໝໃດ ? ເພາະວ່າເນື້ອໃນຕອນຕົ້ນຂອງກາບບົດນີ້ ໄດ້ບັນທຶກວັນ, ເດືອນ, ປີ ທີ່ແມ່ທັບໄທນຳໂດຍພະລາຊະສຸລິນນຳກອງທັບໄປຕີຂັບໄລ່ທະຫານຂອງດ້າຍຫວຽດອອກຈາກຊຽງຂວາງ, ເມື່ອຕີຂັບໄລ່ທະຫານດ້າຍຫວຽດທີ່ຍັງເຫລືອພຽງໜ້ອຍດຽວ[16] ອອກໄປແລ້ວ ພວກເຂົາກໍປະຕິບັດເຈດຕະນາລົມອັນມືດມົນຂອງພວກເຂົາ ຄື ເຮັດໃຫ້ເມືອງພວນເຊິ່ງເປັນເຂດຍາດແຍ່ງລະຫວ່າງສະຫຍາມ ແລະດ້າຍຫວຽດເປັນເຂດຂາວ, ດ້ວຍວິທີກວາດຕ້ອນເອົາບ່າວໄພ່ລາສະດອນຊາວພວນລົງໄປສະຫຍາມໃຫ້ໝົດ. ດັ່ງສະແດງອອກໃນກາບບາງວັກວ່າ:

" ເຊີນສີເສວີຍໂພຊບ໌	ພູະໂສດຈິນດາ	ເສີກຣາຊາລ່ວງມາບໍ່ນ້ອຍ
ສັງກາດ ໑໑໙໖	ຕົກເດືອນຍີ່	ເຖິງທີ່ພາຍແຮມ... "

ຈາກເນື້ອໃນຂອງກາບຕອນນີ້ ໄດ້ສະແດງໃຫ້ພວກເຮົາຮູ້ວ່າ ເມື່ອຂະບວນທັບຂອງພະລາຊະສຸລິນໄປເຖິງຊຽງຂວາງໃນເດືອນຍີ່ ແຮມ ຈ.ສ 1196, (ລະຫວ່າງຕົ້ນເດືອນກຸມພາ, ຄ.ສ 1834) ໄດ້ຮັບການຕ້ອນຮັບຈາກເຈົ້າເມືອງແສນ " ເຊີນສີສະເຫວີຍໂພຊຍ໌... " ຫລັງຈາກນັ້ນ, ກໍກະກຽມທັບເຂົ້າສູ່ສະໜາມໃນເຊົ້າມືດຂອງມື້ຕໍ່ມາທັນທີ, ດັ່ງສະແດງອອກໃນກາບວ່າ :

" ...	...	ເຖິງຍາມໃກ້ຮຸ່ງ
ເຈົ້າມຸ່ງເມີນພລັບ	ໄກ່ຂັນສາມທີ	ແຕ່ງດີທຸກຄ້າຍ
ປີກຊ້າຍປີກຂວາ	ໂຍທາໄຫຼອອກ	ຫ້ອກງ້າວທັງປືນ

16 ພົງສາວະດານເມືອງພວນໄດ້ຢືນຢັນວ່າ ກ່ອນກອງທັບໄທ ນຳໂດຍພະລາຊະສຸລິນ ແລະກອງທັບຝ່າຍລາວ ຫລວງພະບາງ ນຳໂດຍ ເຈົ້າອຸປະຣາດ ອະໄພ ຈະໄປເຖິງຊຽງຂວາງສອງວັນ, ເຈົ້າສານໄດ້ເອົາທະຫານພວນໄປໂຈມຕີຂ້າທະຫານແກວໃນກາງ ຄືນເກືອບໝົດ, ຍັງເຫລືອແຕ່ຜູ້ໜຶ່ງ ສອງຄົນໂຕນໜີໄປເມືອງແກວ.

ລູກແມ້ງຕຳໂດນ ເຂົ້າໂຕນອອກຕ້າຍ ຄົນຮ້າຍໄລ່ຟັນ
ໄທອັນໄລ່ຕ້ອນ ເລືອດຂ້ອນໄຫຼນອງ ກອງຕາຍໄມ້ຕົ້ນ ... "

ຜ່ານການຕອນນີ້, ພວກເຮົາອາດສຳນຶກເຫັນພາບແຫ່ງການລົບເລວກັນໃນສະໄໝນັ້ນ ເຊິ່ງຕົ້ນຕໍແມ່ນສູ້ກັນແບບຕົວຕໍ່ຕົວດ້ວຍຫອກດາບ, ສ່ວນປືນກໍຄົງບໍ່ຄືສະໄໝນີ້, ອາດແມ່ນປືນທີ່ຍິງໄດ້ເທື່ອລະນັດ, ຍິງແລ້ວ ຕ້ອງໃຊ້ເວລາເພື່ອຍັດລູກໃສ່ໃໝ່, ໃນໄລຍະຍັດລູກປືນນີ້ກໍເປັນໂອກາດໃຫ້ຝ່າຍກົງກັນຂ້າມທີ່ໃຊ້ດາບໃຊ້ງ້າວເຂົ້າມາປະຊິດສຽບແທງ. ການລົບເລວເທື່ອນີ້ ດຳເນີນໄປຢ່າງວອງໄວ, ທັນໄທໄດ້ຮັບໄຊຊະນະ, ເມື່ອຂັບໄລ່ທະຫານດ້າຍຫວຽດອອກໄປແລ້ວ, ນະໂຍບາຍອັນມືດມົນຂອງສະຫຍາມບາດກ້າວທີສອງກໍເລີ່ມດຳເນີນ ໂດຍໄດ້ປຶກສາຫາລືກັນວາງແຜນການກວາດຕ້ອນປະຊາຊົນຊາວພວນ, ອັນເຮັດໃຫ້ຝ່າຍຜູ້ປົກຄອງເມືອງພວນ ປາກບໍ່ໄດ້ ໄອບໍ່ດັງ, ກືນບໍ່ລົງ ຄາຍບໍ່ອອກ, ດັ່ງສະແດງອອກໃນກາບວ່າ:

" ... ແຕ່ນັ້ນເສນາເຈົ້າ ທັງປວງຂູນຫລວງຜູ້ໃຫຍ່ ຝ່າຍກ້ຳໝອງຄາຍ
ປຶກສາພົນໄພ່ ຈັກໄລ່ຄົວລົງ ຈຶ່ງປົງຄວາມຍາກ "

4. ບົດທີສີ່: " ຊື່ບ້ານໃນວ້ຽນກວາງ, ວ້ຽນແສນ, ວ້ຽນສູຍ ແລະວ້ຽນຄຳທີ່ໄທກວາດຄົວໄປ "

ຈາກຫົວຂໍ້ຂອງບົດ ກໍເປັນການກະຈ່າງແຈ້ງແລ້ວວ່າ ບົດນີ້ໄດ້ເລົ່າເຖິງຊື່ບ້ານຕ່າງໆໃນເມືອງຊຽງຂວາງ, ເມືອງແສນ, ເມືອງສູຍ ແລະເມືອງຄຳທີ່ໄທກວາດຄົວພວນລົງໄປສະຫຍາມ. ແຕ່ຮູບການເກັບກວາດຄອບຄົວຊາວພວນຂອງຝ່າຍໄທໃນຄັ້ງນີ້ ມັນບໍ່ແມ່ນດ້ວຍຄວາມສະໝັກໃຈ, ແຕ່ແມ່ນການບັງຄັບບີບບັ້ສີ ໄຟ, ບໍ່ໄປບໍ່ໄດ້, ດັ່ງສະແດງອອກໃນກາບວ່າ:

" ... ບວມພັນລັງວຽງ ບ້ານພ້ຽງສີລຸນ ຂູນນາງປັດກວາດ
ວ້ຽນທາດຊຽງຄຳ ຈຳນຳເອົາຕົວ ງົວຄວາຍໃສ່ຕ່າງ
ບ້ານກາງບ້ານດ່າວ ຄົນລາວແປກປົນ ເອົາຄົນໄປໄລ່... "

ການກວາດຕ້ອນຄັ້ງນີ້[17] ຕາມແຜນການຂອງສະຫຍາມແມ່ນບໍ່ໃຫ້ຄົນລາວຊາວພວນຫຍັງເຫລືອໄວ້ ຊຽງຂວາງພຽງແຕ່ຄອບຄົວດຽວ, ບໍ່ວ່າບ້ານນ້ອຍ, ບ້ານໃຫຍ່ກໍສັ່ງໃຫ້ທະຫານໄປເກັບກວາດເອົາໝົດ, ເພື່ອຈຸດປະສົງຂອງສັກດິນາສະຫຍາມທີ່ວ່າ " ເຮັດໃຫ້ເມືອງພວນເປັນເຂດຂາວບໍ່ມີບ່າວໄພ່ລາສະດອນອາໄສຢູ່, ເມື່ອບໍ່ມີຄົນອາໄສຢູ່ແລ້ວ ພວກດ້າຍຫວຽດກໍຄົງບໍ່ມາຍຶດເອົາດິນແດນແຫ່ງນີ້ອີກ " ດັ່ງສະແດງອອກໃນກາບວ່າ:

" ...ໃຫ້ສູນເສຍເປົ່າ ບ້ານເຫົ້າເມືອງສາຍ ນ້ຳຈ້າງບ້ຳຣວາຍ
ເມືອງໜ້າເມືອງຕ້າ ເມືອງຄາວໄປລາວ ແກມຣາດ
ຈັກກວາດຄົວລົງ ດິນອົງຄ໌ຢ່າຢູ່ ເອົ້າສູ່ສິມພານ... "

ຄຳວ່າ " **ດິນອົງຄ໌ຢ່າຢູ່** " ໝາຍເຖິງເຂດດິນແດນທີ່ເມືອງພວນຂຶ້ນກັບຫວຽດນາມ ເພາະວ່າຄົນຫວຽດຜູ້ອາວຸໂສ, ມີຖານະຕຳແໜ່ງມັກຈະໃສ່ນາມມະຍົດ " ອົງ " (Ong) ຂຶ້ນໜ້າ ເຊັ່ນ ອົງກວານລ້າຍ (Ong quanlai) ທ່ານກວານລ່າມ, ອົງວ້ຽນ ຫລືອົງຮ້ຽນ (Ong Huyen) ທ່ານເຈົ້າເມືອງດັ່ງນີ້ເປັນຕົ້ນ.

---

[17] ການກວາດຕ້ອນຄົນລາວຄັ້ງນີ້ລົງໄປສະຫຍາມ ແມ່ນເປັນຄັ້ງທີສາມ.ຫາກໄລ່ມາແຕ່ສະໄໝກຸງທົນບູລີ ແຫ່ງພະເຈົ້າຕາກສິນ ຄ.ສ 1778.

ນີ້ແມ່ນຄວາມຕົວະຍົວະຫລອກລວງໃສ່ຮ້າຍປ້າຍສີຂອງສະຫຍາມທີ່ມີຕໍ່ດ້າຍຫວຽດ, ໂຄສະນາຊວນເຊື່ອໃຫ້ຊາວພວນຈົ່ງ " ເຂົ້າສູ່ສົມພານ " ໃຫ້ໄປເພິ່ງປາລະມີຂອງສະຫຍາມ.

ການກະທຳຂອງສະຫຍາມເທື່ອນີ້, ເຮັດໃຫ້ເມືອງພວນທີ່ເຄີຍຮຸ່ງເຮືອງໃນເມື່ອກ່ອນກັບເປັນບ້ານແຕກແຊກຂາດ, ເສົ້າໝອງ. ຊັບສົມບັດ ໄຮ່ນາຕົວຄວາຍທີ່ຊາວພວນໄດ້ສະສົມ, ກະພອມຮັກ ແລະຫວງແຫນມາແຕ່ສະໄໝປູ່ຍ່າຕາທວດ, ມາຮອດບັດນີ້ຈະຕ້ອງໄດ້ປະກົ້ມຫລືກັບກາຍເປັນ " ຂອງສະຫານ " (ຂອງໃຫ້ລ້າ, ຂອງທານ, ຂອງປະກົ້ມ) ໄປໂດຍປະລິຍາຍ. ບັນຍາກາດທີ່ແຈ່ມໃສ ເຊິ່ງກຶກກ້ອງໄປດ້ວຍສຽງຂັບພວນຕາມຂວ່ງໃນຍາມລາຕີການໄດ້ປ່ຽນແທນດ້ວຍສຽງຄວນຄາງ ຮ້ອງໄຫ້, ດັ່ງສະແດງອອກໃນກາບວ່າ:

" ...		ເຄືອງໃນມົງມີ
ສົມສີສອງທ້າງ	ເຂດອ້າງສູ້ຍເມືອງ	ຮຸ່ງເຮືອງເລີຍເສົ້າ
ເຂົ້ານ້ຳອາຫານ	ເປັນຂອງສະຫານ	ເອົາຕີເອົາຟ້າດ
ໂອກ້າດເມືອງມາງ	ຮ້ອງຄາງຫິວໄຫ້	ເສິກໄດ້ຄົວລົງ
ເອົາປົງຄຳຄ່າ	ເອົາຜ່າເອົາຄົວ	ເອົາຕົວເປັນຂ້າ
ກິຫຍ້າລັງໄຫມ..."	

ຄົນລາວຊາວພວນທີ່ໄທກວາດຕ້ອນໄປສະຫຍາມເທື່ອນີ້ ບໍ່ສະເພາະແຕ່ບ່າວໄພ່ລາສະດອນເທົ່ານັ້ນ, ນັບຕັ້ງແຕ່ເຈົ້າຄອງເມືອງພວນ ດັ່ງເຈົ້າສານ ຈົນຮອດເຈົ້າສາລີ, ເຈົ້າສະ ເສນາຜູ້ໃຫຍ່ໃນເມືອງພວນເວລານັ້ນ ກໍຖືກບັງຄັບກວາດຕ້ອນລົງໄປໄທເຊັ່ນດຽວ, ດັ່ງສະແດງອອກໃນກາບວ່າ :

" ...	ແຕ່ນັ້ນມີນາມ	ເຈົ້າສາຍົກຍ້າຍ
ທັງລ້າຍທັງຜອງ	ສອງອົງຄ໌ພູວະນາດ	ລັດກວາດຄົວລົງ. "

5. ບົດທີຫ້າ : " ເຈົ້າສາລີ ແມ່ນພີ່ອ້າຍ ເຈົ້າສະ ນ້ອງຊາຍກໍໄດ້ລົງພ້ອມກັບນາຍໄທ ".

ໃນບົດນີ້ ໄດ້ກ່າວເຖິງບັນຍາກາດການອົບພະຍົບຂອງຊາວພວນ ພ້ອມກັບເສນາຜູ້ໃຫຍ່ທັງຫລາຍຈາກຊຽງຂວາງລົງໄປໄທ. ຫາກພວກເຮົາສຳນຶກຄືນເບິ່ງພາບແຫ່ງການອົບພະຍົບຄົນເຖິງ 6.000 ຄົນ[18] ເຊິ່ງໃນຈຳນວນນີ້ ບໍ່ແມ່ນມີແຕ່ຊາຍສະກັນ, ແຕ່ຫາກເຕັມໄປດ້ວຍເຖົ້າແກ່, ແມ່ມານ, ຜູ້ເລັກເດັກແດງ, ພະສົງ, ສາມະເນນ ແລະອົບພະຍົບດ້ວຍຄວາມຈຳໃຈຈຳຈາກ, ບັງຄັບຈັບກຸມ, ສະພາບຈິດໃຈ ແລະບັນຍາກາດໃນການອົບພະຍົບຈະເປັນແນວໃດ ? ສະພາບ ແລະບັນຍາກາດດັ່ງກ່າວນີ້ ປະຊາຊົນລາວເຄີຍປະສົບໃນສະໄໝສົງຄາມຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາມາແລ້ວ. ເຖິງວ່າ ການອົບພະຍົບສະໄໝນີ້ ຍັງມີພາຫະນະທີ່ທັນສະໄໝຊ່ວຍຂົນສົ່ງບາງໄລຍະ; ແຕ່ປານນັ້ນ ຄວາມເຈັບປວດ, ຄວາມຄຽດແຄ້ນ, ຄວາມຫາຍະນະ, ຄວາມຊ້ຳຊອກທັງກາຍ ແລະໃຈຍັງຝັງເລິກຢູ່ໃນດວງໃຈຂອງປະຊາຊົນລາວຈົນມາເຖິງປັດຈຸບັນ. ແຕ່ສະໄໝນັ້ນ, ໃນສະໄໝທີ່ລາວຍັງເປັນປ່າຊ້າງດົງເສືອ, ທາງຄົມມະນາຄົມຍັງເປັນທາງຊ້າງ, ທາງເສືອ, ພາຫະນະຂົນສົ່ງຍັງປະກົມປະການ, ຄວາມລຳບາກຍາກແຄ້ນຄົງຈະໜັກໜ່ວງໄປກວ່າສະໄໝຕໍ່ສູ້ຈັກກະພັດອາລິກາມັບຮ້ອຍເທື່ອພັນທົບ, ດັ່ງສະແດງອອກໃນຕອນຕົ້ນຂອງກາບບົດນີ້ວ່າ:

" ຍະຍົງຍະຍ້າຍ	ກືຫານເຫຼືອແຮງ	ລູກແພງຍັງນ້ອຍ
ຄາດລ້ອຍຄາໄປ	ຕາມແຕ່ວິໄສ	ທາງໄກມ້າກມາຍ
ງົວຄວາຍທັງຄົນ	ລີພົນໄຫຼຫຼັ່ງ	ລັບລັ່ງເນືອງນອງ

[18] ເບິ່ງຄືນພາກ " ປະຫວັດສາດເມືອງພວນ ແລະຊາວພວນໂດຍສັງເຂບ ".

ອອກເມືອງຫຼຽວຜໍ່ ຕ້ານຕໍ່ຈາກັນ ມີ່ນັບເດັກນ້ອຍ
ຄັ່ງລ້ອຍເບີຫວງ..."

ຄວາມອາໄລອາວອນ ທີ່ຈຳໃຈຈຳຈາກບ້ານເກີດເມືອງນອນ ບ່ອນຝັງສາຍແຫ່ ບ່ອນແຜ່ສາຍບື " ອອກເມືອງຫລຽວຜໍ່ " " ຄັ່ງລ້ອຍເບີຫວງ ". ໃນບົດນີ້ ນອກຈາກບັນລະຍາຍເຖິງຄວາມກົນລະທົນທາງໃຈຂອງຊາວລາວພວນຢ່າງເຊັ່ນ ຄຶດຮອດບ້ານເກີດເມືອງນອນ, ຄວາມກັງວົນໃຈ ເມື່ອຄິດເຖິງວ່າຕໍ່ໜ້ານີ້ຈະປະເຊີນກັບຄວາມອຶດຫິວ, ຄວາມເຈັບເປັນລົ້ມຕາຍຕ່າງໆນາໆແລ້ວ, ຍັງກ່າວເຖິງຄວາມສັບລະມຸນບົນເສັ້ນທາງກວາດຕ້ອນລົງໄປ, ດັ່ງສະແດງອອກໃນກາບວ່າ:

" ... ຄຳຫຸກຂະມອດອ້ອນ ເຖິງພວກຊາວລິວ
ເຈົ້າຫິວໜ້າເບນ ເອົ້າເຜນບໍ່ທັນ ຈັ່ງທັນບໍ່ຮອດ
ຫິວຫອດຄາງແລ່ນ..."
" ... ພ່ອງໜີພ່ອງຍັງ ເຜພັງແຕກມ້າງ ຕົກອ້າງເມືອງແກວ
ໄປຊອດໄປແຜວ ລີ້ຢູ່ຜັກນອນ..."

ເມື່ອປະສົບກັບຄວາມກົນລະທົນ, ຄວາມລຳບາກກາກກຳດັ່ງກ່າວມາແລ້ວນັ້ນ, ຊາວລາວພວນທັງຫລາຍຈຶ່ງສະເດີດຕື່ນວ່າ ພວກຕົນຖືກໄທຕີວະຕົ້ມຫລອກກລວງວ່າ ຈະເອົາພວກຕົນໄປສ້າງສາຢູ່ນາແທ່ນ (ອິງເຂດດິນແດນຂອງແຂວງບໍລິຄຳໄຊໃນປັດຈຸບັນ) ດັ່ງສະແດງອອກໃນກາບວ່າ:

" ... ເຊື່ອໄທຄວາມຍວກ ເຍົ້າລິວລົງ
ປະສິງເມືອງກວ້າງ ມັກສ້າງນາແທ່ນ ບໍ່ຍາກບໍ່ແລນ "

6. ບົດທີທັກ : " ນາຍໄທຍົວະເຍົ້າເອົາລິວລົງໄປ ວ່າຈະເອົາໄປສ້າງນາແທ່ນ ຄັນມາຮອດແລ້ວ ເລີຍຕີລິວອ້າມຂອງ ".

ຜ່ານຫົວຂໍ້ບົດທີທັກນີ້ ກໍເປັນການກະຈ່າງແຈ້ງຢູ່ແລ້ວວ່າ ຜູ້ປະພັນກາບເອງກໍຮູ້ສຶກວ່າ ພວກໄທຕົວະຕົ້ມ; ເພາະວ່າເມື່ອໄປເຖິງເຂດທົ່ງນາແທ່ນ, ພັກເຊົາຢູ່ນັ້ນໄລຍະໜຶ່ງ, ລິວຊາວພວນພາກັນຕັ້ງຕູບ ຕັ້ງຜາມ, ເຮັດໄຮ່ເຮັດສວນພໍດີແລ້ວ, ພວກໄທກໍສັ່ງໃຫ້ຍົກຍ້າຍອ້າມຂອງໄປພັນລຳ (ເຂດບຶງການ, ແຂວງໜອງຄາຍໃນປັດຈຸບັນ). ພວກນາຍໄທຍົວະເຍົ້າວ່າ ຢູ່ເຂດນີ້ ບໍ່ອຸດົມສົມບູນເທົ່າກັບຝາກຂອງເບື້ອງນັ້ນ ແລະກໍອົບພະຍົບເອົາເຈົ້າອ້າມຂອງ, ດັ່ງສະແດງອອກໃນກາບບາງວັກຕໍ່ໄປນີ້ວ່າ:

" ຍົ້ວເຍົ້າເສຍຄາຍ ພອຍຈັດລິວກາຍ ຄົນຫຼາຍກ້າໂກດ
ເຖິງຂອງນ້ຳໃຫຍ່ ເຮັດໄຮ່ທຳສວນ ບໍລະບວນຈຳຍ້າຍ
ລັບລ້າຍຄາໄປ ນາຍໄທຊ້ຳບອກ ໜີອອກພັນລຳ ..."

ເມື່ອອ້າມໄປເຖິງດິນແດນໜອງຄາຍແລ້ວ, ຊາວລິວພວນຍິ່ງປະສົບເຄາະກຳອັນແສນໜັກໜ່ວງ, ຈະຕ້ອງເຮັດນາກ່ອນລະດູ, ຊາວລິວຫລາຍຄົນປະເຊີນກັບຄວາມລົ້ມຫາຍຕາຍໄປຍ້ອນອຶດຫິວ, ພະຍາດລະບາດ. ສະພາບຊາວພວນໃນໜອງຄາຍເວລານັ້ນ ມີຄວາມເດືອດຮ້ອນພິລຶກປານກັບຕົກພົ້ນນາຮົກ, ດັ່ງສະແດງອອກໃນກາບວ່າ:

" ຂອດຂ້ອນຄົນຕາຍ ໜອງຄາຍລ້ຳເລີດ ບັງເກີດກົນລະທົບ
ເສຍຄົນນໍລະນາດ ຝູງໄທຄົວ ເຂີນຂາດເຂົ້ານ້ຳ
ທຸກເຮັ່ງກ້ຳ ອຳເຂືອກເຫຼືອຫຼາຍ ..."

ຄວາມທໍລະມານດັ່ງກ່າວນີ້, ໄດ້ເຮັດໃຫ້ຊາວຄົວພວນເພີ່ມທະວີຄວາມເຈັບແຄ້ນແໜ້ນໃຈ, ຄິດຮອດບ້ານເກີດເມືອງນອນເປັນທະວີຄູນ. ດັ່ງນັ້ນ, ໃນບົດນີ້ຜູ້ປະພັນກາບຈຶ່ງໄດ້ນຳເອົາຄວາມປ່ຽນແປງຢູ່ບ້ານເກົ່າເມືອງຫລັງມາສອດແຊກເຂົ້າເພື່ອເຮັດໃຫ້ຜູ້ອ່ານ ຜູ້ຟັງເຫັນໄດ້ຄວາມທຸກທໍລະມານທັງກາຍ ແລະໃຈຂອງເຂົາເຈົ້າໃນເວລານັ້ນ. ຜູ້ປະພັນໄດ້ນຳເອົາສະພາບທີ່ຊາວພວນໂຕນກັບຄືນໄປຮອດບ້ານຮອດເມືອງແລ້ວ ເຫັນວ່າສະພາບທຸກຢ່າງໄດ້ປ່ຽນປີ້ນໄປ, ບ້ານເມືອງເສົ້າໝອງຮົກເຮື້ອ, ໄຮ່ນາຕົວຄວາຍ, ເຮືອນຊານບ້ານຊ່ອງ, ເຂົ້າຂອງສົມບັດ ລ້ວນແຕ່ຖືກຄົນມາຍຶດຈອງເອົາໄປໝົດ. ສະນັ້ນ, ເຂົາເຈົ້າຈຶ່ງພາກັນຄ່ຳຄວນອອກມາວ່າ:

" ມາຍິນທຸກໝໍ ! ໄດ້ອໍເຊົາເຮືອນ ມາຍິນເອືອນ
ໄດ້ອໍເຊົາບ້ານ ມາຂີ້ຄ້ານ ອໍເຂົ້າເງຍໂຕ ໜ່າຍເດ ..."

ພວກຊາວຄົວພາກັນຄ່ຳຄວນ ສຳນຶກເຫັນພາບໄທທໍ້, ໄທເໜືອ, ໄທຂ້າ ເຊິ່ງໃນເມື່ອກ່ອນພວກເຂົາເຫລົ່ານີ້ ເປັນພຽງແຕ່ຊາວຄ້າຂາຍ ເລ່ລ່ອນ, ນຳເອົາເຄື່ອງປ່າຂອງດົງມາແລກເຂົ້າ ແລກນ້ຳກິນໄປວັນໆ, ແຕ່ມາບາດນີ້, ພວກເຂົາເຫລົ່ານີ້ ໄດ້ມາຍຶດຈອງເອົາເຮືອນຊານບ້ານຊ່ອງ, ໄຮ່ນາປາຕົມ, ງົວຄວາຍປາຍເຂົາຂອງພວກຕົນໝົດແລ້ວ, ດັ່ງນັ້ນ ຈຶ່ງອຸທານອອກມາວ່າ:

" ໂລກປີ້ນແປ້ ດູຫຼາກຫຼາຍອັນ ເປັນດາວຄວັນ
ແຜ່ນດິນໄຫວຫວັ່ນ ພູລັ່ນກ້ອງ ສຽງສະໜັ່ນທັງເມືອງ..."
"... ດາວເຮື່ອແຈ້ງ ເຫັນແດດກາງຄືນ ເຂົ້າຢູ່ຄົກ
ມາເຕັ້ນຂຶ້ນສູງ ເຂົ້າຢູ່ບຸງ ບິນໄປຊີ່ຊວ່າ
ສັດຢູ່ປ່າ ມາບ້ານບໍ່ໜີ ເມື່ອລາຕີ
ເຫັນຮຸງກິນນ້ຳ ເຜີ້ງຢູ່ກ້ຳ ຈັບກິ່ງສາຂາ ..."

ເວົ້າລວມແລ້ວ ເນື້ອໃນຂອງບົດທີຫົກນີ້ ແມ່ນເວົ້າເຖິງຄວາມກົນແໜງແຄງໃຈຂອງຊາວຄົວພວນທີ່ຖືກພວກໄທຕົວະຕົ້ມໃຫ້ໄປເພິ່ງ " ສົມພານ ", ແຕ່ເມື່ອມາເຫັນ " ສົມພານ "ຂອງພວກເຂົາແລ້ວມັນໂລດແມ່ນໝໍ້ນາຮົກ. ທຸກສິ່ງທຸກຢ່າງມັນໄດ້ປ່ຽນປີ້ນໄປ, ນັບທັງສະພາບຢູ່ທາງບ້ານເກີດເມືອງນອນຂອງຕົນກໍປ່ຽນປີ້ນໄປເໝືອນກັນ. ສະນັ້ນ, ຜູ້ປະພັນກາບຈຶ່ງໄດ້ນຳເອົາສຳນວນຄຳສອນທີ່ມີລັກສະນະປິດສະໜາເຂົ້າມາປຽບທຽບ ຢ່າງເຊັ່ນ " ເຜີ້ງຢູ່ຜາ ແປງຮັງງ່າໄມ້; ຍິງສິບປີເອົາກັນ ເວົ້າຊູ້, ໄຟລຸກລາມບັງເກີດພົ້ນນ້ຳ ແລະອື່ນໆ "; ສຳນວນກາບເຫລົ່ານີ້, ລ້ວນແຕ່ສະແດງເຖິງມະໂນພາບ ແຫ່ງຄວາມແປປ່ຽນຂອງສະການະການໃນສະໄໝນັ້ນ.

7. ບົດທີເຈັດ : " ຊາວຄົວທັງຫລາຍໄປຮອດໜອງລາຍໄດ້ເຫັນໄທປັ້ນກັນເຮັດຂ້ອຍ, ພວກເຈົ້າ ນາຍເອົາຜູ້ສອງສາມຄົວ, ຄັນເຫັນເປັນການດັ່ງນັ້ນ ກໍພາກັນຄິດກະບົດໂຕນໜີ ລັດປ່າ ລັດດົງຄືນເມືອຫາບ້ານຫາເມືອງ ".

ຫົວຂໍ້ຂອງບົດທີເຈັດນີ້ ໄດ້ເປັນຂໍ້ສະຫລຸບເຖິງເນື້ອໃນສ່ອງແສງຂອງທັງໝົດບົດທີເຈັດແລ້ວ. ແຕ່ ເມື່ອອ່ານເນື້ອໃນຂອງກາບບົດນີ້ໂດຍລະອຽດແລ້ວ, ພວກເຮົາຍັງສັງເກດເຫັນຂໍ້ປີກຍ່ອຍທີ່ເປັນໜ້າສົນໃຈ ອີກຫລາຍຢ່າງ, ໂດຍສະເພາະ ແມ່ນສຳນວນກາບທີ່ກ່າວເຖິງພາບແຫ່ງການດຳລົງຊີວິດຂອງຊາວຄົວ ພວນ ບົນດິນແດນໜອງລາຍແມ່ນສຸດແສນລຳບາກກາກກຳ, ດັ່ງສະແດງອອກໃນກາບວ່າ:

" ... ... ສ່ວນດັ່ງໄທຄົວ
ມົວເມົາອຶດຢາກ ເປັນພາລເປັນໄພ ຕາມແຕ່ວິໄສ
ຊອກເຂົ້າຫາປາ ຜະລາຜະລັງ ທຸຂອັງເຂາະຂອດ
ຄຶດຮອດຄຳຕາຍ ດັບວາຍສິ່ງຂອງ ... "

ຄວາມອຶດຫິວພາໃຫ້ຊາວຄົວພວນເກີດເປັນພາກເປັນໄພ, ເຈັບໄຂ້ໄດ້ປ່ວຍ, ພວກເຂົາກັບກາຍເປັນ ຄົນສິ້ນເນື້ອປະດາຕົວ, ບໍ່ມີເງິນມີຄຳເພື່ອຈະຊື້ເຂົ້າກິນ, ຈຳເປັນໄດ້ເຂົ້າປ່າເກັບຜັກຫັກໜໍ່, ຂຸດຫົວມັນຫົວ ກອຍ ກິນສືບມື້ສືບວັນໄປ. ກ້າອອກໄປຊອກເກັບຜັກຫັກໜໍ່, ເຂົ້າປ່າເຂົ້າພູຫລາຍ ເຈົ້ານາຍໄທພັດວ່າຢາກ ໂຕນໜີ ພວກເຂົາກໍບອກໃຫ້ໄພ່ມືຂອງພວກເຂົາໄປໄລ່ຕ້ອນມາຢູ່ໂຮມກັນ ແລະມີນາຍຄຸມຢູ່ເໝືອນຄົນໂທດ. ສະພາບ ຄວາມວຸ່ນວາຍຢູ່ໃນໝູ່ບ້ານອົບພະຍົບນັບມື້ນັບຮ້າຍແຮງລົງທຸກມື້ ແລະພວກໄທກໍປະກາດວ່າຈະ ກວາດຄົວລົງເລິກເຂົ້າໄປໃນດິນສະຫຍາມອີກ, ດັ່ງສະແດງອອກໃນກາບວ່າ:

" ... ຢູ່ລ້ຳກິນ ແຜ່ນດິນໜອງລາຍ
ກາຍເກີດເປັນທຸຂ ເກີດລິຍຸກມ້າກຫຼາຍ ຄົນຕາຍທຸກມື້
ຊື້ເຂົ້າຊ້ຳແພງ ນາແຊງໄປ່ແກ່ ກິນແຕ່ໜໍ່ໄມ້
ນາຍໄທທຣວທ່ອງ ເວົ້າປ່ອງຄວາມມາ ທຸລະທຸໄລ
ຈັດກວາດເຂົ້າໄປ ..."

ເມື່ອສະຖານະການເປັນເຊັ່ນນີ້, ພວກເຈົ້ານາຍຝ່າຍລາວຈຳນວນໜຶ່ງລັກປຶກສາຫາລືກັນເພື່ອຈະຊັກ ຊວນຊາວຄົວພວນໂຕນໜີກັບຄືນບ້ານເກີດເມືອງນອນ. ແຜນການນີ້ ໄດ້ຮັບຄວາມສະໜັບສະໜູນຈາກ ຊາວຄົວພວນຈຳນວນຫລວງຫລາຍ ແລະໄດ້ຮັບການປະຕິບັດໃນທ່ຽງຄືນຂອງວັນໜຶ່ງ:

" ໜ້າທີ່ແອບດີ ໂຕນໜີແອບເປືອງ ເຖິງເມືອງຈິ່ງເຊົາ
ຮີບເດົາດາກ້າ ດູໜ້າຍິງຊາຍ ຊັພສິນອານັດ
ລະຫັດອຳດີ ຣາຕີທ່ຽງຄ້າຍ ຮີບຍ້າຍລົງເຮືອ "

ຕໍ່ມາບໍ່ດົນ ເຈົ້ານາຍໄທໄດ້ຮູ້ວ່າ ຊາວຄົວພວນໄດ້ລັກໂຕນໜີກັບຄືນ, ພວກເຂົາກໍຂ້ຽວແຕ່ງກັນໄລ່ ຕາມ ເພື່ອຫວັງຈະກວາດຄົວຄືນ; ສ່ວນຊາວຄົວທີ່ໂຕນໜີໄປນັ້ນ ພໍແຕ່ຂ້າມຫວິດແມ່ນ້ຳຂອງກໍພາກັນແຕກ ສະລຸພຸຜ່າຍເຂົ້າປ່າ ເພື່ອເອົາຕົວລອດ, ຢ້ານພວກໄທນຳທັນ ເມື່ອເຫັນວ່າເຖິງທີ່ປອດໄພແລ້ວ, ສ່ວນຫລວງ ຫລາຍກໍເຕົ້າໂຮມກັນຄືນເປັນຂະບວນໄດ້, ແຕ່ກໍມີຈຳນວນໜຶ່ງຫລົງປ່າຫລົງດົງ, ເຂົ້າໄຫ່ເຂົ້າກົງທີ່ຕຽມມາ ກໍໝົດຈະຕ້ອງຊອກຜົນລະໄມ້ກິນແທນ, ບາງຄົນຫາບໍ່ໄດ້ກໍລົ້ມຫາຍຕາຍໄປ, ດັ່ງສະແດງອອກໃນກາບບາງ ຕອນວ່າ:

" ...   ...   ໜອງລາຍກ້ອງຕື່ນ
ເອົາຄືນເມືອງນອງ   ແຕ່ງກັນເຮວຮີບ   ເຂົ້າກີບນຳຄົວ
ຜົວເມຍພັດພ້າກ   ໜີຈາກຄົນທາງ   ລາງຄົນເຂົ້າໄດ້
ຮ້ອງໄຫ້ໃນດົງ   ລາງຄົນຫຼົງ   ໃນດົງປ່າໄມ້..."
" ...   ...   ຜູ້ມັກເວັ້ນ
ຫຼົງຢູ່ໃນດົງ   ໝົດເຂົ້າກົງ   ຫາກິນລູກໄມ້
ຫາບໍ່ໄດ້   ຕາຍຕຸ່ມທັງຄົວ ".

8. ບົດທີແປດ : " ເສຍຄົນຫລາຍໃນເວລາເຂົາເຈົ້າເບື່ອໝາກໜ້ອງຕາຍໄປເປັນສອງສ່ວນສາມ "

ໃນຕອນຕົ້ນຂອງກາບບົດນີ້ ຍັງບັນລະຍາຍຄືນເຖິງຄວາມສັບສົນລະມຸນໃນການໂຕນໜີເອົາຕົວລອດຈາກພວກໄທ :

" ບາງພ່ອງນັ້ນ   ເສຍຜົວທັງລູກ   ລາງພ່ອງນັ້ນ
ເສຍດູກທັງຂອງ   ລາງຄົນນັ້ນ   ຢອງໄປເຈຍລະຈ້າກ..."
" ... ຜັດກັນຫຼົງ   ໃນດົງພໍໝູ່   ລາງພ່ອງນັ້ນ
ຄ້າງຢູ່ໃນໄພ   ຕາມວິໄສ   ໄຕ່ຮອຍນຳຊ້າງ..."

ພາຍຫລັງໂຕນໜີມາຮອດຂັ້ນນີ້ແລ້ວ, ຊາວຄົວພວນພັ້ນໃຈວ່າ ພວກໄທບໍ່ສາມາດຈະນຳພວກຕົນທັນແລ້ວ; ແຕ່ມັດຈຸລາດທີ່ຄອງຄອຍເອົາຊີວິດຂອງພວກເຂົາໃນຄາວນີ້ ບໍ່ແມ່ນພວກນາຍໄທອີກ, ແຕ່ຫາກເປັນມັດຈຸລາດແຫ່ງຄວາມອຶດຫິວທີ່ຄອຍປົດຊີວິດຂອງພວກຊາວຄົວພວນ. ເຂົ້ານ້ຳຊ້າມປາທີ່ເຂົາເຈົ້າກະກຽມມາບໍ່ສາມາດຈະພຽງພໍກັບການເດີນປ່າຜ່າດົງ ເພື່ອກັບຄືນບ້ານເກີດເມືອງນອນໄດ້, ເວລານີ້ເຂົາເຈົ້າຕ້ອງໄດ້ອາໄສໝາກໄມ້, ຫົວມັນ, ຫົວກອຍ ເພື່ອກິນບັນເທົາໄປວັນໆ. ໃນຈຳນວນໝາກໄມ້ທີ່ພວກເຂົາເຈົ້າເກັບມາກິນນັ້ນຮວມມີທັງໝາກໜ້ອງ, ຍ້ອນຄວາມອຶດຫິວພາກັນຍາດກັນກິນ, ຂໍຊື້ບໍ່ຂາຍ ຂໍດາຍບໍ່ໃຫ້, ຜູ້ໃດຍາດໄດ້ຍາດກິນ; ກົກໜ້ອງແມ່ນຕົ້ນໄມ້ຊະນິດໜຶ່ງເຊິ່ງພວກນາຍພານໃນສະໄໝກ່ອນເຄີຍເອົາມາຕົ້ມກັ່ນເອົາຢາງຂອງມັນສຳລັບທາໃສ່ປາຍລູກໜ້າ, ລູກທະນູ ແລ້ວເອົາໄປຄວ່າເບື້ອຍິງສັດ, ຫາກສັດຕົວໃດກືກຍິງດ້ວຍລູກທະນູຈຸ່ມໜ້ອງແລ້ວ ແລ່ນໄດ້ພຽງແຕ່ສາມກ້າວກໍຈົບຊີວິດລົງ. ສຳລັບໝາກໜ້ອງແນ່ນອນວ່າລິດເບື່ອຂອງມັນກໍຄົງບໍ່ຕ່າງຢາງຂອງມັນເທົ່າໃດ, ດັ່ງສະແດງອອກໃນກາບວ່າ:

" ...ໄສ້ຢູ່ທ້ອງ   ກາຍເກີດເປັນໂຜຍ   ເປັນໂຮງໂຮຍ
ຄືລີງເມົາໜ້ອງ   ໄສ້ຢູ່ທ້ອງ   ບັງເກີດໂງເງ
ເປັນຮວ່ານເຮ   ເໝືອນໄກ່ບ້າຄ້ອນ   ພິສພູງຮ້ອນ
ຈຸຕິຕາຍໄປ   ຜູ້ກິນນ້ອຍ   ຍັງອາວນານຕາຍ
ຜູ້ກິນຫຼາຍ   ໄປມໍຣະນາດ   ເພຍຊາມາຕຍ໌
ທັງໝູ່ຕາຍກອງ..."

ມັດຈຸລາດແຫ່ງຄວາມອຶດຫິວໄດ້ມາເກັບກວາດເອົາຊາວຄົວພວນໄປເຖິງສອງສ່ວນສາມ, ບາງຄົວກໍຕາຍຈົນໝົດ, ບາງຄົວກໍຍັງເຫລືອລູກ, ຜົວ ຫລື ເມຍ; ຊາກສົບຄົນຕາຍຢັງຢາຍເດຍລະດາດໄປທົ່ວທີບ, ບໍ່ມີໃຜເບິ່ງໃຜ, ບໍ່ມີໃຜມ້ຽນໃຜ, ດັ່ງສະແດງອອກໃນກາບວ່າ:

" ...   ຜົວເພີ່ນຍັງ   ຜົວໂຕຕາຍຈ້າກ
ໜ້າຍ ແລະຮ້າງ   ມັນຫາກເລີ່ງມີ   ຕາຍເປັນຜີ
ຢູ່ດົງດອນໄມ້   ຕາຍຄ້າງໄຄ້   ເປັນເຫຍື່ອປາຝາ
ຕາຍຢູ່ໃນພູໃນຜາ   ບໍ່ມີຄົນມ້ຽນ..."

" ... ເບິ່ງພູ້ນພີ້   ເຫັນຢູ່ເອືອເລືອ   ກົກໄມ້ໃຫຍ່
ແຮງຊ້ຳມີຫຼາຍ   ກົກໄມ້ຕາຍ   ດູຫຼາຍຂອນໄຂວ່
ເບື່ອລູກໄມ້   ໝາກໜ້ອງຜີເວນ   ..."

ໂສກນາດຕະກຳອັນນີ້, ໄດ້ທຳໃຫ້ຊາວຄົວພວນສຳນຶກເຫັນຄຳສັ່ງສອນທີ່ຊາວບູຮານ ເຄີຍກ່າວໄວ້ວ່າ " ພ່າຍສ້ອນແລ້ວ ໜີມາຈອບໄຊ ພ່າຍໝາໄນ ມາຈອບໝາບ້ານ... ". ແຕ່ຢ່າງໃດກໍດີ ຜູ້ເຫລືອຕາຍຈາກການເບື່ອໝາກໜ້ອງ ກໍບໍ່ຍອມທໍ້ແທ້, ຍັງສືບຕໍ່ມຸ່ງໜ້າຕໍ່ໄປສູ່ເມືອງພວນອັນເປັນບ່ອນຝັງສາຍແຫ່ບ່ອນແຜ່ສາຍບືຂອງພວກເຂົາມາແຕ່ເດີມດາເຄົ້າ, ໂດຍແມ່ນເຈົ້າສາລີ ອ້າຍຂອງເຈົ້າສະ, ເສນາຜູ້ໃຫຍ່ໃນເມືອງພວນເປັນແກນນຳ, ດັ່ງສະແດງອອກໃນກາບວ່າ :

" ...   .   ໂອນໍ ! ຝູງບໍ່ຕາຍ
ເລີຍໜີເສຍຈາກ   ພາກທີ່ນັ້ນ   ໄປປ່ອງທາງຄົນ
ເຈົ້າສາລີ   ຕີຄົວໜູນໝູ່ "

ໃນຕອນທ້າຍຂອງບົດນີ້, ຕັ້ງແຕ່ວັກທີ 50, ຕອນທີ 3 ເປັນຕົ້ນໄປ ອາດຈະເປັນວັກຕົ້ນຂອງບົດທີເກົ້າແລ້ວ, ເພາະໄດ້ກ່າວເຖິງຊາວຄົວພວນຈຳນວນທີ່ຍັງຄ້າງຢູ່ໜອງຄາຍ ໃນນັ້ນນັບທັງເຈົ້າສະ, ນ້ອງຊາຍຂອງເຈົ້າສາລີທີ່ນຳພາຊາວຄົວພວນໂຕນກັບຄືນ ບ້ານເກີດເມືອງນອນເປັນຂະບວນທຳອິດ (ເດືອນແປດ), ດັ່ງສະແດງອອກໃນກາບວ່າ:

" ...   ...   ເຈົ້າສະນ້ອງ
ຍັງຢູ່ໜອງຄາຍ   ຝູງຄົວລາວ   ກວາດກາຍໄປໜ້າ
ເດືອນ ໕ ຄ້ອຍ   ແຮມຄ້າງເພື່ອນດາວ..."

ຈາກບ່ອນນີ້ ສະແດງໃຫ້ພວກເຮົາເຫັນວ່າ " ຜົນຮ້າຍ "ຂອງການໂຕນໜີກັບຄືນບ້ານເກີດເມືອງນອນຂອງຊາວຄົວພວນໃນຊຸດກ່ອນນັ້ນ ໄດ້ເຮັດໃຫ້ພວກເຈົ້ານາຍໄທກໍຄື " ພະຍາລາວ " ທີ່ຂາຍຊາດຈຳນວນໜຶ່ງ ເລີ່ມດຳເນີນການກວາດຄົວພວນທີ່ຍັງຢູ່ສູນອົບພະຍົບລົງເລິກເຂົ້າໄປດິນແດນສະຫຍາມ. ພ້ອມດຽວກັນນັ້ນ ກໍດຳເນີນມາດຕະການກິນນ້ຳສາບານກັນເພື່ອສະແດງ "ຄວາມບໍລິສຸດໃຈ" ຕໍ່ພວກເຈົ້ານາຍເໜືອຫົວໃນເວລານັ້ນຄືສະຫຍາມ ດັ່ງສະແດງອອກໃນກາບວ່າ:

" ...   ...   ພູະຍາລາວ
ຈຳກິນນ້ຳປ້ອຍ   ຂຸນໃຫຍ່ນ້ອຍ   ທັງອາດທັງຍາ
ຈັດເອົາມາ   ກິນນ້ຳສັດຈະ ... "

ການກະທຳດັ່ງກ່າວນີ້ ໄດ້ເຮັດໃຫ້ຊາວຄົວພວນ ແລະພະຍາລາວຜູ້ເຊິ່ງມີນ້ຳໃຈຮັກຊາດຈຳນວນໜຶ່ງບໍ່ພໍໃຈ, ດັ່ງສະແດງອອກໃນກາບວ່າ:

" ... ... ເຈົ້າສະຣ້າຍ
ເລີຍລະຄົວໜີ ຕາເວັນຕົກ ເອົາຮີບກົນແລງ
ຕາເວັນແລງ ເອົາມາລ້ຽບຕ້າຍ..."

ກາບຕອນນີ້ ສະແດງເຖິງຄວາມເຈັບແຄ້ນແໜ້ນໃຈຂອງເຈົ້າສະ ທີ່ບໍ່ພໍໃຈຕໍ່ພວກເຈົ້ານາຍໄທ ແລະ ພະຍາລາວຂາຍຊາດຈຳນວນໜຶ່ງ ຈຶ່ງຄິດຫາວິທີເອົາຊາວລາວພວນ ໂຕນໜີກັບຄືນບ້ານເກີດເມືອງນອນ ດັ່ງຄຳວ່າ " ເລີຍລະຄົວໜີ "ສະຖານະການທີ່ບ້ານອົບພະຍົບໃນເວລານີ້ສັບສົນ, ເຄັ່ງຕຶງ, ພວກໄທເຂັ້ມງວດ ກວດຂັນທີ່ສຸດ " ຕາເວັນແດງ ເອົາມາລຽບຕ້າຍ ". ແຕ່ເຖິງຢ່າງໃດກໍຕາມ ຝ່າຍພະຍາລາວຜູ້ເຊິ່ງມີນ້ຳ ໃຈຮັກຊາດກໍບໍ່ຍອມລົດລະເຈດຈຳນົງອັນແນ່ວແນ່ຂອງຕົນ ຄື ຕ້ອງນຳເອົາຊາວລາວພວນໂຕນໜີກັບຄືນໃຫ້ ໄດ້, ເຖິງຈະແມ່ນດ້ວຍຮູບການໃດກໍຕາມ ດັ່ງສະແດງອອກໃນກາບວ່າ:

" ... ... ເຈົ້າສະຣ້າຍ
ມີບ່າວຜໍມີ ເປັນອິລິ ຄືຄົນຜີບ້າ
ໃຜບໍ່ຢ້ານ ຕາຍຊ້ຳລອບມັນ..."

ໃນທີ່ສຸດເຈດຈຳນົງອັນແນ່ວແນ່ຂອງເຈົ້າສະ ກໍໄດ້ຮັບການປະຕິບັດ ດັ່ງສະແດງອອກໃນກາບວ່າ:

" ... ... ຕາເວັນຂຶ້ນ
ປອມພູຜ່ອມຜູ່ ເຈົ້າສະອວ້ານ ຄົວສູ່ນາວາ
ເອົາເຮືອງຊາວ ລົງໄປລີວລີ່ ຮອດຝັ່ງນ້ຳ
ເຖິງທີ່ແຄມຊົນ... ".

9. ບົດທີເກົ້າ : " ເຈົ້າສະໜີມານີ້ ເປັນເທື່ອທີສອງ ແຕ່ກໍຕາມຫລັງກັນມາຫັ້ນ "

ເນື້ອໃນຂອງບົດທີ ເກົ້າ ນີ້ ແມ່ນສືບເນື່ອງມາແຕ່ວັກທີ 50 ຕອນທີ 3 ຂອງບົດທີ 8. ສະນັ້ນ, ຈຶ່ງມີເນື້ອ ໃນກ່າວເຖິງແຕ່ເຫດການ ການໂຕນໜີກັບຄືນບ້ານເກີດເມືອງນອນໂດຍສະເພາະເທົ່ານັ້ນ ເຊິ່ງ ເລີ່ມຈາກການຈັດການໃຫ້ພວກຜູ້ຍິງ, ເດັກນ້ອຍ, ເຖົ້າແກ່, ແມ່ມານ ແລະຜູ້ພາທາງອອກກ່ອນ, ສ່ວນ ຊາຍສະກັນປະກອບອາວຸດອອກຕາມຫລັງເຮັດໜ້າທີ່ລຸມກັນໃຫ້ຂະບວນ. ດັ່ງສະແດງອອກໃນກາບວ່າ:

" ເອົາຄົນໝູນຫຼັງຜໍໝູ່ ຄາດຄູ່ໄວ້ກືຫອກ ແລະປືນ
ໝູ່ໜີກ່ອນບໍ່ເປັນທາງ ໝູ່ໜີກາງເປັນຄ້ຳແຄ້
ໝູ່ໜີຫຼ້າທາງແທ້ບໍ່ຫຼົງ..."

ກາບຕອນນີ້, ເຮົາສັງເກດເບິ່ງຄຳວ່າ: " ໝູ່ໜີກ່ອນ, ກາງ ແລະຫລ້າ "ນີ້, ສະແດງໃຫ້ພວກເຮົາ ເຫັນວ່າຂະບວນໜີກ່ອນເຊິ່ງນຳໂດຍເຈົ້າສາລີນັ້ນ ແມ່ນໜີໄປຢ່າງບໍ່ເປັນທີ່ເປັນທາງ, ບຸປ່າບຸດົງໄປ, ພວກ ຕາມຫລັງມາ ກໍພໍເຫັນເປັນທາງແດ່ເລັກນ້ອຍ " ເປັນຄ້ຳແຄ້ ", ສ່ວນຂະບວນໜີຕາມຫລັງສຸດ ແມ່ນເຫັນ ເປັນທາງຈະແຈ້ງແລ້ວ, ສະນັ້ນ ຂະບວນນີ້ໄດ້ເດີນໄປຕາມເສັ້ນທາງຂອງຂະບວນກ່ອນ ຈຶ່ງໄດ້ພົບເຫັນແຕ່ ຊາກສົບຂອງຂະບວນກ່ອນ ຍັງຢາຍໄປຕາມເສັ້ນທາງທີ່ພວກເຂົາຜ່ານໄປ ດັ່ງສະແດງອອກໃນກາບວ່າ:

" ... ຈັກເຊົາແລນທີ່ແດນກົກໄມ້
ເຊົາບໍ່ໄດ້ເຫັນເຄືອບລາວຜີ ເຈົ້າສາລີໜີມາເດືອນ ແປດ
ຝົນສວາດເອື້ອນຟ້າແດດສອຍວອຍ ເຫັນຫົວກອຍກອງກັນເດຍລະດາດ "

ຂະບວນນີ້ ບໍ່ໄດ້ປະເຊີນກັບເຫດການເບື່ອພາກໜ້ອງອີກ, ແຕ່ສິ່ງເຂົາເຈົ້າຫລີກບໍ່ໄດ້ກໍຄືຄວາມອຶດຫິວ. ດັ່ງທີ່ພວກເຮົາຮູ້ແລ້ວວ່າ ເສັ້ນທາງຕັ້ງແຕ່ໜອງຄາຍເຖິງຊຽງຂວາງຍາວເກືອບ 400 ກິໂລແມັດ, ນີ້ແມ່ນໄລ່ຕາມເສັ້ນທາງລົດໃນສະໄໝປັດຈຸບັນ; ແຕ່ເສັ້ນທາງທີ່ຊາວຄົວພວນໂຕນໜີກັບຄືນ ເວລານັ້ນແມ່ນທາງຍ່າງລັດປ່າລັດດົງ ຂຶ້ນພູລົງຫ້ວຍຕາມກົ່ນຊ້າງດົງເສືອ, ບໍ່ຮູ້ວ່າມັນໄກສ່ຳໃດ ? ແລະຕ້ອງໃຊ້ເວລາເທົ່າໃດວັນ ? ເທົ່າໃດເດືອນ ? ຂະບວນຊາວຄົວພວນສ່ວນຫລວງຫລາຍພັດແມ່ນແມ່ຍິງ, ເຖົ້າແກ່, ແມ່ມານ, ຜູ້ເລັກເດັກນ້ອຍ. ຍ້ອນເສັ້ນທາງຍາວໄກ, ການເດີນທາງເຕັມໄປດ້ວຍອຸປະສັກ, ສະນັ້ນ ເຂົ້າປາອາຫານທີ່ເຂົາເຈົ້າກຶມານັ້ນ ກໍຄ່ອຍໆໝົດໄປຈະຕ້ອງໄດ້ຂຸດເອົາມັນເອົາກອຍມາປີ້ນເຂົ້າກິນ ແລະບາງຄອບຄົວຈຳຕ້ອງປະກິ້ມສະມາຊິກຜູ້ອ່ອນເພຍພາຍໃນຄອບຄົວໄປ ຍ້ອນຄວາມອຶດຫິວ:

" ...ຕື່ນແຕ່ເຊົ້າກິນເຂົ້າເໝືອດກອຍ ເປັນວອຍໆບໍ່ຈືດ
ເປັນອິດລິດໃນທ້ອງໃນຄີງ ຜູ້ກິນຫຼາຍບໍ່ຕິງຕົນໄດ້
ເບິ່ງປ່າໄມ້ເປັນໝອກມົວຕາ..."
" ... ເບິ່ງເຂົ້າໄຫ່ໆກໍ່ລົງ ເບິ່ງເຂົ້າກົງໆກໍ່ສ້ຽງ
ກັບແຈ່ວກ້ຽງຄືຜີໂພງເລຍ ຜົວ ແລະເມຍວາງເສຍແມ່ເຖົ້າ
ຝູງລູກເຕົ້າໜີປະມານດາ ສາລີກາຈາກຜົວຄີ້ລ້ອຍ
ປະລູກນ້ອຍຍັງບໍ່ທັນຕາຍ..."

ການປະກິ້ມພໍ່ແມ່, ລູກເຕົ້າທີ່ຍັງບໍ່ທັນຕາຍນີ້, ມັນບໍ່ແມ່ນຄຸນສົມບັດຂອງຄົນລາວຊາວພວນ, ແຕ່ຫາກຕົກຢູ່ໃນສະພາບທີ່ພວກເຂົາເຈົ້າປະເຊີນຢູ່ໃນຂະນະນັ້ນ ກໍອາດເກີດຂຶ້ນໄດ້. ແຕ່ເຫດການອັນນີ້ ແມ່ນມີໜ້ອຍທີ່ສຸດ ແລະຢູ່ໃນກາບກໍຢືນຢັນເຖິງບັນນີ້ວ່າ " ສ່ວນຜູ້ຮ້າຍປະປ່ອຍເສຍກັນ " ໝາຍຄວາມວ່າ ມີຜູ້ໂຊກຮ້າຍຈຳນວນໜຶ່ງເທົ່ານັ້ນທີ່ສູນເສຍສະມາຊິກພາຍໃນຄອບຄົວໄປ. " ສ່ວນຜູ້ດີຍັງດີທັງຄ້າຍ " ໝາຍວ່າ ຜູ້ໂຊກດີສ່ວນຫລວງຫລາຍຍັງປະຄັບປະຄອງກັນ, ຜ່ານຜ່າອຸປະສັກນາໆປະການ ເພື່ອເອົາຄອບຄົວຫລຸດພົ້ນຈາກມັດຈຸລາດແຫ່ງຄວາມຕາຍໄປສູ່ບ້ານເກີດເມືອງນອນ.

ໃນບົດທີເກົ້ານີ້ ໄດ້ມ້ວນທ້າຍດ້ວຍການບັນຍາຍເຖິງທັດສະນີຍະພາບອັນສຸດແສນສວຍງາມ ບົນເສັ້ນທາງກັບຄືນສູ່ບ້ານເກີດເມືອງນອນ. ບັນຫານີ້ ມັນໄດ້ສະແດງເຖິງຄວາມດີອົກດີໃຈຂອງຊາວຄົວພວນທີ່ໄດ້ກັບຄືນບ້ານເກີດ, ດັ່ງສະແດງອອກໃນກາບວ່າ :

" ... ຈັກຈັ່ນຮ້ອງສຽງສ່າຍູງງຮວ
ມົວໆສຽງແລ້ວກຽງແຂກເຕົ້າ ເປົ້າກາງກີຊົມດອກອາຮວນ
ດອກດຳດວນຄືສວນຄົນສ້າງ ດອກກາຍຮ້າງເປັນກົ່ນສອນລອນ
ດອກຈັ່ງກອນຄືຄົນຮອດຮ້ອຍ ຕາເວັນລ້ອຍລັບເລົ່າເສຍແສງ
ຕາເວັນແລງ ບາລານກັບອງພົນຫລວງ ຕ່າວຄືນມາບ້ານ ".

ການເດີນທາງອັນເຕັມໄປດ້ວຍອຸປະສັກນານາປະການໄດ້ຜ່ານພົ້ນໄປ, ໃນທີ່ສຸດ ກໍບັນລຸເປົ້າໝາຍປາຍທາງທີ່ເຂົາເຈົ້າປາຖະໜາ ດັ່ງຄຳວ່າ " ຕາເວັນແລງ ບາລານກັບອງພົນຫລວງ ຕ່າວຄືນມາບ້ານ ". " ບາລານ "ຢູ່ນີ້ ໝາຍເຖິງເຈົ້າສະໄດ້ນຳບ່າວໄພ່ລາສະດອນ (ພົນຫລວງ) ກັບຄືນສູ່ບ້ານເກີດເມືອງນອນ.

V. ລັກສະນະຂອງກາບຕົ້ນສະບັບ

1. ລັກສະນະ ແລະຈຸດພິເສດທາງດ້ານໂຄງສ້າງ

ດັ່ງໄດ້ສະເໜີມາໃນພາກບົດນຳແລ້ວວ່າ ພວກເຮົາບໍ່ສາມາດຊອກຫາຕົ້ນສະບັບຂອງກາບເມືອງພວນໄດ້. ນອກຈາກສະບັບທີ່ເຈົ້າຄຳໝັ້ນ ວົງກົດລັດຕະນະ ຮຽບຮຽງໄວ້ຢູ່ໃນປຶ້ມ " ພົງສາວະດານເມືອງພວນ ". ຜ່ານການກວດຄົ້ນເບິ່ງບົດລັດກາບທີ່ໃຊ້ວິເຄາະຢູ່ໃນປຶ້ມ " ວັນນະຄະດີລາວ " ສະບັບສະຖາບັນວິທະຍາສາດສັງຄົມ, ກະຊວງສຶກສາພິມອອກໃນປີ 1987 ກໍດີ, ຢູ່ຕາມບົດສອນທີ່ໃຊ້ກັນໃນຂັ້ນມະຫາວິທະຍາໄລຕ່າງໆກໍດີ, ອາດອີງໃສ່ສະບັບດຽວກັນນີ້; ສະນັ້ນ ພວກເຮົາຈຶ່ງຖືເອົາສະບັບນີ້ເປັນຫລັກ ເພື່ອເປັນບ່ອນອີງໃນການຄົ້ນຄວ້າວິໄຈ.

" ກາບເມືອງພວນ " ສະບັບນີ້ ມີລັກສະນະກອນກາບ ບາງບ່ອນກໍສອດແຊກດ້ວຍກອນ ໂດຍສະເພາະຕອນຂຶ້ນຕົ້ນ ແລະບາງບົດກໍມີຄຳບຸບພະບົດ ແລະຄຳສ້ອຍປົນເປເລັກນ້ອຍ. ແຕ່ຢ່າງໃດກໍດີ " ກາບເມືອງພວນ " ສະບັບນີ້ ຖືວ່າເປັນສະບັບທີ່ສົມບູນເຊິ່ງປະກອບມີ 9 ບົດ, 14 ໜ້າພິມ, ມີ 309 ວັກ, ບາງບົດຂຽນເປັນສອງຕອນ, ບາງບົດຂຽນເປັນສາມຕອນກໍມີ ດັ່ງສະແດງອອກໃນໂຄງຮ່າງລຸ່ມນີ້:

ໂຄງຮ່າງ	0 0 0 0	0 0 0 <u>0</u>້
	0 0 0 <u>0</u>້	0 0 0 <u>0</u>̣
	0 0 0 <u>0</u>̣	0 0 0 <u>0</u>̣
	0 0 0 <u>0</u>̣	0 0 0 <u>0</u>̣
	0 0 0 <u>0</u>̣	0 0 0 <u>0</u>̣
	0 0 0 <u>0</u>̣	0 0 0 0
ຕົວຢ່າງ	ສາທຸສາ	ຍໍມືໃສ່<u>ເກົ້າ</u>
	ຂ້າພະ<u>ເຈົ້າ</u>	ຂໍກ່າວຕຳ<u>ນານ</u>
	ເປັນນິ<u>ທານ</u>	ສືບມາແຕ່<u>ກ່ອນ</u>
	ເວົ້າແຕ່<u>ບ່ອນ</u>	ປາງຂຸນບູ<u>ລົມ</u>
	ຄັ້ງປະ<u>ຖົມ</u>	ລົງເອົາກຳ<u>ເນີດ</u>
	ລົງມາ<u>ເກີດ</u>	ໃນທີບຊຸມພູ

ໃນການຂຽນບົດ ຈະຂຽນບົດສັ້ນ ຫລືຍາວປານໃດ ກໍໃຫ້ຮັກສາຫລັກສຳຜັດນີ້ຕໍ່ໆໄປເລື້ອຍໆ ແຕ່ວ່າໄມ້ເອກ, ໄມ້ໂທ ກໍບໍ່ມີຄວາມສຳຄັນທໍ່ການສຳຜັດ ຖ້າຊອກຄຳສຽງເອກບໍ່ໄດ້ ກໍອາດຈະໃຊ້ຄຳສຽງໂທໃສ່ຄຳສຸດທ້າຍວັກ ແຕ່ຄຳສຸດທ້າຍວັກແມ່ນສຽງກາງ, ເອກ ຫລືສຽງໂທນັ້ນ ຄຳທີ 3 ຂອງວັກຕໍ່ໄປ ກໍຕ້ອງພະຍາຍາມເຮັດໃຫ້ເປັນສຽງດຽວກັນ ເພື່ອໃຫ້ສຳຜັດກັນ.

" ກາບເມືອງພວນ " ທີ່ພວກເຮົາໃຊ້ຄົ້ນຄວ້າວິໄຈນີ້ ສ່ວນຫລວງຫລາຍແມ່ນໃຊ້ການແຕ່ງແບບກອນກາບ ແຕ່ກໍມີບາງບ່ອນໄດ້ສອດແຊກປະເພດຄຳກອນອື່ນເລັກນ້ອຍ. ການປະພັນກໍໄດ້ຍຶດຖືການສຳຜັດເປັນຫລັກ ແລະສຳຜັດຊ້ອນຕໍ່ກັນໄປຈົນໝົດບົດ, ການສຳຜັດເກືອບມີຄົບທຸກແບບຂອງການສຳຜັດ ເຊັ່ນສຳຜັດນອກ, ສຳຜັດໃນ, ສຳຜັດລຽນອັກສອນ ແລະສຳຜັດຂັ້ນອັກສອນຕາມຫລັກການແຕ່ງກາບ ແຕ່ກໍມີບາງວັກ ການສຳຜັດຂາດຕົກໄປ ອາດຈະເລັງໃສ່ເນື້ອໃນເປັນສິ່ງສຳຄັນ. ປະລິມານຄຳໃນແຕ່ລະວັກ ສ່ວນຫລາຍແມ່ນມີ 7 ຄຳ 8 ຄຳ, ແຕ່ກໍມີບາງວັກມີຮອດ 9 ຄຳ 10 ຄຳ ຍ້ອນວ່າຄຳເຫລົ່ານັ້ນ ເປັນຄຳທີ່ມີ

ຫລາຍພະຍາງ ຫລືຄຳທີ່ໄດ້ມາຈາກພາສາປາລີ-ສັນສະກິດ ຫລືເປັນລາຊະສັບ. ທັງໝົດກາບມີຄຳບຸບພະບົດ 2-3 ຄຳ ແຕ່ກໍໜ້າເສຍດາຍ ກາບເມືອງພວນສະບັບທີ່ເຈົ້າຄຳໝັ້ນ ວົງກົດລັດຕະນະ ໄດ້ຈັດພິມຂຶ້ນໃນປີ 1952, ບໍ່ໄດ້ຈັດເປັນວັກຕາມຫລັກການແຕ່ງກອນກາບ. ສະນັ້ນ, ພວກເຮົາຈຶ່ງໄດ້ຈັດຄືນໃໝ່ ເພື່ອໃຫ້ຖືກຕ້ອງກັບຫລັກການ ການແຕ່ງກອນກາບ ແຕ່ເຖິງຢ່າງໃດກໍດີ ກາບເມືອງພວນສະບັບເຈົ້າຄຳໝັ້ນ ວົງກົດລັດຕະນະ ກໍເປັນສະບັບດຽວທີ່ໃຊ້ທຳການວິເຄາະໃນ " ປຶ້ມວັນນະຄະດີລາວ "ສະບັບຂອງສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ, ກະຊວງສຶກສາພິມອອກໃນປີ 1987 ແລະນຳໃຊ້ເຂົ້າໃນການສິດສອນຢູ່ມະຫາວິທະຍາໄລແຫ່ງຊາດ. ກາບເມືອງພວນສະບັບນີ້ ປະກອບມີ 9 ບົດ ເຊິ່ງມີຈຸດພິເສດສະເພາະດັ່ງນີ້:

(1) ການແຕ່ງກາບໃຊ້ການສຳຜັດ ຕາມຫລັກການຂອງກອນກາບ ຄື ຄຳສຸດທ້າຍຂອງວັກທີ 1 ໄປສຳຜັດກັບຄຳທີ 1-2-3 ໃນວັກທີ 2 ແລະມີ 7 ຄຳ, ຕອນກົກມີ 3 ຄຳ, ຕອນປາຍມີ 4 ຄຳ.

ຕົວຢ່າງ: ໃນຕອນທີ 1 ສານເຈົ້າສາລີ ເຮັດໄປເກືອຍໄທ

" ... ໜ້ອຍບໍ່ນານ ແປງສານເລີຍ**ແລ້ວ**
ຫາບ່າວ**ແກ້ວ** ໄປເພື່ອນພໍ**ສານ**
ໄປ**ຕາມ**ຟ ເຖິງໄພປ່າ**ໄມ້**
ອ້າມເຫດ**ໄທ້** ໄປຮອດແລມ**ຂອງ**
ຮອດ**ໜອງ**ຄາຍ ຍໍສານກວາຍບາດ ... "

(2) ການແຕ່ງທີ່ໃຊ້ກາບສະໂຫລກ 4 ສະຫລັບສັບຊ້ອນກັນກັບກາບ

ຕົວຢ່າງ: ໃນຕອນທີ 7

ບັດນີ້ ຈັກຈາ ຈັກຫາໃຫ້**ກວ້າງ**
ສິບ**ສ້າງ**ສິນທານ ຕາມແຕ່ໂວ**ທານ**
ແປງ**ສານ**ໂລງກາບ ໂສພາບພາ**ທີ**
ຢ່າ**ມີ**ໂພຍຕ້ອງ ຂອດຂ້ອງເຖິງຕົວ ... "

(3) ກອນກາບໃນກາບເມືອງພວນ ທີ່ມີຄຳບຸບພະບົດ

ຕົວຢ່າງ: ໃນຕອນທີ 1 ແລະ ຕອນທີ 8

ຕອນທີ 1 " ... **ຍາມນັ້ນ** ເມືອງພວນກວ້າງ ສີແສງເຮືອງຮຸ່ງ
ວັດວາອາຣາມ ເຈດີພຣູນກໍສ້າງ ເຮືອງເດດລັງສີ ... "

ຕອນທີ 8 " ... **ໂອນໍ !** ຝູງບໍ່ຕາຍ ເລີຍໜີເສຍຈາກ
ພາກທີ່ນັ້ນ ໄປປ່ອງທາງຄົນ ... "

(4) ກອນກາບໃນກາບເມືອງພວນ ທີ່ມີການສຳຜັດໃນ ຄື ສຳຜັດໃນວັກດຽວກັນ, ຕາມການສັງເກດ ໂດຍທົ່ວໄປແລ້ວ ວັກໃດທີ່ມີການສຳຜັດໃນ ສ່ວນຫລາຍແມ່ນຄຳສຸດທ້າຍຂອງວັກເທິງ ໄປສຳຜັດກັບຄຳທີ 1-2 ຂອງວັກຕໍ່ໄປ ຖ້າວ່າສຳຜັດກັບຄຳທີ 3 ຈະບໍ່ມີສຳຜັດໃນ ເຊັ່ນ ຢູ່ໃນຕອນທີ 4.

" ... ບ້ານບອກເນີນາ ລາດຮ້ອງພູຢາ
ບອກນາທັງ***ຄ້າຍ*** ວຽນ***ທ້າຍ*** ແລະເສັງ ... "

(5) ກອນກາບ ນອກຈາກສຳຜັດຕາມຫລັກກາບແລ້ວ ກໍຍັງມີການສຳຜັດນອກຫລັກການ ເຊັ່ນ ຄຳສຸດທ້າຍຂອງວັກເທິງໄປສຳຜັດກັບຄຳທີ 5 ຕອນທີ 2 ຂອງວັກຕໍ່ໄປ ເຊັ່ນ ບົດທີ 6.

" ... ຮີດແຕ່ເຄົ້າ ຂັດຜ້າຝັກຫວາຍ
ຮີດມື້ດາຍ ພາຍກົ້ງກີກ ***ປຣດ***
ບຸ່ງແຕ່ຕ້ຮວ ສາຍ***ຫລຽດ***ພາຍໂຍນ
ເປັນໂຊນໂກນ ສັງມາຄ້ຽວພາກ ... "

2 ການໃຊ້ສັບ ແລະສຳນວນພາສາ

ດັ່ງພວກເຮົາຮູ້ແລ້ວວ່າ " ກາບເມືອງພວນ " ເປັນວັນນະກຳປະຫວັດສາດບົດໜຶ່ງ, ມີລັກສະນະຄ້າຍຄືກັບບົດບັນທຶກເຫດການ. ສະນັ້ນ, ການໃຊ້ສັບພາສາຢູ່ໃນກາບເມືອງພວນ ສ່ວນຫລາຍເປັນຄຳສັບສຳນວນງ່າຍດາຍ, ຈະແຈ້ງ ແລະເຂົ້າໃຈງ່າຍ. ເຖິງວ່າມີບາງສຳນວນຂອງກາບ ຈະສອດແຊກຄຳສັບທ້ອງຖິ່ນໄທພວນເຂົ້າແດ່ເລັກນ້ອຍກໍຕາມ, ແຕ່ເມື່ອອ່ານ ແລະຟັງແລ້ວ ກໍບໍ່ໄດ້ເປັນສິ່ງກີດຂວາງຄວາມເຂົ້າໃຈຂອງຜູ້ອ່ານ, ຜູ້ຟັງແຕ່ຢ່າງໃດເລີຍ ຊ້ຳບໍ່ໜຳຍິ່ງເຮັດໃຫ້ເອກະລັກຂອງກາບພົ້ນເດັ່ນຂຶ້ນຕື່ມ ເຊັ່ນ:

" ບ້ານນອກເບີນາ ລາດຮ້ວງພູຢາ "
" ຝົນຕົກຮຳ ແຜ່ນດິນກາຍເມືອ "
" ເສຍຄາຍເອົາຈິດ ຂຽນຂີດລາຍຄົວ "
" ລັກຂອງຄົນ ໄປຂາຍໃນລາດ "

ບັນດາຄຳສັບທີ່ຂີດກ້ອງ " ເບີ " (ໃບ), " ເມືອ " (ເມືອກ), " ຈິດ " (ຕາຈ້ຳ), " ລາດ " (ຕະຫລາດ) ລ້ວນແຕ່ແມ່ນຄຳສັບທ້ອງຖິ່ນໄທພວນທັງນັ້ນ. ໃນກາບເມືອງພວນ ນອກຈາກການໃຊ້ສັບສຳນວນຈະແຈ້ງ, ເຂົ້າໃຈງ່າຍແລ້ວ ຜູ້ປະພັນກາບຍັງໄດ້ນຳເອົາສຳນວນຄຳສອນບູຮານປຽບທຽບ ເຊັ່ນ " ໜີເສືອມາພໍ້ແຂ້ " ເຂົ້າມາສອດແຊກ ເພື່ອຢາກເໜັ້ນໜັກຄວາມຊອກຊ້ຳ, ຄວາມເສົ້າໂສກເສຍໃຈ ເທື່ອຫລັງຍິ່ງເຮັງຮ້າຍກວ່າເທື່ອກ່ອນ ທີ່ຊາວພວນປະເຊີນໃນເວລານັ້ນ ຄື ໜີຈາກຫວຽດກົດຂີ່ອົ່ມເຫັງ ພ່າຍມາເພິ່ງສະຫຍາມ ຄິດວ່າສະພາບຈະດີຂຶ້ນ ແຕ່ຊ້ຳກັບເຮັງຮ້າຍລົງ ດັ່ງສະແດງອອກໃນກາບ:

" ພ່າຍສ້ອນແລ້ວ ໜີມາຈອບໄຊ
ພ່າຍໝາໄນ ມາຈອບໝາບ້ານ
ພ່າຍແບ້ນລ້ານ ມາຈອບໂຄ້ຍຫລວງ "

ເມື່ອກ່າວເຖິງເຫດການ ການຜັນແປໃນສະຖານະການໃນເມືອງພວນເວລານັ້ນ, ນອກຈາກຜູ້ປະພັນຈະເວົ້າມາຢ່າງເປີດແປນ ແລະໂດຍກົງແລ້ວ, ຍັງໄດ້ນຳເອົາປາກົດການທຳມະຊາດທີ່ຝືນກົດເກນຂອງມັນເຂົ້າມາປຽບທຽບມີລັກສະນະເປັນບັນຫາ ເພື່ອເປັນການຢືນຢັນຄວາມປັ່ນປ່ວນທີ່ບໍ່ເປັນຕາຈະເປັນແຕ່ຫາກເປັນໄປຂອງສະຖານະການໃນເມືອງພວນເວລານັ້ນ ເຮັດໃຫ້ບັນຫາໜັກແໜ້ນຂຶ້ນ ແລະໜ້າຄຶດເຊັ່ນ:

" ດາວເຮື່ອແຈ້ງ ເຫັນແດດກາງຄືນ "
" ສັດຢູ່ປ່າ ມາບ້ານບໍ່ໜີ
ເມື່ອລາຕີ ເຫັນຮຸງກິນນ້ຳ
ເຜິ້ງຢູ່ກ້ຳ ຈັບກົ່ງສາຂາ

ເຜີ້ງຢູ່ຜາ ແປງຮັງງ່າໄມ້ "
" ໄຟລຸກລາມ ບັງເກີດພົ້ນນ້ຳ "

ບັນດາສຳນວນກາບທີ່ຍົກມານີ້ ລ້ວນແຕ່ເປັນການສົມທຽບກັບປາກົດການທຳມະຊາດ ທີ່ຝືນກົດເກນຂອງມັນ ເພື່ອຢາກໃຫ້ຜູ້ອ່ານ ຜູ້ຟັງຮັບຮູ້ວ່າ ສະຖານະການທຸກຢ່າງໃນເມືອງພວນໄດ້ປິ້ນປ່ຽນຈາກໜ້າມືເປັນຫລັງມືໄປແລ້ວ.

ສິລະປະໃນການໃຊ້ສັບສຳນວນ ແລະການປຽບທຽບຢູ່ໃນກາບກອນ, ມັນເປັນຈຸດພິເສດຂອງສິລະປະຂອງການປະພັນກາບກອນເວົ້າທົ່ວໄປ. ແຕ່ສຳລັບກາບເມືອງພວນແລ້ວ ສິລະປະທັງສອງຢ່າງນີ້ ໄດ້ສະແດງອອກແບບງ່າຍດາຍ, ກົງໄປກົງມາເຮັດໃຫ້ຜູ້ອ່ານ ຜູ້ຟັງເຂົ້າໃຈງ່າຍ ແລະເກີດອາລົມໂສກເສົ້າຄ້ອຍຕາມໄປຢ່າງບໍ່ຮູ້ສຶກຕົວ.

3. ອັກສອນ ແລະການສະກົດຄຳໃນກາບ

ການຮຽບຮຽງຕົ້ນສະບັບແມ່ນໃຊ້ອັກສອນລາວສະໄໝໃໝ່. ແຕ່ການສະກົດຄຳແມ່ນອີງຕາມປຶ້ມ " ໄວຍາກອນລາວ ພາກອັກຂະຫລະວິທີ " ຕາມຂໍ້ກຳນົດໃນພຣະຣາຊໂອງການ ເລກທີ 10 ລົງວັນທີ 27 ຊັງວິເຍ ປີ 1949 ຄື:

+ ໃຊ້ພະຍັນຊະນະເຄົ້າ 27 ຕົວ, ເຊິ່ງຮຽງຕາມລຳດັບຄື ກ, ຂ, ຄ, ງ, ຈ, ສ, ຊ, ຍ, ດ, ຕ, ຖ, ທ, ນ, ບ, ປ, ຜ, ຝ, ພ, ຟ, ມ, ຢ, ຣ, ລ, ວ, ຫ, ອ, ຮ. ພະຍັນຊະນະປະສົມມີ 7 ຕົວຄື ຫງ, ຫຍ, ຫນ, ຫມ, ຫຣ, ຫລ, ຫວ, ແລະພະຍັນຊະນະຄວບ 3 ຕົວຄື ຣ, ລ, ວ. ດັ່ງບາງຕົວຢ່າງຕໍ່ໄປນີ້ (ຈະຍົກເອົາແຕ່ຄຳທີ່ໃຊ້ພະຍັນຊະນະຕ່າງກັບການໃຊ້ໃນປັດຈຸບັນເທົ່ານັ້ນ).

- ຄຳທີ່ໃຊ້ " ຣ " ຢູ່ໃນກາບ: ອາຣາມ, ເຣືອງເດຊ (ບົດທີ 4 ວັກ 2, ຕອນ 1 ແລະ2); ບູຣົມ (ບົດທີ 2, ວັກ 1, ຕອນ 1); ຊະຣາ (ບົດທີ 1, ວັກ 31 ຕອນ 1); ຄີຣີ (ບົດທີ 2, ວັກ 11 ຕອນ 2); ບານເຣືອງ (ບົດທີ 2, ວັກ 12, ຕອນ 1)...

- ຄຳທີ່ໃຊ້ຕົວຄວບ " ຣ ແລະ ລ " : ມາຕຼາ (ບົດທີ 1, ວັກ 16 ຕອນ 2); ພຼະ(ບົດທີ 1, ວັກ 26 ຕອນ 2); ພລັນ (ບົດທີ 3, ວັກ 11 ຕອນ 1).

- ຄຳທີ່ໃຊ້ພະຍັນຊະນະຈູງ: ຂຍັນ (ບົດທີ 1, ວັກ 38 ຕອນ 2); ເສວີຍ (ບົດທີ 3, ວັກ 1, ຕອນ 1); ສນັ່ນ (ບົດທີ 6, ວັກ 25 ຕອນ 3).

- ຄຳທີ່ໃຊ້ສະກົດພິເສດ (ແທນ " ກ " ມີ ຂ, ຄ; ແທນ " ດ " ມີ ຈ, ສ, ຊ, ຕ, ຖ, ທ; ແທນ " ນ " ມີ ຣ, ລ ແລະແທນ " ບ " ມີ ປ, ພ, ຟ), ເຊັ່ນ ກາຣທັພ (ການທັບ; ບົດທີ 1, ວັກ 19 ຕອນ 1); ທາສ (ຂ້າທາດ: ບົດທີ 1, ວັກ 28, ຕອນ 1); ບູຣົມມະນາຖ (ບົດທີ 2, ວັກ 1, ຕອນ 1); ລີເດຊ (ບົດທີ 2, ວັກ 4, ຕອນ 1); ສົມບັຕິ (ບົດທີ 2, ວັກ 10, ຕອນ 1); ທາຕຸ (ບົດທີ 4, ວັກ 5, ຕອນ 1); ໂທສ (ບົດທີ 4, ວັກ 19, ຕອນ 2) ແລະອື່ນໆ.

- ຄຳທີ່ໃຊ້ເຄື່ອງໝາຍກະລັນ (x໌ ບໍ່ອອກສຽງ): ໄຊຍ໌ໂຍ (ບົດທີ 2, ວັກ 2 ຕອນ 1); ໂພຊນ໌ (ເສວີຍໂພຊນ໌: ບົດທີ 3, ວັກ 1, ຕອນ 1); ອົງຄ໌ (ບົດທີ 4, ວັກ 10, ຕອນ 2) ... ນອກນັ້ນ, ການໃຊ້ສະກົດ " ຍ " ຍັງໃຊ້ປົນເປກັນລະຫວ່າງສະກົດ " ຍ " " xຽ " ເຊັ່ນ : ຕ້າຽ, ພາຽ, ຫາຽ...

+ ໃຊ້ສະຫລະສັ້ນ-ຍາວ 12 ຄູ່ ແລະສະຫລະພິເສດ 4 ຮູບຄືປັດຈຸບັນ, ຕ່າງແຕ່ສະຫລະ ເxັຽະ ແລະ ເxັຽ (ເxັຍ-ເxຍ) ເຊັ່ນ ເມັຍ (ເມຍ - ບົດທີ 3, ວັກ 16, ຕອນ 3); ເສັຍ (ເສຍ - ບົດທີ 3, ວັກ 17, ຕອນ 1); ເງັຍ (ເງຍ - ບົດທີ 6, ວັກ 11, ຕອນ 2); ເລັຍ (ເລຍ - ບົດທີ 9, ວັກ 18, ຕອນ 1).

+ ໃຊ້ເຄື່ອງໝາຍວັນນະຍຸດ 4 ຮູບ ຄື x̀, x̂, x̃ ແລະ x̊ . ການໃຊ້ຄືກັບການໃຊ້ໃນສະໄໝປັດຈຸບັນ, ແຕ່ມີອັນແຕກຕ່າງກັບປັດຈຸບັນຢູ່ບ່ອນວ່າ; ພະຍັນຊະນະຕົ້ນພະຍາງ ແມ່ນອັກສອນກາງ ແລະສະຫລະສຽງຍາວມີຕົວສະກົດຕາຍແມ່ນໃຊ້ໄມ້ໂທໄດ້. ສະນັ້ນ, ຢູ່ໃນກາບ ວ່າແຕ່ພະຍາງອັກສອນກາງເປັນຕົວແກນມີຕົວສະກົດຕາຍ " ກ, ດ, ບ "ແລະສະຫລະສຽງຍາວແມ່ນໃຊ້ໄມ້ໂທ(x̂)ໝົດ ເຊັ່ນ: ໝາຍບ້ອກ (ບົດທີ 1, ວັກ 15, ຕອນ 2); ບ້ານບ້ອກ (ບົດທີ 1, ວັກ 16, ຕອນ 1); ປັດຂ້ອດ (ບົດທີ 1, ວັກ 13, ຕອນ 2); ມາຮ້ອດ (ບົດທີ 1, ວັກ 35, ຕອນ 2); ຫ້ອກດ້າບ (ບົດທີ 2, ວັກ 5, ຕອນ 3) ...

ໃນຕົ້ນສະບັບຂອງກາບ ນອກຈາກການໃຊ້ການສະກົດຄຳຕາມຫລັກໄວຍາກອນລາວ ສະບັບດັ່ງກ່າວມາແລ້ວ, ການສະກົດຍັງຜິດກັບຫລັກໄວຍາກອນຫລາຍພໍສົມຄວນ, ໂດຍສະເພາະແມ່ນການໃຊ້ອັກສອນຕ່ຳ- ສູງ ແລະສະຫລະສັ້ນ-ຍາວ ແລະການໃຊ້ໄມ້ເອກ (x̀), ໄມ້ໂທ (x̂) ເຫລົ່ານີ້ເປັນຕົ້ນ.

ນອກຈາກນີ້ ການຂຽນຊື່ບ້ານ, ເມືອງຫລືສະຖານທີ່ບາງບ່ອນຢູ່ໃນກາບຜັ້ຽນໄປຈາກຊື່ເດີມ ເຊັ່ນ ບ້ານຊ້ອນ (ບ້ານສ້ອນ); ບ້ານສີລຸນ (ບ້ານສີລູນ); ບ້ານໄພ່ (ບ້ານໄຜ່); ນ້ຳຈ້າງ (ນ້ຳຈັ້ງ); ພາງງານຊັນນ້ອຍ (ພ່າງງານຊັນນ້ອຍ)...

VI. ກາບເມືອງພວນສະບັບປັບປຸງ

1. ຫລັກການ ແລະເຫດຜົນ

ເພື່ອເປັນການປົກປັກຮັກສາ ບົດວັນນະກຳປະຫວັດສາດອັນຊົງຄຸນຄ່ານີ້ໄວ້ ໃຫ້ຍືນຍົງຄົງຢູ່ຄຽງຄູ່ກັບຄົນລາວຊາວພວນ ກໍຄືປວງຊົນລາວບັນດາເຜົ່າຕະຫລອດກາລະນານ ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງກາບເມືອງພວນສະບັບນີ້ໃຫ້ມີຄວາມຊັດເຈນຍິ່ງຂຶ້ນ ນັບທັງດ້ານເນື້ອໃນກໍຄືຮູບການ ເພື່ອໃຫ້ຄົນຮຸ່ນຫລັງໄດ້ສຶກສາຄົ້ນຄວ້າຕໍ່ໄປ.

ການປັບປຸງ ແລະດັດແກ້ " ກາບເມືອງພວນ " ເທື່ອນີ້ ໄດ້ອີງຕາມບາງຫລັກການດັ່ງຕໍ່ໄປນີ້:

+ ທາງດ້ານເນື້ອໃນແມ່ນຍັງຮັກສາເນື້ອໃນເດີມທຸກຢ່າງ, ບໍ່ໄດ້ຕັດ ແລະເພີ່ມແຕ່ຢ່າງໃດເລີຍ.
+ ທາງດ້ານຮູບການເວົ້າລວມແມ່ນຍັງຮັກສາເດີມ, ພຽງແຕ່ໄດ້ດັດແກ້ບາງບັນຫາດັ່ງນີ້:
  - ໄດ້ປ່ຽນສະກົດຄຳພາສາລາວຕາມຫລັກໄວຍາກອນ ສະບັບຣາຊະບັນດິດສະພາລາວ ພິມປີ 1972 ມາສະກົດຄຳພາສາລາວຕາມຫລັກໄວຍາກອນລາວຂອງທ່ານ ພູມີ ວົງວິຈິດ ພິມປີ 1967.
  - ໄດ້ດັດແກ້ການຂຽນຜິດຫລັກໄວຍາກອນ ຢ່າງເຊັ່ນ ການໃຊ້ອັກສອນສູງ-ຕ່ຳ, ການໃຊ້ໄມ້ເອກ-ໂທ ເຫລົ່ານີ້ເປັນຕົ້ນ.
  - ໄດ້ດັດແກ້ຊື່ຫົວຂໍ້ຂອງບາງບົດໃຫ້ເຂົ້າໃຈງ່າຍ.
  - ໄດ້ດັດແກ້ຊື່ສະເພາະບາງບ່ອນ (ໃຫ້ເບິ່ງຕາຕະລາງສົມທຽບທ້າຍເຫລັ້ມ). ເນື່ອງຈາກວ່າ ການຂຽນຊື່ສະເພາະໃນຕົ້ນສະບັບບາງບ່ອນເຫັນວ່າ ຜິດຜັ້ຽນໄປຈາກຊື່ໃນປັດຈຸບັນຫລາຍ ແລະພວກເຮົາກໍເຊື່ອແນ່ວ່າ ຊື່ບ້ານ, ຊື່ເມືອງ ແຕ່ສະໄໝນັ້ນ (1835) ມາເຖິງດຽວນີ້ ຄົງຈະບໍ່ມີການປ່ຽນແປງນອກຈາກບ້ານ ຫລືເມືອງທີ່ຕັ້ງຂຶ້ນໃໝ່ເທົ່ານັ້ນ.
  - ໄດ້ສັບຊ້ອນກາບບາງບົດທີ່ມີ 3 ວັກ ມາເປັນ 2 ວັກໃຫ້ຖືກຕາມຫລັກປະພັນກາບກອນ ແລະກໍເພື່ອໃຫ້ເອກະພາບກັນ ຕັ້ງແຕ່ບົດທີ 1 ເຖິງບົດທີ 9.

- ໃນສ່ວນທີ່ເຫັນວ່າກອນຕົກ, ພວກເຮົາໄດ້ແຕ່ງຕື່ມໃສ່ ໂດຍຂຽນສ່ວນຕື່ມໃສ່ໄວ້ວົງເລັບ ແລະບ່ອນໃດທີ່ຢູ່ມີ ວົງວິຈິດ ແຕ່ງເພີ່ມຕື່ມ ພວກເຮົາໄດ້ໝາຍເຊີງອັດ ຫລືໝາຍເຫດໄວ້ຢູ່ທາງລຸ່ມຂອງ ແຕ່ລະໜ້ານັ້ນ.

- ໄດ້ຕັດຕອນທີ 2 ຂອງວັກທີ 39 ຈາກບົດທີ 4 ມາເປັນຕອນຕົ້ນຂອງບົດທີ 5. ເນື່ອງຈາກ ວ່າ ເນື້ອໃນຂອງບັ້ນນີ້ ແມ່ນເປັນເນື້ອໃນທີ່ກ່າວເຖິງເຈົ້າສະ ເຊິ່ງເປັນຜູ້ນຳພາຂະບວນໂຕນໜີຕາມຫລັງຂະ ບວນຂອງເຈົ້າສາລີ ທີ່ໂຕນໜີກ່ອນ.

2 ກາບເມືອງພວນສະບັບປັບປຸງ

ບົດທີ 1 ເຈົ້າສາລີ ເຮັດສານໄປຂໍຄວາມຊ່ວຍເຫລືອຈາກໄທ

(ເຈົ້າໜອງຄາຍ)

ຍາມນັ້ນ ເມືອງພວນກວ້າງ   ສີແສງເຮືອງຮຸ່ງ
ວັດວາອາຣາມເຈດີພຽນກໍ່ສ້າງ   ເຮືອງເດດລັງສີ
ເລີຍເລົ່າມີສັດຕູທອນເກີງ   ເປ່ເພຄອງແກ້ວ
ຂຸດກົ່ນມ້າງ   ພະທາດແກ່ນໃຈເມືອງ
ທັງອາຣາມຫລວງຄອງເມືອງ[1]   ຍຸບທະລາຍສູນເສົ້າ
ຄວນທີ່ເຮົາຮີບໃຊ້   ສານສົ່ງເອົາເສິກ
ຄວາມລະທັດ   ຢ່າເອົາມາເວົ້າ
ດີທີ່[2]ເຈົ້າ ແລະຂ້ອຍ   ຈາຕ້ານຕໍ່ກັນ
ໜ້ອຍບໍ່ນານ   ແປງສານເລີຍແລ້ວ
ຫາບ່າວແກ້ວ   ໄປເພື່ອນພໍສາມ
ໄປຕາມໄປ   ເກີງໄພປ່າໄມ້
ຂ້າມເຫດໄທ້   ໄປຮອດແຄມຂອງ
ຮອດໜອງຄາຍ   ຍໍສານກວາຍບາດ
ພະລາຊະສຸຫວ່   ເຄື່ອງພ້ອມຂອງພໍ
ກວາຍບາດພູມິນ   ພະລາຊະສຸລິນ
ຈຶ່ງແປງໝາຍບອກ   ບ້ານບອກໃນນາ
ມາຕາປັດຂອດ   ມື້ປອດຍາມດີ
ໄຊຍາດີກີ   ດາດີທຸກໝູ່
ຢ່າລ້າງຢ່າຄາ   ຫ້າງດາການທັບ
ນັບໄດ້ພັນປາຍ   ຂຸນນາຍທັງປວງ
ປາກຊວຍຫ້ວຍຫລວງ   ຊະງົ້ໜອງເກີນ
ບ້ານພອກເມືອງເພັງ   ອະລືມພານດ່ານ
ເຂົ້າສານໜອງເຂັ້ງ   ປາກເປັ່ງປາກເປ່
ບ້ານຕ້າຍທັນທອງ   ແຄມຂອງປັດຂອດ
ໝາຍຮອດໂດຍການ   ເຂົ້າສຸກເຂົ້າສານ
ບັ້ງແຈ່ວກັບເກືອ   ຫ້າງເມືອຢ່ານານ
ເອົາການເລັ່ງເລວ   ຂ້ອຍພະກະໂຍມສັ່ງ

1 ສະບັບ ພູມີ ວົງວິຈິດ: ອາຣາມຫລວງ.

2 ສະບັບເດີມ: ດີຕໍ່ເຈົ້າ

ຢ່າລັບຢ່າບັງ ຄັນສັ່ງໂອກາດ
ຍົກທາດເອົາໄປ ບໍ່ອະບໍ່ໄພ[3]
ຈັດໄປຢ່າຢູ່ ພໍ່ໝູ່ນາຍກອງ
ປຸນປອງເລີຍແຕ່ງ ທຸກແຫ່ງນຳມາ
ຊະລາເຜການ ແຕ່ງໄວ້ເຕີມຫລັງ
ໄທການໄທຄັງ ຫລໍຍັງບໍ່ໜ້ອຍ
ໄປໂກດກ້າ[4] ເກນເອົາມາໂຮມພ່ຳພ້ອມ
ບ້ານຫ້ອມບໍ່ໂອ ພັກໂຄເມືອງໝີ່
ອົງຂີ່ຊ້ຽງຊຽນ ສະລຸມມາຮອດ
ເຂາະຂອດຄົນຊາຍ ກຳນົດກົດໝາຍ
ໜອງຫານໜອງຄາຍ ພັນປາຍບໍ່ໜ້ອຍ
ພໍຮ້ອຍນາຍຄັນ ລ້ວນຂະຫຍັນຂັນແຂງ
ແຕ່ງທັບດັບເສິກ ຫຍັບຍ້າຍລີລາ ປາບໝູ່ປັດຈາມິດ.

ບົດທີ 2 ເຈົ້າໜອງຄາຍເກນກຳລັງທັບ ແລ້ວກໍຍົກຂຶ້ນໄປຊຽງຂວາງຕາມເສັ້ນທາງ ບ້ານສ້ອນ ເມືອງເລີກ

ບູລົມມະບາດ ພະລາດສຸລິນ
ພູມິນຍ້າຍຍົກ ຍາມໂຊກໄຊໂຍ
ປາໂຕແຕ່ເຊົ້າ ຂຸນເຝົ້າ[5] ລາລົງ
ພະອົງລີລາ ເສນາກ້ານແກ່
ແຫ່ຊັ້ນພູບານ ໂອງການລືເດດ
ຮອດເຂດຄາເມ ເຄເຄໄປໜ້າ
ໄພ່ຟ້າເນືອງນອງ ອ້າມຂອງຍີຍາບ
ຫອກດາບທັງປືນ ລູກຊືນມີມາກ
ຍ້າຍຈາກແຄມຊິນ ແຫ່ເຈົ້ານຳຕີນ[6]
ຂ້າງຊ້າຍຂ້າງຂວາ ຂີ່ມ້າຂີ່ລວາ
ກາຍເຂດກາຍນາ ມັກຄາໄຕ່ເຕົ້າ
ເດີນເຊົ້າທຸກວັນ ຈາກັນທຸກເມື່ອ
ເຊື່ອໄດ້ສິ່ງຂອງ ແມ່ງົວຕົວຄວາຍ

---

3 ມາຈາກຮູບສະຫລັບ: ບໍ່ອັບໄພ = ບໍ່ອັບ ບໍ່ໄພ.

4 ສະບັບ ພູມີ ວົງວິຈິດ: ໄປກວດໄປກາ.

5 ສະບັບ ພູມີ ວົງວິຈິດ: ຂຸນເຂົ້າ.

6 ສະບັບ ພູມີ ວົງວິຈິດ: ນຳດີນ.

ຝູງຂ້ອຍຍິງຊາຍ
ເຂົ້າຂອງສົມບັດ
ທັດກິອັດສາ
ວັດກາຜືນແຜ່ນ
ລຸກແລ່ນຍິນດີ
ເຂົ້າປ່າຄີລີ
ດອກຈິ່ງຈູມຈໍ່
ຊ້ອງຊໍ່ບານເຮືອງ
ແດງເຫລືອງຫລາຍສໍ່າ
ແຫລ້ຜ່ໍາຫລາຍຜິວ
ລິວລີດັ້ນປ່າ
ຂ້າມທີ່ກາຍແດນ
ພັນແສນໄປກ່ອນ
ຂຶ້ນງ່ອນພູດອຍ
ຄອຍເຫັນຊູ້ຊ້ອນ
ແດດຮ້ອນທົນຫວາຍ
ພະນິກາຍ
ກິນງາຍລວາດແລ້ວ
ລ້າງແຂ້ວສີຟັນ
ເອົາກັບຍ້າຍຍົກ
ເກີ້ງໂຄກແຄມຊັນ
ບໍ່ຄ້າງບໍ່ຄາ
ກາຍບາເມືອງເລີກ
ເອົາເສິກມາເມືອງ
ຄຶດເຄືອງທັງປີ
ຜໍດີຜໍແດນ
ພັນແສນເລີຍລ່ວງ
ເກີ້ງຂວາງຊຽງດີ[7]

ບົດທີ 3 ຮອດເມືອງແສນ ແລະກໍໄດ້ເຂົ້າເຝົ້າເຈົ້າເມືອງແສນ ແລ້ວກໍກາຍເຂົ້າໄປຊຽງຂວາງໃນຄືນນັ້ນ

24 / VII

ເຊີນສີສະເຫວີຍໂພດ
ພະໂສດຈິນດາ
ເສິກລາຊາ
ລ່ວງມາບໍ່ໜ້ອຍ
(ຈຸນລະ)ສັງກາດ[8]
ໜຶ່ງໜຶ່ງເກົ້າຫົກ
ຕົກເດືອນຍີ່
ເກີ້ງທີ່ພາຍແຣມ

ห้ามจำหน่าย

ແຕ່ນັ້ນພູມິນ
ພະລາດສຸລິນ
ໃສ່ຫວ້ານໃສ່ຄົງ
ພະອົງພູເບດ
ກາຍເຂດຊຽງດີ
ແສງສີຕົກຕ່ໍາ
ແຂວຄ່ໍາມາເມືອງ
ກີບເປືອງເລວຮອດ
ເຂົ້າຈອດຊຽງຂວາງ
ແຕ່ນັ້ນມີນານ
ເຈົ້າສານໄປເຝົ້າ
ສູ່ເຂົ້າອາຫານ
ເຊີນພະໂອງການ
ໂຜດທານຊີວິດ
ທັງຈິດທັງໃຈ
ກວາຍບາດປາທາ
ຕາງດອກມາລາ
ບູຊາຍອດແກ້ວ
ໄຫວ້ແລ້ວທຸກອັນ
ຈອມທັນພະບາດ

---

7 ສະບັບເດີມ: ຂວາງ; ສະບັບ ພູມີ ວົງວິຈິດ: ຄ່ວງ.

8 ສະບັບເດີມ: ສັງກາດ; ສະບັບ ພູມີ ວົງວິຈິດ: ສັງກາດພັນໜຶ່ງຮ້ອຍ ປາຍເກົ້າສິບຫົກ.

ພະລາດສຸລິນ ຮ່ຳເພິງພາຍຕົວ
ບໍ່ກົວເກັງຂາມ ເກືອງຍາມໃກ້ຮຸ່ງ
ເຈົ້າມຸ່ງເມີນພະລັນ ໄກ່ຂັນສາມທີ
ແຕ່ງດີທຸກຄ້າຍ ປີກຊ້າຍປີກຂວາ
ໂຍທາໄຫລອອກ ຫອກງ້າວທັງປືນ
ລູກແມ້ງຕຳໂດນ ເຂົາໂຕນອອກຕ້າຍ
ຄົນຮ້າຍໄລ່ຟັນ ໄທຂັບໄລ່ຕ້ອນ
ເລືອດຂ້ອນໄຫລນອງ ກອງຕາຍໄມ້ຕົ້ນ
ພ່ອງລົ້ມຄານໄປ ເປັນໝູ່ເປັນກອງ
ລະວອງລະວູ່ ຕາຍຢູ່ກາງຄົງ
ພ່ອງຍັງໜີໄດ້ ຮ້ອງໄຫ້ຫາເມຍ
ເສຍທີເວັ້ນຫລີກ ຫລົບຜີກ[9] ການເລວ
ເລີຍໜີປະເປົ່າ ແຕ່ນັ້ນ ເສນາເຈົ້າທັງປວງ[10]
ຂຸນຫລວງຜູ້ໃຫຍ່ ຝ່າຍກ້ຳໜອງຄາຍ
ປຶກສາພົນໄພ່ ຈັກໄລ່ຄົວລົງ
ຈຶ່ງປົງຄວາມຍາກ[11].

ບົດທີ 4 ຊື່ບ້ານໃນເມືອງຊຽງຂວາງ ເມືອງແສນ ເມືອງສຸຍ ແລະເມືອງຄຳທີ່ໄທກວາດຄົວໄປ

ບ້ານບອກເນີນາ ລາດຮ້ວງພູຢາ
ບອກບນາທັງຄ້າຍ ວັ້ຽນທ້າຍ ແລະເສັງ
ບ້ານເລັງນາຄວນ ບ້ານມວນບ້ານຮ້າງ
ບ້ານແກ່ວຊາຄາຍ[12] ບ້ານຢາຍບ້ານກົດ
ບ້ານຜົດບ້ານຫງັນ ບວມໝັ້ນຄົງວຽງ
ບ້ານໝ້ຽງສີຄູນ ຂຸນນາງປັດກວາດ[13]

---

9 ສະບັບເດີມ: ບໍ່ຕໍ່ສູ້.

10 ສະບັບ ພູມີ ວົງວິຈິດ: ພວກເຈົ້າເສນາ ໄພ່ພົນທັງປວງ.

11 ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕໍ່: ລຳບາກສຸດແຮງ ອອກແຮງອົດກັ້ນ
ຢ້ານລົ້ມຢ້ານຕາຍ ພ່າຍໜີບໍ່ໄດ້
ພ່ອງໄຊ້ເວນກຳ ຈຳເປັນທຸກເຫລົ່າ
ໂສກເສົ້າຈິດໃຈ ປະຈົນໄພລຳບາກ.

12 ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕໍ່: ບ້ານແກ່ວຄາຍຄຳ ບ້ານງຳບ້ານໄພ່
ໃຫຍ່ນ້ອຍປານກາງ ກວາດລ້າງໄປໝົດ.

13 ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕໍ່: ບໍ່ໃຫ້ຂາດໃຫ້ຄາ.

ວ້ຽນທາດຊຽງຄຳ   ຈຳນຳເອົາຕົວ
ງົວຄວາຍໃສ່ຕ່າງ   ບ້ານກາງບ້ານດາວ
ຄົນລາວແປກປົນ   ເອົາຄົນໄປໄລ່
ບ້ານໄຜ່ເມືອງພານ   ພ່າງງານຊຸ້ນນ້ອຍ
ລູກຫ້ອຍຊຽງລຸນ   ໃຫ້ສູນເສຍເປົ່າ
ບ້ານເທົ້າເມືອງສາຍ   ນ້ຳຈັ້ງນ້ຳຮວາຍ[14]
ເມືອງໜ້າເມືອງຕາ   ເມືອງຄາວໄທລາວ[15]
ແກມຮາດ[16]   ຈັກກວາດຄົວລົງ
ດິນອົງຢ່າຢູ່   ເອົ້າສູ່ສົມພານ
ບ້ານທ້ານບ້ານລວງ   ບ້ານຄວາງນາແມນ
ພັ້ນພຽງປຽງແສນ   ບ້ານວຽນບ້ານມ່ອນ
ຈັດດ່ວນເອົາມາ   ບ້ານພານາເມືອງ
ບ້ານທອງບ້ານເຫລັກ   ບ້ານເຮັກນາຣະ
ບໍ່ລະບໍ່ໄລ[17]   ບ້ານໄຊນາບີ້
ຝູງນີ້ບໍ່ວາງ   ບ້ານຊ້າງບ້ານໜອງ
ບ້ານຄອງບ້ານບານ   ຢ່ານານເອົາໄປ
ປຸ່ງໃຍນາຂາບ   ບ້ານຍາບນາເພິງ
ລັດລົງຊູ່ດ້ານ   ທ່າລ້ານເມືອງມຽນ
ປາກຽນທຸກແດນ   ບ້ານແປນສອງຮັກ
ບ້ານພັກຂາຍເຫລັກ   ເຕັກໄປຍ້າຍຍ່າງ
ບ້ານອ່າງຊາຍຄຳ   ແນບນຳໄປເຝົ້າ
ຊຸມເສົາ[18] ນາບົວ   ບໍ່ກົວເອົາໂທດ
ເມືອງໂປດເມືອງປາງ   ລົງທາງກ່ອນໝູ່
ຜາທັ່ງໄຂຢູ່[19]   ນາຊູນາເໜີ[20]
ບ້ານເສີບ້ານສີ   ໜອງກ້າພູມີ
ຊ້າງສີພັນເທື່ອ   ລົງທາງພູອ້າວ
ສັ້ງສາວຄັ້ງເມືອງ   ເຄືອງໃຈມົງມີ່
ສົມສີໜອງຄ້າງ   ເຂດອ້າງສູຍເມືອງ
ຮຸ່ງເຮືອງເລີຍເສົ້າ   ເອົ້ານ້ຳອາຫານ
ເປັນຂອງສະຫານ   ເອົາຕີເອົາຟາດ

---

[14] ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕໍ່:   ເອົາໄປທົ່ວໜ້າ.

[15] ສະບັບເດີມ: ໄປລາວ.

[16] ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມເຂົ້າໜ້າ: ໄທເໜືອ (ແກມຮາດ).

[17] ສະບັບເດີມ: ບຳລະບໍໄລ.

[18] ສະບັບ ພູມີ ວົງວິຈິດ: ສຸມເສົ້າ.

[19] ສະບັບ ພູມີ ວົງວິຈິດ: ຢ່າໃຫ້ໃຜຢູ່.

[20] ສະບັບ ພູມີ ວົງວິຈິດ: ຢ່າຊູພ່າຍໜີ.

ໂອກາດເມືອງມ້າງ
ເສິກໄດ້ລົວລົງ
ເອົາຜ່າເອົາລົວ
ກິ່ວຫຍ້າລັງໂພນ[21]
ໄຫມ່ານໄຫຍວນ
ຍິງສາວຮ້ອງໄຫ້
ນ້ຳເນດນອງຕາ
ວັດວາສູນເສົ້າ
ຍໍລົວໄປຊໍ້າ
ແຕ່ນັ້ນທັງປວງ
ເມືອງນີ້ທ່ຽວທັບ
ຕັດຂາດໂຮມລົວ
ຈ້ານ້ຳ[22] ຊຽງຢາ
ໄປລຽບເກັບເອົາ
ຂອງເຮົາແຕ່ພໍ່
ຊິ່ວຍາມບ້ານຊ່າວ
ພູຊາວບ້ານຫວດ
ນາພິງສາມຫຍ້າ
ທ່ຽວທັບໂດຍຕາມ
ແລ້ງລີ່ນາຈອນ
ໄປຈັດລົວລົງ
ເອົ້າສູ່ສົມພານ.

ຮ້ອງລາງຫິວໄຫ້
ເອົາປົງຄຳຄ່າ
ເອົາຕົວເປັນອ້າ
ເສິກໂຈນແຜ່ນານ
ທັງພວນທັງລາວ
ເສິກໄດ້ປັບກັບ
ຊຽງແດດຊຽງວາ
ບ້ານເປົ້າບອມພໍ
ລົງກ້ຳເມືອງຫລວງ
ຂຸນຫລວງຝ່າຍພີ້
ເພຍພັນຜູ້ອາວ
ບ້ານບົວບ້ານກ້ຳ
ບ້ານຊານ້ຳຈຽບ
ບ້ານງິ້ວບ້ານເຕົາ
ບ້ານກໍ່ແຝງລົວ
ບ້ານບ້າວສວນລູ[23]
ໄປກວາດລົວລົງ
ທັບຟ້າໄຫອັນ
ບ້ານໜາມບ້ານໝີ່
ບ້ານມອນເມືອງກັດ
ດິນອິງຢ່າຢູ່

ບົດທີ 5 ເຈົ້າສາລີ ແລະເຈົ້າສະ ສອງອ້າຍນ້ອງ ກໍໄດ້ລົງພ້ອມກັບນາຍໄທ

ແຕ່ນັ້ນມີນານ
ທັງລ້າຍທັງຜອງ
ລັດກວາດລົວລົງ
ກຶຫານເຫລືອແຮງ
ລາດລ້ອຍລາໄປ
ທາງໄກມາກມາຍ

ເຈົ້າສານຍົກຍ້າຍ
ສອງອົງພູວະນາດ
ຍະຍົງຍະຍາບ
ລູກແພງຍັງນ້ອຍ
ຕາມແຕ່ວິໄສ
ງົວລວາຍທັງລົບ

---

[21] ສະບັບ ເດີມ: ກິຫຍ້າລັງໂທມ.

[22] ສະບັບເດີມ: ຈະນ້ຳ.

[23] ສະບັບ ພູມີ ວົງວິຈິດ: ບ້ານບ້າວບ້ານພູ.

ລີພົບໄຫລຫລັ່ງ
ຄັບຄັ່ງເນືອງນອງ
ອອກເມືອງຫລຽວຜໍ່
ຕ້ານຕໍ່ຈາກັນ
ນີ່ນັບເດັກນ້ອຍ
ຄັ່ງຄ້ອຍເນີທອງ
ທາງຫລວງລະໄວ້
ພ່ອງໄຫ້ພ່ອງຫົວ
ພ່ອງກົວຄໍາຕາຍ
ລາງພ່ອງເສຍດາຍ[24]
ກົວຕາຍອຶດເຂົ້າ
ຈໍາເຈົ້າເລີງເລີງ
ຄອບຄົວລົງໂຮມ
ທ່າໂທມທ່າເຮືອ
ທາງເໜືອທາງຕໍ່າ
ທຸກສໍ່າອົບຂວາຍ
ຫາເຂົ້າທັງເກືອ
ຫາເຮືອທັງແພ[25]
ຫລີງແລປ່າໄມ້
ແຕ່ງໄວ້ເລີຍລົງ
ປິດປີງປາກນໍ້າ
ຄໍາທຸກຂະມອດຂ້ອນ
ເກີງພວກຊາວຄົວ
ເຈົ້າຫົວໜ້າເນນ
ເຂົ້າເຜນບໍ່ທັນ
ຈັງທັນບໍ່ຣອດ
ຫົວຫອດຄາງແຄນ
ໝື່ນແສນພາຍນອກ
ແມ່ອອກທັງຫລາຍ
ຂຸນນາຍທັງປວງ
ເຫລືອຫວງທຸກອ່າວ
ຈັກກ່າວພາຍຫລັງ
ພ່ອງໜີພ່ອງຍັງ
ເຜພັງແຕກມ້າງ
ຕົກຂ້າງເມືອງແກວ
ໄປຊອດໄປແຜວ
ລີ້ຢູ່ພັກນອນ
ລ້ຽງລູກທັງຫລານ
ເມືອງແທ້ເມືອພານ
ພ່າງງານຊຸ້ນນ້ອຍ[26]
ພໍຣ້ອຍນາຍສິບ
ຄົນດິນເຂົ້າບວດ
ຝູງປວດເປັນນາຍ
ເສຍຄາຍເອົາຈິດ
ຂຽນຂີດລາຍຄົວ
ເອົາງົວໃສ່ຕ່າງ
ເມືອງພ່າງເມືອງງານ
ບ້ານລັບເມືອງໂຄມ
ປັດກວາດລົງໄປ
ເຊື່ອໄທຄວາມຍົວະ[27]
ເຍົ້າຄົວລົງ[28]
ປະສົງເມືອງກວ້າງ
ມັກສ້າງນາແທ່ນ
ບໍ່ຍາກບໍ່ແຄນ[29].

---

[24] ສະບັບ ພູມີ ວົງວິຈິດ: ຜ່ອງຈົ່ມເສຍດາຍ
[25] ສະບັບ ພູມີ ວົງວິຈິດ: ທ່າເຮືອທ່າແພ.
[26] ສະບັບ ພູມີ ວົງວິຈິດ: ຂ້າງງານຊຸນນ້ອຍ.
[27] ສະບັບ ພູມີ ວົງວິຈິດ: ເຊື່ອໄທຄວາມຍົວະ.
[28] ສະບັບ ພູມີ ວົງວິຈິດ: ໃຫ້ໄລ່ຄົວລົງ.
[29] ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕໍ່:   ທຸກແດນບໍ່ໄວ້.

ບົດທີ 6 ນາຍໄຫຕົວະຍົວະເອົາຄົວໄປ ວ່າຈະເອົາໄປສ້າງບາແຫ່ນ ເມື່ອໄປຮອດແລ້ວ ເລີຍຕີຄົວຂ້າມຂອງ

ຍົວະເຍົ້າເສຍຄາຍ
ພອຍຈັດຄົວກາຍ
ຄົນຫລາຍກ້າໂກດ[30]
ເກືງຂອງນ້ຳໃຫຍ່
ເຮັດໄຮ່ທຳສວນ
ບໍລະບວນຈ່ຳຍ້າຍ
ຄັບຄ້າຍຄາໄປ
ນາຍໄຫຊ້ຳບອກ
ໜີອອກພັນລຳ
ດຳນາເດືອນຫົກ
ຝົນຕົກທີ່ທົ່ມ
ລະງົມເດືອດຮ້ອນ
ຂອດຂ້ອນຄົນຕາຍ
ໜອງຄາຍລ້ຳເລີດ
ບັງເກີດກົບລະທົບ
ເສຍຄົນມໍລະບາດ
ຝູງໄຫຄົວ[31]
ເຂີນຂາດເຂົ້ານ້ຳ
ທຸກເຮັ່ງກ້ຳ
ອຳເຂືອກເຫລືອຫລາຍ
ກົນແໜງພາຍຕົວ
ງົວ ແລະຄວາຍ
ຈົບຫາຍເສຍເປົ່າ
ບ້ານເກົ່າເຮື້ອ
ເປັນປ່າຜັກທົມ
ຮົມມະໂນ
ໃນໃຈໂສກເສົ້າ
ຜູ້ຢູ່ບ້ານ
ຂາຍເຂົ້າເອົາເງິນ
ເຂົ້າເຕັມເລົ້າ
ເພິ່ນຫາກເອົາເສຍ
ເຂົ້າເຕັມເງຍ
ເພິ່ນຫາກເອົາແລ້ວ
ທັງເຄື່ອງຢ້າວ
ປັດແຜ້ວບໍ່ຄາ
ສາລິກາຈາຜົວຄືຄ້ອຍ
ເອົາລູກນ້ອຍ
ມາຢູ່ແທນເຮືອນ
ສອງສາມເດືອນ
ເຈົ້າເຮືອນມາຮອດ
ໄດ້ຂໍແວ່ຈອດ
ເຊົາຢ້າວເຊົາເຮືອນ
ມາຍືນທຸກໜໍ່
ໄດ້ຂໍເຊົາເຮືອນ
ມາຍືນເອີອນ
ໄດ້ຂໍເຊົາບ້ານ
ມາຂີ້ຄ້ານ
ຂໍເຂົ້າເງຍໂຕ ໜ່າຍເດ !
ໜ່າຍບໍ່ແພ້
ເວນຫາກພາເປັນ
ບໍ່ຢາກເຫັນ
ເລົ່າມາພົບພໍ້
ໜ່າຍໄຫທໍ້
ກືຫາບຂາຍເກືອ
ໜ່າຍໄຫເໜືອ
ຂາຍເກືອ ແລະພ້າ
ໜ່າຍໄຫຂ້າ
ຄ້ຽວໝາກເບຍເຍຍ

---

30 ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕໍ່: ວາງໂທດອັນໜັກ ກັກຕົວດຶງໄປ ຜັກໄລ່ເມືອງນອງ.

31 ສະບັບ ພູມີ ວົງວິຈິດ: ໄຫຄົວອຸບາດ.

ລະໄລເສຍ
ຮີດແຕ່ເຄົ້າ
ຮີດມື້ຮວາຍ[32]
ບຸ່ງແຕ່ຕ່ຽວ[33]
ເປັນໂຊນໂກນ
ໂລກປັ້ນແປ
ເປັນດາວຄວັນ
ພູລັ່ນກ້ອງ
ໝາບັນເມືອງ
ເມືອງ ແລະບ້ານ[34]
ຝົນຕົກຮຳ
ດາວເຮື່ອແຈ້ງ
ເຂົ້າຢູ່ຄົກ
ເຂົ້າຢູ່ບຸງ
ສັດຢູ່ບ້ານ
ເມື່ອລາຕີ
ເຜີ້ງຢູ່ກ້ຳ
ເຜີ້ງຢູ່ຜາ
ຄົນທຸກໄຮ້
ຍິງສິບປີ
ຝູງຄົນຮູ້
ໄຟລຸກລາມ
ທຸກເຮັ່ງກ້ຳ
ລັກຂອງພະ
ລັກຂອງທານ
ເອົາພະເຈົ້າ
ລັກຂອງຄົນ
ຂຸດພະທາດ
ຍັງຈັກເຫັນ

ໄມ້ເຈຍເໜັບເກົ້າ
ຂັດຜ້າຝັກຫວາຍ
ພາຍກົງກີປຽດ
ສາຍຫລຽດພາຍໂຍນ
ສົງມາຄ້ຽວໝາກ
ດູຫລາກຫລາຍອັນ
ແຜ່ນດິນໄຫວຫວັ່ນ
ສຽງສະໜັ່ນທັງເມືອງ
ກາງຄືນຫອນເຫົ່າ
ສູນເປົ່າບາງບົກ
ແຜ່ນດິນກາຍເມືອ
ເຫັນແດດກາງຄືນ
ມາເຕັມຂຶ້ນສູງ
ບິນໄປຊີຊວ່າ
ມາບ້ານບໍ່ໜີ
ເຫັນຮຸງກິນນ້ຳ
ຈັບກິ່ງສາຂາ
ແປງຮັງງ່າໄມ້
ເລີຍເກີດເປັນດີ
ເອົາກັນເວົ້າຊູ້
ທ່ານບໍ່ເອົາຄວາມ
ບັງເກີດພື້ນນ້ຳ
ຂຳເຂືອກໂຂນມານ
ມາໄວ້ເສຍການ
ມາລ້ຽງລູກເຕົ້າ
ມາຫລໍ່ເປັນເງິນ
ໄປຂາຍໃນລາດ
ທັງກິນຫລັກສິມ[35]
ຕໍ່ເຕີມໄປເລື້ອຍ.

---

32 ສະບັບ ພູມີວົງວິຈິດ: ແຕ່ງເພີ່ມຕໍ່: ມີແຕ່ມືດາຍ.

33 ສະບັບ ພູມີວົງວິຈິດ: ບຸ່ງຕ່ຽວຈຽດ.

34 ສະບັບ ພູມີວົງວິຈິດ: ບ້ານເມືອງເກົ່າ.

35 ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕໍ່: ຈະເຫັນໄຫນໍາຈີນ.

ບົດທີ 7 ຊາວຄົວພວນທັງຫລາຍໄປຮອດໜອງຄາຍ ໄດ້ເຫັນໄທປັນກັນເຮັດຂ້ອຍ ພວກເຈົ້ານາຍເອົາຜູ້ສອງສາມຄົວ ຄັນເຫັນເປັນດັ່ງນັ້ນ ກໍພາກັນຄິດໂຕນໜີລັດປ່າລັດດົງ ຄືນເມືອຫາບ້ານຫາເມືອງ

ບັດນີ້ ຈັກຈາ ຈັກຫາໃຫ້ກວ້າງ
ສືບສ້າງສິນທານ ຕາມແຕ່ໂວຫານ
ແປງສານໂຄງກາບ ໂສພາບພາທີ
ຢ່າມີໂພຍຕ້ອງ ຂອດຂ້ອງເຖິງຕົວ
ສ່ວນດັ່ງໄທຄົວ ມົວເມົາອຶດຢາກ
ເປັນພາກເປັນໄພ ຕາມແຕ່ວິໄສ
ຊອກເຂົ້າຫາປາ ຜະລາຜະລັງ
ທຸກຍັງເຂາະຂອດ ຄຶດຮອດລຳຕາຍ
ດັບວາຍສິ່ງຂອງ ພໍ່ໝູ່ນາຍກອງ
ກໍ່ຄອງອຳນາດ ຫາອຸບາດທຳກິນ
ຄືຄົນຜີບ້າ ຊະໂລຊະລາ
ຮັກສາພວກໄພ່ ຈັດໄລ່ໂຮມກັນ
ຫລາຍວັນບໍ່ຄືບ ພ່ອງຫລົບໄປມາ
ພ່ອງຄາຢູ່ຢ້າວ ພ່ອງຟ້າວໂຕນໜີ
ພ່ອງມີຄົນໄຂ້ ພ່ອງໄວ້ຄົນໂຊ
ໂລຄາບຮຸດຕ້ອງ ພ່ອງຍັງເນີປ່າ
ໄປຄວ່າໂຄຈອນ ໂດຍອາຈານທອນ
ໂຜດທານຊີວິດ ບຸບພິດປານີ
ແຕ່ນັ້ນລາຕີ ລັງສີຄ້າຍຄ້ອຍ
ໄພ່ນ້ອຍຊາວຄົວ ຍິນກົວຢາກເຍື້ອນ
ຢູ່ຄ້ຳກິນ ແຜ່ນດິນໜອງຄາຍ
ກາຍເກີດເປັນທຸກ ເກີດຂິຍຸກມາກຫລາຍ
ຄົນຕາຍທຸກມື້ ຊື້ເຂົ້າຊ້ຳແພງ
ນາແຊງໄປ່ແກ່ ກິນແຕ່ໜໍ່ໄມ້
ນາຍໄທຫຽວທ່ອງ ເວົ້າປ່ອງຄວາມມາ
ທຸລະທຸໄລ ຈັດກວາດເຂົ້າໄປ
ບໍ່ໄຄຄາດແຄ້ວ ກວາດແລ້ວຄົວລາວ
ສິ່ງຄາວໄປໜ້າ ບາດຫລ້າພາຍລຸນ
ຄຶດປຸນດູກີ່ ໜ້າທີ່ແວນດີ
ໂຕນໜີແວນເປືອງ ເຖິງເມືອງຈິ່ງເຊົາ
ຮີບເດົາດາກ້າ ດູໜ້າຍິງຊາຍ

ຊັບສິນອານັດ ລະຫັດອຳດີ
ລາຕີທ່ຽງຄ້າຍ ຮີບຍ້າຍລົງເຮືອ
ເບື້ອງໃຕ້ເບື້ອງເໜືອ ພາຍເຮືອລ່ອງໄຫລ
ລົງໄປແລ້ວຈອດ ໃສ່ທອດເຮືອລົງ
ພາຍກົງອັດໄຫ່ ແລ້ວໄລ່ຄົວຄືນ
ເອົ້າໄພເກິງເກື່ອນ ລະເລື່ອນເລີຍຕາຍ
ໜອງຄາຍຫ້ວງຕື່ນ ເອົາຂຶ່ນເນືອງນອງ[36]
ແຕ່ງກັນເລວຮີບ ເອົາກີບນຳຄົວ
ຜົວເມຍພັດພາກ ໜີຈາກຄົນທາງ
ລາງຄົນເອົ້າໄດ້ ຮ້ອງໄຫ້ໃນດົງ
ລາງຄົນຫລົງ ໃນດົງປ່າໄມ້
ລາງຄົນໄດ້ແລ້ວ ເລີຍລັກໂຕນໜີ
ເກຈິຈະບາ ຄ້າງຄາໃນດົງ
ລາງພ່ອງນັ້ນ ເສິກຜ່າໃນເຮືອນ
ເອົ້າ ແລະເກືອ ວາງເສຍມາກລົ້ນ
ຝູງພ່າຍພົ້ນ ພົ້ໝູ່ເລີຍໄປ
ເກິງຂັ້ນໄດ ຫາປະຕູຫ້ຳ
ຈົ່ງພົບພົ້ ຝູງແຕກໂຮມກັນ
ລົງຂັ້ນໄດ ເປັນຫີນກ່າຍກ້ອນ
ຟ້າແດດຮ້ອນ ຝົນເລົ່າເລີຍຕົກ
ຕົກທາງໂຮມ ປົກເປັນຫລາຍເສັ້ນ
ຜູ້ມັກເວັ້ນ ຫລົງຢູ່ໃນດົງ
ໝົດເອົ້າກົງ ຫາກິນລູກໄມ້
ຫາບໍ່ໄດ້ ຕາຍຕຸ່ມທັງຄົວ[37].

ບົດທີ 8 ເສຍຄົນຫລາຍໃນເວລາເອົາເຈົ້າເບື່ອໝາກໜ້ອງ ຕາຍໄປສອງສ່ວນສາມ

ບາງພ່ອງນັ້ນ ເສຍຜົວທັງລູກ
ບາງພ່ອງນັ້ນ ເສຍລູກທັງຂອງ
ລາງຄົນນັ້ນ ຢອງໄປເຈຍລະຈາກ

---

36 ສະບັບເດີມ: ເອົາຄືນເມືອງນອງ.

37 ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕໍ່: ໃຜບໍ່ກຸ້ມຕົວ ຈົບຫາຍວາຍວອດ
ຜູ້ເອົາຕົວລອດ ກໍຫອດອຶດຫິວ
ເຈັບທ້ອງເຈັບກິວ ອຶດຫິວຮ່ຳຮ້ອງ ສຽງກ້ອງໃນດົງ.

ອ້າມປ່າໄມ້	ບຸນຫາກຍັງຊູ
ຂຶ້ນເມືອພູ	ເສິກຢູ່ນຳກົ້ນ
ຂຶ້ນພົ້ນແລ້ວ	ຈັດຈິ່ງຫາກັບ
ເຂົ້າປ່າໄລ່	ເສິກນຳບໍ່ທັນ
ເຂົ້າປ່າທັບ	ເສິກນຳບໍ່ໄດ້
ເຂົ້າປ່າໄມ້	ຫລົງຝ່າຍພູໂຮງ
ພັດກັບຫລົງ	ໃນດົງພໍ່ໝູ່
ລາງພ່ອງນັ້ນ	ຄ້າງຢູ່ໃນໄພ
ຕາມແຕ່ວິໄສ	ໄຕ່ຮອຍນຳຊ້າງ
ອ້າມຍັ່ງກວ້າງ	ເຖິງທີ່ເຊົານອນ
ໄປໂລຈອນ	ເລີຍເຫັນໝາກໄມ້
ເກັບໄດ້ແລ້ວ	ມາຜ່າຊີມດູ
ແຊບຫອມຫວານ	ມັດຫຸ່ປຸນປານແປກ
ຂອງແຊບແທ້	ເຮົາຈູບດີຫລື
ບຸນພາຍຫລັງ	ເຮົາມີຈິ່ງໄດ້
ກອງໄວ້ແລ້ວ	ໄປຫາບເອົາມາ
ກິນຜະລາ	ມີແຮງອີ່ມທ້ອງ[38]
ຍູທ່າງຍ່າງ	ໄປໜ້າເປັນສັງ
ໝູ່ມາຫລັງ	ບໍ່ໃຫ້ລ້າ
ໝູ່ມາຫລ້າ	ກາມຊື້ວ່າແພງ
ສີແດງໆ	ບໍ່ຄອຍຕາລ່ຳ
ໝາກຄໍ້ຕ່ຳ	ຂາຍໃຫ້ບາດສາມ
ໜ້ອຍບໍ່ນານ	ອາຫານລ້ຳເລີດ
ໄສ້ຢູ່ທ້ອງ	ກາຍເກີດເປັນໄພຍ
ເປັນໂຮງໂຮຍ	ຄືລີງເມົາໜ້ອງ
ໄສ້ຢູ່ທ້ອງ	ບັງເກີດໂງເງ
ເປັນຮວ່ານເຮ	ເໝືອນໄກ່ບ້າຄ້ອນ
ພິດພຸ່ງຮ້ອນ	ຈຸດຕິຕາຍໄປ
ຜູ້ກິນໜ້ອຍ	ຍັງອ່າວນານຕາຍ
ຜູ້ກິນຫລາຍ	ໄປມໍລະນາດ
ເພຍຊາມາດ	ທັງໝູ່ຕາຍກອງ
ປະເສຍຂອງ	ກາງດົງດ່ານດ້າວ
ຫອກ ແລະງ້າວ	ກົງເຄື່ອງອັນດີ
ມີຄຸດແສງ	ອັນແພງຂະໜາດ

[38] ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕື່: ຍູທ່າງຮ້ອງ ຍູທ່າງວາຈາ
ຝູງໄປໜ້າຍັງບໍ່ເປັນສັງ.

ເສຍຄຸນຄ່າ ອາກາດອັບຄົງ
ປະເສຍກົງ ເງິນຄຳບໍ່ເອື້ອ
ຕາຍຢູ່ເຮື້ອ ເປັນເພດເປັນຜີ
ເສຍຍຄົນດີ ກວານຫລວງເຈົ້າເສັນ
ດັບຊີບເຊື້ອ ຫລານເຫລັ່ນບໍ່ຫລໍ
ໝູ່ມາກ່ອນ ຕາຍໝົດບໍ່ຍັງ
ໝູ່ມາຫລັງ ສ່ວນຍັງແວນໜ້ອຍ
ຍິນທຸກຄ້ອຍ ຮ້ອງໄຫ້ຫາກັນ
ສຽງນີ່ນັນ ເພິ່ງກົວຟັ່ງຟ້າວ
ປືນ ແລະງ້າວ ຂີນໄຂວ່ວາງໄປ
ກາງໄພສົບ ຄີລີຂົ່ງເຂດ
ຂອງຕ່າງເພດ ບໍ່ຮູ້ຢ່າກິນ
ຂອງຕ່າງດິນ ບໍ່ທ່ອນເຄີຍຮູ້
ມາມຸດມູ້ ອຶດຢາກມົວຕາຍ
ມາເສຍດາຍ ຄົນຕາຍມາກລົ້ນ
ໜີເສິກພົ້ນ ມາຈວບຄວາມຕາຍ
ເພື່ອນດັ່ງຄວາມ ນິຍາຍກ່າວໄວ້
ຜ່າຍສ້ອນແລ້ວ ໜີມາຈວບໄຊ
ຜ່າຍພາໄນ ມາຈວບພາບ້ານ
ຜ່າຍແບ້ນລ້ານ ມາຈວບໂລັຍຫລວງ
ຝູງຕາບາຍ ທັງປວງກ່າວໄວ້
ກໍຫາກໄດ້ ຄືດັ່ງດຽວກັນ
ເວນນຳທັນ ລືຜັນຜ່າຍຫລີກ
ທົ່ວລະຄີກ ວິບາກພາຍຫລັງ
ຜົວເພີ່ນຍັງ ຜົວໂຕຕາຍຈາກ
ໝ້າຍ ແລະຮ້າງ ມັນຫາກເລີງມີ
ຕາຍເປັນຜີ ຢູ່ດົງດອນໄມ້
ຕາຍຄ້າງໄຄ້ ເປັນເຫຍື່ອປາຝາ
ຕາຍຢູ່ໃນພູໃນຜາ ບໍ່ມີຄົນມ້ຽນ
ທຸກທີ່ທ້ຽນ ຍິນໜ່າຍອາເຫຍືອງ
ຄົນທັງເມືອງ ບໍ່ເລີງສິ່ງນີ້
ເບິ່ງພຸ້ນພີ້ ເຫັນຢູ່ເອືອເລືອ
ກົກໄມ້ໃຫຍ່ ແຮ່ງຊ້ຳມີຫລາຍ
ກົກໄມ້ຕາຍ ດູຫລາຍຂອນໄຂວ່
ເບື່ອລູກໄມ້ ໝາກໜ້ອງຜີເວນ
ໂອນໍ ! ຝູງບໍ່ຕາຍ ເລີຍໜີເສຍຈາກ

24/VII ຫາມຈຳໜ່າຍ

ພາກທີ່ນັ້ນ	ໄປປ່ອງທາງຄົນ
ເຈົ້າສາລີ	ຕີຄົວໝູບໝູ່.

ບົດທີ 9 ເຈົ້າສະ ໜີມາຕາມຫລັງ

ເຈົ້າສະນ້ອງ	ຍັງຢູ່ໝອງຄາຍ
ຝູງຄົວລາວ	ກວາດກາຍໄປໜ້າ
ເດືອນຫ້າຄ້ອຍ	ແຮມຄ້າງເພື່ອນດາວ
ພະຍາລາວ	ຈຳກິນນໍ້າປ້ອຍ
ຂຸນໃຫຍ່ນ້ອງ	ທັງອາດທັງຍາ
ຈັດເອົາມາ	ກິນນໍ້າສັດຈະ
ເຈົ້າສະຣ້າຍ	ເລີຍລະຄົວໜີ
ຕາວັນຕົກ	ເອົາຣີບກິນແລງ
ຕາວັນແລງ	ເອົາມາລຽບຕ້າຍ
ເຈົ້າສະຣ້າຍ	ມີບ່າວຍໍ່ມື
ເປັນອືລື	ຄືຄົນຜີບ້າ
ໃຜບໍ່ຢ້ານ	ຕາຍຊໍ້າລອບມັນ
ຕາວັນຂຶ້ນ	ປອມພູຜ່ອມຜໍ່
ເຈົ້າສະອ້ານ	ຄົວສູ່ບາວາ
ເອົາເຮືອຊາວ	ລົງໄປລີວລີ
ຮອດຝັ່ງນໍ້າ	ເກີງທີ່ແລມຊົບ[39]
ເອົາຄົນໝູບ	(ນຳ)ຫລັງພໍໝູ່
ຄາດຄູ່ໄວ້	ກີ່ຫອກ ແລະປືນ
ໝູ່ໜີກ່ອນ	ບໍ່ເປັນທາງ
ໝູ່ໜີກາງ	ເປັນຄໍ້ແຄ້
ໝູ່ໜີຫລ້າ	ທາງແທ້ບໍ່ຫລົງ
ຂຶ້ນເມືອດົງ	ຫລຽວລົງອໍ່າອໍ່າ
ຫລຽວເຫັນນໍ້າ	ສຸດຊົ່ວຕາແລ
ນົກກາງແກ	ສອນກາແອ່ນເຄົ້າ
ນົກແຂກເຕົ້າ	ເປັນໝູ່ມາກາຍ
ເຫັນຄົນຕາຍ	ໃນດົງປ່າກວ້າງ
ໜ້າດ່ານຊ້າງ	ເກີງທີ່ເຊົານອນ

[39] ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕໍ່: ໜີດທຸກຄົນ ເດີນໄປຮອດບ້ານ
ບາດນີ້ໃຜບໍ່ຢ້ານ ສັດຕູໄລ່ນຳທັນ.

ໄປຄອນໆ
ຟ້າຄື່ນເຄົ້າ[40]
ດອກກະຈາຍ
ງື້ວກ່າຍກ້ານ
ເຫັນນາງນີ
ຂ້າມເຫດທ້ອງ
ຈັກເຊົາແຄນ
ເຊົາບໍ່ໄດ້
ເຈົ້າສາລີ
ຝົນຊວາດເອື້ອນ
ເຫັນຫົວກອຍ
ປາດແຊ່ນ້ຳ
ມືນຕາເຫັນ
ຕື່ນແຕ່ເຊົ້າ
ເປັນວອຍໆ
ເປັນອືດລືດ
ຜູ້ກິນຫລາຍ
ເບິ່ງປ່າໄມ້
ເກີງເວລາ
ຍົກຍ່າງຍ້າຍ
ຂ້າມໄພຂວາງ
ເບິ່ງເຂົ້າໄທ່
ເບິ່ງເຂົ້າກີ່ງ
ກັບແຈ່ວກ້ຽງ
ຜົວ ແລະເມຍ
ຝູງລູກເຕົ້າ
ສາລິກາ
ປະລູກນ້ອຍ
ອິນດູເດ
ເປັນກ່ຳພ້າ
ໃນໄພຂຽວ
ຂ້າມເຫດທ້ອງ
ເຈົ້າຜູ້ດີ
ສ່ວນຜູ້ຮ້າຍ
ເກົ້າຊະລາ

ຊູ່ວັນເດີນເຊົ້າ
ປີໃໝ່ຝົນຮວາຍ
(ເບີຍ)ບານຫລາຍຍ່ານ
ເຮືອງເຮື່ອສາຂີ
ຍິນດີຫຸຍຮ້ອງ
ເກີງເດີ່ນຕັກແຕນ
ທີ່ແດນກົກໄມ້
ເໝັນຄາບຄາວຜີ
ໜີມາເດືອນແປດ
ຟ້າແດດສອຍວອຍ
ກອງກັບເດຍລະດາດ
ຈົມໄວ້ຮຸ່ງຄືນ
ອັນໃດຢາກເຂົ້າ
ກິນເຂົ້າເໝືອດກອຍ
ບໍ່ຈືດ
ໃນທ້ອງໃນຄີງ
ບໍ່ຕີງຕົນໄດ້
ເປັນໝອກມົວຕາ
ພໍ່ງາຍຈິ່ງສວ່າງ
ດີແລ້ວເລົ່າໄປ
ຫລາຍຄືນຄາດເຄັ່ງ
ໄທ່ກໍລົງ
ກີ່ງກໍສ້ຽງ
ຄືຜີໂພງເລຍ
ວາງເສຍແມ່ເກົ້າ
ໜີປະມານດາ
ຈາຜົວຄືຄ້ອຍ
ຍັງບໍ່ທັນຕາຍ
ສາຍຄໍເຈົ້າຫລ້າ
ໄທ້ຢູ່ຄົນດຽວ
ບໍ່ມີພີ່ນ້ອງ
ເກີງເຂດຄີລີ
ຍັງດີທັງຄ້າຍ
ປະປ່ອຍເສຍກັບ
ໂພຄາໝົດສ້ຽງ

[40] ສະບັບເດີມ: ເກົ້າ (ຟ້າຄື່ນເກົ້າ).

ລູກເຂີຍລ້ຽງ
ລູກເຂີຍຕາຍ
ຄອຍອົ່ມເທົ້າ
ເຂົ້າແມ່ນມັນ[41]
ເງິນບາດເຟື້ອງ
ຕົວບໍ່ຕາຍ
ແກ້ວແຕ່ຟ້າ
ຂອງຕີນມື
ພໍ່ແມ່ໄວ້
ຝູງໄທຄົວ
ເລີຍລ່ວງເທົ້າ
ເປັນສອຍວອຍ
ທຸກສ່ຳໄມ້
ດວງມາລາ
ດອກຄັດເຄົ້າ
ສຽງລະງົມ
ຈັກຈັ່ນຮ້ອງ
ມົວໆສຽງ
ເປົ້າກ່າງກີ້
ດອກດຳດວນ
ດອກກາຍຮ້າງ
ດອກຈັງກອນ
ຕາວັນຄ້ອຍ
ຕາວັນແລງ
ຕ່າວຄືນເມືອບ້ານ.

ຄອງແຕ່ເອົາບຸນ
ລູກຊາຍຍັງເຝົ້າ
ໜັກເໜື່ອຍເຫລືອແຮງ
ຢາຄວັນແມ່ນເອື້ອງ
ຊື້ບໍ່ພໍງາຍ
ເສຍຂອງຫລາຍແລ້ວ
ຊື້ສູ່ກັນກິນ
ຍັງຮູ້ອອກບໍ່
ກາງຕໍ່ທາຍເສຍ
ເໝຍໆໝ່ຳເວົ້າ
ເກິງເດີ່ນດອນກອຍ
ຄືຍິນສະຫວ່າງ
ຫລາຍຕ່າງນານາ
ຫອມຮວາຍຮວາດເຮົ້າ
ກັບດອກກຽງລົມ
ໃບໄພເກື່ອນທ້ອງ
ສຽງຊ່າຍຸງງຽວ
ແກ້ວ[42] ກຽງແຂກເຕົ້າ
ຊົມດອກອາຮວນ
ຄືສວນຄົນສ້າງ
ເປັນກິ່ນຊອນລອນ
ຄືຄົນຮວາດຮ້ອຍ
ລັບເລົ່າເສຍແສງ
ບາຄານກົ່ນອງຜົນຫລວງ

ຄ. ສະຫລຸບ ແລະສະເໜີແນະ

1. ສະຫລຸບ

ຊຽງຂວາງເປັນໜຶ່ງໃນຈຳນວນ 17 ແຂວງຂອງ ສ.ປ.ປ.ລ, ຕັ້ງຢູ່ພາກຕາເວັນອອກສ່ຽງເໜືອຂອງລາວ. ຫາກສັງເກດໃນແງ່ຍຸດທະສາດການທະຫານແລ້ວ ພູພຽງຊຽງຂວາງເປັນເຂດຍຸດທະສາດສຳຄັນແຫ່ງໜຶ່ງໃນພາກພື້ນອາຊີອາຄະເນ, ຫາກໃຜໄດ້ຄອບຄອງກໍບໍ່ຕ່າງຫຍັງກັບໄດ້ນັ່ງເທິງຄໍຊ້າງ, ດ້ວຍເຫດນີ້ເອງ ຈະເປັນການເຈຕະນາ ຫລືບໍ່ເຈຕະນາຂອງຂຸນບໍລົມລາຊາທີລາດບັນພະຊົນຂອງເຊື້ອຊາດລາວ ຈຶ່ງ

---

[41] ສະບັບ ພູມີ ວົງວິຈິດ: ແຕ່ງເພີ່ມຕໍ່: ເຂົ້າກິນລ້ຽງ ເໝັ້ນໝູ່ຫົວມັນ ດູດຢາຄວັນ ແມ່ນໃບເຄືອເອື້ອງ.

[42] ສະບັບເດີມ: ແລ້ວ

ໄດ້ຈັດສົ່ງລູກຊາຍຜູ້ກ້ອນເຈັດ ຄື ຂຸນເຈືອງ ຫລືຂຸນເຈັດເຈືອງ ຜູ້ເຊິ່ງຂຶ້ນຊື່ລືເດດທາງດ້ານທະຫານມາປົກຄອງເມືອງພວນ. ກ້າພວກເຮົາທວນຄືນເຖິງປະຫວັດສາດຂອງເມືອງພວນ ຕັ້ງແຕ່ສະໄໝຂຸນເຈືອງມາປົກຄອງ ໃນປີ ຄ.ສ 575 ເປັນຕົ້ນມາ ຮອດສະໄໝປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ ໃນປີ ຄ.ສ 1975, ເມືອງພວນເຄີຍໄດ້ເປັນສັກຂີພິຍານໃຫ້ແກ່ສະໜໍລະພູມໃຫຍ່ນ້ອຍນັບຫລາຍພັນຄັ້ງ, ເພາະໃຜໆ ກໍຫວັງຢາກຈະນັ່ງ " ຄໍຊ້າງ " ຂອງອົງເຂດອາຊີອາຄະເນແຫ່ງນີ້.

ເຖິງວ່າຈະກຶກຍໍ່າຍີປີ້ປົ່ນຈາກພວກສັກດີນາ, ພວກລ່າເມືອງຂຶ້ນທັງເກົ່າ ແລະໃໝ່ຈາກພາຍໃນກໍຄືຕ່າງດ້າວຫລາຍປານໃດກໍຕາມ, ແຕ່ຄົນລາວຊາວພວນ ກໍຍັງຢືນຢັນຕໍ່ສູ້ເພື່ອປົກປັກຮັກສາ ແລະພັດທະນາເຂດນໍ້າແດນດິນຂອງຕົນໄວ້ໄດ້ຕະຫລອດມາ, ຈົນໄດ້ຮັບສາຍານາມວ່າເປັນ" ດິນແດນວິລະຊົນ ". ສະນັ້ນ, ການຄົ້ນຄວ້າວິໄຈ " ກາບເມືອງພວນ "ອັນເປັນກາບທີ່ມີເນື້ອໃນສ່ອງແສງເຖິງສ້ຽວໜຶ່ງຂອງປະຫວັດສາດ ອັນໜ້າເສົ້າສະຫລົດໃຈຂອງຄົນລາວຊາວພວນເພື່ອໃຫ້ຄົນຮຸ່ນຫລັງໄດ້ສຶກສາຮຽນຮູ້ສືບຕໍ່ໄປນັ້ນມັນມີຄວາມຈຳເປັນຢ່າງຍິ່ງ ແລະອີກດ້ານໜຶ່ງກໍເພື່ອປົກປັກຮັກສາໄວ້ ເຊິ່ງມໍລະດົກພູມປັນຍາອັນລໍ້າຄ່າທາງດ້ານວິລະກຳ ທີ່ຄົນຮຸ່ນປູ່ຍ່າຕາທວດຂອງພວກເຮົາໄດ້ສ້າງມາໃຫ້ຄົງຢູ່ ຄຽງຄູ່ກັບຊາດລາວເຮົາຕະຫລອດການະນານ.

" ກາບເມືອງພວນ " ທີ່ພວກເຮົານຳມາຄົ້ນຄວ້າວິໄຈນີ້, ນອກຈາກ ສະບັບຂອງເຈົ້າຄຳໝັ້ນ ວົງກົດລັດຕະນະ ຣິບໂຣມ ແລະຣຽບຮຽງໄວ້ໃນປຶ້ມ " ພົງສາວະດານເມືອງພວນ, ລຳດັບກະສັດເມືອງພວນ ແລະຜູ້ສືບສາຍຕະກຸນ " (1952) ແລ້ວ, ພວກເຮົາຍັງໄດ້ນຳເອົາ " ກາບເມືອງພວນ " ຢູ່ໃນພາກເພີ່ມເຕີມຂອງປຶ້ມ " ປະຫວັດສາດເມືອງພວນ " ຂອງທ່ານ ພູມີ ວົງວິຈິດ ເຂົ້າມາປຽບທຽບກັບສະບັບຂອງເຈົ້າຄຳໝັ້ນ ວົງກົດລັດຕະນະ ທີ່ພວກເຮົາຖືວ່າເປັນຕົ້ນສະບັບຕື່ມອີກ. ນອກຈາກນັ້ນ, ພວກເຮົາບໍ່ສາມາດຊອກຫາຕົ້ນສະບັບອື່ນໄດ້ຕື່ມອີກ. ທັງນີ້, ກໍເນື່ອງຈາກວ່າໃນຊຸມປີ 70 ຂອງສະຕະວັດນີ້ ຄວາມຈະເລີນຮຸ່ງເຮືອງຂອງເມືອງພວນ ນັບຕັ້ງແຕ່ຕົວເມືອງຈົນເຖິງຊົນນະບົດໄດ້ມຸດມອດລົງ ຍ້ອນນໍ້າມືຂອງຈັກກະພັດອະເມລິກາກົ້ມລະເບີດເຜົາຜານເຮືອນຊານບ້ານຊ່ອງ, ວັດວາອາຮາມອັນເປັນທີ່ສະໜຸດທາງພູມປັນຍາຂອງຊາວພວນ ບໍ່ຍັງເຫລືອຫລໍແມ່ນແຕ່ເສົາຊີ້ຟ້າ. ສະນັ້ນ, ຈຶ່ງເປັນການຍາກທີ່ຈະຫາຕົ້ນສະບັບຂອງກາບເມືອງພວນທີ່ແທ້ຈິງໄດ້. ດັ່ງນັ້ນ, ພວກເຮົາຈຶ່ງຖືວ່າ " ກາບເມືອງພວນ " ສະບັບຂອງເຈົ້າຄຳໝັ້ນ ວົງກົດລັດຕະນະ ຣິບໂຣມ ແລະຣຽບຮຽງໄວ້ນີ້ເປັນຕົ້ນສະບັບ ແລະເປັນພື້ນຖານໃຫ້ແກ່ການຄົ້ນຄວ້າວິໄຈ.

" ກາບເມືອງພວນ " ບໍ່ໄດ້ລະບຸ ວັນ ເດືອນ ປີແຕ່ງ ແລະນາມຜູ້ແຕ່ງ. ຜ່ານການຄົ້ນຄວ້າວິໄຈ, ພວກເຮົາພຽງແຕ່ສັນນິຖານວ່າ ແມ່ນແຕ່ງຂຶ້ນ ພາຍຫລັງເຫດການທີ່ທະຫານໄທກວາດຕ້ອນຄົວຊາວພວນລົງໄປຮອດໜອງຄາຍແລ້ວ ມີຊາວຄົວພວນຈຳນວນເກືອບເຄິ່ງໜຶ່ງລັກໂຕນໜີ ກັບຄືນບ້ານເກີດເມືອງນອນ ຫລັງຈາກນັ້ນ, ຈຶ່ງປະພັນກາບນີ້ຂຶ້ນໃນລະຫວ່າງປີ 1835 ຫລື 1836 ເພື່ອເປັນການທວນຄືນເຖິງເຫດການອັນເສົ້າສະຫລົດໃຈທີ່ພວກເຂົາເຈົ້າໄດ້ຜ່ານ. ສ່ວນຜູ້ປະພັນກໍຄົງແມ່ນນັກປາດອາຈານ ທີ່ມີພອນສະຫວັນໃນການປະພັນກາບ ແລະຖືກກວາດຕ້ອນໄປຮ່ວມຂະບວນດຽວກັນ ຈຶ່ງສາມາດບັນລະຍາຍຂໍ້ມູນທາງທະຫານ, ການປົກຄອງໄດ້ຢ່າງຄ່ອງແຄ່ວ, ຊັດເຈນ ແລະປະພັນຖືກຕ້ອງຕາມຫລັກການປະພັນກາບທຸກປະການ.

" ກາບເມືອງພວນ " ຕາມຕົ້ນສະບັບມີທັງໝົດ 309 ວັກ ແລະແບ່ງອອກເປັນ 9 ບົດ, ແຕ່ລະບົດມີຈຳນວນວັກບໍ່ເທົ່າກັນ, ບົດທີ ໜຶ່ງມີ 38 ວັກ, ບົດທີ ສອງມີ 18 ວັກ, ບົດທີ ສາມມີ 19 ວັກ, ບົດທີ ສີ່ມີ 40 ວັກ, ບົດທີ ຫ້າມີ 21 ວັກ, ບົດທີ ຫົກມີ 39 ວັກ, ບົດທີ ເຈັດມີ 37 ວັກ, ບົດທີ ແປດມີ 61 ວັກ ແລະບົດທີ ເກົ້າມີ 36 ວັກ. ຕອນໃນແຕ່ລະວັກກໍບໍ່ຄືກັນ, ບາງບົດວັກໜຶ່ງແບ່ງອອກເປັນສອງຕອນ, ແຕ່ບາງບົດວັກໜຶ່ງພັດແບ່ງອອກ

ເປັນສາມຕອນກໍມີ. ສ່ວນການສຳຜັດແມ່ນເກືອບມີຄົບທຸກປະເພດການສຳຜັດຢ່າງເຊັ່ນ ສຳຜັດນອກ, ສຳຜັດໃນ, ສຳຜັດຂັ້ນອັກສອນ, ລຽນອັກສອນເຫລົ່ານີ້ເປັນຕົ້ນ.ຈຸດພິເສດອີກອັນໜຶ່ງເຊິ່ງຕາມທຳມະດາ " ກາບ" ແມ່ນບໍ່ມີຄຳບຸບພະບົດ ແລະຄຳສ້ອຍ, ແຕ່ຢູ່ໃນກາບເມືອງພວນບາງບ່ອນແມ່ນມີຄຳບຸບພະບົດ ແລະຄຳສ້ອຍປົນຢູ່ນຳ.

" ກາບເມືອງພວນ " ທັງເກົ້າບົດນີ້ ແມ່ນສ່ອງແສງເຖິງໂທດກຳຂອງສັກດິນາສະຫຍາມ ແລະສັກດິນາລາວຂາຍຊາດທີ່ກະທຳຕໍ່ປະຊາຊົນລາວຊາວພວນ ເຮັດໃຫ້ເຂົາເຈົ້າໄດ້ຮັບຄວາມທຸກທໍລະມານ, ບ້ານແຕກແຊກຂາດ, ລົ້ມຫາຍຕາຍໄປ, ຄອບຄົວພືວເມຍ, ລູກເຕົ້າພັດພາກຈາກກັນ ແລະພ້ອມກັນນັ້ນກໍໄດ້ສ່ອງແສງເຖິງນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຕໍ່ສູ້ເອົາຊີວິດແລກ ເພື່ອໂຕນໜີກັບຄືນສູ່ບ້ານເກີດເມືອງນອນ.

ການວິໄຈ " ກາບເມືອງພວນ " ຄັ້ງນີ້, ພວກເຮົາໄດ້ວິໄຈແຕ່ລະບົດເປັນລຳດັບຕັ້ງແຕ່ບົດທີ 1 ເຖິງບົດທີ 9. ທັງນີ້ ກໍເພື່ອເນັ້ນເຖິງຄວາມລະອຽດທາງດ້ານເນື້ອໃນຂອງກາບ, ເພາະພວກເຮົາສັງເກດເຫັນວ່າກາບໄດ້ປະພັນໄປຕາມລຳດັບເຫດການ ເຊັ່ນ ແຕ່ກ່ອນເມືອງພວນມີຄວາມສະຫງົບສຸກດີ, ແຕ່ໃນເມື່ອດ້າຍຫວຽດ ເຂົ້າມາປົກຄອງເຮັດໃຫ້ເມືອງພວນເກີດຄວາມວຸ່ນວາຍ, ປະຊາຊົນຕົກທຸກໄດ້ຍາກ, ເພື່ອຢາກປົດປ່ອຍຕົນເອງອອກຈາກແອກຄອບຄອງຂອງດ້າຍຫວຽດ, ເຈົ້າຄອງເມືອງພວນ ຈຶ່ງໄດ້ໄປຂໍທະຫານຈາກສະຫຍາມມາຊ່ວຍຕີຂັບໄລ່ດ້າຍຫວຽດ ໂດຍບໍ່ໄດ້ຄິດຄຳນຶງເຖິງເຈດຈຳນົງຮ້າຍຂອງສະຫຍາມ ທີ່ຫວັງກືນກິນດິນລາວທົ່ວປະເທດໂດຍເດັດຂາດ, ດັ່ງນັ້ນ ເມື່ອທະຫານສະຫຍາມໄປຕີຂັບໄລ່ພວກດ້າຍຫວຽດອອກໄປແລ້ວ ພວກເຂົາຈຶ່ງເຜີຍເຈດຈຳນົງອັນມືດມົນຂອງພວກເຂົາອອກ ຄື " ການກວາດຕ້ອນຊາວພວນໄປສະຫຍາມ ", ເວລານີ້ ພວກເຈົ້າຄອງເມືອງພວນປາກບໍ່ໄດ້ ໄອບໍ່ດັງ ຈຶ່ງໄດ້ອົດຂົມຂື່ນກືນນ້ຳຕາປະຕິບັດຕາມຄຳສັ່ງຂອງທະຫານໄທ. ເມື່ອຊາວພວນຖືກກວາດຕ້ອນໄປຮອດດິນໜອງຄາຍແລ້ວ ຊາວລົວພວນຍິ່ງເຫັນໂສມໜ້າແທ້ງ ຄວາມປ່າເຖື່ອນຂອງພວກໄທ, " ໂພທິສົມພານ "ຂອງພວກເຂົາຄືນາຮົກຂອງຊາວພວນ, ດັ່ງນັ້ນ ເຂົາເຈົ້າ ຈຶ່ງໄດ້ຕໍ່ສູ້ເອົາຊີວິດແລກໂຕນໜີກັບຄືນບ້ານເກີດເມືອງນອນ.

ຫາກພວກເຮົາສັງຣວມ ເນື້ອໃນສ່ອງແສງຂອງກາບ, ແລ້ວນຳມາວິໄຈກໍຫາກເປັນອີກຮູບແບບໜຶ່ງ, ອາດກະທັດຮັດກວ່າ, ແຕ່ຫາກຈະຂາດລັກສະນະຕໍ່ເນື່ອງຂອງກາບ ເຊິ່ງເປັນປະເດັນທີ່ພວກເຮົາຢາກສະຫງວນໄວ້ເພື່ອໃຫ້ຄົນຮຸ່ນຫລັງໄດ້ສືບຕໍ່ສຶກສາຄົ້ນຄວ້າຕໍ່ໄປ.

ການຊຳລະປັບປຸງກາບ, ພວກເຮົາກໍພະຍາຍາມຮັກສາລັກສະນະຄົງເດີມຂອງກາບໄວ້ ພຽງແຕ່ກວດແກ້ທາງດ້ານການສະກົດຄຳໃຫ້ຖືກຕາມແບບການສະກົດຄຳໃນປັດຈຸບັນ, ດັດແປງກາບຈາກສາມວັກມາເປັນສອງວັກ ເພື່ອໃຫ້ຖືກຕ້ອງຕາມກົດປະພັນກາບ; ໄດ້ຕັດຕອນທີ 2 ຂອງວັກທີ 39 ທ້າຍບົດທີ 4 ໄປໃສ່ ຕົ້ນບົດທີ 5 ແລະ ໄດ້ຕັດທ້າຍບົດທີ 8, ຕັ້ງແຕ່ຕອນທີ 3 ຂອງວັກທີ 50 ໄປເປັນວັກທີ 1 ຂອງບົດທີ 9 ເພື່ອໃຫ້ ແທດເໝາະກັບຫົວຂໍ້ຂອງບົດທີ 5 ແລະ 9 ເທົ່ານັ້ນເອງ. ຕາມທຳມະດາ ກາບຈະບໍ່ເຮັດເປັນບົດໆໄປຄືແນວນີ້, ຈະເຮັດເປັນບົດດຽວແຕ່ຕົ້ນຈົນຈົບໂລດ. ແຕ່ໃນກໍລະນີຂອງກາບເມືອງພວນນີ້, ຜູ້ຮຽບຮຽງ (ເຈົ້າຄຳພັນ ວົງກົດລັດຕະນະ) ໄດ້ແບ່ງອອກເປັນບົດໆໄປ ໂດຍອີງຕາມລຳດັບ ເຫດການ ແລະພວກເຮົາກໍເຫັນວ່າ ສົມຄວນຮັກສາລັກສະນະນີ້ໄວ້ເພື່ອສຶກສາຄົ້ນຄວ້າຕໍ່ໄປ.

2. ຂໍ້ສະເໜີແນະ

ການຄົ້ນຄວ້າກາບເມືອງພວນໃນຄັ້ງນີ້ ເປັນການຄົ້ນຄວ້າວິໄຈທີ່ລະອຽດ ແລະເລິກເຊິ່ງສົມຄວນ. ສະນັ້ນ, ມັນຈຶ່ງຖືໄດ້ວ່າ ເປັນເອກະສານທີ່ສາມາດເອົາເປັນບ່ອນອີງໃຫ້ແກ່ການຮຽນ-ການສອນ ແລະ

ຄົ້ນຄວ້າອື່ນໆໄດ້. ຢ່າງໃດກໍຕາມ, ຈຸດໝາຍຫລັກທີ່ພວກເຮົາຢາກໄດ້ ແມ່ນຕ້ອງການຢາກຈະກວດຊຳຣະຕົ້ນສະບັບໃຫ້ເປັນສະບັບຄົບຖ້ວນສົມບູນ ໂດຍຍຶດຫລັກການສອບສວນ ແລະຊຳຣະຕົ້ນສະບັບ ຕາມວິທີຂອງໂຟນມາດ (Paul MAAS) ເຊິ່ງເປັນວິທີການທີ່ດີ, ເຊື່ອຖືໄດ້ ແລະເປັນທີ່ນິຍົມໃຊ້ຊຳຣະໜັງສືເກົ່າໄດ້ດີ. ແຕ່ວ່າ ພວກເຮົາບໍ່ສາມາດເຮັດໄດ້ ເພາະບໍ່ສາມາດຊອກຫາໜັງສືກາບເມືອງພວນທີ່ເປັນ ຫລັກຖານພະຍານໄດ້ຫລາຍສະບັບ. ເມື່ອເປັນແນວນັ້ນ ກໍໃຊ້ແຕ່ກາບເມືອງພວນທີ່ຂຽນໄວ້ໃນພົງສາວະດານເມືອງພວນຂອງເຈົ້າຄຳພັນ ວົງກົດລັດຕະນະ ມາຄົ້ນຄວ້າວິໄຈ. ຫາກເມື່ອນຳເອົາຕອນທີ່ລັດມາວິເຄາະໃນບົດສອບເກົ່າໆຂອງມະຫາວິທະຍາໄລສ້າງຄູວຽງຈັນ ແລະຕອນທີ່ລັດມາວິເຄາະໃນປື້ມ " ວັນນະຄະດີລາວ "ຂອງສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ, ກະຊວງສຶກສາທິການ ມາສົມທຽບກັບສະບັບຂອງເຈົ້າຄຳພັນ ວົງກົດລັດຕະນະ ກໍມີອັນແຕກຕ່າງກັນຢູ່. ດັ່ງນັ້ນ, ພວກເຮົາຈຶ່ງເຊື່ອແນ່ວ່າ ກາບເມືອງພວນອາດມີສະບັບອື່ນໆຍັງຫລົງເຫລືອຢູ່ ແຕ່ເວລານີ້ ພວກເຮົາບໍ່ທັນຄົ້ນພົບໄດ້ ມັນຈຶ່ງຈຳເປັນທີ່ຍັງຈະຕ້ອງໄດ້ສືບຕໍ່ດຳເນີນການຄົ້ນຫາຕໍ່ໄປ ເພື່ອນຳມາຊຳຣະກາບໃຫ້ສົມບູນ ແລະນຳມາແກ້ໄຂຂອດຄວາມແຕກຕ່າງລະຫວ່າງເຫດການໃນປະຫວັດສາດ ລວມທັງຊື່ສະເພາະຂອງບຸກຄົນ ແລະສະຖານທີ່ ທີ່ມີຢູ່ໃນກາບກັບປະຫວັດສາດໃຫ້ມີຄວາມເປັນເອກະພາບ ແລະເໝາະສົມກັບຄວາມເປັນຈິງຍິ່ງຂຶ້ນ.

I. General Background

1. Authorship and period of composition

Kap Müang Phuan (KMP) was first edited in 1952 by Chao Khamman Vongkotratna as an appendix to a small volume entitled *Phongsawadan Müang Phuan*, "The Phuan Chronicle". Chao Khamman was a former high-ranking official of the Royal Lao Government who paid a short visit to Xiang Khwang province between 25 February and 7 March 1952. During his short sojourn in the Phuan heartland Chao Khamman compiled several old manuscripts, each of them deals with the region's distant past as well as its more recent history.

Unfortunately Chao Khamman failed to provide specific information on the manuscripts that he had transcribed and later published in the above mentioned volume. He had neither indicated the places where the manuscripts were found or preserved, in which script they were written nor any other important characteristics. It seems that the manuscript that Chao Khamman had relied upon half a century ago was lost in the vicissitudes of the second Indochina war (1964–1973) — Xiang Khwang was indeed the Lao province that was most heavily affected by American bombardment.[1]

A second version was published a couple of years ago posthumously as an appendix to Phoumi Vongvichit's book on the "History of Müang Phuan" (1994). Like Chao Khamman, Phoumi Vongvichit also does not provide any information on the manuscript on which his edition is based. His edition as a whole is the same as the previous one but differs in several details. It seems that the two editions are based on two different manuscripts and thus represent two different, though very similar, versions.

The name *Kap Müang Phuan* itself seems doubtful as both Chao Khamman's and Phoumi Vongvichit's editions fail to mention the name of the poem. It seems that the poem's popular name derives from the fact that it is composed in *kòn kap* metre and deals with the fate of Müang Phuan in the aftermath of Chao Anu's defeat by the Siamese forces.

In olden days Lao writers and poets normally did not mention their personal names when composing literary works. KMP fits in this general rule. However, we may assume that the poet was an educated nobleman from Xiang Khwang who personally participated in the exodus from the Phuan to the west bank of the Mekong and later was among those deportees who managed to escape from their Siamese guards and then returned to their homeland.

---

1 Archaimbault (1967:558) mentions that Chao Xainyawong, a cousin of the last ruler of Xiang Khwang, Chao Khanti, possessed several versions of the Müang Phuan Chronicle. Jealously guarded these manuscripts got lost during a fire that occurred in the late 1940s when the Vietminh was stalking up on Xiang Khwang.

When was KMP composed? The text gives us a clue. It says that the forced evacuation of the Phuan took place not long after "the phase of the waning moon in the second month of cūḷasakarāja 1196" (i.e. late January 1835). Furthermore, the text dates the second wave of Phuan returning from Nòng Khai to Xiang Khwang to "the phase of the waning moon in the fifth month" of the following year (i.e second half of April 1836). Thus the poem would have been composed, perhaps, not long after this event.

Although the history and the traditional practices of the Phuan have been analysed by several scholars (Archaimbault 1967, 1980; Pho 1994), Phuan literature has so far, if any, received very little attention. No profound study of KMP has been made; the poem is left unmentioned in Maha Sila Viravong's essays on traditional Lao literature. However, a short outline of KMP is given in the first comprehensive work on Lao literature (Bòsengkham et al. 1987: 274–277) as one of three "masterpieces" of Lao literature during the period of political disintegration of the Lan Xang kingdom. Our study is intended to fill the gap and to encourage further studies into Lao traditional literature.

2. Historical background

Müang Phuan is an old principality inhabited and ruled by the Phuan, a Tai-Lao ethnic group that belongs to the "Lao Loum", or the "lowland Lao" category. Its ancient territory is roughly confined within the borders of the present day Xiang Khwang province, which is situated in the north-east of Lao PDR. According to the last national census (1995), slightly more than 200,000 people live in the province, almost half of them are ethnic Phuan. The centre of Müang Phuan is a plateau, situated up to 1,200 metres above sea level. This plateau is called "Plain of Jars" (*Thong hai hin*) because of the megalithic remains scattered in several groups throughout the plateau. Several river valleys — those of the Nam Mat, the Nam Ngüm and the Nam Ngiap —make notches on the mountain chains that encircle the Phuan country; they have been ideal routes for many invasions.[2] At the end of the nineteenth century the plateau of Xiang Khwang was difficult to reach both from Vientiane and from Luang Prabang. In order to give the reader an idea of the accessibility of communication routes to and from the Plain of Jars, the British diplomat W.R.D. Beckett (1893:64), who made a pioneering journey through the middle Mekong valley at the eve of the French conquest, shall be quoted at length:

> To Mueng Phuen or Chiengkwang is ten days' journey, and the shortest route is by way of Prachum (Possum), three days below Nongkhai; on the left bank of the Nam Chan, at its junction with the Mekong. The Nam Chan is navigable by dugouts from May to February as far as Thaton, and it is the quickest route for people

[2] See Archaimbault 1967:557, 564.

> coming down from Mueng Phuen. But Nongkhai people usually take the land route either on foot or elephants from Prachum to Borikhan; thence across the Nam Sao, a tributary of the Nam Ngieb, to Muang Baw. The country is hilly and mountainous. The route then crosses the Nam Ngieb and Nam Hai, another of its tributaries, and traversing the Phu Mi Phu Luang hill-range leads to Meuang Phuen, which lies on an elevated and fertile table-land encircled by the Nam Ngieb and its tributary, the Nam Ngiu.
>
> From Meuang Phuen to Tung Chieng Kham (the plain of Xiang Kham, V.G.) is four days, north-east across another hill range. Land communication with Luang Prabang is rendered difficulty owing to the mountainous nature of the country. Few Nongkhai and Wiengchan Laos care to make the journey either by land or river. Of the two routes, that by land is the quickest, being fourteen days' journey, whilst that up river takes thirty days, when the current is moderate; and the return journey down stream, thirteen days.

Local tradition says that Chet Chüang, the first ruler of Müang Phuan, was a descendant of Khun Bulom, the legendary ancestor of all Tai-Lao ethnic groups. The Khun Bulom tradition links the land of the Phuan with other larger Tai states such as Luang Prabang (the later Lan Xang kingdom), Chiang Mai (Lan Na) and Ayutthaya (Siam).[3] As the Phuan dialect is closer to modern Siamese than any other Lao dialect, it can be assumed that the Plain of Jars was one of the main migration routes of the Tai whose descendants now inhabit the central plains of Thailand. In the twelfth and thirteenth centuries Müang Phuan probably gained importance that was stimulated by and overland trade in metals and forest products. Its geographical location makes it a strategic corner-stone for whoever rules the middle Mekong and the Red River valleys.

In the mid-fourteenth century Müang Phuan submitted to Phanya Fa Ngum, founder of the unified Lao kingdom of Lan Xang. There is a scanty record, from an internal point of view, of the history of Müang Phuan prior to the late eighteenth century. However, it seems that throughout the Lan Xang period the Phuan principality maintained a high degree of autonomy. It was a tribute sending semi-independent vassal state rather than a province of the Lao kingdom. After Siam had extended her control to all Lao territories east of the Mekong in the late 1770s, Müang Phuan became a Siamese vassal state (*prathetsarat*) by means of/on the grounds of her subordinate relationship with Vientiane. That means the ruler of Vientiane who himself recognised the king in Bangkok as his overlord was Müang Phuan's direct suzerain. At the same time the Phuan state maintained tributary relations with Vietnam (Dai Viêt) as well. As Snit and Breazeale (1988:6) point out, the double tributary relationship of Müang Phuan had its reason in the "strategic military significance" of the plateau region. The Phuan

3 As for an English annotated translation of the Nithan Khun Bulom see Souneth 1996.

ruling elite had long since recognised the need to maintain close ties with both their western and eastern neighbours. For the Lao rulers of Vientiane the Plain of Jars was an important route of communication because they could avoid crossing Luang Prabang territory en route to Tonkin if they took the route via the plateau of Xiang Khwang. The Vietnamese, on the other hand, could take the trail through Müang Phuan if they needed to shorten the route to Luang Prabang and to the Upper Mekong. One should bear in mind that the distance between Xiang Khwang and the Red River delta is, as the crow flies, less than 250 km.

The material value of Müang Phuan rested on its prestige as a vassal state that sent precious forest and other products as tributes to the Lao and Vietnamese courts. "In theory the ruling Phuan prince sent an annual payment of 30 kg of silver to the emperor at Hué, and 6 kg to the Vientiane prince, plus additional gifts of ivory, silk, rhinoceros horn and bees-wax to both rulers." (ibid.:6–7) The Phuan state is a classical example of a *müang sòng fai fa*, "a country with two overlords" and a potential battleground between the rival suzerains. By the turn of the nineteenth century, however, Chao Anu was able to reduce "the status of Siang Khuang from a kingdom to a simple province" by intervening in a dispute of royal succession in Müang Phuan.[4]

At this point we would emphasise that Siam and Vietnam possessed different concepts of how to control land and population. To put it in simple words, Siam strove for the control of manpower rather than unlimited territorial conquests. Other kingdoms in Southeast Asia, such as Burma and Cambodia, pursued similar policies. The Siamese scheme was to launch successful attacks against weaker neighbours in order to seize large parts of the population and to resettle the war captives in areas under firm Siamese control. The conquered territories were generally not incorporated into Siam proper but the Siamese government was content to establish a loose tributary relationship with the subjugated states whose resources of manpower had been reduced.[5]

The Siamese campaigns launched in Laos, as well as in neighbouring Cambodia, during the 1830s and 1840s were primarily directed against Vietnamese political expansion. Snit and Breazeale stress: "Thai notions behind the restructuring of human resettlement to suit political ends rather than local geography were based in the time of Rama III on the idea that a depopulated region would serve as a physical barrier against enemy attack." However, the Vietnamese did not engage in the same sort of depopulation efforts as the Thai did. Hué was primarily concerned with acknowledgements of suzerainty by Lao rulers and did not envisage a depopulation campaign either practical or desirable. Generally speaking, "there was never any question of rounding up villagers and resettling them in Annam."[6] Conditions in the densely populated Red River basin and the central Vietnamese coastal zones did not favour an eastward flow of

---

4 See Mayouri and Pheuiphanh 1998:89.
5 For details see Grabowsky 1999.
6 Snit and Breazeale 1988:21.

people from the Mekong basin. During the short-lived conquest of Cambodia by Hué (1834–47) considerable numbers of Vietnamese settlers were sent to the new province of Tran Tay Thanh, as Cambodia was renamed by Emperor Minh Mang. This attitude was in sharp contrast to the Siamese strategy of raiding Cambodia to assemble manpower.

Siamese forced resettlements campaigns against Müang Phuan have to be seen against this background of Siamese-Vietnamese warfare. To make a long story short, one can identify three phases of warfare to resettle large parts of the Phuan population in regions under firm Siamese control:

1.) The first phase started in the 1778/79 when Siamese troops forced tens of thousands of Lao from areas under the control of the Vientiane ruler to resettle in eastern Siam (notably Saraburi and Lopburi). It may be assumed that some groups of Phuan were also among the deportees. In 1792, Chao Nanthasen of Vientiane was ordered by the Siamese king to fight Vietnamese troops in Xiang Khwang and the Sipsòng Chu Thai. More than 4,000 Tai Dam (Lao Song Dam) and Phuan were deported to areas in Central Thailand such as Phetburi.[7] The majority of the people resettled in this way, however, were Tai Dam, not Phuan.

2.) The second phase of depopulating the Plain of Jars started a few years after the suppression Vientiane's war of national liberation (Lao viewpoint) or the so-called "Chao Anu rebellion" (Siamese perspective).[8] The Siamese war with the Lao kingdom of Vientiane, culminating in the destruction of the Lao capital, was indeed a watershed not only for the Lao living in the middle Mekong valley but also for the Phuan in the Plain of Jars. Between 1834 and 1836 a significant part of the Phuan population, particularly in the western part of the plateau, was moved down to the Mekong plain or even deported further to areas east of Bangkok. In 1836, Chao San, the Phuan ruler who had submitted to the Siamese side in early 1835, founded a new settlement some 80 kilometres east of Bangkok near Phanom Sarakham in present-day Chachoengsao province.

3.) The third phase was directly related to the suppression of the Hò invasions of northern Laos. In 1875/76, Chinese marauders called "Hò" (probably the remnants of the Taiping Rebellion, 1851–64, led by Hong Xiuquan, 1814–64) by the Lao and Siamese, plundered Luang Prabang, Xiang Khwang and marched on Nòng Khai. After three Siamese armies had restored peace and order, the Phuan were accused of having tacitly supported the invaders. A majority of the Phuan, already uprooted by the war, was forced to move to Bangkok. Although by the end of 1876 the Siamese authorities allowed the Phuan to return to their

---

7 According to Thiphakòrawong's "Royal Chronicle of the First Reign", quoted by Bangòn 1998:41. See also Pho 1994:114.

8 The most recent and authoritative study of the events leading to the defeat of the Lao aspirations for the restoration of their national independence and sovereignty is Mayouri and Pheuphanh Ngaosyvathn's path-breaking opus "Paths of Conflagration: fifty years of diplomacy and warfare in Laos, Thailand, and Vietnam, 1778-1828" (1998).

homeland, some of them remained in Siam.[9] A second and decisive military campaign against the Hò was launched in 1885–1888. It resulted in the restoration of effective Siamese control over the entire plateaux of Xiang Khwang and Hua Phan but this time Siam fortified the Phuan region instead of depopulating it as they had done so may times before.[10]

The various resettlement campaigns resulted in a sharp decline of the Phuan population in the Plain of Jars. Even though reliable demographic data do not exist for the period prior to the late nineteenth century, a plausible estimation given by Snit and Breazeale (1988:3) say that the whole plateau supported a population of 30,000 to 40,000. We may assume that the population of Müang Phuan before the upheavals of the nineteenth century was within these limits. By the end of the century, however, the Phuan population living there had shrunk to probably only one third or one fourth of its original size. The earliest "modern" census records (dating from 1889) estimated the total population of slightly less than 25,000 for the Phuan state, of which 48.5% were Phuan, 29.8% Hmong, 2.3% Yao, 12.5% "Kha" (i.e. Khmu, etc.), and 6.9% immigrants from other Lao *müang* (see statistics in the appendix).

As a result of the numerous forced relocations of Phuan populations throughout the nineteenth century a significant part, probably a large majority, of the Phuan live nowadays outside their original homeland. According to Thai researchers, in central and eastern Thailand there are at least 120 villages, the inhabitants of which are of Phuan origin. The highest concentration of Phuan population in the Siamese heartland is to be found in Ban Mi district (30 villages) and the districts of Si Mahapho and Si Mahosot, Prachinburi province (31 villages).[11] In the upper part of the Khorat plateau, notably in the provinces of Nòng Khai and Udònthani, perhaps even a majority of the local population has to be considered as descendants of Phuan war captives and of settlers. The number of ethnic Phuan in this region was so large that the administrative circle (*monthon*) formed in the early 1890s comprising the northern part of the Khorat plateau and the adjacent regions of central Laos (Vientiane, Bòlikhan, Xiang Khwang) — with Nòng Khai as its administrative centre —, was officially called "Lao Phuan circle".[12] Numerous Phuan villages can also be located in the plain of Vientiane, where settlers from Xiang Khwang occupied land that had been abandoned by its

---

9 A group of Phuan under Chao Sisuwan did not want to go back to Müang Phuan and found new homesteads in the Chan River valley, about half-way between Phon Phisai and Xiang Khwang. The new settlements would later be raised to *müang* status called Bòlikhan. See Snit and Breazeale 1988:56-57.

10 As Thongchai (1994:127) has observed, the successful military campaign was made possible by strategic and operational planning that used James F. McCarthy's detailed mapping of the entire region in the early 1880s. See also Forbes 1987.

11 For a good survey of Phuan settlements in Thailand see Pho 1994:21–24.

12 Beckett (1893:62) observed in 1892 that the town of Nòng Khai comprised not more than 7,000 inhabitants at the time of his visit. Apart from "a considerable number of Siamese officials and their families", the bulk of the population consisted of Phuan settlers and "old Wiengchan remnants".

original population as a result of Siamese "cleansings" in the aftermath of the "Chao Anu rebellion".

Père P. Blanck, a French priest who visited Müang Phuan in 1881, arrives at the conclusion that the region "had lost at least one third of its [original] inhabitants". Among the places where Phuan refugees could be found he lists Luang Prabang, Nòng Khai, Phon Phixay, Lakhòn (Nakhòn Phanom) and Ubon. "Even at the estuary of the Xan [river], in the district of Bòlikhan, there are numerous refugees from Trane-Ngine [Müang Phuan]" (Blanck 1884:448). The Phuan are certainly among those ethnic groups most seriously affected by patterns of forced resettlements and voluntary migrations in the nineteenth and, to a lesser extent, also in the twentieth centuries.[13]

II. Analysis

1. The events described by Kap Müang Phuan

As has been mentioned above, KMP reflects events of the mid-1830s, i.e. during the second phase of forced resettlements from Müang Phuan down to the Mekong plain and inner Siam. Vietnamese influence in the plateau was on the rise after the emperor in Hué had ordered the execution of Chao Nòi in 1828 because of his "betrayal" in handing over Chao Anu to the Siamese. The new ruler of Müang Phuan, Chao San, was installed by the Vietnamese but he struggled hard to keep a maximum of autonomy. When the Vietnamese tried to enforce their own administration on the Phuan state, Chao San turned to the Siamese for help. He expected from the Siamese more respect for the indigenous traditions and customs. "In the fifth month [of the year C.S. 1196], Laxa (Lat) Sulin brought the ruler of Müang Phuan to settle down in Tha San",[14] reports the Abridged Chronicle of Vientiane. However, the Siamese strategy of resettling large parts of the Phuan population in "safer zones" further to the west and south proved to be a disaster that is vividly described in KMP. The Phuan Chronicle confirms the fairly accurate account of KMP in which it is stated:

> After two or three days Siamese and Lao troops arrived at Xiang Khwang. The Siamese commander spoke to Chao San: 'This is the situation. If the Vietnamese come back once again, what would you, Chao San, do? It is impossible to station Siamese troops in Müang Phuan. If the Siamese troops can't stay, the Vietnamese will certainly return to Müang Phuan.' Thus the Siamese commander forced Chao

---

13 The so-called second Indochina War (1964-1973) effected the Plain of Jars, the Phuan heartland, more than any other region in Laos. As a consequence of the US bombardments many thousands of inhabitants had to flee their homes in Xiang Khwang province again resembling historical experiences which the Phuan encountered more than a century earlier. But this is another story, far beyond the scope of this study.

14 Lao National Library, *Chotmaihet müang wiang chan*, f° 12/3.

> San to deport families in order to establish themselves in Phan Lam. 6,000 Phuan were enticed to come to Nòng Khai from where they would be taken to Bangkok. Having come to realise that, Chao Sa and Chao Sali, sons of Chao Men Nòi, could flee back with 3,000 people. Thereafter, many of them died of hunger.[15]

In the end those Phuan leaders who returned to Müang Phuan together with their followers obviously preferred Vietnamese rule to continuous raids of the Siamese. The Vietnamese firmly established a fortified garrison near Xiang Kham in the north-west of Xiang Khwang, whereas the remaining Phuan, fiercely anti-Siamese, submitted to Vietnamese suzerainty. The Bangkok government finally decided in 1837 to abandon further relocation schemes.

Mutual trust between Siam and those Phuan who struggled hard to rebuild their motherland was destroyed as a result of the hardships and sufferings the Phuan had to endure during the numerous forced resettlements. The Siamese, on the other hand, accused the Phuan of collusion with the "Yuan"—here: Vietnamese—enemy. A contemporary Siamese documents says:

